ໝວດວິຊາສະເພາະ

# ວິຊາ: ວິທີສອນອະນຸບານກຽມປະຖົມ

## ລະບົບ ຕໍ່ເນື່ອງ ເຕັມເວລາ ປີ 2




ປີ 2022

# ໝວດວິຊາສະເພາະ

# ວິຊາ: ວິທີສອນອະນຸບານກຽມປະຖົມ

## ລະບົບ ຕໍ່ເນື່ອງ ເຕັມເວລາ ປີ 2

ສາຍ ສ້າງຄູອະນຸບານ

ລະບົບ ຕໍ່ເນື່ອງ ປີທີ 2 ພາກຮຽນ 2

ຮຽບຮຽງໂດຍ:

ນາງ ຄຳບານ ພິມມະຈັກ

ກວດແກ້ໂດຍ:

ປທ ນາງ ລິດສະໄໝ ດວງມາລາ

ປທ ນາງ ທວານໃຈ ບົວກາສີ

ນາງ ຄຳມະລີ ແສງໂສພາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ
ສະພາວິທະຍາສາດ

ເລກທີ.....94.....ສພ.ວສ
ລົງວັນທີ.....19 APR 2022..........

## ເອກະສານຮັບຮອງ
## ອະນຸມັດຜ່ານການຮັບຮອງການຮຽບຮຽງປຶ້ມສາຍອະນຸບານ ແລະ ປະຖົມ

- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວກິດຈະກຳສະພາວິທະຍາສາດຂອງວິທະຍາໄລຄູສາລະວັນປະຈຳສົກປີ 2022-2023

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການ ເຫັນວ່າ ບົດຮຽບຮຽງປຶ້ມມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນໂຮງຮຽນວິທະຍາໄລຄູສາລະວັນ.

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| 1. ທ່ານ ປອ ສຸພັນ ເທບວົງສາ | |
| 2. ທ່ານ ອຈ ປທ ແສນຮັກ ບຸນມີ | |
| 3. ທ່ານ ອຈ ນາງ ລິດສະໄໝ ສິດທິຈັກ | |

ທີ່, ສາລະວັນ, ວັນທີ ..19..APR..2022...
ປະທານສະພາວິທະຍາສາດ

ອຈ. ບ. ສົມປອງ ແສນທະວິສຸກ
Sompong SENTHAVISOUK

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
໑໑໑໑໑໒໒໒໒

ວິທະຍາໄລຄູສາລະ
ຫ້ອງການອະນຸບານ-ປະຖົມ

ເລກທີ..366....ຫກ.ອປ
ລົງວັນທີ......01 APR 2022....

## ເອກະສານຮັບຮອງການກວດແກ້ການຮຽບຮຽງປຶ້ມ ວິຊາ ວິທີສອນອະນຸບານກຽມ

| ລ/ດ | ຊື່ຫົວຂໍ້ | ຫ້ອງການ | ຜູ້ຮຽບຮຽງປຶ້ມ | ຊື່ຜູ້ກວດແກ້ |
|---|---|---|---|---|
| 1 | ວິທີສອນອະນຸບານ ກຽມປະຖົມ | ອະນຸບານ-ປະຖົມ | ນາງ ຄຳບານ ພິມມະຈັກ | ປທ ນາງ ລິດສະໄໝດວງມາລາ<br>ນາງ ຄຳມະລີ ແສງໄຊພາ<br>ປທ ນາງຫອານໃຈ ບົວກາສີ |

| ຄະນະກຳມະການກວດແກ້ບົດ | ລາຍເຊັນ |
|---|---|
| 1. ປທ ນາງ ລິດສະໄໝ ດວງມາລາ | |
| 2. ນາງ ຄຳມະລີ ແສງໄຊພາ | |
| 3. ປທ ນາງ ຫອານໃຈ ບົວກາສີ | |

ທີ່, ສາລະວັນ, ວັນທີ ..........................

ຫົວໜ້າຫ້ອງການສາຍ

ລິດສະໄໝ ສິດທິຈັກ

# ຄຳນຳ

ເພື່ອເປັນການປັບປຸງຄຸນນະພາບ ແລະ ປະສິດທິພາບຂອງການສ້າງຄູ ແລະ ພັດທະນາອາຊີບຄູໃຫ້ມີປະສິດທິພາບສູງຂຶ້ນເທື່ອລະກ້າວນັ້ນທາງຄູ-ອາຈານສອນຈິ່ງໄດ້ພ້ອມກັນຮຽບຮຽງແບບຮຽນເຫຼັ້ມນີ້ຂຶ້ນມາ ເພື່ອຮັບໃຊ້ຢູ່ໃນສະຖາບັນສ້າງຄູ ໂດຍໄດ້ພັດທະນາ ແລະ ຮຽບຮຽງຕາມທິດທາງການສ້າງຄູແບບໃໝ່ ທີ່ເນັ້ນການປູກອຸດົມການ, ຄຸນນະທຳ ແລະ ຈິດວິນຍານຂອງຄວາມເປັນຄູໃຫ້ແກ່ນັກສຶກສາຄູ ເຮັດໃຫ້ເຂົາເຈົ້າມີທັກສະວິຊາຊີບຄູທີ່ໜັກແໜ້ນ, ເຂົ້າໃຈພັດທະນາການຂອງເດັກ, ມີຄວາມຮູ້ທົ່ວໄປ ແລະ ມີຄວາມຮູ້ວິຊາສະເພາະທີ່ແທດເໝາະກັບຊັ້ນທີ່ຕົນເອງສອນ.

ປື້ມແບບຮຽນເຫຼັ້ມນີ້ໄດ້ພັດທະນາຂຶ້ນດ້ວຍການປະກອບສ່ວນຈາກຫຼາຍພາກສ່ວນຄື: ຄະນະອຳນວຍການວິທະຍາໄລຄູສາລະວັນ, ຄູ - ອາຈານທີ່ສອນໃນສາຍຄູອະນຸບານ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອແນ່ໃສ່ເຮັດໃຫ້ນັກຮຽນຄູມີຄວາສະດວກໃນການຄົ້ນຄວ້າບົດຮຽນ, ເພື່ອເຮັດໃຫ້ນັກສຶກສາເກີດມີຄວາມຮູ້, ມີຄວາມເຂົ້າໃຈໃນການແຕ່ງບົດສອນຢ່າງເລິກ. ຮູ້ຈັກໝູນໃຊ້ວິທີສິດສອນແບບຫຼາຍຮູບຫຼາຍສີ, ມີຄວາມສຳນານໃນການສອນ, ມີນ້ຳໃຈຮັກອາຊີບແພງເດັກ,ມີຄວາມຮັບຜິດຊອບໃນການພັດທະນາອາຊີບຄູຂອງຕົນ.

ຫວັງຢ່າງຍິ່ງວ່າ ຄູ - ອາຈານ, ນັກສຶກສາ, ຄູ - ອາຈານ ແລະ ພາກສ່ວນອື່ນໆຫາກຍັງພົບເຫັນບັນຫາໃດໜຶ່ງທີ່ບໍ່ເໝາະສົມບໍ່ສອດຄ່ອງ ແລະ ບໍ່ທັນສະພາບຫຼັກສູດໃນປະຈຸບັນ, ກະລຸນາປະກອບຄຳຄິດຄຳເຫັນຂອງຕົນເພື່ອຊ່ວຍປັບປຸງເຮັດໃຫ້ເອກະສານປະກອບການສອນເຫຼັ້ມນີ້ສົມບູນ ແລະ ມີປະສິດທິພາບ.

## ສາລະບານ

ໜ້າ

**ບົດທີ 1 ຫຼັກສູດ ແລະ ແຜນຈັດປະສົບການຫ້ອງກຽມປະຖົມ**

1. ວິເຄາະຫຼັກສູດຫ້ອງກຽມປະຖົມ....1
   1.1 ຄວາມເປັນມາຂອງຫຼັກສູດຫ້ອງກຽມປະຖົມ....1
   1.2 ຫຼັກການຈັດຫຼັກສູດຫ້ອງກຽມປະຖົມ....1
   1.3 ຈຸດປະສົງຂອງຫຼັກສູດຫ້ອງກຽມປະຖົມ....2
   1.4 ການກຳນົດເນື້ອໃນການຮຽນຮູ້ໃນຫຼັກສູດຫ້ອງກຽມປະຖົມ....3
   1.5 ການກຳນົດເວລາຮຽນໃນຫຼັກສູກຫ້ອງກຽມປະຖົມ....3
2. ສັງລວມການຈັດປະສົບການ ແລະ ການຮຽນຮູ້....7
   2.1 ຫຼັກການຈັດປະສົບການ ແລະ ການຮຽນຮູ້....7
   2.2 ການຈັດກິດຈະກຳການຮຽນຮູ້....7
   2.3 ໜ່ວຍການສອນ....9
   2.4 ຫຼັກການຈັດກິດຈະກຳການຮຽນຮູ້....10
   2.5 ການປະເມີນຜົນພັດທະນາການຂອງເດັກອາຍຸ 5 ປີ....11
3. ສັງລວມການນຳໃຊ້ຫຼັກສູດຫ້ອງກຽມປະຖົມ....11
   3.1 ການນຳໃຊ້ຫຼັກສູດສຳລັບຄູ....12
   3.2 ການມີສ່ວນຮ່ວມຂອງຜູ້ປົກຄອງເດັກໃນການນຳໃຊ້ຫຼັກສູດ....12
   3.3 ການຕິດຕາມ, ປະເມີນຜົນ ແລະ ລາຍງານ....13
4. ການເລື່ອນຊັ້ນ ການສຶກສາລະຫວ່າງຫ້ອງກຽມປະຖົມ ແລະ ຂັ້ນປະຖົມສຶກສາປີທີ 1....14
   4.1 ຄວາມໝາຍ ແລະ ຄວາມສຳຄັນ....14
   4.2 ບົດບາດ ແລະ ໜ້າທີຂອງພາກສ່ວນທີ່ກ່ຽວຂ້ອງ....14

**ບົດທີ 2 ວິເຄາະແຜນຈັດປະສົບການ**

1. ວິເຄາະແຜນຈັດປະສົບການເຫຼັ້ມທີ 1....17
2. ວິເຄາະຄວາມຮູ້ກ່ຽວກັບພັດທະນາການທັງ 5 ດ້ານ....17
   a. ດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ....17-29
   b. ດ້ານອາລົມ-ຈິດໃຈ....17-29
   c. ດ້ານສັງຄົມ....17-29
   d. ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ....17-29
   e. ດ້ານພາສາ....17-29

**ບົດທີ 3 ວິເຄາະແຜນຈັດປະສົບການເຫຼັ້ມທີ 2**

1. ດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ..........................................................30-43
2. ດ້ານອາລົມ-ຈິດໃຈ.........................................................................................30-43
3. ດ້ານສັງຄົມ.................................................................................................30-43
4. ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ...............................................................30-43
5. ດ້ານພາສາ...................................................................................................30-43

**ບົດທີ 4 ວິເຄາະແຜນຈັດປະສົບການເຫຼັ້ມທີ 3**

1. ດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ..........................................................44-54
2. ດ້ານອາລົມ-ຈິດໃຈ.........................................................................................44-54
3. ດ້ານສັງຄົມ.................................................................................................44-54
4. ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ...............................................................44-54
5. ດ້ານພາສາ...................................................................................................44-54

**ບົດທີ 5 ວິເຄາະແຜນຈັດປະສົບການເຫຼັ້ມ 4**

1. ດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ..........................................................55-67
2. ດ້ານອາລົມ-ຈິດໃຈ.........................................................................................55-67
3. ດ້ານສັງຄົມ.................................................................................................55-67
4. ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ...............................................................55-67
5. ດ້ານພາສາ...................................................................................................55-67

**ບົດທີ 6 ວິເຄາະແຜນຈັດປະສົບການເຫຼັ້ມ 5**

1. ດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ..........................................................68-81
2. ດ້ານອາລົມ-ຈິດໃຈ.........................................................................................68-81
3. ດ້ານສັງຄົມ.................................................................................................68-81
4. ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ...............................................................68-81
5. ດ້ານພາສາ...................................................................................................68-81

ແຕ່ງບົດສອນກິດຈະກຳເຄື່ອນໄຫວ ແລະ ຈັງຫວະ........................................................82-93
ສອນທົດລອງ
ແຕ່ງບົດສອນກິດຈະກຳວົງມົນ ແລະ ເກມການສຶກສາ...................................................94-113
ສອນທົດລອງ
ແຕ່ງບົດສອນກິດຈະກຳສິລະປະສ້າງສັນ.................................................................114-130
ສອນທົດລອງ
ການແຕ່ງບົດສອນກິດຈະກຳການຫຼິ້ນກາງແຈ້ງ..........................................................131-160
ສອນທົດລອງ

# ບົດທີ 1

# ຫຼັກສູດ-ແຜນຈັດປະສົບການຫ້ອງກຽມປະຖົມ

## 1. ວິເຄາະຫຼັກສູດຫ້ອງກຽມປະຖົມ

### 1.1. ຄວາມເປັນມາຂອງຫຼັກສູດຫ້ອງກຽມປະຖົມ.

ອີງຕາມຂອງກະຊວງສຶກສາທິການ ແລະ ກິລາ ໃນກອງປະຊຸມຜູ້ບໍລິຫານການສຶກສາປະຈຳປີ 1997-1998 ກ່ຽວກັບການສ້າງຫ້ອງອະນຸບານ 3 ທີ່ສັງກັດໃນໂຮງຮຽນປະຖົມໃນບ່ອນທີ່ບໍ່ມີບໍ່ມີໂຮງຮຽນອະນຸບານຄົບຊຸດ ( ຫ້ອງອະນຸບານ 1, ອະນຸບານ 2 ແລະ ອະນຸບານ 3 ) ເພື່ອກຽມຄວາມພ້ອມໃຫ້ແກ່ເດັກອາຍຸ 5 ປີແລະ ເພື່ອຫຼຸດຜ່ອນອັດຕາຄ້າງຫ້ອງໃນຂັ້ນປະຖົມສຶກສາປີທີ 1.

.ໃນປີ 2002 ກົມສາມັນສຶກສາ, ກະຊວງສຶກສາທິການຮ່ວມກັບກົມສ້າງຄູ, ສາຖາບັນຄົ້ນຄ້ວາວິທະຍາສາດການສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງໄດ້ຄົ້ນຄວ້າ ແລະ ສ້າງຫຼັກສູດຫ້ອງກຽມປະຖົມຂຶ້ນເພື່ອນຳໃຊ້ເຂົ້າໃນການຈັດການຮຽນ-ການສອນໃຫ້ແກ່ເດັກອາຍຸ 5 ປີ ໃນບ່ອນທີ່ບໍ່ມີໂຮງຮຽນອະນຸບານ ເຊິ່ງເອີ້ນວ່າຫ້ອງກຽມປະຖົມ ເພື່ອກຽມຄວາມພ້ອມທາງດ້ານຮ່າງກາຍ ອານະໄມ ແລະ ຄວາມປອດໄພ, ດານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ, ດ້ານອາລົມຈິດ ແລະ ດ້ານສັງຄົມ. ໃຫ້ແກ່ເດັກອາຍຸ 5 ປີ ກ່ອນຈະໄປຮຽນໃນຂັ້ນປະຖົມສຶກສາ ປີທີ 1.

ຫຼັກສູດຫ້ອງກຽມປະຖົມ ທີ່ສ້າງຂຶ້ນມາໄດ້ເອົາໄປທົດລອງນຳໃຊ້ 2 ຄັ້ງ ໂດຍສະເພາະກັບເດັກອາຍຸ 5 ປີ ເຊິ່ງທຽບເທົ່າກັບເດັກທີ່ຮຽນໃນຫ້ອງອະນຸບານ 3 ແຕ່ມີຄວາມແຕກຕ່າງຢູ່ບ່ອນວ່າ ຫ້ອງອະນຸບານ 3 ນັ້ນແມ່ນເດັກເຄີຍໄດ້ຜ່ານຫ້ອງອະນຸບານ 1 ແລະ ອະນຸບານ 2, ສ່ວນຫ້ອງກຽມປະຖົມແມ່ນເດັກທີ່ບໍ່ເຄີຍໄດ້ຜ່ານໂຮງຮຽນອະນຸບານມາກ່ອນ, ຫ້ອງກຽມປະຖົມດັ່ງກ່າວ ແມ່ນສັງກັດຢູ່ໃນໂຮງຮຽນປະຖົມ ບ່ອນທີ່ບໍ່ສາມາດສ້າງເປັນໂຮງຮຽນອະນຸບານຄົບຊຸດໄດ້.

ອີງໃສ່ກອງປະຊຸມກ່ຽວກັບການສ້າງສະມັດຖະພາບສຳລັບເດັກໄດ້ຈັດຂຶ້ນທີ່ຊຽງໄຮ້, ປະເທດຈີນໃນປີ 2005 ພະແນກລ້ຽງເດັກ-ອະນຸບານ, ກົມສາມັນສຶກສາ ກະຊວງສຶກສາທິການຮ່ວມກັບອົງການ ຢູນິເຊັບ ຈຶ່ງໄດ້ສ້າງສະມັດຖະພາບດ້ານຄວາມພ້ອມໃນການເຂົ້າຮຽນສຳລັບເດັກ 5 ປີ ກ່ອນຈະໄປຮຽນຂັ້ນປະຖົມສຶກສາປີທີ 1 ຂຶ້ນເພື່ອເປັນບ່ອນອີງໃນການດັດແກ້ຫຼັກສູດຫ້ອງປະຖົມ.

ດັ່ງນັ້ນ, ໃນປີ 2008 ກົມປະຖົມ ແລະ ອະນຸບານສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈຶ່ງມີແຜນປັບປຸງຫຼັກສູດຫ້ອງກຽມປະຖົມ ໃຫ້ມີຄວາມສອດຄ່ອງກັບສະມັດຖະພາບດັ່ງກ່າວ ເພື່ອເປັນບ່ອນອີງໃຫ້ແກ່ຄູສອນຫ້ອງກຽມປະຖົມໄດ້ນຳໃຊ້ເຂົ້າໃນການຈັດກິດຈະກຳການຮຽນ-ການສອນສຳລັບເດັກອາຍຸ 5 ປີ.

### 1.2. ຫຼັກການຂອງການສ້າງຫຼັກສູດ.

ການສ້າງຫຼັກສູດຫ້ອງກຽມປະຖົມ ແມ່ນການປະຕິບັດຕາມຫຼັກການພັດທະນາເດັກແບບຮອບດ້ານໃນການກຽມຄວາມພ້ອມທາງດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້

ທົ່ວໄປ, ດ້ານອາລົມຈິດ ແລະ ດ້ານສັງຄົມ ເພື່ອໃຫ້ເດັກມີຄວາມຮູ້ພື້ນຖານ ທີ່ຈະໄປຮຽນຕໍ່ໃນຂັ້ນປະຖົມສຶກສາປີທີ 1.

**ຫຼັກການຂອງການສ້າງຫຼັກສູດຫ້ອງກຽມປະຖົມປະກອບດ້ວຍ 5 ຫຼັກການດັ່ງລຸ່ມນີ້:**

1. ສົ່ງເສີມຂະບວນການຮຽນຮູ້ແລະ ພັດທະນາການຂອງເດັກອາຍຸ 5 ປີ ທຸກຄົນໃນຫ້ອງກຽມປະຖົມ.
2. ເບິ່ງແຍງ ແລະ ສຶກສາອົບຮົມແບບເອົາເດັກເປັນໃຈກາງ ໂດຍຄຳນຶງເຖິງພັດທະນາການຂອງເດັກແຕ່ລະຄົນ ແລະ ສະພາບແວດລ້ອມຂອງທ້ອງຖິ່ນ.
3. ພັດທະນາເດັກໂດຍຜ່ານການຫຼິ້ນ ແລະ ການຈັດກິດຈະກຳຕ່າງໆດ້ວຍຫຼາຍຮູບຫຼາຍແບບທີ່ເໝາະສົມກັບອາຍຸ,ໂດຍເນັ້ນຄວາມສະເໝີພາບບົດບາດຍິງ-ຊາຍ ຕາມສະພາບຕົວຈິງໃນແຕ່ລະທ້ອງຖິ່ນ.
4. ຈັດປະສົບການໃຫ້ເດັກໄດ້ຮຽນຮູ້ ແລະ ນຳໃຊ້ເຂົ້າໃນຊີວິດປະຈຳວັນໄດ້ຢ່າງມີຄວາມສຸກ ແລະ ມີຄຸນນະພາບ.
5. ຮ່ວມມື ແລະ ປະສານງານລະຫວ່າງໂຮງຮຽນ, ຄອບຄົວ ແລະ ຊຸມຊົນໃນການພັດທະນາເດັກແບບຮອບດ້ານ ເພື່ອເຊື່ອມຕໍ່ການສຶກສາລະຫວ່າງ ຫ້ອງກຽມປະຖົມ ແລະ ຫ້ອງປະຖົມສຶກສາ ປີທີ 1.

### 1.3. ຈຸດປະສົງຂອງຫຼັກສູດຫ້ອງກຽມປະຖົມ

ຫຼັກສູດຫ້ອງກຽມປະຖົມແມ່ນເລັ່ງໃສ່ການສ້າງພື້ນຖານຄຸນນະພາບຂອງການພັດທະນາເດັກຢ່າງຮອບດ້ານ ໂດຍສະເພາະແມ່ນ ການກຽມຄວາມພ້ອມໃນການຮຽນຮູ້, ທັກສະ ແລະ ຄຸນສົມບັດໃຫ້ເດັກອາຍຸ 5 ປີ ໃນຫ້ອງກຽມປະຖົມ ຢູ່ເຂດຕົວເມືອງ, ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກໃນບ່ອນທີ່ບໍ່ມີໂຮງຮຽນອະນຸບານ ແລະ ບ່ອນທີ່ບໍ່ສາມາດສ້າງໂຮງຮຽນອະນຸບານແບບຄົບຊຸດ.

**ຈຸດປະສົງຂອງຫຼັກສູດຫ້ອງກຽມປະຖົມມີລາຍລະອຽດດັ່ງນີ້:**

**1) ດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ**

- ສົ່ງເສີມໃຫ້ເດັກມີຮ່າງກາຍຂະຫຍາຍຕົວຕາມໄວອາຍຸ, ມີຄວາມປອດໄພ, ມີອະນາໄມທີ່ດີ ແລະ ມີສຸຂະພາບແຂງແຮງ.

**2) ດ້ານພາສາ**

- ສົ່ງເສີມໃຫ້ເດັກມີຄວາມເຂົ້າໃຈ, ມີທັກສະໃນການຟັງ, ການເວົ້າ, ການອ່ານ ແລະ ການຂຽນ
- ສົ່ງເສີມທາງດ້ານການໃຊ້ພາສາລາວເປັນສື່ກາງໃນການສື່ສານ ແລະ ພົວພັນເຊິ່ງກັນແລະກັນ

**3) ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ**

- ເສີມສ້າງໃຫ້ເດັກມີຄວາມຮູ້ພື້ນຖານທາງດ້ານຄະນິດສາດ, ວິທະຍາສາດ, ການປະດິດສ້າງ, ສິລະປະສ້າງສັນ ແລະ ດົນຕີ.
- ສົ່ງເສີມໃຫ້ເດັກມີຄວາມສະຫຼາດ, ຄວາມສາມາດໃນການຄົ້ນຄິດ, ການໃຊ້ເຫດຜົນ ແລະ ສາມາດແກ້ໄຂບັນຫາໄດ້ຢ່າງເໝາະສົມກັບໄວອາຍຸ.

**4) ດ້ານອາລົມຈິດ**

- ເສີມສ້າງໃຫ້ເດັກມີຄວາມເຂົ້າໃຈ-ຮູ້ຈັກຊ່ວຍເຫຼືອຕົນເອງ, ສາມາດຢູ່ຮ່ວມກັບຜູ້ອື່ນ ແລະ ສາມາດຄວບຄຸມອາລົມຂອງຕົນເອງຢ່າງເໝາະສົມໃນສະຖານະການຕ່າງໆ.

5) **ດ້ານສັງຄົມ**

- ເສີມສ້າງໃຫ້ເດັກຮູ້ຈັກຊ່ວຍເຫຼືອຕົນເອງ, ສາມາດຢູ່ຮ່ວມກັນກັບຄົນອື່ນ ແລະ ປະຕິບັດຕົນເປັນຄົນດີຂອງສັງຄົມ.
- ເສີມສ້າງໃຫ້ເດັກເປັນຄົນທີ່ມີຄຸນສົມບັດດີ, ມີຄວາມກ້າຫານໃນການສະແດງອອກແບບສ້າງສັນ ແລະ ມີສ່ວນຮ່ວມໃນການປະຕິບັດກິດຈະກຳຕ່າງໆ.
- ເສີມສ້າງໃຫ້ເດັກຮັກທຳມະຊາດ, ສິ່ງແວດລ້ອມ, ວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ.
- ເສີມສ້າງໃຫ້ເດັກມີທັດສະນະທ່າທີທີ່ດີຕໍ່ການຮຽນຮູ້ ແລະ ມີທັກສະທີ່ດີໃນການສະແຫວງຫາຄວາມຮູ້.

### 1.4. ການກຳນົດເນື້ອໃນການຮຽນຮູ້ໃນຫຼັກສູດຫ້ອງກຽມປະຖົມ.

ການກຳນົດເນື້ອໃນການຮຽນຮູ້ໃນຫຼັກສູດຫ້ອງກຽມປະຖົມ ປະກອບ 2 ພາກສ່ວນຄື:

- ເນື້ອໃນທີ່ຄວນຮຽນຮູ້
- ປະສົບການທີ່ຄວນສົ່ງເສີມ

### 1.1 ເນື້ອໃນທີ່ຄວນຮຽນຮູ້

ເນື້ອໃນທີ່ຄວນຮຽນຮູ້ປະກອບດ້ວຍ 3 ດ້ານຄື: ດ້ານຄວາມຮູ້, ດ້ານຄວາມສາມາດ ແລະ ດ້ານຄຸນສົມບັດ ( ຄຸນນະທຳ ຈາລິຍະທຳ ).

1) ດ້ານຄວາມຮູ້

- ຄວາມຮູ້ກ່ຽວກັບຕົວເດັກ: ບອກຊື່, ນາມສະກຸນ, ເພດ, ອາຍຸ, ຮູບຮ່າງລັກສະນະ ແລະ ອະໄວຍະວະຕ່າງໆ ຂອງຮ່າງກາຍ.
- ຄວາມຮູ້ກ່ຽວກັບບຸກຄົນ ແລະ ສະຖານທີ່ອ້ອມຂ້າງເດັກ: ບອກໄດ້ເລື່ອງຕ່າງໆ ກ່ຽວກັບຄອບຄົວ, ໂຮງຮຽນ, ສະຖານທີ່ສຳຄັນໃນຊຸມຊົນ, ບຸກຄົນຕ່າງໆທີ່ເດັກກ່ຽວຂ້ອງ ຫຼື ມີໂອກາດໄດ້ໃກ້ຊິດ ແລະ ມີການພົວພັນໃນຊີວິດປະຈຳວັນ.
- ວັດຖຸ ແລະ ສິ່ງຂອງທີ່ຢູ່ອ້ອມຂ້າງເດັກ: ບອກຊື່, ສີ, ຂະໜາດ, ຮູບຮ່າງລັກສະນະ, ນ້ຳໜັກ( ໜັກ-ເບົາ ) ຂອງສິ່ງເຄື່ອງໃຊ້, ຍານພະຫະນະໃນການຄົມມະນາຄົມ ແລະ ເຄື່ອງມືການສື່ສານທີ່ໃຊ້ໃນຊີວິດປະຈຳວັນ.
- ຄວາມຮູ້ກ່ຽວກັບສະພາບແວດລ້ອມອ້ອມຂ້າງເດັກ: ສິ່ງທີ່ມີຊີວິດ ( ພືດ, ຄົນ, ສັດ ) ແລະ ສິ່ງບໍ່ມີຊີວິດ ( ດິນ, ນ້ຳ, ລົມ, ໄຟ, ອາກາດ...). ປະກົດການຂອງທຳມະຊາດເຊັ່ນ: ລະດູການ, ກາງເວັນ ແລະ ກາງຄືນ ເປັນຕົ້ນ.

**2) ດ້ານຄວາມສາມາດ:**

ຄວາມສາມາດ ເປັນສິ່ງທີ່ສຳຄັນ ແລະ ຈຳເປັນສຳລັບເດັກ, ເຊິ່ງເດັກໄດ້ຮັບຈາກຂະບວນການຮຽນຮູ້ແບບບູລະນາການຄື:

- ຄວາມສາມາດໃນການເຄື່ອນໄຫວກ້າມຊີ້ນໃຫຍ່, ກ້າມຊີ້ນນ້ອຍ ແລະ ການພົວພັນລະຫວ່າງປະສາດສຳພັດ, ມີອະນາໄມທີ່ດີ ແລະ ມີຄວາມປອດໄພ.
- ຄວາມສາມາດໃນການໃຊ້ພາສາລາວ ເພື່ອສື່ສານ ແລະ ການພົວພັນເຊິ່ງກັນ ແລະ ກັນ

- ຄວາມສາມາດໃນການຄົ້ນຄິດ ແລະ ແກ້ໄຂບັນຫາ, ຄວາມສາມດທາງດ້ານຄະນິດສາດ ແລະ ວິທະຍາສາດ.
- ຄວາມສາມາດໃນການຄວບຄຸມອາລົມຂອງຕົນ ຢ່າງເໝາະສົມໃນສະຖານະການຕ່າງໆ ແລະ ມີການພົວພັນທີ່ດີກັບຄົນອື່ນ.
- ຄວາມສາມດໃນການພົວພັນເຊິ່ງກັນ ແລະ ກັນ, ເຄົາລົບນັບຖືຮີດຄອງປະເພນີ, ວັດທະນະທຳທ້ອງຖິ່ນ ແລະ ປະຕິບັດລະບຽບວິໄນຂອງໂຮງຮຽນ.

**3) ດ້ານຄຸນສົມບັດ:**

ເດັກຄວນໄດ້ຮຽນຮູ້ ແລະ ເຝິກຝົນທາງດ້ານຄຸນສົມບັດ:

- ຄວາມຮູ້ສຶກທີ່ດີຕໍ່ຕົນເອງ ແລະ ຜູ້ອື່ນ: ຮັກຕົນເອງ, ຄອບຄົວ, ໝູ່ເພື່ອນ, ຮັກຊາດບ້ານເກີດເມືອງນອນ, ຮັກທ່ານຜູ້ນຳ, ຮັກການຮໍ່າຮຽນ, ຮັກຄວາມສະອາດ, ຮັກການອອກແຮງງານ, ຮັກທຳມະຊາດ ແລະ ສິ່ງແວດລ້ອມ, ມີຄວາມພາກພູມໃຈທີ່ເກີດເປັຄົນລາວ.
- ການມີມາລະຍາດທີ່ດີທາງກາຍ ( ພຶດຕິກຳ ), ວາຈາ ແລະ ຈິດໃຈ (ຄຳເວົ້າ) ທີ່ເໝາະສົມ: ກ່າວຄຳຂໍໂທດ, ໃຫ້ອະໄພ, ຄອບໃຈ, ມີຄວາມອົດທົນ, ກ້າສະແດງຄວາມຄິດເຫັນ, ເຄົາລົບນັບຖືໝູ່ເພື່ອນ, ຜູ້ໃຫ່ຍ ແລະ ຜູ້ອື່ນ.
- ການປະຕິບັດລະບຽບວິໄນ: ການປະຕິບັດການໄປມາ-ລາຄອບໃຫ້ຖືກຕາມເວລາ.

**1.2 ປະສົບການທີ່ຄວນສົ່ງເສີມ**

ປະສົບການພື້ນຖານທີ່ເປັນພື້ນຖານ ແມ່ນສິ່ງທີ່ສຳຄັນ ແລະ ຈຳເປັນໃນການສົ່ງເສີມພັດທະນາການ 5 ດ້ານ , ເຊິ່ງສະແດງໃຫ້ເຫັນດັ່ງນີ້:

1) ປະສົບການທີ່ສົ່ງເສີມພັດທະນາການທາງດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ

- ການຊົງຕົວ ແລະ ປະສານສຳພັນຂອງກ້າມຊີ້ນໃຫ່ຍ:
  - ການເຄື່ອນໄຫວກັບທີ່ ແລະ ເຄື່ອນທີ່
  - ການເຄື່ອນໄຫວກັບວັດຖຸ ແລະ ອຸປະກອນ
  - ການຫຼີ້ນເຄື່ອງຫຼີ້ນກາງເດີ່ນ
- ການປະສານສຳພັນຂອງກ້າມຊີ້ນນ້ອຍ:
  - ການຫຼີ້ນເຄື່ອງຫຼີ້ນສຳພັນ
  - ການເຮັດກິດຈະກຳສ້າງສັນຕ່າງໆເຊັ່ນ: ການແຕ້ມ, ການຫຼີ້ນກັບສີ, ການປັ້ນ, ການຮ້ອຍ, ການຈີກ, ຕັດ-ຕິດ, ການຕໍ່, ການແຍກສິ້ນສ່ວນ, ການຜອງ, ການເທ ແລະ ການປະດິດສິ່ງຕ່າງໆ.
  - ການຊ່ວຍເຫຼືອຕົນເອງໃນການແຕ່ງກາຍ.
- ການຮັກສາສຸຂະພາບ ແມ່ນເສີມສ້າງໃຫ້ເດັກມີສຸຂະນິໄສທີ່ດີ ໃນການຮັບປະທານອາຫານ, ການດື່ມ, ການພັກຜ່ອນ, ການຂັບຖ່າຍ ແລະ ການຮັກສາຄວາມສະອາດຂອງຮ່າງກາຍ.
- ການຮັກສາຄວາມປອດໄພ ຂອງຕົນເອງ ແລະ ຜູ້ອື່ນ ໂດຍສະເພາະໃນການຫຼີ້ນ ແລະ ໃນການປະຕິບັດກິດຈະກຳປະຈຳວັນ.

2) ປະສົບການທີ່ສົ່ງເສີມພັດທະນາການດ້ານພາສາ

- ກຽມຄວາມພ້ອມການນຳໃຊ້ພາສາ:
  - ເຝິກໃຊ້ພາສາລາວໃນການສື່ສານ ໂດຍຜ່ານການຟັງ ແລະ ການເວົ້າ
  - ເຝິກອ່ານຮູບພານສັນຍາລັກ ແລະ ບັດຄຳ, ອອກສຽງພະຍັນຊະນະ ແລະ ສະຫຼະໃຫ້ຖືກຕ້ອງ, ຈຳແນກສຽງຂອງພະຍັນຊະນະ ແລະ ສະຫຼະ ເຝິກຂຽນພະຍັນຊະນະ 27 ຕົວ, ສະຫຼະເຄົ້າ 28 ຕົວ, ຕົວເລກລາວ (໑, ໒, ໓, ໔, ໕, ໖, ໗, ໘, ໙ ) ແລະ ເລກອາຫລັບ ໃນຂອບເຂດແຕ່ ( 1-20 ).
  - ກ່າຍຄຳສັບທີ່ມີ 1 ແລະ 2 ພະຍາງ.

3) ປະສົບການທີ່ສົ່ງເສີມພັດທະນາການດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ:

- ກຽມຄວາມພ້ອມພື້ນຖານຄວາມຮູ້ ດ້ານຄະນິດສາດ:

ບອກສີ, ຮູບຊົງ, ຂະໜາດ, ການລຽງລຳດັບແຕ່ງ່າຍ ຫາ ຍາກ, ການຈັດໝວດໝູ່ ສິ່ງທີ່ຄືກັນ ແລະ ຕ່າງກັນ, ບອກຈຳນວນແລະ ຈື່ຈຳຕົວເລກລາວ (໑, ໒, ໓, ໔, ໕, ໖, ໗, ໘, ໙) ແລະ ຕົວເລກອາຫລັບ ( 1-20 ).

- ກຽມຄວາມພ້ອມພື້ນຖານຄວາມຮູ້ດ້ານວິທະຍາສາດ:
  - ບອກຄວາມແຕກຕ່າງຂອງປະກົດການທຳມະຊາດ ( ທ້ອງຟ້າ, ອາກາດ )
  - ບອກຄວາມແຕກຕ່າງຄຸນລັກສະນະວັດຖຸ ( ອ່ອນ, ແຂງ, ກ້ຽງ, ຊາ, ແຫ້, ປຽກ, ຮ້ອນ-ເຢັນ )
- ກຽມຄວາມພ້ອມດ້ານພື້ນຖານຄວາມຮູ້ ດ້າການປະດິດສ້າງ ສິລະປະສ້າງສັນ ແລະ ດົນຕີ:
  - ສະແດງການປະດິດສ້າງ, ສະແດງຄວາມຄິດເຫັນໂດຍຜ່ານສິລະປະສ້າງສັນ
  - ສະໜອງຕອບຕໍ່ສຽງຂອງດົນຕີ

4) ປະສົບການທີ່ສົ່ງເສີມພັດທະນາການດ້ານອາລົມຈິດ:

- ເສີມສ້າງໃຫ້ເດັກຮັບຮູ້ຕົນເອງ ແລະ ຄົນອື່ນ, ສະແດງອາລົມ ແລະ ຄວບຄຸມອາລົມຂອງຕົນເອງຢ່າງເໝາະສົມໃນສະຖານະການຕ່າງໆ.

5) ປະສົບການທີ່ສົ່ງເສີມພັດທະນາການດ້ານສັງຄົມ:

- ສາມາດຊ່ວຍເຫຼືອຕົນເອງໃນການປະຕິບັດກິດຈະກຳປະຈຳວັນ ແລະ ມ້ຽນເຄື່ອງຂອງໄວ້ບ່ອນທີ່ກຳນົດໄວ້ໃຫ້.
- ສາມາດປັບຕົວໃຫ້ເຂົ້າກັບສະພາບແວດລ້ອມຂອງສັງຄົມ
- ມີສ່ວນຮ່ວມໃນການຮຽນຮູ້ ແລະ ປະຕິບັດກິດຈະກຳຕ່າງໆ
- ມີການແລກປ່ຽນຄວາມຄິດເຫັນ ແລະ ເຄົາລົບຄວາມຄິດເຫັນຂອງຜູ້ອື່ນ
- ເຄົາລົບນັບຖື, ປະຕິບັດຮີດຄອງປະເພນີ, ວັດທະນະທຳ ແລະ ລະບຽບຂອງໂຮງຮຽນ.

**1.5. ການກຳນົດເວລາຮຽນຜະລິດສື່ການຮຽນ-ການສອນຕົວຈິງ**

**ການກຳນົດເວລາຮຽນ**

ການຈັດການກະກຽມຄວາມພ້ອມໃຫ້ແກ່ເດັກອາຍຸ 5 ປີ ໃນສົກຮຽນໜຶ່ງໃຊ້ເວລາທັງໝົດ 36 ອາທິດ ເລີ່ມຕັ້ງແຕ່ວັນທີ 1 ຂອງເດືອນ ກັນຍາ ຈົນ ເຖິງວັນທີ 30 ເດືອນພຶດສະພາແບ່ງອອກເປັນ 2 ພາກຮຽນຄື:

\+ **ພາກຮຽນທີ 1** : ມີ 18 ອາທິດສອນຕາມໜ່ວຍການສອນ, 1 ອາທິດ ຄູສັງລວມຜົນພັດທະນາການຂອງເດັກປະຈຳພາກທີ 2 ແລະ ອາທິດທີ 2 ຂອງພາກຮຽນ.

\+ **ພາກຮຽນທີ 2** : ມີ 14 ອາທິດສອນຕາມໜ່ວຍການສອນ, 1 ອາທິດ ຄູສັງລວມຜົນພັດທະນາການຂອງເດັກປະຈຳພາກທີ 2 ແລະ ອາທິດທີ 2 ຂອງພາກຮຽນ.

\+ **ພັກສິ້ນປີຮຽນ3**: ເດືອນ ( ແຕ່ເດືອນມິຖຸນາ (6) ເຖິງ ເດືອນ ສິງຫາ (8) ).

**1.1 ກຳນົດເວລາຮຽນໃນການຈັດການຮຽນ-ການສອນ 5 ວັນ** ( ວັນຈັນ ເຖິງ ວັນສຸກໃນ 1 ອາທິດ ).

**1.2 ກຳນົດເວລາເຄື່ອນໄຫວກິດຈະກຳໃນ 1 ມື້ ປະມານ 7 ຊົ່ວໂມງ**

- ການຮັບ-ການສົ່ງເດັກໃນມື້ໜຶ່ງມີທັງໝົດ 1 ຊົ່ວໂມງ.
- ກິດຈະກຳການຮຽນ-ການສອນໃນມື້ 1 ມີທັງໝົດປະມານ 2 ຊົ່ວໂມງເຄິ່ງ.
- ກິດຈະກຳການຫຼິ້ນໃນມື້ 1 ມີທັງໝົດປະມານ 2 ຊົ່ວໂມງເຄິ່ງ.
- ການອະນາໄມໃນມື້ 1 ມີທັງໝົດປະມານ 1 ຊົ່ວໂມງ.

**ຕາຕະລາງເຄື່ອນໄຫວປະຈຳວັນ**

| ສຳລັບການຈັດການຮຽນ-ການສອນ 1 ຕອນ | ສຳລັບການຈັດການຮຽນ-ການສອນ 2 ຕອນ |
|---|---|
| **7:30- 8:00** ຮັບເດັກ ແລະ ເຄົາລົບທຸງ | **7:30-8:00** ຮັບເດັກ ແລະ ເຄົາລົບທຸງ |
| 8:00- 8:15 ກິດຈະກຳກອດກາຈຳນອນພົບ ແລະ ສົນທະນາຮ່ວມກັບເດັກ | 8:00-8:15 ກິດຈະກຳກອດກາຈຳນອນພົບ ແລະ ສົນທະນາຮ່ວມກັບເດັກ |
| 8:15- 8:45 ກິດຈະກຳເຄື່ອນໄຫວ ແລະ ຈັ່ງຫວະ | 8:15-8:45 ກິດຈະກຳເຄື່ອນໄຫວ ແລະ ຈັ່ງຫວະ |
| 8:45 -9:45 ກິດຈະກຳວົງມົນ ແລະ ເກມການສຶກສາ | 8:45-9:45 ກິດຈະກຳວົງມົນ ແລະ ເກມການສຶກສາ |
| 9:45- 10:00 ພັກຜ່ອນ, ອາຫານຫວ່າງ | 9:45- 10:00 ພັກຜ່ອນ, ອາຫານຫວ່າງ |
| 10:00- 10:30 ກິດຈະກຳຫຼິ້ນກາງແຈ້ງ | 10:00- 10:30 ກິດຈະກຳຫຼິ້ນກາງແຈ້ງ |
| 11:00-11:30 ສຶກສາອົບຮົມເດັກ ອະນາໄມກະກຽມສົ່ງເດັກອາຫານທ່ຽງ | 11:00-11:30 ສຶກສາອົບຮົມເດັກ ອະນາໄມກະກຽມສົ່ງເດັກອາຫານທ່ຽງ |
| 11:30- 12:00 ສົ່ງເດັກກັບບ້ານ | 11:30- 12:00 ສົ່ງເດັກກັບບ້ານຕອນທ່ຽງ |
| | 12:00- 13:30 ພັກທ່ຽງ |
| | 13:30- 14:00 ຮັບເດັກ ແລະ ສົນທະນາກັບເດັກ |
| | 14:00-15:00 ກິດຈະກຳເສີມ |
| | 15:00-15:45 ຫຼິ້ນຢ່າງອິດສະຫຼະ |
| | 15:45-16:00 ສຶກສາອົບຮົມເດັກ ອະນາໄມກຽມສົ່ງເດັກ |
| | 16:00-16:30 ສົ່ງເດັກກັບບ້ານ |

**ໝາຍເຫດ:**

- ສຳລັບການນຳໃຊ້ຕາຕະລາງກິດຈະກຳປະຈຳວັນແມ່ນອີງຕາມສະພາບຕົວຈິງຂອງທ້ອງຖິ່ນ.
- ໂຮງຮຽນທີ່ຮຽນເຄິ່ງມື້ໃຫ້ນໃຊ້ຕາຕະລາງຮຽນ 1 ຕອນ.
- ໂຮງຮຽນທີ່ຮຽນໝົດມື້ໃຫ້ນໃຊ້ຕາຕະລາງ 2 ຕອນ
- ສຳລັບເວລາເຄົາລົບທຸງ (ຕອນເຊົ້າວັນຈັນ ແລະ ຕອນແລງວັນສຸກ) ໂດຍອີງຕາມຕາຕະລາງຂອງໂຮງຮຽນປະຖົມສຶກສາ.
- ອອກຫຼິ້ນປະຕິບັດຕາມຕາຕະລາງຂອງໂຮງຮຽນປະຖົມສຶກສາ.

## 2. ສັງລວມການຈັດປະສົບການ ແລະ ການຮຽນຮູ້.

ເດັກອາຍຸ 5 ປີ ພວມຢູ່ໃນໄວທີ່ມີການຂະຫຍາຍຕົວທາງດ້ານຮ່າງກາຍຢ່າງແຂງແຮງ ແລະ ວ່ອງໄວ, ເດັກຈະເຄື່ອນໄຫວຮ່າງກາຍຢູ່ເລື້ອຍໆ, ເດັກນ້ອຍຢູ່ລ້າໆ ເປັນເວລາດົນນານບໍ່ໄດ້ທາງດ້ານຈິດຕະສາດພວມຢູ່ໃນໄລຍະທີ່ມີໄສເປັນເຈົ້າອາລົມ, ເອົາໃຈຕົນເອງ, ຄວບຄຸມອາລົມຂອງຕົນບໍ່ໄດ້ ແລະ ມີການປ່ຽນແປງອາລົມໄດ້ງ່າຍ,ມັກຈື່ໄວ ແລະ ລືມໄວ. ສະນັ້ນຄວນມີການກະກຽມຄວາມພ້ອມໃຫ້ເດັກດັ່ງນີ້:

### 2.1. ຫຼັກການຈັດປະສົບການ ແລະ ການຮຽນຮູ້.

1) ການຈັດປະສົບການໃນການຫຼິ້ນ ແລະ ການຮຽນຮູ້ໃຫ້ສອດຄ່ອງກັບລະດັບພັດທະນາການ ແລະ ຄວາມສາມາດຂອງເດັກອາຍຸ 5 ປີ ເພື່ອໃຫ້ເດັກໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ.

2) ຈັດປະສົບການໂດຍເອົາເດັກເປັນໃຈກາງເພື່ອຕອບສະໜອງຄວາມຕ້ອງການ, ຄວາມສົນໃຈຄວາມແຕກຕ່າງລະຫວ່າງຕົວເດັກ ແລະ ສະພາບແວດລ້ອມຂອງສັງຄົມ ທີ່ເດັກອາໄສຢູ່.

3) ຈັດປະສົບການໃຫ້ເດັກໄດ້ຮັບການພັດທະນາໃນຮູບແບບບູລະນາການໂດຍເນັ້ນຂະບວນການຮຽນຮູ້ ແລະ ຜົນໄດ້ຮັບ.

4) ຈັດປະສົບການໂດຍມີການຕິດຕາມປະເມີນຜົນ ແລະ ລາຍງານພັດທະນາການເດັກ ເພື່ອໃຫ້ມີຂໍ້ມູນການບັນທຶກຢ່າງເປັນລະບົບ ແລະ ເປັນຂະບວນການຢ່າງຕໍ່ເນື່ອງ.

5) ຈັດປະສົບການໃນການພັດທະນາເດັກໂດຍໃຫ້ຄອບຄົວ, ໂຮງຮຽນ ແລະ ຊຸມຊົນມີສ່ວນຮ່ວມໃນການວາງແຜນການສະໜັບສະໜູນສື່ການຮຽນ - ການສອນ, ການເຂົ້າຮ່ວມກິດຈະກຳ ແລະ ການປະເມີນຜົນພັດທະນາການຂອງເດັກ.

### 2.2. ການຈັດກິດຈະກຳການຮຽນຮູ້.

ກິດຈະກຳທີ່ນຳມາຈັດເຂົ້າໃນການຈັດການຮຽນການ-ການສອນ ສຳລັບຫ້ອງກຽມປະຖົມ ໃນແຕ່ລະມື້ປະກອບດ້ວຍ 5 ກິດຈະກຳຄື: ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ, ກິດຈະກຳວົງມົນ ກິດຈະກຳສ້າງສັນ, ກິດຈະກຳການຫຼິ້ນກາງແຈ້ງ ແລະ ກິດຈະກຳເກມການສຶກສາ.

#### 2.2.1 ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະໝາຍເຖິງກິດຈະກຳການເຄື່ອນໄຫວຮ່າງກາຍ-ຈິດໃຈເຊິ່ງມີປະຕິກິລິຍາຕອບໂຕ້ຕໍ່ຈັງຫວະ, ດົນຕີ ເຊິ່ງຈັງຫວະ ແລະ ດົນຕີທີ່ໃຊ້ປະກອບໃນການເຄື່ອນໄຫວໄດ້ແກ່: ສຽງຕົບມື, ສຽງເພງສຽງດົນຕີ, ສຽງເຄາະໄມ້, ສຽງກອງ, ສຽງໝາກກະແຊກ ແລະ ອື່ນໆ.

### 2.2.2 ກິດຈະກຳວົງມົນ.

ກິດຈະກຳວົງມົນແມ່ນຂະບວນການຮຽນ - ການສອນທີ່ຄູເປັນຜູ້ວາງຈຸດປະສົງ, ເນື້ອໃນ ແລະ ຊອກວິທີສິດສອນໃຫ້ເໝາະສົມກັບແຕ່ລະສົ່ງອາຍຸ ແລະ ຄວາມສົນໃຈຂອງເດັກ,ເປັນກິດຈະກຳທີ່ຄູຈັດໃຫ້ມີລັກສະນະການນັ່ງເປັນວົງມົນ ແລະ ເນື້ອໃນຂອງກິດຈະກຳມີລັກສະນະປິ່ນອ້ອມຕົວຂອງມັນ, ເປັນກິດຈະກຳທີ່ມີອິດສະຫຼະໃນການຄົ້ນຄິດ, ໃນການສະແດງອອກ, ມີຄວາມສາມາດເລືອກເຮັດຕາມຄວາມສົນໃຈຂອງຕົນ ໃນກິດຈະກຳວົງມົນເດັກໃຊ້ສຳມາທິ, ມີລະບຽບໃນການຟັງ, ປະກອບຄຳເຫັນ, ການຕອບຄຳຖາມ ແລະ ມີສ່ວນຮ່ວມເດັກຂັ້ນພື້ນຖານທີ່ຈະໄປຮຽນຊັ້ນປະຖົມ ໃນການສອນກິດຈະກຳວົງມົນຄູຄວນຄຳນຶງເຖິງທຳມະຊາດທີ່ຢູ່ຮອບຕົວເດັກເຊັ່ນ: ຄົນສັດ, ພືດ, ແມງໄມ້ໝາກໄມ້ ແລະ ຕົ້ນໄມ້ໝາຍຄວາມວ່າສອນຈາກສິ່ງທີ່ຢູ່ໃກ້ຕົວໄປຫາສິ່ງທີ່ຢູ່ໄກຕົວ.ນອກນັ້ນຄູຄວນຄຳນຶງເຖິງວັນບຸນຕ່າງໆ,ລະດູການຕ່າງໆ ແລະ ສະຖານທີ່ສຳຄັນຕ່າງໆເພື່ອໃຫ້ການຈັດກິດຈະກຳວົງມົນໄດ້ຮັບຜົນດີ.

### 2.2.3 ກິດຈະກຳສິລະປະສ້າງສັນ

ຄຳວ່າສິລະປະເຊິ່ງມາຈາກພາສາລາຕິນໝາຍເຖິງຄວາມຊຳນິຊຳນານ, ຄວາມສາມາດພິເສດ ຫຼື ມີສີມືຢ່າງຍອດຢ້ຽມ. ແຕ່ໃນປະຈຸບັນສະພາບແວດລ້ອມໃນສັງຄົມໄດ້ພັດທະນາ ແລະ ປຽ່ນແປງໄປມີວັດທະນາທຳ ແລະ ວິທະຍາການໃໝ່ໆ ຢ່າງຫຼວງຫຼາຍ, ເຮັດໃຫ້ຄວາມໝາຍຂອງສິລະປະໄດ້ຂະຫຍາຍອອກຢ່າງກ້ວາງຂວາງຫຼາຍຂຶ້ນກວ່າເກົ່າ. ສິລະປະບໍ່ແມ່ນເປັນພຽງແຕ່ວຽກງານສີມືແຕ່ຢ່າງດຽວ. ສິລະປະໄດ້ກາຍເປັນເຄື່ອງມື ຫຼື ສື່ປະເພດໜຶ່ງຂອງການສະແດງອາລົມຄວາມຮູ້ສຶກນຶກຄິດຕະຫຼອດຈົນເປັນສື່ກາງໃນການຮຽນຮູ້ ການສະແດງອອກ ແລະ ໃນຂະນະດຽວກັນກໍ່ເປັນການຜ່ອນຄາຍຄວາມຕຶງຄຽດໄປພ້ອມກັນດ້ວຍ.

ສິລະປະຂອງເດັກຄືການສະແດງອອກຢ່າງອິດສະຫຼະເສລີ ເພື່ອພັດທະນາຄວາມຄິດລິເລີ່ມ ສ້າງສັນ ແລະ ຈິນຕະນາການເສີມສ້າງສິລະປະນິໄສ ແລະ ພື້ນຖານລິດນິຍົມທີ່ດີໃຫ້ແກ່ເດັກບໍ່ແມ່ນເພື່ອລາງວັນ ຄະແນນ ຫຼື ຜົນຕອບແທນທາງວັດຖຸອັນໃດອັນໜຶ່ງ.

ຈາກຜົນຂອງການສຶກສາຂອງນັກສຶກສາສາດຫຼາຍທ່ານວິໄຈພົບວ່າ ເດັກຈະມີຄວາມຄິດລິເລີ່ມສ້າງສັນຕັ້ງແຕ່ອາຍຸຫາກໍ່ເກີດ ແລະ ພັດທະນາການເລື້ອຍໆມາແຕ່ຈະລົດລົງໃນຊ່ວງອາຍຸປະມານ 10 ປີ. ສະນັ້ນການຈັດກິດຈະກຳກ່ຽວກັບສິລະປະໃຫ້ເດັກ ໂດຍສະເພາະເດັກລະດັບກ່ອນປະຖົມສຶກສານັ້ນ ເພື່ອສະໜັບສະໜູນສົ່ງເສີມຈຸດໝາຍຂອງການສຶກສາລະດັບນີ້, ອີກປະການໜຶ່ງແມ່ນເພື່ອເນັ້ນໃຫ້ເຫັນຊັດເຈນກ່ຽວກັບການສົ່ງເສີມຄວາມຄິດລິເລີ່ມສ້າງສັນຂອງເດັກບໍ່ແມ່ນເນັ້ນໃນເລື່ອງຜົນງານຂອງພວກເຂົາ. ດ້ວຍເຫດນີ້ຈຶ່ງໃຊ້ຄຳວ່າ “ ກິດຈະກຳສ້າງສັນ ” ແທນຄຳວ່າ “ ກິດຈະກຳສິລະປະສຶກສາ ” ສຳລັບເດັກກ່ອນປະຖົມສຶກສາ.

### 2.2.4 ກິດຈະກຳການຫຼິ້ນກາງແຈ້ງ

ກິດຈະກຳກາງແຈ້ງໝາຍເຖິງກິດຈະກຳທີ່ເປີດໂອກາດໃຫ້ເດັກໄດ້ເຄື່ອນໄຫວຮ່າງກາຍໃນສະຖານທີ່ໂລງແຈ້ງອາກາດບໍລິສຸດ ໂດຍມີເປົ້າໝາຍໃຫ້ເດັກໄດ້ມີຄວາມເບີກບານມ່ວນຊື່ນ ແລະ ຮູ້ຈັກການຫຼິ້ນເປັນກຸ່ມ, ເຄົາລົບກະຕິກາ ແລະ ຮູ້ຮັກສາຄວາມປອດໄພ, ເຄົາລົບກະຕິກາ ແລະ ຮູ້ຈັກຮັກສາຄວາມປອດໄພ. ການຫຼິ້ນຊ່ວຍເສີມສ້າງພັດທະນາການດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປດ້ານອາລົມຈິດ ແລະ ດ້ານສັງຄົມ.

### 2.2.5 ກິດຈະກຳເກມການສຶກສາ.

ເກມການສຶກສາໝາຍເຖິງການຫຼິ້ນ ຫຼື ແບບຫຼິ້ນທີ່ມີກະຕິກາມີລະບຽບການຫຼິ້ນ ເພື່ອພັດທະນາການຮຽນຮູ້ຄົ້ນຄິດ ແລະ ຊອກຫາເຫດຜົນ ຈາກການຫຼິ້ນເກມການສຶກສາຂອງເດັກຈະເຮັດໃຫ້ຄູສາມາດບອກໄດ້ວ່າເດັກມີ

ຄວາມເຂົ້າໃຈໃນການຫຼິ້ນເກມ ແລະ ຍັງຊ່ວຍໃຫ້ເກີດການຮຽນຮູ້ ເຊິ່ງເປັນພື້ນຖານໃນການສຶກສາວິຊາຕ່າງໆທີ່ຈະຮຽນໃນຊັ້ນປະຖົມສຶກສາ.

**2.3. ໜ່ວຍການສອນ.**

ໜ່ວຍການສອນ ໝາຍເຖິງຫົວຂໍ້ ຫຼື ເນື້ອໃນການຮຽນຮູ້ທີ່ໄດ້ກຳນົດໄວ້ໃນແຜນຈັດປະສົບການໂດຍອີງໃສ່ຫຼັກການຂອງການຈັດປະສົບການແຕ່ລະດ້ານທີ່ຄວນສົ່ງເສີມເພື່ອໃຊ້ເປັນບ່ອນອີງໃສ່ຄູ ໃນການຈັດການຮຽນ-ການສອນ ຢ່າງມີຫົວຄິດປະດິດສ້າງ.




ໜ່ວຍການສອນທີ່ໄດ້ກຳນົດໄວ້ໃນແຜນຈັດປະສົບການ ປະກອບມີ 29 ໜ່ວຍການສອນ ເຊິ່ງແຕ່ລະໜ່ວຍການສອນຈະດຳເນີນການຮຽນ-ການສອນເປັນລາຍອາທິດ, ລາຍລະອຽດດັ່ງນີ້:

1. ໜ່ວຍ ແນະນຳເບື້ອງຕົ້ນ
2. ໜ່ວຍ ຕົນຕົວຂອງເຮົາ
3. ໜ່ວຍ ຄອບຄົວຂອງເຮົາ
4. ໜ່ວຍ ເຮືອນຂອງເຮົາ
5. ໜ່ວຍ ວັນຄູແຫ່ງຊາດ
6. ໜ່ວຍ ໂຮງຮຽນຂອງເຮົາ
7. ໜ່ວຍ ສັດປີກ
8. ໜ່ວຍ ສັດນ້ຳ
9. ໜ່ວຍ ສັດບົກ

10. ໜ່ວຍ ແມງໄມ້
11. ໜ່ວຍ ປະເທດລາວ
12. ໜ່ວຍ ວັນຊາດ
13. ໜ່ວຍ ເຂົ້າ
14. ໜ່ວຍ ຜົກສົດ
15. ໜ່ວຍ ໝາກໄມ້
16. ໜ່ວຍ ອາຫານດີມີປະໂຫຍດ
17. ໜ່ວຍ ຢູ່ດີມີສຸກ
18. ໜ່ວຍ ວັດຖຸອັນຕະລາຍ
19. ໜ່ວຍ ຄົມມະນາຄົມ
20. ໜ່ວຍ ສື່ສານ
21. ໜ່ວຍ ດອກໄມ້
22. ໜ່ວຍ ວັນແມ່ຍິງ
23. ໜ່ວຍ ຕົ້ນໄມ້
24. ໜ່ວຍ ຊັບພະຍາກອນທຳມະຊາດ
25. ໜ່ວຍ ເວລາ
26. ໜ່ວຍ ປີໃໝ່ລາວ
27. ໜ່ວຍລະດູແລ້ງ
28. ໜ່ວຍ ລະດູຝົນ
29. ໜ່ວຍ ວັນເດັກ

**2.4. ຫຼັກການຈັດກິດຈະກຳການຮຽນຮູ້.**

ການຈັດກິດຈະກຳປະຈຳວັນສຳລັບເດັກຫ້ອງກຽມປະຖົມສາມາດຈັດໄດ້ຫຼາຍຮູບແບບໂດຍອີງຕາມຫຼັກການໃນການຈັດດັ່ງນີ້:

- ຈັດກິດຈະກຳດ້ວຍຫຼາຍຮູບແບບເຊັ່ນ: ກຸ່ມນ້ອຍ, ກຸ່ມໃຫ່ຍ ແລະ ເປັນລາຍບຸກຄົນ
- ການຈັດກິດຈະກຳຄວນໄດ້ໃຫ້ໂອກາດເດັກທຸກຄົນ( ເດັກຍິງ, ເດັກຊາຍ ) ໄດ້ມີສວນຮ່ວມ ແລະ ຫຼີ້ນຢ່າງສະເໝີພາບ.
- ການຈັດກິດຈະກຳການຮຽນ-ການສອນໃຊ້ເວລາປະມານ 40 ນາທີ.
- ການຈັດກິດຈະກຳການໃຊ້ໃຊ້ເວລາປະມານ 60 ນາທີ
- ຈັດກິດຈະກຳຕ້ອງໃຫ້ດຸ່ນດ່ຽງກັນລະຫວ່າງກິດຈະກຳພາຍໃນຫ້ອງຮຽນ ແລະ ນອກຫ້ອງຮຽນ, ກິດຈະກຳເຄື່ອນໄຫວຄ່ອຍ, ແຮງ ແລະ ກິດຈະກຳສະຫງົບ ເພື່ອໃຫ້ເດັກມີຄວາມກະຕືລືລົ້ນເຂົ້າຮ່ວມປະຕິບັດກິດຈະກຳ

- ຈັດກິດຈະກຳໃຫ້ເດັກໄດ້ຄົ້ນຄິດ, ວາງແຜນ, ຕັດສິນໃຈລົງມືກະທຳ ແລະ ນຳສະເໜີຄວາມຄິດໂດຍຄູ ເປັນຜູ້ກະຕຸກຊຸກຍູ້, ອຳນວຍຄວາມສະດວກ ແລະ ມີສ່ວນຮ່ວມກັບເດັກໃນການຮຽນຮູ້
- ການຈັດກິດຈະກຳໃຫ້ເດັກໄດ້ຮຽນຮູ້ໂດຍຜ່ານການນຳໃຊ້ສື່ການຮຽນ, ແຫຼ່ງຂໍ້ມູນຂ່າວສານຕ່າງໆໃນສະພາບແວດລ້ອມທີ່ເດັກດຳລົງຊີວິດຢູ່.
- ຈັດກິດຈະກຳສົ່ງເສີມລັກສະນະນິໄສທີ່ດີໃນການດຳລົງຊີວິດປະຈຳວັນ ໂດຍການເຝິກປະຕິບັດ ກິລິຍາ, ມາລະຍາດ ແລະ ວັດທະນະທຳອັນດີງາມຂອງຊາດໃນແຕ່ລະມື້.

**2.5. ການປະເມີນຜົນພັດທະນາການຂອງເດັກອາຍຸ 5 ປີ.**

ການປະເມີນພັດທະນາການຂອງເດັກອາຍຸ 5 ປີ ໃນຫ້ອງກຽມປະຖົມ ແມ່ນການປະເມີນຜົນສະມັດຖະພາບຄວາມພ້ອມດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ, ດ້ານອາລົມຈິດ ແລະ ສັງຄົມ ໂດຍປະຕິບັດເປັນປົກກະຕິໃນແຕ່ລະກິດຈະກຳ ປະຈຳວັນ ແລະ ເປັນຂະບວນການຢ່າງຕໍ່ເນື່ອງ ເພື່ອນຳເອົາຂໍ້ມູນ ການປະເມີນຜົນດັ່ງກ່າວມາສຶກສາ ແລະ ນຳໃຊ້ເຂົ້າໃນການວາງແຜນຈັດກິດຈະກຳທີ່ສົ່ງເສີມໃຫ້ເດັກໄດ້ຮັບການພັດທະນາຕາມເປົ້າໝາຍ ແລະ ຈຸດປະສົງຂອງຫຼັກສູດ.

ດັ່ງນັ້ນ, ການປະເມີນຜົນພັດທະນາການຂອງເດັກ ແມ່ນອີງຕາມຫຼັກການລຸ່ມນີ້:

- ປະເມີນຜົນພັດທະນາການຂອງເດັກຄົບທຸກດ້ານ ແລະ ນຳຜົນການປະເມີນດັ່ງກ່າວ ມາເປັນຂໍ້ມູນ ແລະ ນຳໃຊ້ເຂົ້າໃນການວາງແຜນເພື່ອສົ່ງເສີມພັດທະນາການຂອງເດັກໃນຂັ້ນຕໍ່ໄປ.
- ປະເມີນຜົນພັດທະນາການຂອງເດັກເປັນລາຍບຸກຄົນຢ່າງສະໝໍ່າສະເໝີ ແລະ ຕໍ່ເນື່ອງຕະຫຼອດປີຮຽນ.
- ປະເມີຜົນຢ່າງເປັນລະບົບ, ມີການວາງແຜນ, ເລືອກໃຊ້ເຄື່ອງມື ແລະ ຈົດບັນທຶກໄວ້ເປັນຫຼັກຖານ.
- ປະເມີນຜົນຕາມສະພາບຕົວຈິງຂອງເດັກດ້ວຍຫຼາຍວິທີທີ່ເໝາະສົມຄື: ການສັງເກດ, ການບັນທຶກພຶດຕິກຳ, ການສົນທະນາ, ການສຳພາດ, ການວິເຄາະຂໍ້ມູນຈາກການສະສົມຜົນງານຂອງເດັກເກັບໄວ້ຢ່າງມີລະບົບ, ພ້ອມທັງໃຊ້ແຫຼ່ງຂໍ້ມູນຈາກຫຼາຍໆດ້ານເຂົ້າໃນການປະເມີນຜົນພັດທະນາການຂອງເດັກ.

## 3. ສັງລວມການນຳໃຊ້ຫຼັກສູດຫ້ອງກຽມປະຖົມ.

ການນຳໃຊ້ຫຼັກສູດຫ້ອງກຽມປະຖົມໃນໂຮງຮຽນປະຖົມສຶກສາ ຢ່າງມີປະສິດທິພາບ, ຖືກກັບຫຼັກການ ແລະ ຈຸດປະສົງ ທີ່ເລັ່ງໃສ່ການສຶກສາອົບຮົມ ແລະ ສົ່ງເສີມພັດທະນາການທາງ 5 ດ້ານຂອງເດັກ ໃນການໃຊ້ຫຼັກສູດ ຄວນມີການຮ່ວມມືຈາກພາກສ່ວນຕ່າງໆເຊັ່ນ: ຄອບຄົວ, ຊຸມຊົນໃນທ້ອງຖິ່ນໃຫ້ມີສ່ວນຮ່ວມໃນການພັດທະນາເດັກແບບຮອບດ້ານ. ດັ່ງນັ້ນ, ຫ້ອງກຽມປະຖົມຄວນຈັດການຮຽນ-ການສອນໂດຍນຳໃຊ້ຫຼັກສູດດັ່ງນີ້:

**3.1 ການນຳໃຊ້ຫຼັກສູດສຳລັບຄູ**

**3.1.1 ການກະກຽມກ່ອນການນຳໃຊ້ຫຼັກສູດ.**

- ຄູສອນຫ້ອງກຽມປະຖົມ ແມ່ນຄູອະນຸບານທີ່ມີຄວາມຮູ້, ຄວາມສາມາດ, ຖ້າແມ່ນຄູສອນຊັ້ນປະຖົມສຶກສາຕ້ອງໄດ້ຜ່ານການເຝິກອົບຮົມກ່ຽວກັບການສອນຂອງຫ້ອງກຽມປະຖົມ.
- ພັດທະນາບຸກຄະລາກອນທີ່ກ່ຽວຂ້ອງ: ຜູ້ອານວຍການ, ຄູສອນຂັ້ນປະຖົມສຶກສາ, ອານາດການປົກຄອງໃຫ້ມີຄວາມຮູ້, ຄວາມເຂົ້າໃຈກ່ຽວກັບຫຼັກສູດຫ້ອງກຽມປະຖົມໃຫ້ຊັດເຈນ.

- ສຶກສາຄົ້ນຄ້ວາ, ແລະ ວິເຄາະ ຮອບຮອມດ້ານຕ່າງໆ ທີ່ກ່ຽວຂ້ອງກັບວິທີການສຶກສາອົບຮົມ, ຄວາມຕ້ອງການຂອງຜູ້ປົກຄອງເດັກ, ວັດທະນະທຳ ແລະ ຮີດຄອງປະເພນີຂອງທ້ອງຖິ່ນ ແລະ ຄວາມພ້ອມຂອງໂຮງຮຽນທີ່ຈະນຳໃຊ້ຫຼັກສູດຂອງຫ້ອງກຽມປະຖົມ.

- ສຶກສາຈຸດປະສົງ ແລະ ແຜນຈັດປະສົບການໃນການຈັດການຮຽນ-ການສອນ ເພື່ອເນັ້ນການສົ່ງເສີມພັດທະນາການເດັກໃຫ້ຖືກກັບໄວອາຍຸ.

- ຮອບຮອມເອກະສານເຊັ່ນ: ຫຼັກສູດ, ຄູ່ມື, ແຜນຈັດປະສົບການ ແລະ ສື່ການຮຽນ-ການສອນຕ່າງໆໃຫ້ພຽງພໍເພື່ອໃຊ້ເປັນແນວທາງໃນການດຳເນີນການຈັດການຮຽນ-ການສອນ.

**3.1.2 ການນຳໃຊ້ຫຼັກສູດ**

ເພື່ອບັນລຸຕາມຫຼັກການ ແລະ ຈຸດປະສົງຂອງຫຼັກສູດຫ້ອງກຽມປະຖົມ ຄວນມີວິທີການດຳເນີນງານດັ່ງນີ້:

**ກ. ການນຳໃຊ້ເນື້ອຫາຂອງຫຼັກສູດ**

- ຄົ້ນຄ້ວາຈຸດປະສົງທີ່ໄດ້ກຳນົດໄວ້ໃນຫຼັກສູດ, ໃຫ້ຄູສຶກສາເບິ່ງຄວາມສາມາດ ຫຼື ພຶດຕິກາການຮຽນຮູ້ຂອງເດັກຫຼັງຈາກທີ່ນຳໃຊ້ຫຼັກສູດ.

- ນຳໃຊ້ເນື້ອໃນທີ່ໄດ້ກຳນົດໄວ້ໃນຫຼັກສູດຫ້ອງກຽມປະຖົມໃຫ້ສອດຄ່ອງກັບພັດທະນາການເດັກທັງ 5 ດ້ານຂອງເດັກອາຍຸ 5 ປີ ຢ່າງເໝາະສົມ.

- ສ້າງແຜນການສອນ, ສື່ການຮຽນ-ການສອນທີ່ປະດິດຂຶ້ນເອງໂດຍນຳໃຊ້ວັດຖຸທີ່ມີໃນທ້ອງຖິ່ນ, ຄຳນຶງເຖິງຄວາມຍາກ-ງ່າຍຕໍ່ການຮັບຮູ້ ແລະ ການຮຽນຮູ້ຕາມຄວາມສາມາດຂອງເດັກ ແລະ ຄວາມແຕກຕ່າງທາງດ້ານສັງສັງ-ວັດທະນະທຳຂອງທ້ອງຖິ່ນ.

**ຂ. ການຈັດແຜນການສອນສຳລັບເດັກ** ຕ້ອງເລັ່ງໃສ່ການຈັດການຮຽນ-ການສອນ ໂດຍເອົາເດັກເປັນໃຈກາງ, ຄູຄວນຄຳນຶງເຖິງການພັດທະນາເດັກແບບຮອບດ້ານ ແລະ ຈັດກິດຈະກຳປະຈຳວັນໃນຮູບແບບບູລະນາການໂດຍຜ່ານການຫຼິ້ນ.

**ຄ. ການຈັດສະພາບແວດລ້ອມ** ໃນການຮຽນຮູ້ໃນຫ້ອງກຽມປະຖົມຄວນຈັດໃຫ້ມີສະພາບແວດລ້ອມທີ່ມີຄວາມອົບອຸ່ນຄ້າຍຄືກັນກັບຢູ່ເຮືອນ ຫຼື ຄອບຄົວ, ຕະຫຼອດເຖິງການເບິ່ງແຍງຄວາມສະອາດ, ຄວາມປອດໄພຈາກສິ່ງແວດລ້ອມທັງພາຍໃນ ແລະ ພາຍນອກຫ້ອງຮຽນເພື່ອຊ່ວຍໃຫ້ເດັກໄດ້ຮັບການພັດທະນາ ແລະ ຮຽນຮູ້ຢ່າງມີຄວາມເບີກບານມ່ວນຊື່ນ.

**3.2 ການມີສ່ວນຮ່ວມຂອງຜູ້ປົກຄອງເດັກໃນການນຳໃຊ້ຫຼັກສູດ.**

ຜູ້ປົກຄອງເດັກແຕ່ລະຄົນ ມີວິທີການໃນການລ້ຽງດູ ແລະ ສຶກສາອົບຮົມລູກທີ່ແຕກຕ່າງກັນຕາມຮີດຄອງປະເພນີ ແລະ ສະພາບແວດລ້ອມທາງສັງຄົມຂອງທ້ອງຖິ່ນທີ່ຕົນເອງອາໄສຢູ່. ຫຼັກສູດຫ້ອງກຽມປະຖົມຈຶ່ງເປັນບ່ອນອີງສຳລັບຜູ້ປົກຄອງເດັກໄດ້ຊ່ວຍຄູໃນການຈັດກິດຈະກຳຕ່າງໆດັ່ງນີ້:

- ສຶກສາອົບຮົມເດັກໃນຄອບຄົວໃຫ້ສອດຄ່ອງ ກັບພັດທະນາການເດັກອາຍຸ 5 ປີ.
- ຕິດຕາມ ແລະ ປະເມີນຜົນພັດທະນາການທຸກດ້ານຂອງເດັກ ໂດຍການສັງເກດເດັກ, ຮັບຮູ້ຕໍ່ຄວາມແຕກຕ່າງລະຫວ່າງເດັກດ້ວຍກັນ, ຖ້າເຫັນວ່າເດັກມີພັດທະນາການຊ້າກວ່າປົກກະຕິ ຄວນປຶກສາຄູ ຫຼື ແພດເພື່ອໃຫ້ການຊ່ວຍເຫຼືອເດັກໃນຂັ້ນຕໍ່ໄປ.

- ຊຸກຍູ້ໃຫ້ລູກມາໂຮງຮຽນເປັນປົກກະຕິ ແລະ ສົ່ງເສີມໃຫ້ເຂົາເຈົ້າໄດ້ເຂົ້າຮ່ວມກິດຈະກຳຕ່າງໆໃນໂຮງຮຽນຕາມເວລາທີ່ເໝາະສົມ.

**3.3 ການຕິດຕາມ, ປະເມີນຜົນ ແລະ ລາຍງານ.**

ການຕິດຕາມປະເມີນຜົນ ແມ່ນວິທີການກວດສອບຫຼັກສູດຫ້ອງກຽມປະຖົມ, ເຊິ່ງສາມາດແບ່ງອອກເປັນ 3 ໄລຍະດັ່ງນີ້:

**3.3.1. ການປະເມີນຜົນກ່ອນນຳໃຊ້ຫຼັກສູດ.**

ແມ່ນການປະເມີນຜົນເພື່ອກວດສອບຄຸນນະພາບ ແລະ ອົງປະກອບຂອງຫຼັກສູດ ຫຼັງຈາກທີ່ໄດ້ສ້າງຂຶ້ນມາແລ້ວ ໂດຍອີງໃສ່ຄວາມຄິດເຫັນຈາກຜູ້ຊົງວຸດທິ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງໃນລະດັບສູນກາງ, ແຂວງ ແລະ ເມືອງ.

**3.3.2. ການປະເມີນຜົນໃນໄລຍະນຳໃຊ້ຫຼັກສູດ.**

ແມ່ນການປະເມີນຜົນ ເພື່ອຕິດຕາມກວດກາວ່າ: ການນຳໃຊ້ຫຼັກສູດມີຄວາມສອດຄ່ອງ ຫຼື ບໍ່ສອດຄ່ອງ, ມີຄວາມສະດວກ ແລະ ຫຍຸ້ງຍາກ, ຄວນມີການປັບປຸງ ຫຼື ແກ້ໄຂບັນຫາໂດຍອີງໃສ່ປຶ້ມຕິດຕາມພັດທະນາການຂອງເດັກ, ປຶ້ມ ຫຼື ແຟ້ມສະສົມຜົນງານຂອງເດັກ, ປຶ້ມບັນທຶກການສັງເກດຂອງຄູ ແລະ ປຶ້ມລະບົບຂໍ້ມູນຂອງນັກຮຽນເປັນລາຍບຸກຄົນ.

**3.3.3 ການປະເມີນຜົນຫຼັງຈາກການນຳໃຊ້ຫຼັກສູດ.**

ແມ່ນການປະເມີນຜົນ ເພື່ອກວດກາລະບົບຫຼັກສູດຫຼັງຈາກທີ່ໄດ້ນຳໃຊ້ຢ່າງຄົບຊຸດໃນແຕ່ລະໄລຍະເພື່ອສະຫຼຸບຜົນວ່າ: ຫຼັກສູດທີ່ສ້າງຂຶ້ນນັ້ນມີຄວາມແທດເໝາະກັບພັດທະນາການຂອງເດັກອາຍຸ 5 ປີ, ຮີດຄອງປະເພນີ, ວັດທະນະທຳ ແລະ ສັງຄົມຂອງທ້ອງຖິ່ນ, ຄວນມີການປັບປຸງ ຫຼື ມີການພັດທະນາໃຫ້ດີຂຶ້ນ, ໂດຍອີງໃສ່ການປະເມີນຜົນຈາກໜ່ວຍງານພາຍນອກເຊັ່ນ: ສູນພັດທະນາຄຸນນະພາບການສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະ ພາກສ່ວນອື່ນໆ.

**3.3.4. ການລາຍງານຜົນການປະຕິບັດຫຼັກສູດ.**

ການລາຍງານຜົນການປະຕິບັດຫຼັກສູດຄວນລາຍງານໃຫ້ພາກສ່ວນທີ່ກ່ຽວຂ້ອງເປັນແຕ່ລະໄລຍະຕາມຂັ້ນຕອນດັ່ງນີ້:

1) ຄູສອນຫ້ອງກຽມປະຖົມລາຍງານໃຫ້ຜູ້ອຳນວຍການ, ພະນັກງານທີ່ມີສ່ວນກ່ຽວຂ້ອງໃນໂຮງຮຽນທຸກໆເດືອນ.
2) ຜູ້ອຳນວຍການໂຮງຮຽນລາຍງານໃຫ້ຜູ້ປົກຄອງເດັກ, ສະມາຄົມພໍ່ແມ່ນັກຮຽນ, ອົງການຈັດຕັ້ງບ້ານທຸກໆເດືອນ.
3) ຜູ້ອຳນວຍການໂຮງຮຽນລາຍງານໃຫ້ຫ້ອງການສຶກສາເມືອງພາກຮຽນລະຄັ້ງ.
4) ຫ້ອງການສຶກສາເມືອງລາຍງານໃຫ້ພະແນກສຶກສາປະຈຳແຂວງພາກຮຽນລະຄັ້ງ
5) ພະແນກສຶກສາປະຈຳແຂວງລາຍງານໃຫ້ກົມປະຖົມ ແລະ ອະນຸບານສຶກສາ (ກະຊວງສຶກສາທິການ ແລະ ກິລາ) ແລະ ພາກສ່ວນທີ່ກ່ຽວຂ້ອງປີລະຄັ້ງ.

## 4. ການເລື່ອນຊັ້ນ ການສຶກສາລະຫວ່າງຫ້ອງກຽມປະຖົມ ແລະ ຂັ້ນປະຖົມສຶກສາປີທີ 1.

### 4.1. ຄວາມໝາຍ ແລະ ຄວາມສຳຄັນ

ການເລື່ອນຊັ້ນການສຶກສາ ລະຫວ່າງຫ້ອງກຽມປະຖົມ ແລະ ຂັ້ນປະຖົມສຶກສາປີທີ 1 ແມ່ນໄລຍະທີ່ມີຄວາມສຳຄັນທີ່ສຸດ, ເຊິ່ງເປັນໄລຍະເຊື່ອມຕໍ່ການສຶກສາຈາກຫ້ອງກຽມປະຖົມໄປສູ່ຂັ້ນປະຖົມສຶກສາ ປີທີ 1. ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຄວນເອົາໃຈໃສ່ຕໍ່ການຈັດການຮຽນ-ການສອນຂອງຫ້ອງກຽມປະຖົມ ແລະ ຂັ້ນປະຖົມສຶກສາປີທີ 1 ເພື່ອບັນລຸຜົນຕາມຫຼັກສູດ ແລະ ສະມັດຖະພາບດ້ານຄວາມພ້ອມຂອງເດັກໃນການເຂົ້າຮຽນສຳລັບເດັກອາຍຸ 5 ປີໃນຫ້ອງກຽມປະຖົມ.

### 4.2. ບົດບາດ ແລະ ໜ້າທີ່ຂອງພາກສ່ວນທີ່ກ່ຽວຂ້ອງ

ການເລື່ອນຊັ້ນການສຶກສາ ລະຫວ່າງຫ້ອງກຽມປະຖົມ ແລະ ຂັ້ນປະຖົມສຶກສາປີທີ 1 ຈະບັນລຸຜົນສຳເລັບໄດ້ນັ້ນ ຄວນໄດ້ຮັບການຮ່ວມມືຈາກພາກສ່ວນຕ່າງໆ, ເຊິ່ງມີບົດບາດ ແລະ ໜ້າທີດັ່ງນີ້:

#### 4.2.1 ຜູ້ບໍລິຫານໂຮງຮຽນປະຖົມ.

ຜູ້ບໍລິຫານໂຮງຮຽນປະຖົມ ມີບົດບາດສຳຄັນໃນການເຊື່ອມຕໍ່ລະຫວ່າງຫຼັກສູດຫ້ອງກຽມປະຖົມ ແລະ ຂັ້ນປະຖົມສຶກສາປີທີ 1 ໂດຍສຶກສາຄົ້ນຄວ້າຫຼັກສູດຫ້ອງກຽມປະຖົມ ແລະ ຂັ້ນປະຖົມສຶກສາດັ່ງນີ້:

1) ຈັດຫາຫຼັກສູດ ແລະ ດ້ານເອກະສານວິຊາການຄ່າງໆຂອງຫ້ອງກຽມປະຖົມ ແລະ ຂັ້ນປະຖົມສຶກສາປີທີ 1 ເພື່ອເປັນຄູ່ມືໃຫ້ຄູສອນໃນໂຮງຮຽນໄດ້ສຶກສາຄົ້ນຄ້ວາໃຫ້ເຂົ້າໃຈຢ່າງຈະແຈ້ງ, ມີຄວາມເປັນເອກະພາບ ແລະ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ.
2) ຈັດປະຊຸມຄູສອນຫ້ອງກຽມປະຖົມ ແລະ ຄູສອນຂັ້ນປະຖົມສຶກສາປີທີ່ 1 ເພື່ອຮ່ວມກັນພັດທະນາເຊື່ອມຕໍ່ການສຶກສາ ຫຼັກສູດຫ້ອງກຽມປະຖົມ ແລະ ຂັ້ນປະຖົມສຶກສາປີທີ 1 ເຊັ່ນ: ສ້າງແຜນການສຶກສາຫຼັກສູດຫ້ອງກຽມປະຖົມ ແລະ ຂັ້ນປະຖົມສຶກສາປີທີ 1 ໃຫ້ສອດຄ່ອງກັບກຸ່ມເປົ້າໝາຍເດັກອາຍຸ 5-6 ປີ.
3) ການຈັດກອງປະຊຸມຄູສອນຫ້ອງກຽມປະຖົມ ແລະ ຂັ້ນປະຖົມສຶກສາປີທີ 1 ໃຫ້ມີໂອກາດແລກປ່ຽນບົດຮຽນ ແລະ ປະສົບການເຊິ່ງກັນ ແລະ ກັນ, ພ້ອມທັງຖອດຖອນບົດຮຽນ, ເຜີຍແຜ່ຂໍ້ມູນຂ່າວສານ ແລະ ຄວາມຮູ້ໃໝ່ໆ ທີ່ໄດ້ຮັບຈາກການເຝິກອົບຮົມ, ການໄປທັດສະນະສຶກສາທັງພາຍໃນ ແລະ ພາຍນອກ.
4) ຈັດການພົບປະ ແລະ ປະຕິບັດກິດຈະກຳວັນສຳຄັນຂອງຊາດ ແລະ ບຸນປະເພນີ ຮ່ວມກັບຜູ້ປົກຄອງເດັກ ແລະ ຊຸມຊົນບາງໂອກາດ ເພື່ອໃຫ້ເຂົ້າໃຈ ແລະ ສະໜັບສະໜູນໃນການຈັດການຮຽນ-ການສອນຂອງລູກຫຼານຕົນຢ່າງເໝາະສົມ.
5) ໂຮງຮຽນປະຖົມສຶກສາທີ່ມີຫ້ອງກຽມປະຖົມ ຄວນຈັດໃຫ້ມີການແນະນຳເບື້ອງຕົ້ນໃຫ້ແກ່ຜູ້ປົກຄອງເດັກຢ່າງໜ້ອຍ 2 ຄັ້ງຄື: ຄັ້ງທີ 1 ກ່ອນເດັກເຂົ້າຮຽນຫ້ອງກຽມປະຖົມ ແລະ ຄັ້ງທີ 2 ກ່ອນເດັກຈະເຂົ້າໄປຮຽນໃນຂັ້ນປະຖົມສຶກສາປີທີ 1 ເພື່ອໃຫ້ເຂົາເຈົ້າເຂົ້າໃຈລະບົບການສຶກສາຫ້ອງກຽມປະຖົມ ແລະ ຂັ້ນປະຖົມສຶກສາປີທີ 1 ພ້ອມກັບການຮ່ວມມືຊ່ວຍເຫຼືອເດັກໃນການປັບຕົວເຂົ້າກັບສະພາບແວດລ້ອມໃໝ່ໃຫ້ດີຂຶ້ນ.

#### 4.2.2 ຄູສອນຫ້ອງກຽມປະຖົມ:

ຄູສອນຫ້ອງກຽມປະຖົມ ຄວນສຶກສາຫຼັກສູດຫ້ອງກຽມປະຖົມ ແລະ ຫຼັກສູດຂັ້ນປະຖົມສຶກສາປີທີ 1, ສະມັດຖະພາບດ້ານຄວາມພ້ອມຂອງເດັກໃນການຮຽນສໍາລັບເດັກອາຍຸ 5 ປີ ພ້ອມກັນນັ້ນ ຕ້ອງສ້າງຄວາມເຂົ້າໃຈກັບຜູ້ປົກຄອງເດັກ ແລະ ຄູສອນຜູ້ອື່ນໆພາຍໃນໂຮງຮຽນ,ຊ່ວຍເຫຼືອເດັກອາຍຸ 5 ປີ ໃນການປັບຕົວ ກ່ອນຈະເຂົ້າຮຽນຂັ້ນປະຖົມສຶກສາປີທີ 1 ໂດຍການຈັດກິດຈະກໍາດັ່ງຕໍ່ໄປນີ້:

1) ເກັບກໍາ ແລະ ຮວບຮວມຂໍ້ມູນກ່ຽວກັບເດັກເປັນລາຍບຸກຄົນ ໂດຍນໍາໃຊ້ ປຶ້ມຕິດຕາມພັດທະນາການຂອງເດັກ ສົ່ງຕໍ່ໃຫ້ຄູສອນຂັ້ນປະຖົມສຶກສາປີທີ 1 ສາມາດນໍາໃຊ້ຂໍ້ມູນເຫຼົ່ານັ້ນເພື່ອຄູຈະໄດ້ຕິດຕາມປະສານສົມທົບກັບຄູສອນຂັ້ນປະຖົມສຶກສາປີທີ 1 ກ່ຽວກັບຜົນການຮຽນຂອງເດັກ, ຊ່ວຍເຫຼືອເດັກໃນການປັບຕົວໃຫ້ເຂົ້າກັບສະພາບການຮຽນຮູ້ໃນຂັ້ນຕໍ່ໄປ.
2) ຈັດໃຫ້ເດັກມີໂອກາດໄດ້ຮູ້ຈັກ ແລະ ສະໜິດສະໜົມກັບຄູສອນ, ສະພາບແວລ້ອມ ແລະ ບັນຍາກາດຂອງຫ້ອງຮຽນຂັ້ນປະຖົມສຶກສາ ປີທີ 1.
3) ສົນທະນາ ແລະ ແນະນໍາໃຫ້ເດັກຮູ້ກ່ຽວກັບປະສົບການໃນການຮຽນ-ການສອນໃນຂັ້ນປະຖົມສຶກສາປີທີ 1 ເພື່ອສ້າງໃຫ້ເດັກສົນໃຈ ແລະ ຮັກການຮຽນໃນຂັ້ນຕໍ່ໄປ.

**4.2.3 ຄູສອນຂັ້ນປະຖົມສຶກສາປີທີ 1.**

ຄູສອນຂັ້ນປະຖົມສຶກສາປີທີ 1. ຄວນສຶກສາຫຼັກສູດ, ສະມັດຖະພາບດ້ານຄວາມພ້ອມຂອງເດັກໃນການຮຽນຮູ້ສໍາລັບເດັກຫ້ອງກຽມປະຖົມ ແລະ ຫ້ອງປໍ 1 ເພື່ອໃຊ້ເປັນຂໍ້ມູນໃນການພັດທະນາການຮຽນຮູ້ໃຫ້ມີຄວາມຕໍ່ເນື່ອງໃນການຮຽນ-ການສອນ ລະຫວ່າງຫ້ອງກຽມປະຖົມ ແລະ ຂັ້ນປະຖົມສຶກສາປີທີ 1 ດັ່ງລາຍລະອຽດຕໍ່ໄປນີ້:

1) ຈັດກິດຈະກໍາໃຫ້ເດັກ ແລະ ຜູ້ປົກຄອງມີໂອກາດໄດ້ສ້າງຄວາມຮູ້ຈັກຄຸ້ນເຄີຍກັບຄູສອນ ແລະ ຫ້ອງຮຽນປະຖົມສຶກສາປີທີ 1 ກ່ອນເປີດສົກຮຽນ.
2) ຈັດສະພາບແວດລ້ອມຫ້ອງຮຽນໃຫ້ຄ້າຍຄືຫ້ອງກຽມປະຖົມ ໂດຍຈັດໃຫ້ມີມຸມປະສົບການ ການຮຽນຮູ້ພາຍໃນ ແລະ ນອກຫ້ອງຮຽນ ເພື່ອຊ່ວຍໃຫ້ເດັກຂັ້ນປະຖົມສຶກສາ ປີທີ 1 ໄດ້ປັບຕົວໃນການຮຽນຮູ້ຈາກການປະຕິບັດຕົວຈິງ.
3) ຈັດກິດຈະກໍາ ເພື່ອໃຫ້ນັກຮຽນຂັ້ນປະຖົມສຶກສາປີທີ 1 ໄດ້ມີສ່ວນຮ່ວມໃນການປະຕິບັດລະບຽບ ແລະ ຂໍ້ຕົກລົງຮ່ວມກັນ ກ່ຽວກັບການປະຕິບັດຕົນໃນໂຮງຮຽນ ແລະ ຄອບຄົວ.
4) ເຜີຍແຜ່ຂໍ້ມູນ-ຂ່າວສານຜົນການຮຽນຮູ້, ການພົວພັນທີ່ດີລະຫວ່າງເດັກ, ຄູ, ໂຮງຮຽນ, ຜູ້ປົກຄອງໃຫ້ສະມາຄົມພໍ່ແມ່ນັກຮຽນ ແລະ ອໍານາດການປົກຄອງໄດ້ຮັບຊາບ ເພື່ອມີສ່ວນຮ່ວມໃນການສົ່ງເສີມ ແລະ ສະໜັບສະໜູນວຽກງານການສຶກສາຂັ້ນພື້ນຖານໃຫ້ມີຄຸນນະພາບ.

**4.2.4 ຜູ້ປົກຄອງ ແລະ ຊຸມຊົນ:**

ເພື່ອບັນລຸການປະຕິບັດຫຼັກສູດຫ້ອງກຽມປະຖົມ ແລະ ຂັ້ນປະຖົມສຶກສາປີທີ 1 ຜູ້ປົກຄອງ ແລະ ຊຸມຊົນຄວນປະຕິບັດດັ່ງນີ້:

1) ຜູ້ປົກຄອງ ແລະ ຊຸມຊົນ ຄວນໃຫ້ມີການຮ່ວມມືກັບຄູສອນ ແລະ ໂຮງຮຽນ ຊ່ວຍກະຕຸກຊຸກຍູ້ລູກໄປໂຮງຮຽນປົກກະຕິ ແລະ ສາມາດປັບຕົວເຂົ້າໃນການຮຽນຮູ້.

2) ເຂົ້າໃຈຄວາສຳຄັນ ແລະ ຄວາມຈຳເປັນຂອງການຮຽນຮູ້ຕາມພັດທະນາການຂອງເດັກໃນໄວອາຍຸ 5 ປີ ຫາ 6 ປີ, ຊ່ວຍເຫຼືອລູກໃນການຮຽນ ແລະ ຕິດຕາມຜົນການຮຽນເປັນປົກກະຕິ.
3) ເຂົ້າໃຈ ແລະ ຕອບສະໜອງຄວາມຕ້ອງການຂອງເດັກທາງດ້ານຄວາມຮັກ, ຄວາມເອົາໃຈໃສ່ເບິ່ງແຍງດູແລ, ສຶກສາອົບຮົມ, ປົກປ້ອງ ແລະ ການພົວພັນເຊິ່ງກັນ ແລະ ກັນ.
4) ເຂົ້າຮ່ວມການວາງແຜນ ແລະ ສະໜັບສະໜູນທາງດ້ານວັດຖຸ, ແຮງງານເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆຂອງໂຮງຮຽນ.

# ບົດທີ 2

# ວິເຄາະແຜນຈັດປະສົບການ

## 1. ວິເຄາະແຜນຈັດປະສົບການເຫຼັ້ມທີ່ 1

ການວິເຄາະເປັນການໄຈ້ແຍກສິ່ງທີ່ພິຈາລະນາອອກເປັນສ່ວນຍ່ອຍທີ່ມີຄວາມສຳພັນກັນ ເພື່ອທຳຄວາມເຂົ້າໃຈແຕ່ລະສ່ວນໃຫ້ແຈ່ມແຈ້ງ ລວມທັງການສືບຄົ້ນຄວາມສຳພັນຂອງສ່ວນຕ່າງໆ ເພື່ອເບິ່ງວ່າສ່ວນປະກອບປີກຍ່ອຍນັ້ນສາມາດປັບເຂົ້າກັນໄດ້ຫຼືບໍ່ສຳພັນກ່ຽວເນື່ອງກັນແນວໃດ ເຊິ່ງຈະຊ່ວຍໃຫ້ເກີດຄວາມເຂົ້າໃຈຕໍ່ສິ່ງໃດສິ່ງໜຶ່ງຢ່າງແທ້ຈິງ ໂດຍພື້ນຖານແລ້ວ ການວິເຄາະຖືເປັນທັກສະທີ່ມະນຸດເຝິກໄດ້.

ການວິເຄາະ ຫຼື ການຄິດວິເຄາະປະກອບດ້ວຍທັກສະສຳຄັນ 3 ປະການໄດ້ແກ່:

- ການຄິດການວິເຄາະຄວາມສຳຄັນຂອງເນື້ອໃນ ຫຼື ອຸປະກອນຕ່າງໆ ເປັນການພິຈາລະນາວ່າສິ່ງໃດຈຳເປັນ ສິ່ງໃດບໍ່ຈຳເປັນ ສິ່ງໃດສຳຄັນ ສິ່ງໃດບໍ່ສຳຄັນ.
- ການຄິດການວິເຄາະຄວາມສຳພັນ ເປັນການຄົ້ນຫາຄວາມສຳພັນສິ່ງຂອງຕ່າງໆວ່າມີອັນໃດມີຄວາມສຳພັນ ຫຼື ເຊື່ອມໂຍງເຖິງກັນແນວໃດມີຄວາມສຳພັນຫຼາຍໜ້ອຍແນວໃດພຽງໃດ ແລະ ຄວາມສຳພັນນັ້ນສອດຄ່ອງ ຫຼື ຂັດແຍ່ງກັນ.
- ການວິເຄາະເຊີງຫຼັກການ ໝາຍເຖິງການຄົ້ນຫາເປັນລະບົບເລື່ອງລາວສິ່ງຂອງການເຮັດວຽກຕ່າງໆ ວ່າສິ່ງນັ້ນຢູ່ໃນສະພາບເຊັ່ນນັ້ນເນື່ອງມາຈາກສາຍເຫດໃດມີຫຍັງເປັນຫຼັກ ມີຫຼັກການແນວໃດທີ່ຍຶດຖື ແລະ ມີສິ່ງໃດເປັນຕົວເຊື່ອມໂຍງກັນ.

ດັ່ງນັ້ນ, ການວິເຄາະຈິ່ງເປັນເລື່ອງຂອງການໄຈ້ແຍກເພື່ອຄົ້ນຫາຄວາມເປັນຈິງຂອງສິ່ງຕ່າງໆແລ້ວນຳມາສະຫຼຸບເປັນຄຳຕອບ ເຊິ່ງໃນການວິເຄາະ ຈະວິເຄາະທັ້ງຂໍ້ມູນເຊີງພາຍນອກ ເຊີງຮູບປະທຳ ແລະ ວິເຄາະຂໍ້ມູນເຊີງນາມມະທຳ.

2. ວິເຄາະຄວາມຮູ້ກ່ຽວກັບພັດທະນາການທັງ 5 ດ້ານ.

**2.1 ດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ**

- ສົ່ງເສີມໃຫ້ເດັກມີຮ່າງກາຍຂະຫຍາຍຕົວສົມສ່ວນຕາມໄວອາຍຸ, ມີຄວາມປອດໄພ, ມີອະນາໄມທີ່ດີ ແລະ ມີສຸຂະພາບແຂງແຮງ.
- ເສີມສ້າງໃຫ້ເດັກມີຮ່າງກາຍຈະເລີນເຕີບໂຕຕາມສົມສ່ຳອາຍຸດ້ວຍການເຄື່ອນໄຫວຂອງພາກສ່ວນຂອງຮ່າງກາຍໄດ້ຢ່າງຄ່ອງແຄ້ວ.
- ເສີມສ້າງໃຫ້ເດັກມີສຸກຂະນິໄສທີ່ດີໃນການຮັບປະທານອາຫານ, ການດື່ມ, ການພັກຜ່ອນ ແລະ ການຂັບຖ່າຍ.
- ເສີມສ້າງໃຫ້ເດັກມີພັດທະນາກ້າມຊີ້ນນ້ອຍ, ກ້າມຊີ້ນໃຫຍ່ ແລະ ປະສາດສຳພັດ ໂດຍຜ່ານການປະຕິບັດກິດຈະກຳການຮຽນຮູ້ດ້ານຕ່າງໆເຊັ່ນ: ສິລະປະສ້າງສັນ ແລະ ການຫຼິ້ນແບບຫຼິ້ນຕ່າງໆ.

- ເສີມສ້າງໃຫ້ເດັກມີຄວາມສາມາດໃນການໃຊ້ຂະບວນການຮຽນຮູ້ ໂດຍຜ່ານປະສາດສຳຜັດດ້ວຍອິນຊີທັງ 5 ຄື: ( ຈັບ, ບາຍ, ດົມ, ຊີມ, ເບິ່ງ ).

- ເສີມສ້າງໃຫ້ເດັກມີການຈະເລີນເຕີບໂຕຕາມໄວ ໂດຍຈັດກິດຈະກຳທີ່ສົ່ງເສີມພັດທະນາການກ້າມຊີ້ນໃຫຍ່ ເຮັດໃຫ້ເດັກເຄື່ອນໄຫວໄດ້ຢ່າງຄ່ອງແຄ້ວເຊັ່ນ: ການຢືນ, ຍ່າງ, ແລ່ນ ເຕັ້ນ ໂດດ, ປີນ, ໄຕ່, ລອດ, ຄານ...ເປັນຕົ້ນ.

- ເສີມສ້າງໃຫ້ເດັກຮູ້ຈັກຮັກສາຕົນເອງໃຫ້ມີຄວາມປອດໄພຢູ່ສະເໝີ.

**2.2 ດ້ານອາລົມ-ຈິດໃຈ**

- ສົ່ງເສີມໃຫ້ເດັກມີຄວາມເຂົ້າໃຈຕົນເອງ ແລະ ຍອມຮັບຄົນອື່ນ, ສາມາດຄວບຄຸມອາລົມຂອງຕົນເອງຢ່າງເໝາະສົມໃນສະຖານະການຕ່າງໆ.

- ເສີມສ້າງໃຫ້ເດັກມີອາລົມດີ, ມີຄວາມຮູ້ສຶກທີ່ດີຕໍ່ການຮຽນຮູ້, ຍິ້ມແຍ້ມແຈ່ມໃສ ສຸພາບຮຽບຮ້ອຍ ແລະ ມີຄວາມເບີກບານມ່ວນຊື່ນ.

- ເສີມສ້າງໃຫ້ເດັກຮູ້ຈັກການລໍຄອຍ, ມີຄວາມອົດທົນ,ກ້າຫານ ແລະ ມີລະບຽບວິໄນ.

- ເສີມສ້າງໃຫ້ເດັກມີຄວາມສະຫງວນມັກ, ຊື່ນຊົມສິລະປະຄວາມງາມຂອງທຳມະຊາດ ແລະ ວັດທະນະທຳອັນດີງາມຂອງຊາດ.

- ເສີມສ້າງໃຫ້ເດັກຮູ້ຈັກຄຸນຄ່າຂອງການຮັກສາສະພາບແວດລ້ອມ.

- ເສີມສ້າງໃຫ້ເດັກມີຄວາມເມດຕາ, ເພື່ອແຜ່, ຮູ້ໃຫ້ອະໄພແກ່ຜູ້ອື່ນ ແລະ ຮູ້ຂໍໂທດເມື່ອຕົນເອງເຮັດຜິດ.

**2.3 ດ້ານສັງຄົມ**

- ເສີມສ້າງໃຫ້ເດັກສາມາດຊ່ວຍເຫຼືອຕົນເອງ, ປັບຕົວເຂົ້າກັບໝູ່ຄູ່ ແລະ ຮັກແພງຊ່ວຍຕົນເອງ, ຮູ້ປະຕິບັດຕົນເປັນຄົນດີຢູ່ໃນຄອບຄົວ ແລະ ສັງຄົມ.

- ເສີມສ້າງໃຫ້ເດັກເປັນຜູ້ມີຄຸນສົມບັດດີ, ມີມາລະຍາດ ( ເວົ້າຈາສຸພາບ ແລະ ມີຈິດໃຈທີ່ດີງາມ).

- ເສີມສ້າງໃຫ້ເດັກເຄົາລົບນັບຖືຮີດຄອງປະເພນີ, ວັດທະນະທຳອັນດີງາມຂອງຊາດ ແລະ ຂອງທ້ອງຖິ່ນ.

- ເສີມສ້າງໃຫ້ເດັກຮັກທຳມະຊາດ ແລະ ສິ່ງແວດລ້ອມ, ມີຄວາມພູມໃຈທີ່ເກີດເປັນຄົນລາວ.

**2.4 ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ**

- ສົ່ງເສີມໃຫ້ເດັກມີຄວາມຮູ້ພື້ນຖານທາງດ້ານຄະນິດສາດ, ວິທະຍາສາດ, ການປະດິດສ້າງສິລະປະສ້າງສັນ ແລະ ດົນຕີ.

- ສົ່ງເສີມໃຫ້ເດັກມີຄວາມສະຫຼາດ, ຄົ້ນຄິດ, ໃຊ້ເຫດຜົນ ແລະ ສາມາດແກ້ໄຂບັນຫາໄດ້ຢ່າງເໝາະສົມ.

2.5 ດ້ານພາສາ

- ສົ່ງເສີມໃຫ້ເດັກມີຄວາມເຂົ້າໃຈ, ມີທັກສະໃນການຟັງ, ການເວົ້າ, ການອ່ານ ແລະ ການຂຽນ.

- ສົ່ງເສີມຄວາມພ້ອມທາງດ້ານການນຳໃຊ້ພາສາລາວເປັນສື່ກາງໃນການສື່ສານ ແລະ ພົວພັນເຊິ່ງກັນ ແລະ ກັນ.

## 1. ວິເຄາະໜ່ວຍການສອນໃນແຜນຈັດປະສົບການຫ້ອງກຽມປະຖົມ ເຫຼັ້ມທີ 1

1.1 ໜ່ວຍການສອນ

1.1.1 ໜ່ວຍ ແນະນຳເບື້ອງຕົ້ນ

1.1.2 ໜ່ວຍ ຕົນຕົວຂອງເຮົາ

1.1.3 ໜ່ວຍ ຄອບຄົວຂອງເຮົາ

1.1.4 ໜ່ວຍ ເຮືອນຂອງເຮົາ

1.1.5 ໜ່ວຍ ວັນຄູແຫ່ງຊາດ

1.1.6 ໜ່ວຍ ໂຮງຮຽນຂອງເຮົາ

## ແນວທາງການຈັດແຜນການສອນ ໜ່ວຍແນະນຳເບື້ອງຕົ້ນ ອາທິດທີ 1-2 ກັນຍາ

| ພັດທະນາດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | ພັດທະນາດ້ານພາສາ | ພັດທະນາດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | ພັດທະນາດ້ານອາລົມ-ຈິດໃຈ | ພັດທະນາດ້ານສັງຄົມ |
|---|---|---|---|---|
| • ຮັບໝາກບານທີ່ມີຂະໜາດເສັ້ນຜ່າກາງ 15 ຊມ ໂດຍໃຊ້ 2 ມື ໄລຍະຫ່າງ 2 ແມັດ<br>• ໂຍນໝາກບານທີ່ມີຂະໜາດເສັ້ນຜ່າກາງ 15 ຊມ ໄລຍະຫ່າງ 2 ແມັດ ໃສ່ເປົ້າໝາຍໂດຍໃຊ້ 2 ມືຍົກຂຶ້ນກາຍຫົວ.<br>• ປັ້ນດິນໃຫ້ເປັນໜ່ວຍມົນໆ (ໝາກບານ,ທີ່ກົມທີ່ມີລັດສະໝີ 1,5 ຊມ).<br>• ລ້າງແລະເຊັດມືໃນເວລາທີ່ເໝາະສົມຫຼັງຈັບບາຍເຄື່ອງເປື້ອນ.<br>• ຖ່າຍໜັກ-ຖ່າຍເບົາຖືກບ່ອນທີ່ກຳນົດ(ວິດຖ່າຍ)<br>• ປັດກວດແລະຖິ້ມຂີ້ເຫຍື່ອໃສ່ຖັງຂີ້ເຫຍື່ອ<br>• ບອກສະຖານທີ່ໆເປັນອັນຕະລາຍຢູ່ໃນໂຮງຮຽນ (ຕົ້ນໄມ້,ໜອງນໍ້າແລະ ຖະໜົນ). | • ຈັບສໍດໍາ, ໃຊ້ສີໄມ້, ສີທຽນຢ່າງຖືກຕ້ອງ ແລະ ປັບທ່າຂອງເຈ້ຍ.ໃນເວລາຂຽນ<br>• ຟັງ ແລະ ຕອບເປັນປະໂຫຍກທີ່ສົມບູນ ແລະ ຈະແຈ້ງ<br>- ບອກຊື່ເຄື່ອງໃຊ້ປະຈໍາຕົວ ແລະ ເຄື່ອງໃຊ້ໃນຫ້ອງ<br>- ບອກຊື່ຫ້ອງຮຽນ, ຫ້ອງນໍ້າ, ສະຖານທີ່ຫຼິ້ນ.<br>• ເປີດປຶ້ມແຕ່ຂວາ-ຊ້າຍຕາມລໍາດັບ<br>• ປະຕິບັດຕາມການແນະນໍາທີ່ມີ 2 ຂັ້ນຕອນຕາມການແນະນໍາ(ລຽນແຖວ-ເຄົາລົບທຸງ)<br>• ບອກຊື່ສິ່ງພິມ 1 ຊະນິດ(ປຶ້ມນິທານ) | • ບອກຊື່ແທ້ ແລະ ນາມສະກຸນຂອງຕົນເອງ.<br>• ເຝິກແອບການຮ້ອງເພງ:<br>- ລຽນແຖວ<br>- ບອກຊື່<br>- ສະບາຍດີ<br>• ເຄື່ອນໄຫວຕາມຈັງຫວະ, ສຽງເຄາະ, ສຽງສັນຍານ, ຂໍ້ຕົກລົງ, ຕາມຈິນຕະນາການ, ການຈື່ຈໍາ ແລະ ການເປັນຜູ້ນໍາຜູ້ຕາມ.<br>• ຕົບມືຕາມຈັງຫວະສຽງເພງສະບາຍດີ, ເພງບອກຊື່.<br>• ບອກສີເຄື່ອງໃຊ້ປະຈໍາຕົວເດັກ ຫຼື ເຄື່ອງໃຊ້ໃນຫ້ອງຮຽນ( ແດງ, ເຫຼືອງ, ຟ້າ )<br>• ລຽງລໍາດັບຕາມແບບ( ປຶ້ມ, ສໍດໍາ, ແພມົນ). | • ສະແດງຄວາມເບີກບານມ່ວນຊື່ນ, ຄວາມສົນໃຈໃນການມາໂຮງຮຽນຂອງເດັກ.<br>• ກ່າວຂອບໃຈໃນເວລາຮັບສິ່ງຂອງ ແລະ ການຊ່ວຍເຫຼືອຈາກຄົນອື່ນ.<br>• ກ່າວຂໍໂທດພາຍຫຼັງທີ່ໄດ້ກະທໍາຜິດ.<br>• ສະແດງຄວາມດີໃຈແລະມ່ວນຊື່ນຕາມເວລາທີ່ເໝາະສົມ<br>• ສະແດງຄວາມເສຍໃຈ ແລະ ໂສກເສົ້າ ຕາມເວລາທີ່ເໝາະສົມ.<br>• ມີຄວາມອົດທົນລໍຖ້າຕາມລໍາດັບກ່ອນ ແລະ ຫຼັງໃນເວລາຢູ່ເຮືອນ/ໂຮງຮຽນ.<br>• ຄວບຄຸມອາລົມຕົນເອງບໍ່ໃຈຮ້າຍໄວ, ບໍ່ໄຫ້ງ່າຍ. | • ສ້າງຄວາມລຶ້ງເຄີຍລະຫ່ວາງຄູກັບນັກຮຽນ.<br>• ສະແດງຄວາມເປັນມິດ ແລະ ເອົາໃຈໃສ່ກັບໝູ່ເພື່ອນໃນເວລາຫຼິ້ນ ແລະ ເວລາຮຽນຮ່ວມກັນ.<br>• ຊ່ວຍເຫຼືອໝູ່ເພື່ອນໃນເວລາທີ່ຈໍາເປັນ.<br>• ທັກທາຍດ້ວຍການບໍ່ມືນົບ ແລະ ກ່າວຄໍາວ່າ ສະບາຍດີ<br>• ໃຊ້ຄໍາເວົ້າທີ່ສຸພາບເມື່ອຕົນເອງມີຄວາມຕ້ອງການເຮັດສິ່ງໃດໜຶ່ງ (ຂໍອະນຸຍາດ...)<br>• .ໃຊ້ຄໍາເວົ້າທີ່ສຸພາບກັບຜູ້ໃຫ່ຍ ແລະ ໝູ່ເພື່ອນຢ່າງເໝາະສົມ ( ໂດຍ, ເຈົ້າ, ຂໍໂທດ, ຂອບໃຈ )<br>• ປະຕິບັດລະບຽບ ຂອງຫ້ອງຮຽນ, ໂຮງຮຽນ.<br>• ປົກປັກຮັກສາເຄື່ອງໃຊ້ຂອງຕົນເອງ ແລະ ຂອງຫ້ອງຮຽນ.<br>• ບອກຊື່ບ້ານຂອງຕົນເອງທີ່ອາໄສຢູ່. |

**ແນວທາງການຈັດແຜນການສອນ ໜ່ວຍຕົນຕົວຂອງເຮົາ ອາທິດທີ 3-4 ກັນຍາ**

| ພັດທະນາດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | ພັດທະນາດ້ານພາສາ | ພັດທະນາດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | ພັດທະນາດ້ານອາລົມ-ຈິດໃຈ | ພັດທະນາດ້ານສັງຄົມ |
|---|---|---|---|---|
| • ເຕັ້ນຂາດຽວຂ້າມເສັ້ນແບບຊິງຕົວ ແລະ ຄວບຄຸມຕົນເອງໃນໄລຍະ 30 ຊມ.<br>• ຮ້ອຍວັດຖຸຈຳນວນ 5 ອັນທີ່ມີລັກສະນະກົມ, ກ້ຽງມີເສັ້ນຜ່າກາງ 0,3 ຊມ ດ້ວຍເຊືອກທີ່ມີຂະໜາດ0,2 ຊມ.<br>• ຂີດຕາມຮອຍຈ້ຳເສັ້ນຕັ້ງ, ນອນ ແລະ ເສັ້ນກົ່ງ.<br>• ອະນາໄມແບບເປັນນິໄສ (ທຳຄວາມສະອາດຫົວ ຫູ ຕາ ດັງ ປາກ ຕີນ ມື )<br>• ຖ່າຍໜັກ-ຖ່າຍເບົາຖືກບ່ອນທີ່ກຳນົດ(ວິດຖ່າຍ)<br>• ປັດກວດແລະຖິ້ມຂີ້ເຫຍື່ອໃສ່ຖັງຂີ້ເຫຍື່ອ<br>• ສະແດງພຶດຕິກຳທີ່ປອດໄພໃນເວລາຫຼິ້ນກັບໝູ່ເພື່ອນ (ບໍ່ແລ່ນຕຳກັນ, ຕີກັນ) | • ຈັບສໍດຳ, ໃຊ້ສີໄມ້, ສີທຽນຢ່າງຖືກຕ້ອງ ແລະ ປັບທ່າຂອງເຈ້ຍ.ໃນເວລາຂຽນ<br>• ຟັງ ແລະ ຕອບເປັນປະໂຫຍກທີ່ສົມບູນ ແລະ ຈະແຈ້ງ<br>- ບອກຊື່ສ່ວນປະກອບຂອງຮ່າງກາຍ:<br>**1)** ສ່ວນຫົວ: (ຜົມ ຕາ ຄິ້ວ ດັງ ຫູ ປາກ ໜ້າຜາກ ຄາງ ແກ້ມ)<br>**2)** ສ່ວນເລົາຄີງ: (ຕົນໂຕ ທ້ອງ ນົມ ສາຍບື ໜ້າເອິກ ສັນຫຼັງ ບ່າໄຫຼ ແອວ)<br>**3)** ສວ່ນແຂນຂາ: (ຫົວເຂົາ ໜ້າແຄ່ງ ຕີນ ຝາຕີນ ສົ້ນ ນ່ອງ ນີ້ວຕີນ ເລັບຕີນ) ແຂນ: ແຂນສອກ, ມື: ນີ້ວມື ຝາມື ເລັບມື. | • ບອກຊື່ແທ້ ແລະ ນາມສະກຸນຂອງຕົນເອງ<br>• ເຝິກແອບການຮ້ອງເພງ:<br>- ຫູ ຕາ ມື<br>- ຫັດກາຍບໍລິຫານ<br>- ອະນາໄມຮ່າງກາຍ<br>- ນີ້ວມືຢູ່ໃສ<br>• ເຄື່ອນໄຫວຕາມຈັງຫວະ, ສຽງເຄາະ, ສຽງສັນຍານ, ຂໍ້ຕົກລົງ, ຕາມຈິນຕະນາການ, ການຈື່ຈຳ ແລະ ການເປັນຜູ້ນຳຜູ້ຕາມ.<br>• ເຄື່ອນໄຫວທ່າທາງປະກອບສຽງເພງ: ຫັດກາຍຍະບໍລິຫານ, ນີ້ວມືຢູ່ໃສ<br>• ທາສີຮູບ: ປາກ, ມື, ຕາ<br>• ຈັບຄູ່ຮູບທີ່ມີຄວາມສຳພັນກັນ( ເກີບກັບຕີນ, ຫວີກັບຜົມ, ໝວກກັບຫົວຄົນ )<br>• ນັບຕົວເລກ ( 1 ) ໃນຈຳ | • ສະແດງຄວາມເບີກບານມ່ວນຊື່ນ, ຄວາມສົນໃຈໃນການມາໂຮງຮຽນຂອງເດັກ.<br>• ກ່າວຂອບໃຈໃນເວລາຮັບສິ່ງຂອງ ແລະ ການຊ່ວຍເຫຼືອຈາກຄົນອື່ນ.<br>• ກ່າວຂໍໂທດພາຍຫຼັງທີ່ໄດ້ກະທຳຜິດ.<br>• ສະແດງຄວາມດີໃຈແລະມ່ວນຊື່ນຕາມເວລາທີ່ເໝາະສົມ<br>• ສະແດງຄວາມເສຍໃຈ ແລະ ໂສກເສົ້າ ຕາມເວລາທີ່ເໝາະສົມ.<br>• ມີຄວາມອົດທົນລໍຖ້າຕາມລຳດັບກ່ອນ ແລະ ຫຼັງໃນເວລາຢູ່ເຮືອນ/ໂຮງຮຽນ.<br>• ຄວບຄຸມອາລົມຕົນເອງບໍ່ໃຈຮ້າຍໄວ, ບໍ່ໄຫ້ງ່າຍ. | • ສະແດງຄວາມເປັນມິດ ແລະ ເອົາໃຈໃສ່ກັບໝູ່ເພື່ອນໃນເວລາຫຼິ້ນ ແລະ ເວລາຮຽນຮ່ວມກັນ.<br>• ຊ່ວຍເຫຼືອໝູ່ເພື່ອນໃນເວລາທີ່ຈຳເປັນ.<br>• ທັກທາຍດ້ວຍການບໍມືນົບ ແລະ ກ່າວຄຳວ່າ ສະບາຍດີ<br>• ໃຊ້ຄຳເວົ້າທີ່ສຸພາບເມື່ອຕົນເອງມີຄວາມຕ້ອງການເຮັດສິ່ງໃດໜຶ່ງ (ຂໍອະນຸຍາດ...)<br>• .ໃຊ້ຄຳເວົ້າທີ່ສຸພາບກັບຜູ້ໃຫ່ຍ ແລະ ໝູ່ເພື່ອນຢ່າງເໝາະສົມ ( ໂດຍ, ເຈົ້າ, ຂໍໂທດ, ຂອບໃຈ )<br>• ປະຕິບັດລະບຽບ ຂອງຫ້ອງຮຽນ, ໂຮງຮຽນ.<br>• ປົກປັກຮັກສາເຄື່ອງໃຊ້ຂອງຕົນເອງ ແລະ ຂອງຫ້ອງຮຽນ.<br>• ບອກຊື່ບ້ານຂອງຕົນເອງທີ່ອາໄສຢູ່. |

| | | | | |
|---|---|---|---|---|
| | • ບອກໜ້າທີ່ຂອງອະໄວຍະວະ ເຊັ່ນ: ຫູ ຕາ ປາກ ດັງ ຕີນ ມື<br>• ປະຕິບັດຕາມການແນະນຳທີ່ມີ 2 ຂັ້ນຕອນຕາມການແນະນຳ<br>• ອ່ານອອກສຽງພະຍັນຊະນະ 2 ຕົວ ( ບ, ປ )<br>• ອ່ານອອກສຽງສະຫຼະ 2 ຕົວ ( **X**ະ , **X**າ )<br>• ຂີດຕາມຮອຍຈ້ຳ ພະຍັນຊະນະ 2 ຕົວ (ບ, ປ)<br>• ຂີດຕາມຮອຍຈ້ຳສະຫຼະ 2 ຕົວ ( **X**ະ , **X**າ )<br>• ກ່າຍຕົວເລກ 3, 4 ( ) ແລະ ເລກອາຣັບ ( 0, 1 )<br>• ສະແດງຄວາມຄິດເຫັນ ແລະ ມ່ວນຊື່ນໃນເວລາຟັງຄູເລົ່າຄຳຄ່ອງ, ເລົ່ານິທານ ( ກ່ຽວກັບຕົນຕົວຂອງເຮົາ ) | ນອນ 3 ຮູບ ( ຮູບປາກ ຫວີ ດັງ )<br>• ບອກຊື່ຕົວເລກລາວ ( ０ , １ ) ແລະ ເລກອາຣັບ ( 0, 1 ) | | |

## ແນວທາງການຈັດແຜນການສອນ ໜ່ວຍຄອບຄົວຂອງເຮົາ ອາທິດທີ 4 ກັນຍາ

| ພັດທະນາດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | ພັດທະນາດ້ານພາສາ | ພັດທະນາດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | ພັດທະນາດ້ານອາລົມ-ຈິດໃຈ | ພັດທະນາດ້ານສັງຄົມ |
|---|---|---|---|---|
| • ຍ່າງຕາມເສັ້ນຊື່ໄດ້ໃນໄລຍະ 3 ມ. ໂດຍໃຫ້ແຂນປະສານກັນ<br>• ຂີດຕາມຮອຍຈໍ້າຮູບ 3 ຫຼ່ຽມ, ສີ່ຫຼ່ຽມໃຫ້ເປັນຮູບສົມບູນນອນ.<br>• ອາບນໍ້າດ້ວຍຕົນເອງໂດຍບໍ່ມີຜູ້ອື່ນຊ່ວຍ.<br>• ຖ່າຍໜັກ-ຖ່າຍເບົາຖືກບ່ອນທີ່ກຳນົດ(ວິດຖ່າຍ)<br>• ປັດກວາດແລະຖິ້ມຂີ້ເຫຍື່ອໃສ່ຖັງຂີ້ເຫຍື່ອ<br>• ສະແດງພຶດຕິກຳທີ່ປອດໄພໃນເວລາຫຼິ້ນກັບໝູ່ເພື່ອນ (ບໍ່ແລ່ນຕຳກັນ, ຕີກັນ) | • ຈັບສໍດຳ, ໃຊ້ສີໄມ້, ສີທຽນຢ່າງຖືກຕ້ອງ ແລະ ປັບທ່າຂອງເຈ້ຍ. ໃນເວລາຂຽນ<br>• ຟັງ ແລະ ຕອບເປັນປະໂຫຍກທີ່ສົມບູນ ແລະ ຈະແຈ້ງ<br>- ບອກຊື່ພໍ່ແມ່ ບຸກຄົນໃນຄອບຄົວຂອງຕົນ<br>• ປະຕິບັດຕາມການແນະນຳທີ່ມີ 2 ຂັ້ນຕອນຕາມການແນະນຳ<br>• ອ່ານອອກສຽງພະຍັນຊະນະ 2 ຕົວ ( ດ, ຕ )<br>• ອ່ານອອກສຽງສະຫຼະ 2 ຕົວ ( xິ , xີ )<br>• ຂີດຕາມຮອຍຈໍ້າພະຍັນຊະນະ 2 ຕົວ ( ດ, ຕ )<br>• ຂີດຕາມຮອຍຈໍ້າສະຫຼະ 2 ຕົວ ( xິ , xີ ) | • ບອກຊື່ ແລະ ສາຍພົວພັນຂອງແຕ່ລະຄົນໃນຄອບຄົວ( ພໍ່ ແມ່ ອ້າຍ ເອື້ອຍ ນ້ອງ)<br>• ເຝິກແອບການຮ້ອງເພງ:<br>- ແລ່ນ<br>- ຢືນກົງ<br>- ຄອບຄົວຂອງຂ້ອຍ<br>• ເຄື່ອນໄຫວຕາມຈັງຫວະ, ສຽງເຄາະ, ສຽງສັນຍານ, ຂໍ້ຕົກລົງ, ຕາມຈິນຕະນາການ, ການຈື່ຈຳ ແລະ ການເປັນຜູ້ນຳຜູ້ຕາມ.<br>• ເຄື່ອນໄຫວທ່າທາງປະກອບສຽງເພງ: ແລ່ນ, ຢືນກົງ<br>• ຕັດເຈ້ຍມຸ່ນເພື່ອຕິດໃສ່ຮູບວົງມົນ.<br>• ທາສີຮູບບຸກຄົນໃນຄອບຄົວ<br>• ຈຳແນກຮູບຮ່າງຂະໜາດຂອງບຸກຄົນໃນຄອບຄົວ ( ນ້ອຍ-ໃຫ່ຍ, ຕໍ່າ-ສູງ ) | • ເສີມສ້າງໃຫ້ເດັກເວົ້າຈາສຸພາບ.<br>• ບອກສິ່ງທີ່ພາໃຫ້ດີໃຈ ແລະ ເສຍໃຈ.<br>• ກ່າວຂອບໃຈໃນເວລາຮັບສິ່ງຂອງ ແລະ ການຊ່ວຍເຫຼືອຈາກຄົນອື່ນ.<br>• ກ່າວຂໍໂທດພາຍຫຼັງທີ່ໄດ້ກະທຳຜິດ.<br>• ສະແດງຄວາມດີໃຈແລະມ່ວນຊື່ນຕາມເວລາທີ່ເໝາະສົມ<br>• ສະແດງຄວາມເສຍໃຈ ແລະ ໂສກເສົ້າ ຕາມເວລາທີ່ເໝາະສົມ.<br>• ມີຄວາມອົດທົນລໍຖ້າຕາມລໍາດັບກ່ອນ ແລະ ຫຼັງໃນເວລາຢູ່ເຮືອນ/ໂຮງຮຽນ.<br>• ຄວບຄຸມອາລົມຕົນເອງບໍ່ໃຈຮ້າຍໄວ, ບໍ່ໄຫ້ງ່າຍ. | • ສະແດງຄວາມເຄົາລົບ, ນັບຖື ແລະ ຮັກແພງ ບຸກຄົນໃນຄອບຄົວ<br>• ທັກທາຍດ້ວຍການບໍ່ມືນົບ ແລະ ກ່າວຄໍາວ່າ ສະບາຍດີ<br>• ໃຊ້ຄຳເວົ້າທີ່ສຸພາບເມື່ອຕົນເອງມີຄວາມຕ້ອງການເຮັດສິ່ງໃດໜຶ່ງ (ຂໍອະນຸຍາດ...)<br>• .ໃຊ້ຄຳເວົ້າທີ່ສຸພາບກັບຄົນໃນຄອບຄົວຢ່າງເໝາະສົມ ( ໂດຍ, ເຈົ້າ, ຂໍໂທດ, ຂອບໃຈ )<br>• ບອກບຸກຄົນອື່ນສາມາດໃຫ້ຄວາມຊ່ວຍເຫຼືອຕົນເອງ.<br>• ບອກອາຊີບຂອງພໍ່ ແມ່ ຂອງຕົນ<br>• ປົກປັກຮັກສາເຄື່ອງໃຊ້ຂອງຕົນເອງ ແລະ ຂອງຫ້ອງຮຽນ. |

| | | | | |
|---|---|---|---|---|
| | • ກ່າຍຕົວເລກລາວ2,3(໒, ໓) ແລະ ເລກອາຣັບ( 2, 3 )<br>• ສະແດງຄວາມຄິດເຫັນ ແລະ ມ່ວນຊື່ນໃນເວລາຟັງຄູເລົ່າຄຳ ຄ່ອງ, ເລົ່ານິທານ ( ກ່ຽວກັບ ຄອບຄົວຂອງເຮົາ ) | • ນັບຮູບສະມາຊິກໃນຄອບຄົວ ແຕ່ 1-3 ເທື່ອລະຮູບຕາມລຳດັບ<br>• ບອກຊື່ຕົວເລກລາວ 2, 3 (໒, ໓) ແລະ ເລກອາຣັບ ( 0, 1 ) | | |

## ແນວທາງການຈັດແຜນການສອນ ໜ່ວຍເຮືອນຂອງເຮົາ ອາທິດທີ 1 ຕຸລາ

| ພັດທະນາດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | ພັດທະນາດ້ານພາສາ | ພັດທະນາດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | ພັດທະນາດ້ານອາລົມ-ຈິດໃຈ | ພັດທະນາດ້ານສັງຄົມ |
|---|---|---|---|---|
| ໃຊ້ 2 ມືຍົກຂຶ້ນກາຍຫົວ<br>• ປັ້ນດິນໃຫ້ເປັນຮູບ ເຮືອ, ລົນ, ລົດ.<br>• ຖ່າຍໜັກ-ຖ່າຍເບົາຖືກບ່ອນທີ່ກຳນົດ(ວິດຖ່າຍ)<br>• ປັດກວດ ແລະ ຖິ້ມສິ່ງເສດເຫຼືອໃສ່ຖັງຂີ້ເຫຍື່ອ ຫຼື ບ່ອນທີ່ກຳນົດ..<br>• ສະແດງພຶດຕິກຳທີ່ປອດໄພໃນເວລາ ເດີນທາງເຊັ່ນ: ຂີ່ເຮືອ , ຂີ່ລົດ, ຂີ່ຍົນ. | ໂທດຂອງຍານພະຫະນະ.<br>• ເຝິກການຮູບພາບສັນຍາລັກກ່ຽວຍານພາຫະນະການຄົມມະນາຄົມ.<br>• ທວນຄືນການອ່ານອອກສຽງພະຍັນຊະນະ 4 ຕົວໃຫ້ຖືກຕ້ອງ ( ຝ, ພ, ຟ, ມ )<br>• ທວນຄືນການອ່ານອອກສຽງສະຫຼະ 4 ຕົວ ( ເXີ , ເXື , ເXັຍ , ເXຍ ).<br>• ກ່າຍພະຍັນຊະນະ 4 ຕົວ ( ຝ, ພ, ຟ, ມ )<br>• ກ່າຍສະຫຼະ 4 ຕົວ( ເXີ, ເXື, ເXັຍ , ເXຍ ).<br>• ຟ້ອງສຽງຕົວອັກສອນຕາມຮູບ: ( ຝົນ, ຝາ, ເຝື້ອ ) ແທນດວ້ຍພະຍັນຊະນະ (ຝ); ພູ, ແພ, ພໍ່ ແທນດວ້ຍພະຍັນຊະນະ (ພ); ໄຟ, ຟືນ, ຟານແທນດ້ວຍພະຍັນຊະນະ (ຟ); ແມວ, ມ້າ, ມື ແທນດວ້ຍພະຍັນຊະນະ (ມ).<br>• ກ່າຍຄຳສັບ 1 ພະຍາງ: (ຝາ, | ຈິນຕະນາການ, ການຈື່ຈຳ ແລະ ການເປັນຜູ້ນຳ-ຜູ້ຕາມ.<br>• ແຕ້ມ ແລະ ທາສີຮູບ ເຮືອກາບ, ຮູບລົດ.<br>• ຕັດ-ຕິດຮູບການສັນຈອນໃນຖະໜົນ (ຮູບຄົນ, ລົດຖີບ, ລົດຈັກ, ລົດໃຫ່ຍ).<br>• ອະທິບາຍສິ່ງທີ່ໄດ້ປະດິດຂຶ້ນ.<br>• ຈັດໝວດໝູ່ຮູບພາຫະນະຕ່າງໆທີ່ໃຊ້ໃນການເດີນທາງ( ທາງບົກ, ທາງນ້ຳ, ທາງອາກາດ).<br>• ລຽງລຳດັບຕົວອັກສອນຕາມຮູບ: (ຝ, ພ, ຟ, ມ) ( ຝາ, ພູ , ໄຟ, ມື )<br>• ນັບເຮືອທີ່ພັບດ້ວຍເຈ້ຍແຕ່1-20 ເທື່ອລະອັນຕາມລຳດັບ.<br>• ບອກຊື່ຕົວເລກລາວເລກຄູ່ ( 2, 4, 6, 8 )ໃນຂອບເຂດ 1-10. | ເສຍໃຈ.<br>• ກ່າວຂອບໃຈໃນເວລາຮັບສິ່ງຂອງ ແລະ ການຊ່ວຍເຫຼືອຈາກຄົນອື່ນ.<br>• ກ່າວຂໍໂທດພາຍຫຼັງທີ່ໄດ້ກະທຳຜິດ.<br>• ສະແດງຄວາມດີໃຈ ແລະ ມ່ວນຊື່ນຕາມເວລາທີ່ເໝາະສົມ<br>• ສະແດງຄວາມເສຍໃຈ ແລະ ໂສກເສົ້າ ຕາມເວລາທີ່ເໝາະສົມ.<br>• ມີຄວາມອົດທົນລໍຖ້າຕາມລຳດັບກ່ອນ ແລະ ຫຼັງໃນເວລາຢູ່ເຮືອນ/ໂຮງຮຽນ.<br>• ຄວບຄຸມອາລົມຕົນເອງບໍ່ໃຈຮ້າຍໄວ, ບໍ່ໄຫ້ງ່າຍ. | • ປະຕິບັດລະບຽບເວລາເດີນທາງ: ( ທາງບົກ, ທາງອາກາດ, ທາງນ້ຳ ) |

| | | | | |
|---|---|---|---|---|
| | ພູ, ໄຟ, ມີ )<br>• ກ່າຍຕົວເລກລາວເລກຄູ່(1-10) ໃນຂອບເຂດ ( 2, 4, 6, 8, 10 )<br>• ສະແດງຄວາມຄິດເຫັນ ແລະ ມ່ວນຊື່ນໃນເວລາຟັງຄູເລົ່າຄໍາຄ່ອງ, ເລົ່ານິທານ ( ກ່ຽວກັບຍານພາຫະນະໃນການຄົມມະນາຄົມ ) | | | |

**ແນວທາງການຈັດແຜນການສອນ ໜ່ວຍສື່ສານ ອາທິດທີ 3 ເດືອນ ກຸມພາ**

| ພັດທະນາດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | ພັດທະນາດ້ານພາສາ | ພັດທະນາດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | ພັດທະນາດ້ານອາລົມ-ຈິດໃຈ | ພັດທະນາດ້ານສັງຄົມ |
|---|---|---|---|---|
| • ເຕັ້ນຂາດຽວຂ້າມເສັ້ນແບບຊິງຕົວ ແລະ ຄວບຄຸມຕົນເອງໃນໄລຍະຫ່າງ 30 ຊມ.<br>• ຂີດຕາມຮອຍຈໍ້າ ເສັ້ນຕັ້ງ, ເສັ້ນນອນ, ຮູບວົງມົນ ແລະ ເສັ້ນໂຄ້ງທີ່ກໍານົດ.<br>• ບອກສຽງທີ່ໄດ້ຍິນໂດຍບໍ່ | • ປະຕິບັດຕາມການແນະນໍາທີ່ມີ 2 ຂັ້ນຕອນຕາມລໍາດັບ<br>• ຟັງ ແລະ ຕອບເປັນປະໂຫຍກທີ່ສົມບູນ ແລະ ຈະແຈ້ງ:<br>- ບອກຊື່ເຄື່ອງມືໃນການສື່ສານ(ວິທະຍຸ, ໂທລະທັດ, ໂທລະສັບ, ຕູ້ | • ຝຶກແອບການຮ້ອງເພງ:<br>- ເພງ ໂທລະສັບ<br>• ເຄື່ອນໄຫວໃຫ້ຖືກຕາມຈັງຫວະ, ສຽງເຄາະ, ສຽງສັນຍານ, ຂໍ້ຕົກລົງ, ຕາມຈິນຕະນາການ, ການຈື່ຈໍາ ແລະ ການເປັນຜູ້ນໍາ-ຜູ້ຕາມ.<br>• ແຕ້ມ ແລະ ທາສີຮູບ | • ເສີມສ້າງຄວາມເບີກບານມ່ວນຊື່ນ, ອາລົມດີ.<br>• ບອກສິ່ງທີ່ພາໃຫ້ດີໃຈ ແລະ ເສຍໃຈ.<br>• ກ່າວຂອບໃຈໃນເວລາຮັບສິ່ງຂອງ ແລະ ການຊ່ວຍເຫຼືອຈາກຄົນອື່ນ.<br>• ກ່າວຂໍໂທດພາຍຫຼັງທີ່ໄດ້ກະ | • ໃຊ້ຄໍາເວົ້າທີ່ສຸພາບເມື່ອຕົນເອງມີຄວາມຕ້ອງການສິ່ງໃດສິ່ງໜຶ່ງ( ຂໍອະນຸຍາດ)<br>• ໃຊ້ຄໍາເວົ້າທີ່ສຸພາບກັບຜູ້ໃຫຍ່ ແລະ ໝູ່ເພື່ອນຢ່າງເໝາະສົມ ( ຂອບໃຈ, ໂດຍ, ເຈົ້າ, ຂໍໂທດ )<br>• ປະຕິບັດລະບຽບໃນການນໍາ |

| | | | | |
|---|---|---|---|---|
| ໃຫ້ເຫັນ (ວິທະຍຸ, ໂທລະທັດ ແລະ ສຽງດົນຕີ.<br>• ຖ່າຍໜັກ-ຖ່າຍເບົາຖືກບ່ອນທີ່ກຳນົດ(ວິດຖ່າຍ)<br>• ປັດກວດ ແລະ ຖິ້ມສິ່ງເສດເຫຼືອໃສ່ຖັງຂີ້ເຫຍື່ອ ຫຼື ບ່ອນທີ່ກຳນົດ..<br>• ສະແດງພຶຕິກຳທີ່ປອດໄພໃນເວລາໃຊ້ເຄື່ອງສື່ສານ. | ໄປສະນີ, ຄອມພິວເຕີ້, ວີຊີດີ, ວີດີໂອ).<br>- ບອກປະໂຫດ ແລະ ໂທດຂອງການໃຊ້ເຄື່ອງມືສື່ສານ.<br>• ເຝິກການຮູບພາບສັນຍາລັກກ່ຽວເຄື່ອງມືສື່ສານ.<br>• ທວນຄືນການອ່ານອອກສຽງພະຍັນຊະນະ 6 ຕົວໃຫ້ຖືກຕ້ອງ ( ຢ, ລ, ວ, ຫ, ອ, ຣ )<br>• ທວນຄືນການອ່ານອອກສຽງສະຫຼະ 4 ຕົວ ( ເXືອ , ເXືອ , Xົວະ , Xົວ ).<br>• ທວນຄືນການກ່າຍພະຍັນຊະນະ 6 ຕົວ ( ຢ, ລ, ວ, ຫ, ອ, ຣ )<br>• ກ່າຍສະຫຼະ 4 ຕົວ( ເXືອ, ເXືອ, Xົວະ , Xົວ ).<br>• ກ່າຍຄຳສັບ 1 ພະຍາງ: (ຢາ, ລີງ, ວິ, ຫູ, ໂອ, ເຣືອ )<br>• ກ່າຍຕົວເລກສາກົນໂດຍການເພີ່ມຕົວເລກ 1 ໃສ່ທາງໜ້າ | ໂທລະສັບ, ໂທລະທັດ<br>• ປະດິດຊອງຈົດໝາຍ ແລະ ອະທິບາຍສິ່ງທີ່ປະດິດ<br>• ຈຳແນກຂະໜາດຂອງຮູບເທບ ( ນ້ອຍທີ່ສຸດ ແລະ ໃຫ່ຍທີ່ສຸດ )<br>• ລຽງລຳດັບຕົວອັກສອນຕາມຮູບ: ( ຢ, ລ, ວ, ຫ, ອ, ຣ ) ( ຢາ, ລີງ, ວີ, ຫູ, ໂອ, ເຣືອ)<br>• ນັບຊອງຈົດໝາຍ 1-20 ເທື່ອລະຊອງຕາມລຳດັບ.<br>• ບອກຊື່ 2 ຕົວເລກທີ່ຂາດຫາຍໄປ ( 11 ແລະ 13 )ໃນລະຫວ່າງເລກ10 .....,....,.....14. | ທຳຜິດ.<br>• ສະແດງຄວາມດີໃຈ ແລະ ມ່ວນຊື່ນຕາມເວລາທີ່ເໝາະສົມ<br>• ສະແດງຄວາມເສຍໃຈ ແລະ ໂສກເສົ້າ ຕາມເວລາທີ່ເໝາະສົມ.<br>• ມີຄວາມອົດທົນລໍຖ້າຕາມລຳດັບກ່ອນ ແລະ ຫຼັງໃນເວລາຢູ່ເຮືອນ/ໂຮງຮຽນ.<br>• ຄວບຄຸມອາລົມຕົນເອງບໍ່ໃຈຮ້າຍໄວ, ບໍ່ໄຫ້ງ່າຍ. | ໃຊ້ເຄື່ອງສື່ສານເວລາຢູ່ເຮືອນ ແລະ ຢູ່ໂຮງຮຽນ( ໂທລະສັບ , ໂທລະທັດ )<br>• ປົກປັກຮັກສາວັດຖຸໃນການສື່ສານຂອງຕົນເອງ, ຂອງສວນລວມ. |

| | | | | |
|---|---|---|---|---|
| | ຂອງບ່ອນຈໍ້າເມັດ ແຕ່ຕົວເລກ(0-4): (0 1 2....4).<br>• ສະແດງຄວາມຄິດເຫັນ ແລະ ມ່ວນຊື່ນໃນເວລາຟັງຄູເລົ່າຄໍາຄ່ອງ, ເລົ່ານິທານ ( ກ່ຽວກັບເຄື່ອງມືສື່ສານ ) | | | |

**ແນວທາງການຈັດແຜນການສອນ ໜ່ວຍດອກໄມ້ ອາທິດທີ 4 ເດືອນ ກຸມພາ**

| ພັດທະນາດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | ພັດທະນາດ້ານພາສາ | ພັດທະນາດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | ພັດທະນາດ້ານອາລົມ-ຈິດໃຈ | ພັດທະນາດ້ານສັງຄົມ |
|---|---|---|---|---|
| • ຍ່າງ ຕາມເສັ້ນຊື່ໃນໄລຍະ 5 ແມັດ ໂດຍໃຊ້ແຂນປະສານກັນ.<br>• ຮ້ອຍດອກໄມ້, ໃບໄມ້ຈໍານວນ 10 ດອກ ແລະ 10 ໃບ.<br>• ປັ້ນດິນເປັນຮູບດອກໄມ້<br>• ບອກຊື່ດອກໄມ້ດ້ວຍການດົມກິ່ນໂດຍບໍ່ໃຫ້ເຫັນເຊັ່ນ: ດອກຈໍາປາ, ດອກ | • ປະຕິບັດຕາມ 3 ຂັ້ນຕອນຕາມລໍາດັບ.<br>• ຟັງ ແລະ ຕອບເປັນປະໂຫຍກທີ່ສົມບູນ ແລະ ຈະແຈ້ງ:<br>- ບອກຊື່ຂອງດອກໄມ້ຢ່າງໜ່ອຍ 5 ຊະນິດຂຶ້ນໄປ.<br>- ບອກສວນປະກອບຂອງດອກໄມ້.<br>- ບອກຄຸນປະໂຫຍດ ແລະ | • ເຝິກແອບການຮ້ອງເພງ:<br>- ເພງ ສີ່ງດອກໄມ້<br>- ເພງ ປູກດອກໄມ້<br>- ເພງ ຫຼານຮັກດອກຈໍາປາ<br>• ເຄື່ອນໄຫວໃຫ້ຖືກຕາມຈັງຫວະ, ສຽງເຄາະ, ສຽງສັນຍານ, ຂໍ້ຕົກລົງ, ຕາມຈິນຕະນາການ, ການຈື່ຈໍາ ແລະ ການເປັນຜູ້ນໍາ-ຜູ້ຕາມ.<br>• ແຕ້ມ ແລະ ທາສີຮູບດອກ | • ເສີມສ້າງຄວາມເບີກບານມ່ວນຊື່ນໃນການເຂົ້າຮ່ວມກິດຈະກໍາຕ່າງໆນໍາຄູ ແລະ ໝູ່ເພື່ອນ.<br>• ເສີມສ້າງໃຫ້ເດັກຮູ້ຄວາມສວຍງາມຂອງດອກໄມ້, ໃບໄມ້<br>• ບອກສິ່ງທີ່ພາໃຫ້ດີໃຈ ແລະ ເສຍໃຈ.<br>• ກ່າວຂອບໃຈໃນເວລາຮັບສິ່ງ | • ບົວລະບັດ ແລະ ປົກປັກຮັກສາດອກໄມ້ທີ່ເປັນຂອງຕົນເອງ ແລະ ສວນລວມຕາມສະຖານທີ່ຕ່າງໆ. |

| | | | | |
|---|---|---|---|---|
| ດາວເຮືອງ, ດອກຊ້ອນ ຫຼື ດອກໄມ້ທີ່ມີຢູ່ໃນທ້ອງຖິ່ນ.<br>• ລ້າງ ແລະ ເຊັດມືຫຼັງຈາກການສຳພັດກັບດອກໄມ້.<br>• ອະນາໄມແບບເປັນນິໄສ (ທຳຄວາມສະອາດໜ້າ, ຜົມ, ເລັບມື, ແລະ ເຄື່ອງນຸ່ງໃຫ້ສະອາດ). | ໂທດຂອງດອກໄມ້.<br>- ບອກສັນຍາລັກກ່ຽວກັບດອກໄມ້<br>• ອ່ານຄຳສັບທີ່ມີ 2 ພະຍາງ ທີ່ຂຶ້ນຕົ້ນດ້ວຍພະຍັນຊະນະຕາມຮູບ: (ກ, ຂ, ຄ) ( ໄກ່ແມ່, ໄຂ່ໄກ່, ຄວາຍດຳ)<br>• ກ່າຍຄຳສັບທີ່ມີ 2 ພະຍາງ: ( ໄກ່ແມ່, ໄຂ່ໄກ່, ຄວາຍດຳ)<br>• ກ່າຍຕົວເລກສາກົນໂດຍການເພີ່ມຕົວເລກ 1 ໃສ່ທາງໜ້າຂອງບ່ອນຈ້ຳເມັດແຕ່ຕົວເລກ (5 6 7...... ....... 9).<br>• ສະແດງຄວາມຄິດເຫັນ ແລະ ມ່ວນຊື່ນໃນເວລາຟັງຄູເລົ່າຄຳຄ່ອງ, ເລົ່ານິທານ ( ກ່ຽວກັບກັບດອກໄມ້ ) | ໄມ້.<br>• ປະດິດດອກໄມ້ດ້ວຍເຈ້ຍ<br>• ອະທິບາຍສິ່ງທີ່ປະດິດຂຶ້ນ.<br>• ຈຳແນກຂະໜາດ ແລະ ຄວາມແຕກຕ່າງຂອງດອກໄມ້ (ດອກໄມ້ທີ່ມີຕາມທ້ອງຖິ່ນ) ນ້ອຍທີ່ສຸດ ແລະ ໃຫ່ຍທີ່ສຸດ ( 3 ຊະນິດ )<br>• ຈັດໝວດໝູ່ດອກໄມ້ຊະນິດດຽວກັນທີ່ມີຂະໜາດ ແລະ ສີແຕກຕ່າງກັນ 2 ຂະໜາດ( ນ້ອຍ ໃຫ່ຍ ສີແດງ ຂາວ).<br>• ລຽງລຳດັບອັກສອນຕາມຮູບຂອງພະຍັນຊະນະ( ກ, ຂ, ຄ) ( ໄກ່ແມ່, ໄຂ່ໄກ່, ຄວາຍດຳ)<br>• ນັບດອກໄມ້ 1-20 ເທື່ອລະດອກຕາມລຳດັບ.<br>• ບອກຊື່ 2 ຕົວເລກທີ່ຂາດຫາຍໄປ( 15 ແລະ 18 )ໃນລະຫວ່າງເລກ( 15-20). | ຂອງ ແລະ ການຊ່ວຍເຫຼືອຈາກຄົນອື່ນ.<br>• ກ່າວຂໍໂທດພາຍຫຼັງທີ່ໄດ້ກະທຳຜິດ.<br>• ສະແດງຄວາມດີໃຈ ແລະ ມ່ວນຊື່ນຕາມເວລາທີ່ເໝາະສົມ<br>• ສະແດງຄວາມເສຍໃຈ ແລະ ໂສກເສົ້າ ຕາມເວລາທີ່ເໝາະສົມ.<br>• ມີຄວາມອົດທົນລໍຖ້າຕາມລຳດັບກ່ອນ ແລະ ຫຼັງໃນເວລາຢູ່ເຮືອນ/ໂຮງຮຽນ.<br>• ຄວບຄຸມອາລົມຕົນເອງບໍ່ໃຈຮ້າຍໄວ, ບໍ່ໄຫ້ງ່າຍ. | |

**ແນວທາງການຈັດແຜນການສອນ ໜ່ວຍວັນແມ່ຍິງ ອາທິດທີ 1 ເດືອນ ມີນາ**

| ພັດທະນາດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | ພັດທະນາດ້ານພາສາ | ພັດທະນາດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | ພັດທະນາດ້ານອາລົມ-ຈິດໃຈ | ພັດທະນາດ້ານສັງຄົມ |
|---|---|---|---|---|
| • ຍ່າງຕໍ່ຕີນຖອຍຫຼັງຕາມເສັ້ນຊື່ໃນໄລຍະ 5 ແມັດດ້ວຍການຊົງຕົວ ແລະ ຄວບຄຸມຕົນເອງ.<br>• ຮ້ອຍດອກໄມ້ໃຫ້ເປັນສາຍແຂນ, ສາຍຄໍ.<br>• ອາບນໍ້າດ້ວຍຕົນເອງໂດຍບໍ່ມີຜູ້ອື່ນຊ່ວຍ.<br>• ຖ່າຍໜັກ-ຖ່າຍເບົາຖືກບ່ອນທີ່ກຳນົດ(ວິດຖ່າຍ)<br>• ປັດກວດ ແລະ ຖິ້ມສິ່ງເສດເຫຼືອໃສ່ຖັງຂີ້ເຫຍື່ອ ຫຼື ບ່ອນທີ່ກຳນົດ.. | • ປະຕິບັດຕາມການແນະນຳ 3 ຂັ້ນຕອນ<br>• ຟັງ ແລະ ຕອບເປັນປະໂຫຍກທີ່ສົມບູນ ແລະ ຈະແຈ້ງ:<br>- ບອກຄວາມໝາຍຂອງວັນແມ່ຍິງສາກົນ ທີ 8 ເດືອນ 3 ຂອງທຸກໆປີ.<br>• ເຝິກການຮູບພາບສັນຍາລັກກ່ຽວກັບການນຸ່ງເຄື່ອງຂອງແມ່ຍິງລາວ.<br>• ອ່ານຄຳສັບທີ່ມີ 2 ພະຍາງທີ່ຂຶ້ນຕົ້ນດ້ວຍພະຍັນຊະນະຕາມຮູບ: (ງ, ຈ, ສ); ( ງູເຫົ່າ , ຈານດິນ, ສິງໂຕ )<br>• ກ່າຍຄຳສັບທີ່ມີ 2 ພະຍາງ ( ງູເຫົ່າ, ຈານດິນ, ສິງໂຕ )<br>• ທວນຄືນກ່າຍຕົວເລກສາກົນໂດຍການເພີ່ມຕົວເລກ 1 ໃສ່ທາງໜ້າຂອງບ່ອນຈໍ້າເມັດແຕ່ | • ເຝິກແອບການຮ້ອງເພງ:<br>- ເພງ ອວຍພອນແມ່<br>- ເພງ ວັນທີ 8 ເດືອນ 3<br>• ເຄື່ອນໄຫວໃຫ້ຖືກຕາມຈັງຫວະ, ສຽງເຄາະ, ສຽງສັນຍານ, ຂໍ້ຕົກລົງ, ຕາມຈິນຕະນາການ, ການຈື່ຈຳ ແລະ ການເປັນຜູ້ນຳ-ຜູ້ຕາມ.<br>• ແອບຟ້ອນປະກອບສຽງເພງອວຍພອນແມ່<br>• ທາສີຮູບຊໍ່ດອກໄມ້.<br>• ປະດິດບັດອວຍພອນແມ່.<br>• ອະທິບາຍສິ່ງທີ່ປະດິດຂຶ້ນ.<br>• ລຽງລຳດັບຮູບການປະຕິບັດຕົນໃນວັນແມ່( ກຽມດອກໄມ້ຖືຊໍ່ດອກໄມ້ ມອບຊໍ່ດອກໄມ້ໃຫ້ແມ່)<br>• ລຽງລຳດັບຕົວອັກສອນຕາມຮູບຂອງພະຍັນຊະນະ: ( ງ, ຈ, ສ ) ( ງູເຫົ່າ, ຈານດິນ, | • ມີຄວາມເບີກບານມ່ວນຊື່ນໃນການປະຕິບັດກິດຈະກຳຮ່ວມກັບໝູ່ເພື່ອນ.<br>• ເສີມສ້າງໃຫ້ເດັກມີຄວາມອົດທົນລໍຄອຍ.<br>• ໃຫ້ເດັກສະແດງຄວາມຮູ້ສຶກທີ່ດີຕໍ່ພໍ່ແມ່.<br>• ບອກສິ່ງທີ່ພາໃຫ້ດີໃຈ ແລະ ເສຍໃຈ.<br>• ກ່າວຂອບໃຈໃນເວລາຮັບສິ່ງຂອງ ແລະ ການຊ່ວຍເຫຼືອຈາກຄົນອື່ນ.<br>• ກ່າວຂໍໂທດພາຍຫຼັງທີ່ໄດ້ກະທຳຜິດ.<br>• ສະແດງຄວາມດີໃຈ ແລະ ມ່ວນຊື່ນຕາມເວລາທີ່ເໝາະສົມ<br>• ສະແດງຄວາມເສຍໃຈ ແລະ ໂສກເສົ້າ ຕາມເວລາທີ່ເໝາະສົມ. | • ໃຊ້ຄຳເວົ້າທີ່ສຸພາບເມື່ອຕົນເອງມີຄວາມຕ້ອງການສິ່ງໃດສິ່ງໜຶ່ງ ເຊັ່ນ: ຂໍອະນຸຍາດ<br>• ໃຊ້ຄຳເວົ້າທີ່ສຸພາບກັບຜູ້ໃຫຍ່ ແລະ ໝູ່ເພື່ອນຢ່າງເໝາະສົມ ( ຂອບໃຈ, ໂດຍ, ເຈົ້າ, ຂໍໂທດ )<br>• ບອກເຫດການສະເຫຼີມສະຫຼອງໃນວັນແມ່ຍິງສາກົນ. |

| | | | | |
|---|---|---|---|---|
| | ຕົວເລກ( 0,.....2, 3, 4, 5, 6, 7, 8, 9 )<br>• ສະແດງຄວາມຄິດເຫັນ ແລະ ມ່ວນຊື່ນໃນເວລາຟັງຄູເລົ່າຄຳ ຄ່ອງ, ເລົ່ານິທານ ( ກ່ຽວກັບ ວັນແມ່ຍິງສາກົນ ) | ສິ່ງໂຕ)<br>• ນັບບັດອອຍພອນແຕ່ 1 ເຖິງ 20 ເທື່ອລະບັດຕາມລຳດັບ. | • ມີຄວາມອົດທົນລໍຖ້າຕາມລຳດັບກ່ອນ ແລະ ຫຼັງໃນເວລາ ຢູ່ເຮືອນ/ໂຮງຮຽນ.<br>• ຄວບຄຸມອາລົມຕົນເອງບໍ່ໃຈ ຮ້າຍໄວ, ບໍ່ໄຫ້ງ່າຍ. | |

## ແນວທາງການຈັດແຜນການສອນ ໜ່ວຍຕົ້ນໄມ້ ອາທິດທີ 2 ເດືອນ ມີນາ.

| ພັດທະນາດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | ພັດທະນາດ້ານພາສາ | ພັດທະນາດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | ພັດທະນາດ້ານອາລົມ-ຈິດໃຈ | ພັດທະນາດ້ານສັງຄົມ |
|---|---|---|---|---|
| • ຮັບໝາກບານ ທີ່ມີຂະໜາດ ເສັ້ນຜ່າກາງ 15 ຊມ ໂດຍ ໃຊ້ 2 ມືໄລະຫ່າງ 2 ແມັດ<br>• ໂຍນໝາກບານທີ່ມີຂະໜາດເສັ້ນຜ່າກາງ 15 ຊມ ໄລຍະຫ່າງ 2 ແມັດ ໂດຍ ໃຊ້ມື 2 ມື ໂຍນຂຶ້ນກາຍ ຫົວ.<br>• ຮ້ອຍດອກໄມ້, ໃບໄມ້ ຈຳນວນ 10 ດອກ ແລະ 10 ໃບ. | • ປະຕິບັດຕາມການແນະທີ່ມີ 3 ຂັ້ນຕອນຕາມລາດັບ<br>• ຟັງ ແລະ ຕອບເປັນປະໂຫຍກທີ່ ສົມບູນ ແລະ ຈະແຈ້ງ:<br>- ບອກຊື່ ຕົ້ນໄມ້ຢ່າງນ້ອຍ 5 ຊະນິດຂຶ້ນໄປ.<br>- ບອກສ່ວນປະກອບ, ໜ້າ ທີ່ ແຕ່ລະພາກສ່ວນຂອງ ຕົ້ນໄມ້.<br>- ບອກປະໂຫຍດ ແລະ ໂທດຂອງຕົ້ນໄມ້. | • ເຝິກແອບການຮ້ອງເພງ:<br>- ຂ້ອຍຄືໃຜ<br>- ກິ່ງ,ກ້ານໃບ,ໃບ<br>- ປ່າໄມ້<br>• ເຄື່ອນໄຫວໃຫ້ຖືກຕາມ ຈັງຫວະ, ສຽງເຄາະ, ສຽງ ສັນຍານ, ຂໍ້ຕົກລົງ, ຕາມ ຈິນຕະນາການ, ການຈື່ຈຳ ແລະ ການເປັນຜູ້ນຳ-ຜູ້ຕາມ.<br>• ເຄື່ອນໄຫວທ່າທາງຕາມສຽງ ເພງ ກິ່ງ ກ້ານ ໃບ | • ມີຄວາມເບີກບານມ່ວນຊື່ນ ໃນການປະຕິບັດກິດຈະກຳ ຮ່ວມກັບໝູ່.<br>• ເສີມສ້າງໃຫ້ເດັກມີຄວາມຮັກ ຄວາມງາມຂອງຕົ້ນໄມ້<br>• ບອກສິ່ງທີ່ພາໃຫ້ດີໃຈ ແລະ ເສຍໃຈ.<br>• ກ່າວຂອບໃຈໃນເວລາຮັບສິ່ງ ຂອງ ແລະ ການຊ່ວຍເຫຼືອ ຈາກຄົນອື່ນ.<br>• ກ່າວຂໍໂທດພາຍຫຼັງທີ່ໄດ້ກະ | • ປົກປັກຮັກສາຕົ້ນໄມ້ທີ່ເປັນ ຂອງຕົນເອງ ແລະ ສວນລວມຕາມສະຖານທີ່ ຕ່າງໆ. |

| | | | | |
|---|---|---|---|---|
| • ບອກຊື່ວັດຖຸໄດ້ດ້ວຍການຈັບບາຍ ໂດຍບໍ່ໃຫ້ເຫັນ( ໄມ້, ກ້ອນຫີນ, ຢາງ ...)<br>• ບອກສິ່ງທີ່ໄດ້ຍິນໂດຍບໍ່ໄດ້ເຫັນ ( ເຄາະໄມ້, ເຄາະຫີນ, ເຄາະເຫຼັກ...)<br>• ລ້າງແລະເຊັດມືຫຼັງຈາກຈັບບາຍໄມ້ ກ້ອນຫີນ ແລະອື່ນໆ<br>• ປັດກວດແລະຖິ້ມສິ່ງເສດເຫຼືອໃສ່ຖັງຂີ້ເຫຍື່ອ ຫຼືບ່ອນກຳນົດ.<br>• ບອກສິ່ງທີ່ເປັນອັນຕລາຍຕໍ່ຕົນເອງ 4 ຢ່າງ ( ຕົ້ນໄມ້ສູງ , ໜາມ, ຢາງຕົ້ນໄມ້, ຕົ້ນໄມ້ຄາຍ ) | • ເຝິກການອ່ານຮູບພາບສັນຍາລັກກ່ຽວກັບຕົ້ນໄມ້.<br>• ອ່ານຄຳສັບທີ່ມີ 2 ພະຍາງທີ່ຂຶ້ນຕົ້ນດ້ວຍພະຍັນຊະນະຕາມຮູບ ( ຊ, ຍ, ດ )( ຊ້າງນ້ອຍ, ຍູງລາຍ, ເດັກນ້ອຍ )<br>• ກ່າຍຄຳສັບທີ່ມີ 2 ພະຍາງ( ຊ້າງນ້ອຍ, ຍູງລາຍ, ເດັກນ້ອຍ )<br>• ກ່າຍຕົວເລກໂດຍການເພີ່ມໂຕເລກ1 ໃສທາງໜ້າຂອງບ່ອນຈ້ຳເມັດແຕ່ລະຕົວເລກ (0ຫາ5) : (0.1.2.3.4.5 )<br>• ສະແດງຄວາມຄິດເຫັນ ແລະຄວາມມ່ວນຊື່ນ ໃນເວລາຟັງຄູ ເລົ່າຄຳຄ່ອງ, ເລົ່າເລື່ອງ ( ກ່ຽວກັບດອກໄມ້ ) | • ແຕ້ມ ແລະ ທາສີຮູບຕົ້ນໄມ້.<br>• ຕັດແລະຕິດຮູບຕົ້ນໄມ້.<br>• ລຽງລຳດັບການຈະເລີນເຕີບໂຕຂອງຕົ້ນໄມ້.<br>• ຈຳແນກລະດັບຂອງຕົ້ນໄມ້ທີ່ຕ່ຳທີ່ສຸດ ແລະ ສູງທີ່ສຸດ.<br>• ລຽງລຳດັບຕົວອັກສອນຂອງພະຍັນຊະນະ ຕາມຮູບ ( ຊ ຍ ດ )(ຊ້າງນ້ອຍ. ຍູງລາຍ. ເດັກນ້ອຍ).<br>• ບອກຊື່ 2 ຕົວເລກ ທີ່ຂາດຫາຍໄປ ( 12 ແລະ 19 )ໃນລະຫວ່າງ 11-20 | ທຳຜິດ.<br>• ສະແດງຄວາມດີໃຈ ແລະມ່ວນຊື່ນຕາມເວລາທີ່ເໝາະສົມ<br>• ສະແດງຄວາມເສຍໃຈ ແລະໂສກເສົ້າ ຕາມເວລາທີ່ເໝາະສົມ.<br>• ມີຄວາມອົດທົນລໍຖ້າຕາມລຳດັບກ່ອນ ແລະ ຫຼັງໃນເວລາຢູ່ເຮືອນ/ໂຮງຮຽນ.<br>• ຄວບຄຸມອາລົມຕົນເອງບໍ່ໃຈຮ້າຍໄວ, ບໍ່ໄຫ້ງ່າຍ. | |

1.2 ໃຫ້ນັກສຶກສາ ສຶກສາ ແລະ ວິເຄາະຈາກແຜນຈັດປະສົບການຂ້າງເທິງນັ້ນແລ້ວຂຽນລົງໃສ່ຕາຕະລາງຕາມຫົວຂໍ້ທີ່ກຳນົດ: ເນື້ອໃນໜ່ວຍການສອນ, ອຸປະກອນໜ່ວຍການສອນ, ການປະເມີນໜ່ວຍການສອນແຕ່ໜ່ວຍທີ 18-22 ດັ່ງນີ້:

ໜ່ວຍທີ18: ......................

| ມື້ | ເນື້ອໃນ | ອຸປະກອນ | | ປະເມີນຜົນ |
|---|---|---|---|---|
| | | ວັດຖຸຈິງ | ສິ່ງທີ່ຜະລິດ | |
| | | | | |
| | | | | |
| | | | | |
| | | | | |
| | | | | |

- ເຝິກປະຕິບັດຕົວຈິງ ( ເຝິກແຕ່ງບົດສອນ, ສອນຕົວຈິງໃນຫ້ອງເຝິກສອນ ແລະຖອດຖອນບົດຮຽນ ).

# ບົດທີ 5

# ວິເຄາະແຜນຈັດປະສົບການເຫຼັ້ມທີ 4

## 1. ດ້ານຮ່າງກາຍ, ອະນະໄມ ແລະ ຄວາມປອດໄພ

- ເສີມສ້າງໃຫ້ເດັກມີຮ່າງກາຍຈະເລີນເຕີບໂຕຕາມສໍ່າອາຍຸດ້ວຍການເຄື່ອນໄຫວຂອງພາກສ່ວນຂອງຮ່າງກາຍໄດ້

ຢ່າງຄ່ອງແຄ້ວ.

- ເສີມສ້າງໃຫ້ເດັກມີສຸກຂະນິໄສທີ່ດີໃນການຮັບປະທານອາຫານ, ການດື່ມ, ການພັກຜ່ອນ ແລະ ການຂັບຖ່າຍ.
- ເສີມສ້າງໃຫ້ເດັກມີພັດທະນາກ້າມຊີ້ນນ້ອຍ, ກ້າມຊີ້ນໃຫຍ່ ແລະ ປະສາດສຳພັດ ໂດຍຜ່ານການປະຕິບັດກິດ

ຈະກຳການຮຽນຮູ້ດ້ານຕ່າງໆເຊັ່ນ: ສິລະປະສ້າງສັນ ແລະ ການຫຼິ້ນແບບຫຼິ້ນຕ່າງໆ.

- ເສີມສ້າງໃຫ້ເດັກມີຄວາມສາມາດໃນການໃຊ້ຂະບວນການຮຽນຮູ້ ໂດຍຜ່ານປະສາດສຳຜັດດ້ວຍອິນຊີທັງ 5

ຄື: ( ຈັບ, ບາຍ, ດົມ, ຊີມ, ເບິ່ງ)

- ເສີມສ້າງໃຫ້ເດັກມີການຈະເລີນເຕີບໂຕຕາມໄວ ໂດຍຈັດກິດຈະກຳທີ່ສົ່ງເສີມພັດທະນາການກ້າມຊີ້ນໃຫຍ່, ເຮັດໃຫ້ເດັກເຄື່ອນໄຫວໄດ້ຢ່າງຄ່ອງແຄ້ວເຊັ່ນ: ການຢືນ, ຍ່າງ, ແລ່ນ, ເຕັ້ນ ໂດດ, ປີນ, ໄຕ່, ລອດ, ຄານ...... ເປັນຕົ້ນ.
- ເສີມສ້າງໃຫ້ເດັກຮູ້ຈັກຮັກສາຕົນເອງໃຫ້ມີຄວາມປອດໄພຢູ່ສະເໝີ.

## 2. ດ້ານອາລົມ-ຈິດໃຈ

- ສົ່ງເສີມໃຫ້ເດັກມີຄວາມເຂົ້າໃຈຕົນເອງ ແລະ ຍອມຮັບຄົນອື່ນ, ສາມາດຄວບຄຸມອາລົມຂອງຕົນເອງຢ່າງເໝາະ

ສົມໃນສະຖານະການຕ່າງໆ.

- ເສີມສ້າງໃຫ້ເດັກມີອາລົມດີ, ມີຄວາມຮູ້ສຶກທີ່ດີຕໍ່ການຮຽນຮູ້, ຍິ້ມແຍ້ມແຈ່ມໃສ, ສຸພາບຮຽບຮ້ອຍ ແລະ ມີ

ຄວາມເບີກບານມ່ວນຊື່ນ.

- ເສີມສ້າງໃຫ້ເດັກຮູ້ຈັກການລໍຖ້າ, ມີຄວາມອົດທົນ,ກ້າຫານ ແລະ ມີລະບຽບວິໄນ.
- ເສີມສ້າງໃຫ້ເດັກມີຄວາມສະຫງວນມັກ, ຊື່ນຊົມສິລະປະຄວາມງາມຂອງທຳມະຊາດ ແລະ ວັດທະນະທຳອັນ

ດີງາມຂອງຊາດ.

- ເສີມສ້າງໃຫ້ເດັກຮູ້ຈັກຄຸນຄ່າຂອງການຮັກສາສະພາບແວດລ້ອມ.
- ເສີມສ້າງໃຫ້ເດັກມີຄວາມເມດຕາ, ເພື່ອແຜ່, ຮູ້ໃຫ້ອະໄພແກ່ຜູ້ອື່ນ ແລະ ຮູ້ຂໍໂທດເມື່ອຕົນເອງເຮັດຜິດ.

## 3. ດ້ານສັງຄົມ

- ເສີມສ້າງໃຫ້ເດັກສາມາດຊ່ວຍເຫຼືອຕົນເອງ, ປັບຕົວເຂົ້າກັບໝູ່ຄູ່ ແລະ ຮັກແພງຊ່ວຍຕົນເອງ, ຮູ້ປະຕິບັດຕົນຢູ່

ໃນຄອບຄົວ ແລະ ຊຸມຊົນ.

- ເສີມສ້າງໃຫ້ເດັກເປັນຜູ້ມີຄຸນສົມບັດດີ, ມີມາລະຍາດ( ເວົ້າຈາສຸພາບ ແລະ ມີຈິດໃຈທີ່ດີງາມ).
- ເສີມສ້າງໃຫ້ເດັກເຄົາລົບນັບຖືຮີດຄອງປະເພນີ, ວັດທະນະທຳອັນດີງາມຂອງຊາດ ແລະ ຂອງທ້ອງຖິ່ນ.
- ເສີມສ້າງໃຫ້ເດັກຮັກທຳມະຊາດ ແລະ ສິ່ງແວດລ້ອມ, ມີຄວາມພູມໃຈທີ່ເກີດເປັນຄົນລາວ.

**4. ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ**

- ສົ່ງເສີມໃຫ້ເດັກມີຄວາມຮູ້ພື້ນຖານທາງດ້ານຄະນິດສາດ, ວິທະຍາສາດ, ການປະດິດສ້າງສິລະປະສ້າງສັນ ແລະ

ດົນຕີ.

- ສົ່ງເສີມໃຫ້ເດັກມີຄວາມສະຫຼາດ, ຄົ້ນຄິດ, ໃຊ້ເຫດຜົນ ແລະ ສາມາດແກ້ໄຂບັນຫາໄດ້ຢ່າງເໝາະສົມ.

**5. ດ້ານພາສາ**

- ສົ່ງເສີມໃຫ້ເດັກມີຄວາມເຂົ້າໃຈ, ມີທັກສະໃນການຟັງ, ການເວົ້າ, ການອ່ານ ແລະ ການຂຽນ.
- ສົ່ງເສີມຄວາມພ້ອມທາງດ້ານການນຳໃຊ້ພາສາລາວເປັນສື່ກາງໃນການສື່ສານ ແລະ ພົວພັນເຊິ່ງກັນ ແລະ ກັນ.

## ວິເຄາະໜ່ວຍການສອນໃນແຜນຈັດປະສົບການຫ້ອງກຽມປະຖົມເຫຼັ້ມທີ 5.

ໜ່ວຍການສອນ:

ໜ່ວຍ ຊັບພະຍາກອນທຳມະຊາດ

ໜ່ວຍ ເວລາ

ໜ່ວຍ ປີໃໝ່ລາວ

ໜ່ວຍ ລະດູແລ້ງ

ໜ່ວຍ ລະດູຝົນ

ໜ່ວຍວັນເດັກ

**ແນວທາງການຈັດແຜນການສອນ ໜ່ວຍຊັບພະຍາກອນທຳມະຊາດ ອາທິດທີ 3 ເດືອນ ມີນາ.**

| ພັດທະນາດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | ພັດທະນາດ້ານພາສາ | ພັດທະນາດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | ພັດທະນາດ້ານອາລົມ-ຈິດໃຈ | ພັດທະນາດ້ານສັງຄົມ |
|---|---|---|---|---|
| • ເຕັ້ນຂາດຽວຂ້າມເສັ້ນແບບຊິງຕົວ ແລະ ຄວບຄຸມຕົນເອງ ໃນໄລຍະຫ່າງ 30 ຊມ<br>• ປັ້ນດິນໃຫ້ເປັນຮູບຕ່າງໆ<br>• ຮ້ອຍວັດຖຸ ຈຳນວນ 10 ທີ່ມີລັກສະນະກົມ ກ້ຽງ ທີ່ມີເສັ້ນຜ່າກາງ 0,3 ຊມ ດ້ວຍເຊືອກທີ່ມີຂະໜາດ0,2 ຊມ<br>• ບອກຊື່ວັດຖຸໄດ້ດ້ວຍການຈັບບາຍ ໂດຍບໍ່ໃຫ້ເຫັນ( ກ້ອນຫີນ, ດິນ, ນໍ້າ ...)<br>• ບອກຊື່ສິ່ງທີ່ໄດ້ງິນໂດຍບໍ່ໄດ້ເຫັນ ( ຫີນ, ດິນ, ນໍ້າ...)<br>• ອາບນໍ້າດ້ວຍຕົນເອງໂດຍບໍ່ມີຜູ້ອື່ນຊ່ວຍ.<br>• ຖ່າຍໜັກ, ຖ່າຍເບົາ ບ່ອນທີ່ກຳນົດ ( ວິດຖ່າຍ )<br>• ປັດກວດແລະຖິ້ມສິ່ງເສດ | • ປະຕິບັດຕາມການແນະທີ່ມີ 3 ຂັ້ນຕອນຕາມລາດັບ<br>• ຟັງ ແລະ ຕອບເປັນປະໂຫຍກທີ່ສົມບູນ ແລະ ຈະແຈ້ງ:<br>- ບອກລັກສະນະ ສີຂອງດິນ ແລະ ຫີນ<br>- ບອກປະໂຫຍດ ແລະ ໂທດຂອງດິນ, ຫີນ, ນໍ້າ.<br>- ບອກແຫຼ່ງທີ່ມາຂອງນໍ້າ<br>- ບອກຄຸນສົມບັດ ແລະ ການປ່ຽນແປງສະພາວະຂອງນໍ້າ.<br>• ເຝິກການອ່ານຮູບພາບສັນຍາລັກກ່ຽວກັບຊັບພະຍາກອນທຳມະຊາດ.<br>• ອ່ານຄຳສັບທີ່ມີ 2 ພະຍາງຕາມຮູບຂອງພະຍັນຊະນະຕາມຮູບ ( ຕ, ຖ, ທ ) ( ໂຕະຄູ, ໄຖນາ, ທຸງຊາດ ) | • ເຝິກແອບການຮ້ອງເພງ:<br>- ລົມພັດ<br>- ປະໂຫຍດຂອງດິນ<br>- ສາຍນໍ້າໄຫຼ<br>• ເຄື່ອນໄຫວໃຫ້ຖືກຕາມຈັງຫວະ, ສຽງເຄາະ, ສຽງສັນຍານ, ຂໍ້ຕົກລົງ, ຕາມຈິນຕະນາການ, ການຈື່ຈຳ ແລະ ການເປັນຜູ້ນຳ-ຜູ້ຕາມ.<br>• ທາສີຮູບທຳມະຊາດ<br>• ທາສີຮູບເຄື່ອງໄຊ້ທີ່ເຮັດດ້ວຍດິນ<br>• ຈັດໝວດໝູ່ຮູບເຄື່ອງໃຊ້ທີ່ເຮັດດ້ວຍດິນ, ຫີນ, ແກ້ວ<br>• ລຽງລຳດັບຄຳສັບທີ່ມີ 2 ພະຍາງຕາມຮູບຂອງພະຍັນຊະນະ ຕາມຮູບ ( ຕ ຖ ທ )(ໂຕະຄູ. ໄຖນາ. ທຸງຊາດ).<br>• ບອກບອກຜົນລວມຂອງວັດຖຸ | • ມີຄວາມເບີກບານມ່ວນຊື່ນໃນການປະຕິບັດກິດຈະກຳຮ່ວມກັບໝູ່.<br>• ບອກສິ່ງທີ່ພາໃຫ້ດີໃຈ ແລະ ເສຍໃຈ.<br>• ກ່າວຂອບໃຈໃນເວລາຮັບສິ່ງຂອງ ແລະ ການຊ່ວຍເຫຼືອຈາກຄົນອື່ນ.<br>• ກ່າວຂໍໂທດພາຍຫຼັງທີ່ໄດ້ກະທຳຜິດ.<br>• ສະແດງຄວາມດີໃຈ ແລະ ມ່ວນຊື່ນຕາມເວລາທີ່ເໝາະສົມ<br>• ສະແດງຄວາມເສຍໃຈ ແລະ ໂສກເສົ້າ ຕາມເວລາທີ່ເໝາະສົມ.<br>• ມີຄວາມອົດທົນລໍຖ້າຕາມລຳດັບກ່ອນ ແລະ ຫຼັງໃນເວລາຢູ່ເຮືອນ/ໂຮງຮຽນ.<br>• ຄວບຄຸມອາລົມຕົນເອງບໍ່ໃຈ | • ປົກປັກຮັກສາຊັບພະຍາກອນທຳມະຊາດ, ແຫຼ່ງນໍ້າ ແລະ ຕົ້ນໄມ້ |

| | | | | |
|---|---|---|---|---|
| ເຫຼືອໃສ່ຖັງຂີ້ເຫຍື່ອ ຫຼື ບ່ອນກຳນົດ.<br>• ສະແດງພຶດຕິກຳທີ່ປອດໄພ ໃນເວລາຫຼິ້ນກັບໝູ່( ບໍ່ໂຍນກ້ອນຫີນ, ດິນຫວ່ານໃສ່ໝູ່ເພື່ອນ ) | • ກ່າຍຄຳສັບທີ່ມີ 2 ພະຍາງ( ໂຕະຄູ, ໄຖນາ, ທຸງຊາດ )<br>• ກ່າຍຕົວເລກໂດຍການເພີ່ມໂຕເລກ1 ໃສທາງໜ້າຂອງບ່ອນຈ້ຳເມັດໃນລະຫວ່າງເລກ (5 ຫາ 9) : ( 5.6.7.8.9 )<br>• ສະແດງຄວາມຄິດເຫັນ ແລະ ຄວາມມ່ວນຊື່ນ ໃນເວລາຟັງຄູເລົ່າຄຳຄ່ອງ, ເລົ່າເລື່ອງ( ກ່ຽວກັບຊຸບພະຍາກອນທຳມະຊາດ ) | ( ໄມ້ດີ້ວ ຫຼື ສໍດຳ ) 3 ຕື່ມ 1. | ຮ້າຍໄວ, ບໍ່ໃຫ້ງ່າຍ. | |

**ແນວທາງການຈັດແຜນການສອນ ໜ່ວຍ ເວລາ ອາທິດທີ 4 ເດືອນ ມີນາ.**

| ພັດທະນາດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | ພັດທະນາດ້ານພາສາ | ພັດທະນາດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | ພັດທະນາດ້ານອາລົມ-ຈິດໃຈ | ພັດທະນາດ້ານສັງຄົມ |
|---|---|---|---|---|
| • ຍ່າງຕໍ່ຕີນຖອຍຫຼັງຕາມເສັ້ນຊື່ໃນໄລຍະ 5 ແມັດ ດ້ວຍການຊີ້ງຕົວ ແລະ ຄວບຄຸມຕົນເອງ.<br>• ຂີດເສັ້ນໂຄ້ງຕາມຮອຍຈ້ຳເປັນຮູບໂມງ ແລະ ຮູບຕາເວັນ<br>• ປັ້ນດິນໃຫ້ເປັນຮູບໂມງ | • ປະຕິບັດຕາມການແນະທີ່ມີ 3 ຂັ້ນຕອນຕາມລາດັບ<br>• ຟັງ ແລະ ຕອບເປັນປະໂຫຍກທີ່ສົມບູນ ແລະ ຈະແຈ້ງ:<br>- ບອກການປະຕິບັດຕົນໃນມື້ໜຶ່ງ.<br>- ບອກຊື່ວັນ, ຈຳນວນວັນ | • ເຝິກແອບການຮ້ອງເພງ:<br>- ຊິມແສງຈັນ<br>- ຊິມຈັນ<br>- ສີທັງ7<br>- ດວງອາທິດ ດວງຈັນ<br>• ເຄື່ອນໄຫວໃຫ້ຖືກຕາມຈັງຫວະ, ສຽງເຄາະ, ສຽງສັນຍານ, ຂໍ້ຕົກລົງ, ຕາມ | • ເສີມສ້າງໃຫ້ເດັກມີຄວາມເບີກບານມ່ວນຊື່ນ.<br>• ເສີມສ້າງໃຫ້ເດັກມີຄວາມຮູ້ສຶກທີ່ດີໃນການປະຕິບັດຕົນຕໍ່ໝູ່ຄູ່.<br>• ເສີມສ້າງໃຫ້ເດັກມີຄວາມອົດທົນຮູ້ຈັກການລໍຄອຍ.ໃນການຮ່ວມກິດຈະກຳກັບໝູ່ | • ປະຕິບັດລະບຽບວິໄນໃນເວລາຢູ່ເຮືອນ ໂຮງຮຽນ ( ເຊົ້າ, ສວຍ, ແລງ ) |

| | | | | |
|---|---|---|---|---|
| • ອະນາໄມແບບເປັນນິໄສ( ທຳຄວາມສະອາດໜ້າ, ຜົມ ແລະ ເມັດມືໃຫ້ສະອາດ.<br>• ຖ່າຍໜັກ, ຖ່າຍເບົາ ບ່ອນທີ່ກຳນົດ ( ວິດຖ່າຍ )<br>• ປັດກວດແລະຖິ້ມສິ່ງເສດເຫຼືອໃສ່ຖັງຂີ້ເຫຍື່ອ ຫຼື ບ່ອນກຳນົດ. | ໃນອາທິດ, ໃນເດືອນ, ຈຳນວນໃນປີ<br>• ເຝິກການອ່ານຮູບພາບສັນຍາລັກກ່ຽວກັບເວລາ.<br>• ອ່ານຄຳສັບທີ່ມີ 2 ພະຍາງຕາມຮູບຂອງພະຍັນຊະນະຕາມຮູບ ( ນ, ບ, ປ ) ( ນົກແກ້ວ, ໃບໄມ້, ປານິນ )<br>• ກ່າຍຄຳສັບທີ່ມີ 2 ພະຍາງ( ນົກແກ້ວ, ໃບໄມ້, ປານິນ )<br>• ກ່າຍຕົວເລກລາວໂດຍການເພີ່ມໂຕເລກ1 ໃສທາງໜ້າຂອງບ່ອນຈ້ຳເມັດໃນລະຫວ່າງເລກ<br>( 1. 2. 3. 4. 5. 6. 7. 8. 9 )<br>• ສະແດງຄວາມຄິດເຫັນ ແລະ ຄວາມມ່ວນຊື່ນ ໃນເວລາຟັງຄູ ເລົ່າຄຳຄ່ອງ, ເລົ່າເລື່ອງ ( ກ່ຽວກັບເວລາ ) | ຈິນຕະນາການ, ການຈື່ຈຳ ແລະ ການເປັນຜູ້ນຳ-ຜູ້ຕາມ.<br>• ອແບຟ້ອນປະກອບທ່າທາງຕາມສຽງເພງຊົມແສງຈັນ<br>• ບອກຊື່ອົງປະກອບທີ່ມີໃນທ້ອງຟ້າ ( ຕາເວັນ, ເມກ, ເດືອນ, ແລະ ດາວ )<br>• ແຕ້ມ ແລະ ທາສີຮູບຕາເວັນ, ຮູບດາວ.<br>• ຕັດ ແລະ ຕິດ ຮູບດວງເທິງທອ້ງຟ້າ.<br>• ຈຳແນກສີຂອງວັນທັງ 7<br>• ລຽງລຳດັບຮູບຕາເວັນຂຶ້ນຂຶ້ນ ແລະ ຕາເວັນຕົກ ຕາມແບບທີ່ກຳນົດ.<br>• ລຽງລຳດັບຄຳສັບທີ່ມີ 2 ພະຍາງຕາມຮູບຂອງພະຍັນຊະນະ ຕາມຮູບ ( ນ ບ ປ )(ນົກແກ້ວ. ໃບໄມ້. ປານິນ).<br>• ບອກບອກຜົນລວມຂອງຮູບດາວ 5 ຕື່ມ 3 | ເພື່ອນ.<br>• ບອກສິ່ງທີ່ພາໃຫ້ດີໃຈ ແລະ ເສຍໃຈ.<br>• ກ່າວຂອບໃຈໃນເວລາຮັບສິ່ງຂອງ ແລະ ການຊ່ວຍເຫຼືອຈາກຄົນອື່ນ.<br>• ກ່າວຂໍໂທດພາຍຫຼັງທີ່ໄດ້ກະທຳຜິດ.<br>• ສະແດງຄວາມດີໃຈ ແລະ ມ່ວນຊື່ນຕາມເວລາທີ່ເໝາະສົມ<br>• ສະແດງຄວາມເສຍໃຈ ແລະ ໂສກເສົ້າ ຕາມເວລາທີ່ເໝາະສົມ.<br>• ມີຄວາມອົດທົນລໍຖ້າຕາມລຳດັບກ່ອນ ແລະ ຫຼັງໃນເວລາຢູ່ເຮືອນ/ໂຮງຮຽນ.<br>• ຄວບຄຸມອາລົມຕົນເອງບໍ່ໃຈຮ້າຍໄວ, ບໍ່ໄຫ້ງ່າຍ. | |

**ແນວທາງການຈັດແຜນການສອນ ໜ່ວຍປີໃໝ່ລາວ ອາທິດທີ 1-2 ເດືອນ ເມສາ.**

| ພັດທະນາດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | ພັດທະນາດ້ານພາສາ | ພັດທະນາດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | ພັດທະນາດ້ານອາລົມ-ຈິດໃຈ | ພັດທະນາດ້ານສັງຄົມ |
|---|---|---|---|---|
| • ຮັບໝາກບານທີ່ມີຂະໜາດເສັ້ນຜ່າກາງ 15 ຊມ ໂດຍໃຊ້ 2 ມື ໄລຍະຫ່າງ 2 ແມັດ.<br>• ໂຍນໝາກບານທີ່ມີເສັ້ນຂະໜາດຜ່າກາງ 15 ຊມ ໄລຍະຫ່າງ 2 ແມັດ ໂດຍໃຊ້ 2 ມື ຍົກຂຶ້ນກ່າຍຫົວ.<br>• ປັ້ນດິນໃຫ້ເປັນຮູບຄຸ, ຮູບຈອກ.<br>• ຮ້ອຍດອກໄມ້ໃຫ້ເປັນສານແຂນ, ສາຍຄໍ.<br>• ບອກຊື່ສິ່ງຂອງ 3 ຢ່າງດ້ວຍການດົມກິ່ນບໍ່ໃຫ້ເຫັນ: ເຂົ້າແປ້ງ, ດອກໄມ້ທີ່ມີກິ່ນຫອມ, ສະບູ... )<br>• ອາບນໍ້າດ້ວຍຕົນເອງໂດຍບໍ່ມີຜູ້ອື່ນຊ່ວຍ.<br>• ຖ່າຍໜັກ, ຖ່າຍເບົາ ບ່ອນທີ່ກຳນົດ ( ວິດຖ່າຍ ) | • ປະຕິບັດຕາມການແນະທີ່ມີ 3 ຂັ້ນຕອນຕາມລາດັບ<br>• ຟັງ ແລະ ຕອບເປັນປະໂຫຍກທີ່ສົມບູນ ແລະ ຈະແຈ້ງ:<br>- ບອກຄວາມໝາຍຂອງປີໃໝ່ລາວ<br>- ບອກວິທີການອວຍພອນໃນປີໃໝ່ລາວ.<br>• ເຝິກການອ່ານຮູບພາບສັນຍາລັກກ່ຽວກັບປີໃໝ່ລາວ<br>• ອ່ານຄຳສັບທີ່ມີ 2 ພະຍາງຕາມຮູບຂອງພະຍັນຊະນະຕາມຮູບ ( ຜ, ຝ, ພ ) ( ຜ້າຫົ່ມ, ຝົນຕົກ, ພູສູງ )<br>• ກ່າຍຄຳສັບທີ່ມີ 2 ພະຍາງ( ຜ້າຫົ່ມ, ຝົນຕົກ, ພູສູງ )<br>• ທວນຄືນກ່າຍຕົວເລກລາວໂດຍການເພີ່ມຕົວເລກ 1 ໃສ່ທາງໜ້າບອ່ນຈໍ້າເມັດໃນ | • ເຝິກແອບການຮ້ອງເພງ:<br>- ໄຊໂຍປີໃໝ່<br>- ສະບາຍດີປີໃໝ່<br>- ລຳວົງປີໃໝ່<br>• ເຄື່ອນໄຫວໃຫ້ຖືກຕາມຈັງຫວະ, ສຽງເຄາະ, ສຽງສັນຍານ, ຂໍ້ຕົກລົງ, ຕາມຈິນຕະນາການ, ການຈື່ຈຳ ແລະ ການເປັນຜູ້ນຳ-ຜູ້ຕາມ.<br>• ແອບຟ້ອນປະກອບທ່າທາງຕາມສຽງເພງ: ລຳວົງປີໃໝ່.<br>• ຕົບມືຕາມຈັງຫວະດົນຕີ ( ໄວ-ຊ້າ )<br>• ແຕ້ມ-ທາສີຮູບດອກໄມ້, ຮູບໂອ, ຮູບຂັນ.<br>• ຈຳແນກຄວາມແຕກຕ່າງຂອງຄຸນລັກສະນະເຄື່ອງນຸ່ງ ( ແຫ້ງ-ປຽກ )<br>• ຈຳແນກຄວາມແຕກຕ່າງຂະໜາດຂອງໂອທີ່ມີນໍ້າ ແລະ | • ເສີມສ້າງມີຄວາມເບີກບານມ່ວນຊື່ນໃນການປະຕິບັດກິດຈະກຳຮ່ວມກັບໝູ່.<br>• ບອກສິ່ງທີ່ພາໃຫ້ດີໃຈ ແລະ ເສຍໃຈ.<br>• ກ່າວຂອບໃຈໃນເວລາຮັບສິ່ງຂອງ ແລະ ການຊ່ວຍເຫຼືອຈາກຄົນອື່ນ.<br>• ກ່າວຂໍໂທດພາຍຫຼັງທີ່ໄດ້ກະທຳຜິດ.<br>• ສະແດງຄວາມດີໃຈ ແລະ ມ່ວນຊື່ນຕາມເວລາທີ່ເໝາະສົມ<br>• ສະແດງຄວາມເສຍໃຈ ແລະ ໂສກເສົ້າ ຕາມເວລາທີ່ເໝາະສົມ.<br>• ມີຄວາມອົດທົນລໍຖ້າຕາມລຳດັບກ່ອນ ແລະ ຫຼັງໃນເວລາຢູ່ເຮືອນ/ໂຮງຮຽນ.<br>• ຄວບຄຸມອາລົມຕົນເອງບໍ່ໃຈ | • ສະແດງຄວາມເຄົາລົບນັບຖືຜູ້ໃຫ່ຍໃນມື້ບຸນປີໃໝ່ຟ່າງເໝາະສົມ<br>• ໃຊ້ຄຳເວົ້າທີ່ສຸພາບເມື່ອຕົນເອງມີຄວາມຕ້ອງການສິ່ງໃດສິ່ງໜຶ່ງ ( ຂໍອະນຸຍາດ...)<br>• ໃຊ້ຄຳເວົ້າທີ່ສຸພາບກັບຜູ້ໃຫ່ຍ ແລະ ໝູ່ເພື່ອນຢ່າງເໝາະສົມ ( ຂອບໃຈ, ໂດຍ, ເຈົ້າ, ຂໍໂທດ ) ສົນທະນາ ແລະ ຫຼິ້ນກັບຜູ້ໃຫ່ຍທີ່ຮູ້ຈັກ/ຄຸ້ນເຄີຍໃນບຸນປີໃໝ່<br>• ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນຮ່ວມກັນ<br>• ປະຕິບັດລະບຽບວິໄນມື້ຫຼິ້ນບຸນປີໃໝ່<br>• ບອກມື້ວັນລົ້ນປີໃໝ່ສາກົນກົງກັບວັນທີ 13, 14, 15 ເດືອນເມສາຂອງທຸກໆປີ<br>• ບອກເຫດສຳຄັນໃນມື້ວັນຫຼິ້ນປີໃໝ່. |

| | | | | |
|---|---|---|---|---|
| • ປັດກວດແລະຖິ້ມສິ່ງເສດເຫຼືອໃສ່ຖັງຂີ້ເຫຍື່ອ ຫຼື ບ່ອນກຳນົດ.<br>• ບອກສະຖານທີ່ທີ່ເປັນອັນຕະລາຍໃນເວລາຫຼິ້ນປີໃໝ່ ( ນໍ້າສ້າງ, ນໍ້າໜອງ, ກາງຖະໜົນທີ່ມີລົດ ).<br>• ສະແດງພຶດຕິກຳທີ່ປອດໄພໃນເວລາຫຼິ້ນປີໃໝ່ ( ບໍ່ຫຼິ້ນນໍ້າເປື້ອນ, ນໍ້າສີ, ບໍ່ສາດນໍ້າໃສ່ໜ້າກັນ ) | ລະຫວ່າງຕົວເລກ ( 0 ເຖິງ 9 ): ( 0, 1, 2, 3, 4, 5, 6, 7, 8, 9 )<br>• ສະແດງຄວາມຄິດເຫັນ ແລະ ຄວາມມ່ວນຊື່ນ ໃນເວລາຟັງຄູ ເລົ່າຄຳຄ່ອງ, ເລົ່າເລື່ອງ ( ກ່ຽວກັບປີໃໝ່ລາວ ) | ໂອບໍ່ມີນໍ້າ. ( ໜັກ-ເບົາ )<br>• ລຽງລຳດັບຄຳສັບທີ່ມີ 2 ພະຍາງຕາມຮູບຂອງພະຍັນຊະນະ ຕາມຮູບ ( ຜ ຝ ພ )(ຜ້າຫົ່ມ. ຝົນຕົກ. ພູສູງ).<br>• ບອກບອກຜົນລວມຂອງດອກໄມ້ພາຍຫຼັງທີ່ເອົາອອກ ( 3 ເອົາອອກ 1 ). | ຮ້າຍໄວ, ບໍ່ໃຫ້ງ່າຍ. | |

**ແນວທາງການຈັດແຜນການສອນ ໜ່ວຍລະດູແລ້ງ ອາທິດທີ 4 ເດືອນ ເມສາ.**

| ພັດທະນາດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | ພັດທະນາດ້ານພາສາ | ພັດທະນາດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | ພັດທະນາດ້ານອາລົມ-ຈິດໃຈ | ພັດທະນາດ້ານສັງຄົມ |
|---|---|---|---|---|
| • ເຕັ້ນຂາດຽວຂ້າມເສັ້ນ ແບບຊິງຕົວ ແລະ ຄວບຄຸມຕົນເອງໃນໄລຍະຫ່າງ 30 ຊມ<br>• ປັ້ນດິນໃຫ້ເປັນຮູບໝວກ, ຮູບເກີບ.<br>• ກ່າຍຮູບຕາມແບບ 3 ຮູບ: ( ໝວກ, ເກີບ, ວ່າວ )<br>• ບອກຊື່ວັດຖຸໄດ້ດ້ວຍການຈັບບາຍໂດຍບໍ່ໃຫ້ເຫັນວັດຖຸ( ໝວກ, ເກີບ, ເສື້ອ )<br>• ລ້າງ ແລະ ເຊັດມື ໃນເວລາທີ່ເໝາະສົມ.<br>• ຖ່າຍໜັກ, ຖ່າຍເບົາ ບ່ອນທີ່ກຳນົດ ( ວິດຖ່າຍ )<br>• ປັດກວາດແລະຖິ້ມສິ່ງເສດເຫຼືອໃສ່ຖັງຂີ້ເຫຍື່ອ ຫຼື ບ່ອນກຳນົດ.<br>• ສະແດງພຶດຕິກຳທີ່ປອດໄພ | • ປະຕິບັດຕາມການແນະທີ່ມີ 3 ຂັ້ນຕອນຕາມລາດັບ<br>• ຟັງ ແລະ ຕອບເປັນປະໂຫຍກທີ່ສົມບູນ ແລະ ຈະແຈ້ງ:<br>- ບອກໄລຍະເວລາຂອງລະດູແລ້ງ.<br>- ບອກສະພາບອາກາດ ແລະ ປະກົດການໃນລະດູແລ້ງ<br>• ເຝິກການອ່ານຮູບພາບສັນຍາລັກກ່ຽວກັບລະດູແລ້ງ<br>• ອ່ານຄຳສັບທີ່ມີ 2 ພະຍາງຕາມຮູບຂອງພະຍັນຊະນະຕາມຮູບ ( ຟ, ມ, ຢ ) ( ໄຟສາຍ, ມ້າແລ່ນ, ຢາງລົບ )<br>• ກ່າຍຄຳສັບທີ່ມີ 2 ພະຍາງ( ໄຟສາຍ, ມ້າແລ່ນ, ຢາງລົບ )<br>• ທວນຄືນກ່າຍຕົວເລກສາກົນໂດຍການເພີ່ມຕົວເລກ 1 ໃສ່ | • ເຝິກແອບການຮ້ອງເພງ:<br>- ວ່າວ<br>• ເຄື່ອນໄຫວໃຫ້ຖືກຕາມຈັງຫວະ, ສຽງເຄາະ, ສຽງສັນຍານ, ຂໍ້ຕົກລົງ, ຕາມຈິນຕະນາການ, ການຈື່ຈຳ ແລະ ການເປັນຜູ້ນຳ-ຜູ້ຕາມ.<br>• ແຕ້ມ-ທາສີຮູບ ວ່າວ, ຮູບເຄື່ອງນຸ່ງລະດູແລ້ງ: ( ເສື້ອແຂນສັ້ນ, ສົ້ງຂາສັ້ນ, ເສື້ອກ້າມ )<br>• ທາສີຮູບເດັກອາບນ້ຳ, ຫຼິ້ນດິນຊາຍໃນລະດູຮ້ອນ.<br>• ຈຳແນກຄວາມແຕກຕ່າງຂອງອາກາດ ( ຮ້ອນ ກັບ ໜາວ)<br>• ຈັດໝວດໝູ່ຮູບເຄື່ອງໃຊ້ໃນລະດູແລ້ງ.<br>• ລຽງລຳດັບຄຳສັບທີ່ມີ 2 ພະຍາງຕາມຮູບຂອງພະຍັນຊະນະ ຕາມຮູບ ( ຟ | • ເສີມສ້າງມີຄວາມເບີກບານມ່ວນຊື່ນໃນການປະຕິບັດກິດຈະກຳຮ່ວມກັບໝູ່.<br>• ເສີມສ້າງໃຫ້ເດັກຮູ້ຈັກການລໍຄອຍ<br>• ບອກສິ່ງທີ່ພາໃຫ້ດີໃຈ ແລະ ເສຍໃຈ.<br>• ກ່າວຂອບໃຈໃນເວລາຮັບສິ່ງຂອງ ແລະ ການຊ່ວຍເຫຼືອຈາກຄົນອື່ນ.<br>• ກ່າວຂໍໂທດພາຍຫຼັງທີ່ໄດ້ກະທຳຜິດ.<br>• ສະແດງຄວາມດີໃຈ ແລະ ມ່ວນຊື່ນຕາມເວລາທີ່ເໝາະສົມ<br>• ສະແດງຄວາມເສຍໃຈ ແລະ ໂສກເສົ້າ ຕາມເວລາທີ່ເໝາະສົມ.<br>• ມີຄວາມອົດທົນລໍຖ້າຕາມລຳດັບກ່ອນ ແລະ ຫຼັງໃນເວລາ | • ຊ່ວຍເຫຼືອໝູ່ເພື່ອນໃນເວລາເຈັບເປັນ.<br>• ປົກປັກຮັກສາວັດຖຸສິ່ງຂອງຕົນເອງ ແລະ ໝູ່ເພື່ອ. |

| | | | | |
|---|---|---|---|---|
| ໃນລະດູແລ້ງເຊັ່ນ: ( ບໍ່ດື່ມນໍ້າເຢັນໂພດ, ນຸ່ງເຄື່ອງທີ່ເໝາະສົມກັບສະພາບອາກາດ ) | ທາງໜ້າບອ່ນຈໍ້າເມັດໃນລະຫວ່າງຕົວເລກ ( 0 ເຖິງ 9 ): ( 0, 1, 2, 3, 4, 5, 6, 7, 8, 9 )<br>• ສະແດງຄວາມຄິດເຫັນ ແລະ ຄວາມມ່ວນຊື່ນ ໃນເວລາຟັງ ຄູ ເລົ່າຄໍາຄ່ອງ, ເລົ່າເລື່ອງ ( ກ່ຽວກັບລະດູແລ້ງ ) | ມ ຢ )(ໄຟສາຍ. ມ້າແລ່ນ. ຢາງລຶ).<br>• ບອກບອກຜົນລວມຂອງຮູບວ່າວ ພາຍຫຼັງທີ່ເອົາອອກ ( 5 ເອົາອອກ 2 ). | ຢູ່ເຮືອນ/ໂຮງຮຽນ.<br>• ຄວບຄຸມອາລົມຕົນເອງບໍ່ໃຈຮ້າຍໄວ, ບໍ່ໄຫ້ງ່າຍ. | |

**ແນວທາງການຈັດແຜນການສອນ ໜ່ວຍ ລະດູຝົນ ອາທິດທີ 1 ເດືອນ ພຶດສະພາ.**

| ພັດທະນາດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | ພັດທະນາດ້ານພາສາ | ພັດທະນາດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | ພັດທະນາດ້ານອາລົມ-ຈິດໃຈ | ພັດທະນາດ້ານສັງຄົມ |
|---|---|---|---|---|
| • ຍ່າງເສັ້ນຊື່ໄດ້ໃນໄລຍະ 5 ແມັດ ໂດຍໃຫ້ແຂນຂາປະສານກັນ.<br>• ຂີດຕາມຮອຍຈໍ້າຕາມເສັ້ນຕັ້ງ, ເສັ້ນໂຄ້ງ ໃຫ້ເປັນຮູບຄັນຮົ່ມ, ຮູບໝອກ, ຮູບຮຸ້ງກິນນໍ້າ.<br>• ບອກຊື່ວັດຖຸໄດ້ດ້ວຍການຈັບບາຍໂດຍບໍ່ໃຫ້ເຫັນວັດຖຸ ( ຄັນຮົ່ມ, ໝວກ, ເສື້ອກັນຝົນ).<br>• ອະນາໄມແບບເປັນນິໄສ ( ທຳຄວາມສະອາດໜ້າ, ຜົມ , ເລັບມື ແລະ ນຸ່ງເຄື່ອງສະອາດ.)<br>• ຖ່າຍໜັກ, ຖ່າຍເບົາ ບ່ອນທີ່ກຳນົດ ( ວິດຖ່າຍ )<br>• ປັດກວາດແລະຖິ້ມສິ່ງເສດເຫຼືອໃສ່ຖັງຂີ້ເຫຍື່ອ ຫຼື ບ່ອນກຳນົດ. | • ປະຕິບັດຕາມການແນະທີ່ມີ 3 ຂັ້ນຕອນຕາມລາດັບ<br>• ຟັງ ແລະ ຕອບເປັນປະໂຫຍກທີ່ສົມບູນ ແລະ ຈະແຈ້ງ:<br>- ບອກໄລຍະເວລາຂອງລະດູຝົນ.<br>- ບອກສະພາບອາກາດໃນລະດູຝົນ ແລະ ປະກົດການກ່ອນຝົນຈະຕົກ.<br>- ສັງເກດທ້ອງຟ້າໃນເວລາຝົນຕົກ.<br>• ເຝິກການອ່ານຮູບພາບສັນຍາລັກກ່ຽວກັບລະດູຝົນ.<br>• ອ່ານຄຳສັບທີ່ມີ 2 ພະຍາງຕາມຮູບຂອງພະຍັນຊະນະຕາມຮູບ ( ລ, ຮ, ວ ) ( ລົດໃຫ່ຍ, ຮາດາ, ແວ່ນຕາ )<br>• ກ່າຍຄຳສັບທີ່ມີ 2 ພະຍາງ( ລົດໃຫ່ຍ, ຮາດາ, ແວ່ນຕາ ) | • ເຝິກແອບການຮ້ອງເພງ:<br>- ຝົນຕົກ<br>- ບອກໂທດ ແລະ ປະໂຫຍດຂອງຝົນ<br>- ນໍ້າຝົນ<br>• ເຄື່ອນໄຫວໃຫ້ຖືກຕາມຈັງຫວະ, ສຽງເຄາະ, ສຽງສັນຍານ, ຂໍ້ຕົກລົງ, ຕາມຈິນຕະນາການ, ການຈື່ຈຳ ແລະ ການເປັນຜູ້ນຳ-ຜູ້ຕາມ.<br>• ແຕ້ມ-ທາສີຮູບຄັນຮົ່ມ<br>• ຕັດ-ຕິດເຈ້ຍໃສ່ຮູບຄັນຮົ່ມ.<br>• ຈັດໝວດໝູ່ຮູບເຄື່ອງໃຊ້ໃນລະດູຝົນ.<br>• ບອກຄວາມແຕກຕ່າງລະຫວ່າງ 2 ລະດູ ( ລະດູຝນ ກັບ ລະດູແລ້ງ )<br>• ອະທິບາຍເຖິງການພົວພັນລະຫວ່າງອາກາດ ແລະ ກິດຈະກຳຂອງຕົນເອງເຊັ່ນ: ການ | • ເສີມສ້າງມີຄວາມເບີກບານມ່ວນຊື່ນໃນການປະຕິບັດກິດຈະກຳຮ່ວມກັບໝູ່.<br>• ເສີມສ້າງໃຫ້ເດັກມີຄວາມອົດທົນຮູ້ຈັກການລໍຄອຍໃນການປະຕິບັດກິດຈະກຳຮ່ວມກັບໝູ່ເພື່ອນ.<br>• ບອກສິ່ງທີ່ພາໃຫ້ດີໃຈ ແລະ ເສຍໃຈ.<br>• ກ່າວຂອບໃຈໃນເວລາຮັບສິ່ງຂອງ ແລະ ການຊ່ວຍເຫຼືອຈາກຄົນອື່ນ.<br>• ກ່າວຂໍໂທດພາຍຫຼັງທີ່ໄດ້ກະທຳຜິດ.<br>• ສະແດງຄວາມດີໃຈ ແລະ ມ່ວນຊື່ນຕາມເວລາທີ່ເໝາະສົມ<br>• ສະແດງຄວາມເສຍໃຈ ແລະ ໂສກເສົ້າ ຕາມເວລາທີ່ເໝາະສົມ. | • ຊ່ວຍເຫຼືອໝູ່ເພື່ອນໃນເວລາເຈັບເປັນ.<br>• ປົກປັກຮັກສາວັດຖຸສິ່ງຂອງຕົນເອງ ແລະ ໝູ່ເພື່ອນ. |

| | | | | |
|---|---|---|---|---|
| • ບອກສະຖານທີ່ທີ່ເປັນອັນຕະລາຍໃນເວລາຫຼິ້ນປີໃໝ່ ( ນໍ້າສ້າງ, ນໍ້າໜອງ, ກາງຖະໜົນທີ່ມີລົດ ).<br>• ສະແດງພຶດຕິກຳທີ່ປອດໄພໃນລະດູຝົນເຊັ່ນ: ບໍ່ອອກໄປຕາກຝົນ, ກັ້ງຄັນຮົ່ມ. | • ທອນຄືນກ່າຍຕົວເລກສາກົນແຕ່ຕົວເລກ ( 0 ເຖິງ 20 ).<br>• ສະແດງຄວາມຄິດເຫັນ ແລະ ຄວາມມ່ວນຊື່ນ ໃນເວລາຟັງຄູ ເລົ່າຄຳຄ່ອງ, ເລົ່າເລື່ອງ ( ກ່ຽວກັບລະດູຝົນ ) | ນຸ່ງຖືໃນລະດູຝົນ, ຝົນຕົກຄວນຈະຢູ່ໃສ.<br>• ລຽງລຳດັບຄຳສັບທີ່ມີ 2 ພະຍາງຕາມຮູບຂອງພະຍັນຊະນະ ຕາມຮູບ ( ລ, ຣ, ວ )(ລົດໃຫ່ຍ. ຣາດາ. ແວ່ນຕາ).<br>• ບອກບອກຜົນລວມຂອງຮູບວ່າວພາຍຫຼັງທີ່ເອົາອອກ ( 8 ເອົາອອກ 3 ). | • ມີຄວາມອົນທົນລໍຖ້າຕາມລຳດັບກ່ອນ ແລະ ຫຼັງໃນເວລາຢູ່ເຮືອນ/ໂຮງຮຽນ.<br>• ຄວບຄຸມອາລົມຕົນເອງບໍ່ໃຈຮ້າຍໄວ, ບໍ່ໄຫ້ງ່າຍ. | |

**ແນວທາງການຈັດແຜນການສອນ ໜ່ວຍ ວັນເດັກ ອາທິດທີ 2 ເດືອນ ພຶດສະພາ.**

| ພັດທະນາດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | ພັດທະນາດ້ານພາສາ | ພັດທະນາດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | ພັດທະນາດ້ານອາລົມ-ຈິດໃຈ | ພັດທະນາດ້ານສັງຄົມ |
|---|---|---|---|---|
| • ຍ່າງຕໍ່ຕີນຖອຍຫຼັງຕາມເສັ້ນຊື່ໃນໄລຍະ 5 ແມັດ ດ້ວຍການຊີ່ງຕົວ ແລະ ຄວບຄຸມຕົນເອງ.<br>• ຮ້ອຍວັດຖຸ 10 ອັນທີ່ມີລັກສະນະກົມໃຫ້ສະລັບສີ, ມີເສັ້ນຜ່າກາງ 0,3 ຊມ ດ້ວຍເຊືອກທີ່ມີຂະໜາດ 0,2 ຊມ<br>• ກ່າຍຮູບຕາມແບບ 3 ຮູບ( ຮູບດອກໄມ້, ຮູບປື້ມ, ຮູບສໍ ).<br>• ອະນາໄມແບບເປັນນິໄສ ( ທຳຄວາມສະອາດໜ້າ, ຜົມ , ເລັບມື ແລະ ເຄື່ອງນຸ່ງໃຫ້ສະອາດ )<br>• ຖ່າຍໜັກ, ຖ່າຍເບົາ ບ່ອນທີ່ກຳນົດ ( ວິດຖ່າຍ )<br>• ປັດກວາດແລະຖິ້ມສິ່ງເສດເຫຼືອໃສ່ຖັງຂີ້ເຫຍື່ອ ຫຼື | • ປະຕິບັດຕາມການແນະທີ່ມີ 3 ຂັ້ນຕອນຕາມລາດັບ<br>• ຟັງ ແລະ ຕອບເປັນປະໂຫຍກທີ່ສົມບູນ ແລະ ຈະແຈ້ງ:<br>- ບອກຄວາມໝາຍຂອງວັນເດັກ<br>• ເຝິກການອ່ານຮູບພາບສັນຍາລັກກ່ຽວກັບວັນເດັກນ້ອຍສາກົນ.<br>• ອ່ານຄຳສັບທີ່ມີ 2 ພະຍາງຕາມຮູບຂອງພະຍັນຊະນະຕາມຮູບ ( ຫ, ອ, ຣ ) ( ໄຫນ້ຳ, ອ່າງນ້ຳ, ໂຮງຮຽນ )<br>• ກ່າຍຄຳສັບທີ່ມີ 2 ພະຍາງ( ໄຫນ້ຳ, ອ່າງນ້ຳ, ໂຮງຮຽນ )<br>• ທວນຄືນກ່າຍຕົວເລກລາວແຕ່ ( 0 ເຖິງ 20<br>• ສະແດງຄວາມຄິດເຫັນ ແລະ ຄວາມມ່ວນຊື່ນ ໃນເວລາຟັງ | • ຮ້ອງເພງ:<br>- ວັນທີ 1 ມິຖຸນາ<br>- ມ່ວນຊື່ນໃນວັນເດັກ.<br>- ປ່າໄມ້<br>• ເຄື່ອນໄຫວໃຫ້ຖືກຕາມຈັງຫວະ, ສຽງເຄາະ, ສຽງສັນຍານ, ຂໍ້ຕົກລົງ, ຕາມຈິນຕະນາການ, ການຈື່ຈຳ ແລະ ການເປັນຜູ້ນຳ-ຜູ້ຕາມ.<br>• ແອບຟ້ອນປະກອບທ່າທາງຕາມສຽງເພງ: ວັນທີ 1 ມິຖຸນາ.<br>• ຕົບມືຕາມຈັງຫວະດົນຕີ ( ໄວ-ຊ້າ )<br>• ແຕ້ມ-ທາສີຮູບປູມເປົ້າ 10 ໜ່ວຍ<br>• ຕັດ-ຕິດຮູບປູມເປົ້າ<br>• ລຽງລຳດັບຮູບເດັກທີ່ມີຄວາມແຕກຕ່າງກັນ: ( ຕ່ຳທີ່ສຸດ, ສູງທີ່ສຸດ ) | • ເສີມສ້າງມີຄວາມເບີກບານມ່ວນຊື່ນໃນການປະຕິບັດກິດຈະກຳຮ່ວມກັບໝູ່.<br>• ເສີມສ້າງໃຫ້ເດັກມີຄວາມກະຕືລືລົ້ນ ຕໍ່ການສະເຫຼີມສະຫຼອງວັນເດັກນ້ອຍສາກົນ.<br>• ບອກສິ່ງທີ່ພາໃຫ້ດີໃຈ ແລະ ເສຍໃຈ.<br>• ກ່າວຂອບໃຈໃນເວລາຮັບສິ່ງຂອງ ແລະ ການຊ່ວຍເຫຼືອຈາກຄົນອື່ນ.<br>• ກ່າວຂໍໂທດພາຍຫຼັງທີ່ໄດ້ກະທຳຜິດ.<br>• ສະແດງຄວາມດີໃຈ ແລະ ມ່ວນຊື່ນຕາມເວລາທີ່ເໝາະສົມ<br>• ສະແດງຄວາມເສຍໃຈ ແລະ ໂສກເສົ້າ ຕາມເວລາທີ່ເໝາະສົມ. | • ສະແດງຄວາມເອົາໃຈໃສ່ ແລະ ເຫັນໃຈຕໍ່ໝູ່ເພື່ອນ.<br>• ຊ່ວຍເຫຼືອໝູ່ຄູ່ໃນເວລາເຈັບເປັນ.<br>• ທັກທາຍດ້ວຍການຍໍມືນົບ ແລະ ກ່າວຄຳສະບາຍດີ.<br>• ໃຊ້ຄຳເວົ້າທີ່ສຸພາບເມື່ອຕົນເອງມີຄວາມຕ້ອງການສິ່ງໃດສິ່ງໜຶ່ງ ( ຂໍອະນຸຍາດ)<br>• ໃຊ້ຄຳເວົ້າທີ່ສຸພາບກັບຜູ້ໃຫ່ຍ ແລະ ໝູ່ເພື່ອນຢ່າງເໝາະສົມ ( ຂອບໃຈ, ໂດຍ, ເຈົ້າ, ຂໍໂທດ )<br>• ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນຮ່ວມກັນ<br>• ບອກເຫດໃນມື້ວັນທີ 1 ມິຖຸນາໃນທຸກໆປີ. |

| | | | | |
|---|---|---|---|---|
| ບ່ອນກຳນົດ.<br>• ສະແດງພຶດຕິກຳທີ່ປອດໄພໃນມື້ຫຼິ້ນບຸນວັນເດັກ ( ບໍ່ໃຫ້ແລ່ນໄລ່ກັນ, ບໍ່ຍາດເຄື່ອງຫຼິ້ນ ແລະ ເຂົ້າໜົມ.) | ຄູ ເລົ່າຄຳຄ່ອງ, ເລົ່າເລື່ອງ ( ກ່ຽວກັບວັນເດັກນ້ອຍສາກົນ ) | • ລຽງລຳດັບຄຳສັບທີ່ມີ 2 ພະຍາງຕາມຮູບຂອງພະຍັນຊະນະ ຕາມຮູບ ( ຫ ອ ຮ )(ໄຫນໍ້າ. ອ່າງນໍ້າ. ໂຮງຮຽນ).<br>• ບອກບອກຜົນລວມຂອງຮູບຂອງຂວັນວັນເດັກພາຍຫຼັງທີ່ເອົາອອກ ( 8 ເອົາອອກ 3 ).<br>• ບອກຜົນລວມຂອງຮູບວ່າວພາຍຫຼັງທີ່ເອົາອອກ ( 9 ເອົາອອກ 4 ). | • ມີຄວາມອົດທົນລໍຖ້າຕາມລຳດັບກ່ອນ ແລະ ຫຼັງໃນເວລາຢູ່ເຮືອນ/ໂຮງຮຽນ.<br>• ຄວບຄຸມອາລົມຕົນເອງບໍ່ໃຈຮ້າຍໄວ, ບໍ່ໄຫ້ງ່າຍ. | |

1.2 ໃຫ້ນັກສຶກສາ ສຶກສາ ແລະ ວິເຄາະຈາກແຜນຈັດປະສົບການຂ້າງເທິງນັ້ນແລ້ວຂຽນລົງໃສ່ຕາຕະລາງຕາມຫົວຂໍ້ທີ່ກຳນົດ: ເນື້ອໃນໜ່ວຍການສອນ, ອຸປະກອນໜ່ວຍການສອນ, ການປະເມີນໜ່ວຍການສອນແຕ່ໜ່ວຍທີ 23-29 ດັ່ງນີ້:

ໜ່ວຍທີ23: .......................

| ມື້ | ເນື້ອໃນ | ອຸປະກອນ | | ປະເມີນຜົນ |
|---|---|---|---|---|
| | | ວັດຖຸຈິງ | ສິ່ງທີ່ຜະລິດ | |
| | | | | |
| | | | | |
| | | | | |
| | | | | |
| | | | | |

- ເຝິກປະຕິບັດຕົວຈິງ ( ເຝິກແຕ່ງບົດສອນ, ສອນຕົວຈິງໃນຫ້ອງເຝິກສອນ ແລະຖອດຖອນບົດຮຽນ ).

# 1. ການຈັດກິດຈະກຳເຄື່ອນໄຫວ ແລະ ຈັງຫວະສຳລັບຫ້ອງກຽມປະຖົມ

## 1.1 ຄວາມໝາຍຂອງກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະໝາຍເຖິງກິດຈະກຳການເຄື່ອນໄຫວຮ່າງກາຍ-ຈິດໃຈເຊິ່ງມີປະຕິກິລິຍາຕອບໂຕ້ຕໍ່ຈັງຫວະ, ດົນຕີ ເຊິ່ງຈັງຫວະ ແລະ ດົນຕີທີ່ໃຊ້ປະກອບໃນການເຄື່ອນໄຫວໄດ້ແກ່: ສຽງຕົບມື, ສຽງເພງ ສຽງດົນຕີ, ສຽງເຄາະໄມ້, ສຽງກອງ, ສຽງໝາກກະແຊກ ແລະ ອື່ນໆ.

## 1.2 ຄວາມສຳຄັນຂອງກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ການເຄື່ອນໄຫວ ແລະ ຈັງຫວະມີຄວາມສຳຄັນຫຼາຍໃນການເຄື່ອນໄຫວຊີວິດປະຈຳວັນຂອງເດັກ, ເພາະການເຄື່ອນໄຫວ ແລະ ຈັງຫວະເກີດຂຶ້ນພ້ອມໆກັບການກຳເນີດຂອງມະນຸດໃນໂລກນີ້ໄດ້ກ່ຽວຂ້ອງກັບຈັງຫວະຢູ່ຕະຫຼອດເວລາ, ດັ່ງປະກົດການທຳມະຊາດເຊັ່ນ: ການໄຫຼຂອງນ້ຳ, ລົມພັດ, ລະດູການຕ່າງໆ, ກາງເວັນ, ກາງຄືນ. ຖ້າຈະເວົ້າເຖິງເດັກການເຄື່ອນໄຫວ ແລະ ຈັງຫວະໃນກິດຈະກຳປະຈຳວັນທີ່ຕ້ອງເຄື່ອນໄຫວນັ້ນມີ ການຫຼິ້ນ, ການແລ່ນ, ການກະໂດດ, ການຍ່າງ, ການປີນ, ການໄຕ່ ຕ່າງໆ ລ້ວນແຕ່ອາໄສຈັງຫວະທັງນັ້ນ. ສະນັ້ນ, ຄູຕ້ອງທຳຄວາມເຂົ້າໃຈກ່ຽວກັບກິດຈະກຳນີ້ເພື່ອກຽມຄວາມພ້ອມທາງດ້ານຮ່າງກາຍ, ອາລົມ, ຈິດໃຈ, ສັງຄົມ ແລະ ສະຕິປັນຍາຂອງເດັກ ພ້ອມນີ້ຍັງເປັນພື້ນຖານດ້ານການຮ້ອງເພງ ແລະ ຟ້ອນນຳອີກ.

## 1.3 ຈຸດປະສົງຂອງກິດຈະກຳການເຄື່ອນໄຫວ ແລະຈັງຫວະ

- ເພື່ອພັດທະນາທາງດ້ານຮ່າງກາຍໃຫ້ມີຄວາມເຕີບໃຫ່ຍຂະຫຍາຍຕົວດີ
- ເພື່ອສົ່ງເສີມໃຫ້ອະໄວຍະວະທຸກພາກສ່ວນຂອງຮ່າງກາຍໃຫ້ມີຄວາມສຳພັນກັນດີໃນເວລາເຄື່ອນໄຫວ.
- ເພື່ອໃຫ້ເດັກເຂົ້າໃຈຄຳສັ່ງ ແລະ ສາມາດປະຕິບັດຕາມຄຳສັ່ງຂອງຄູໄດ້.
- ເພື່ອເຝິກແອບການເປັນຜູ້ນຳ ແລະ ຜູ້ຕາມ.
- ເພື່ອໃຫ້ເດັກຮຽນຮູ້ຈັງຫວະຕ່າງໆ.
- ເຝິກໃຫ້ເດັກມີຄວາມກ້າຫານ
- ເພື່ອເຝິກແອບຈິນຕະນາການ ແລະ ເຝິກຄວາມຄິດສ້າງສັນຂອງເດັກ
- ເພື່ອເຝິກແອບໃຫ້ເດັກມີລະບຽບວິໄນ
- ເພື່ອເຝິກຄວາມຈຳ ແລະ ການສະແດງອອກຂອງເດັກ
- ເພື່ອເສີມສ້າງປະສົບການຂອງເດັກ.
- ເພື່ອເຝິກໃຫ້ເດັກມີຄວາມເບີກບານມ່ວນຊື່ນແລະ ຫຼຸດຜ່ອນຄວາມເຄັ່ງຕຶງໃນເວລາປະຕິບັດກິດຈະກຳ

## 1.4 ເນື້ອໃນກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

2. ການເຄື່ອນໄຫວທາງດ້ານຮ່າງກາຍ
3. ການຟັງສຽງສັນຍານ ແລະ ປະຕິບັດຕາມຂໍ້ຕົກລົງ ແລະ ຄຳສັງຂອງຄູ
4. ການເປັນຜູ້ນຳ ແລະ ຜູ້ຕາມທີ່ດີ
5. ການເຝິກແນວຄິດສ້າງສັນ
6. ເຝິກຄວາມຈຳ
7. ເຝິກຄວາມກ້າຫານ
8. ການຮຽນຮູ້ທາງດ້ານຈັງຫວະຕ່າງໆ
9. ການເຄື່ອນໄຫວທີ່ສຳພັນກັບໜ່ວຍການສອນ ( ເນື້ອໃນຂອງໜ່ວຍການສອນ ).

**1.5 ວິທີຈັດກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ**

ໃນການຈັດກິດຈະກຳເຄື່ອນໄຫວ ແລະ ຈັງຫວະທຸກຄັ້ງຄວນຈະເລີ່ມຕົ້ນດ້ວຍຂັ້ນຕອນຕ່າງໆຄື ກິດຈະກຳພື້ນຖານ ເຊິ່ງວ່າກິດຈະກຳພື້ນຖານໄດ້ແບ່ງອອກເປັນ 2 ປະເພດດັ່ງນີ້:

**1. ການເຄື່ອນໄຫວຢູ່ກັບທີ່**

ໄດ້ແກ່ການເຄື່ອນໄຫວສ່ວນໃດສ່ວນໜຶ່ງຂອງຮ່າງກາຍ ຫຼື ຈຸດໃດຈຸດໜຶ່ງ ໂດຍຮ່າງກາຍບໍ່ເຄື່ອນທີ່ອອກໄປຈາກຈຸດນັ້ນ.ຕົວຢ່າງ ການເບັດແອວຢູ່ກັບທີ່, ແກ່ວງແຂນ ແລະ ອື່ນໆ.

**2. ການເຄື່ອນໄຫວແບບເຄື່ອນທີ່**

ໄດ້ແກ່ການເຄື່ອນທີ່ຈາກບ່ອນໜຶ່ງໄປອີກບ່ອນໜຶ່ງເຊັ່ນ: ການຍ່າງ ຫຼື ແລ່ນເປັນວົງມົນ, ແລ່ນຈາກຈຸດອື່ນຕະຫຼອດເຖິງການໂດດເຕັ້ນ ແລະ ອື່ນໆ.

+ ເຄື່ອນໄຫວຕາມເນື້ອໃນທີ່ໄດ້ກຳນົດໄວ້ (ການເຝິກຄວາມຈຳ, ການເປັນຜູ້ນາ-ຜູ້ຕາມ, ເຄື່ອນໄຫວຮຽນແບບເຝິກແອບແນວຄິດສ້າງສັນ ຫຼື ຈິນຕະນາການ..) ໃນການປະຕິບັດກິດຈະກຳໃນແຕ່ລະມື້ ອາດຈະຜັດປ່ຽນກັນໄປເຊັ່ນ:

ມື້ທີ 1 ເຝິກແອບຕາມຈິນຕະນາການ

ມື້ທີ 2 ເຄື່ອນໄຫວເປັນຜູ້ນາ ແລະ ຜູ້ຕາມ

ມື້ທີ 3 ເຄື່ອນໄຫວເຝິກຄວາມຈຳ...

ມື້ທີ 4 ເຄື່ອນໄຫວການຮຽນຮູ້ຈັງຫວະຕ່າງໆ

ມື້ທີ 5 ເຄື່ອນໄຫວການຟັງສຽງສັນຍານແລ້ວປະຕິບັດຕາມຂໍ້ຕົກລົງ ຫຼື ຄາສັ່ງ

+ **ກິດຈະກຳເບົາ**: ເປັນການເຄື່ອນໄຫວຊ້າໆ ເພື່ອຫຼຸດຜ່ອນຄວາມເຄັ່ງຕຶງ ແລະ ຄວາມອິດເມື່ອຍຂອງຮ່າງກາຍດ້ວຍການຍ່າງຊ້າໆ, ແລ່ນຊ້າໆ ເຮັດທ່າທາງຫາຍໃຈເຂົ້າເລິກໆ ເພື່ອຮັບເອົາອາກາດສົດເປັນຕົ້ນ.

+ ໃຫ້ເດັກຫຼິ້ນຕາມໃຈ ແລະ ພັກຜ່ອນ.

**ກ. ການເຄື່ອນໄຫວຮຽນແບບ**

ໄດ້ແກ່ການເຄື່ອນໄຫວຂອງຄົນ, ສັດ, ວັດຖຸ ແລະ ປະກົດການທຳມະຊາດຕ່າງໆເຊັ່ນ:

- ຮຽນແບບການເຄື່ອນໄຫວດຳລົງຊີວິດຂອງຄົນເຊັ່ນ: ດຳນາ, ແບກໄມ້, ຫິ້ວກະຕ່າ, ຂຸດດິນດ ເກັບໝາກໄມ້.
- ຮຽນແບບສັດ ເຊັ່ນ: ສຽງຮ້ອງ, ພຶດຕິກຳການເຄື່ອນໄຫວຂອງສັດ..........



ຮູບພາບ: ການເຄື່ອນໄຫວຮຽນແບບສັດ

- ຮຽນແບບຈາກວັດຖຸເຄື່ອນທີ່ ເຊັ່ນ: ລົ້, ຍົນ, ເຮືອ.................
- ຮຽນແບບປະກົດການທຳມະຊາດ ເຊັ່ນ: ຝົນຕົກ, ຟ້າຮ້ອງ, ລົມພັດ................

**ຂ. ການເຄື່ອນໄຫວຕາມແນວຄິດສ້າງສັນ ຫຼື ຈິນຕະນາການ**

ແມ່ນການເຄື່ອນໄຫວຕາມການເລົ່າເລື່ອງ, ບົດເພງ, ຄຳຄ່ອງ, ການບັນລະຍາຍຂອງຄູການເຄື່ອນໄຫວຕ່າງໆ ຢ່າງມີອິດສະ ຕາມຄວາມຄິດຂອງເດັກ.



ຮູບພາບ: ການເຄື່ອນໄຫວປະກອບທ່າທາງຕາມບົດເພງ

**ຄ. ການເຝິກຄວາມຈຳ**

ແມ່ນການເຄື່ອນໄຫວທີ່ເດັກໄດ້ປະຕິບັດຕາມຂອບເຂດທີ່ກຳນົດໄວ້ເຊັ່ນ: ຄູຈັດມູມໃນຫ້ອງ ຫຼື ສະຖານທີ່ຕ່າງໆນອກຫ້ອງຮຽນເດັກຈະໄດ້ເຄື່ອນໄຫວໃນທ່າຕ່າງໆ, ຂໍ້ຕົກລົງຈື່ຈຳການເຮັດທ່າທາງການເຄື່ອນໄຫວຕ່າງໆ.




ຮູບພາບ: ການເຄື່ອນໄຫວເຝິກຄວາມຈຳ

**ງ. ການເຝິກເປັນຜູ້ນຳ ແລະ ຜູ້ຕາມ**

ແມ່ນການເຄື່ອນໄຫວທີ່ເດັກຜູ້ໜຶ່ງອອກມານຳພາໝູ່ເຮັດ, ສ່ວນເດັກຜູ້ອື່ນໆກໍປະຕິບັດຕາມເດັກແຕ່ລະຄົນຈະຄິດເຮັດທ່າທາງອື່ນໆຂຶ້ນມາໂດຍໃຫ້ໝູ່ໃນຫ້ອງປະຕິບັດຕາມ ເຊິ່ງທ່າທາງທີ່ທຸກຄົນນຳມາ ເພື່ອພາໝູ່ປະຕະບັດນັ້ນແມ່ນຈະບໍ່ຊ້ຳກັນເຊັ່ນ: ຍົກແຂນຊ້າຍ, ຍົກແຂນຂວາ, ຍົກແຂນສອງເບື້ອງຂຶ້ນພ້ອມໆກັນ........



ຮູບພາບ: ເຄື່ອນໄຫວເປັນຜູ້ນຳ-ຜູ້ຕາມ

**ຈ. ການຮຽນຮູ້ຈັງຫວະຕ່າງໆ**

ເປັນການໃຫ້ເດັກຮຽນຮູ້ຈັງຫວະຕ່ສງໃນເວລາຄູເຄາະຈັງຫວະ ເຊັ່ນ: ເຄາະຊ້າ, ເຄາະໄວ ເດັກຈະເຄື່ອນໄຫວຕາມຄູເຄາະເມື່ອຄູຢຸດເຄາະເດັກກໍ່ຈະຢຸດເຄື່ອນໄຫວ.




ຮູບພາບ: ເຄື່ອນໄຫວຕາມຈັງຫວະຕ່າງໆ

**ສ. ການຟັງສຽງສັນຍານແລ້ວປະຕິບັດຕາມຂໍ້ຕົກລົງ ຫຼື ຄຳສັ່ງ**

ໄດ້ແກ່ການເຄື່ອນໄຫວປະຕິບັດຕາມຄຳສັ່ງເຊັ່ນ: ເວລາເຄື່ອນໄຫວປະກອບດົນຕີ ຫຼື ຄຳຄ່ອງຕ່າງໆ ເດັກຈະເຮັດທ່າທາງປະກອບເມື່ອໄດ້ຍິນຄຳສັ່ງຈາກຄູ

ຕົວຢ່າງ: ເວລາເພງໃຫ້ເດັກທຸກຄົນເຮັດທ່າທາງໂດດເກັບໝາກໄມ້.



ຮູບພາບ: ເຄື່ອນໄຫວຕາມຂໍ້ຕົກລົງ ຫຼື ຄຳສັ່ງ

- **ຂໍ້ແນະນຳການຈັດກິດຈະກຳເຄື່ອນໄຫວ ແລະ ຈັງຫວະ**
    1. ຄວນເລີ່ມກິດຈະກຳເຄື່ອນໄຫວ ແລະ ຈັງຫວະທີ່ເປັນອິດສະຫຼະບໍ່ຄວນມີວິທີການຫຸ້ຍຸງຍາກ ແລະ ສັບສົນເກີນໄປ.
    2. ເຄື່ອນໄຫວຕາມເນື້ອໃນກິດຈະກຳທີ່ວາງໄວ້
    3. ໃຫ້ໂອກາດເດັກໄດ້ເຄື່ອນໄຫວ
    4. ບໍ່ຄວນແກ່ຍາວເກີນໄປ
    5. ຄວນໃຫ້ອຸປະກອນປະກອບໃນເວລາເຄື່ອນໄຫວ
    6. ຕິດຕາມການປະເມີນຜົນການເຄື່ອນໄຫວຂອງເດັກພາຍຫຼັງສຳເລັດ.

## 1.1 **ບົດສອນແບບຢ່າງການເຄື່ອນໄຫວກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ**

## ບົດສອນ

**ໜ່ວຍ: ເຂົ້າ**
**ກິດຈະກຳເຄື່ອນໄຫວ ແລະ ຈັ່ງຫວະ**
**ຫົວຂໍ້ : ເຄື່ອນໄຫວຕາມຄຳສັ່ງ ຫຼື ຂໍ້ຕົກລົງ**

1. **ຈຸດປະສົງ ໃຫ້ເດັກສາມາດ**
   - ເພື່ອພັດທະນາອະໄວຍະວະທຸກພາກສ່ວນຂອງຮ່າງກາຍໃຫ້ມີຄວາມສຳພັນກັນຢ່າງຄ່ອງແຄ້ວໃນເວລາເຄື່ອນໄຫວ.
   - ສາມາດເຄື່ອນໄຫວຕາມຄຳສັ່ງ ຫຼື ຂໍ້ຕົກລົງໄດ້.
2. **ເນື້ອໃນ**
   - ການເຄື່ອນໄຫວສ່ວນຕ່າງໆ ຂອງຮ່າງກາຍກັບທີ່ ແລະ ເຄື່ອນທີ່.
   - ເພງ ມາຮັບຟ້າວມາ
   - ເຄື່ອນໄຫວຕາມຄຳສັ່ງ ຫຼື ຂໍ້ຕົກລົງ
3. **ສື່ການຮຽນ-ການສອນ**
   - ບົດເພງ
   - ເຄື່ອງເຄາະຈັງຫວະ
4. **ກິດຈະກຳການຮຽນ-ການສອນ**

☞ **ຂັ້ນນຳ**

- ຄູຈັດເດັກເຂົ້າເປັນລະບຽບ
- ກວດກາຈຳນວນພົນ

- **ເຄື່ອນໄຫວພື້ນຖານ**
  - **ກັບທີ່**: ພາເດັກຫງ່ຽງຫົວຊ້າຍ-ຂວາ, ໂບກມືໄປມາ, ແກ່ວງແຂນຊ້າຍ-ຂວາ, ກົ້ມລົງ ເງີຍຂຶ້ນ, ແລ່ນກັບທີ່.
  - **ເຄື່ອນທີ່**: ພາເດັກຮ້ອງເພງຕົບມືຍ່າງເປັນວົງມົນ 1 ຮອບ

☞ **ຂັ້ນດຳເນີນການສອນ**

- ຄູສະເໜີກິດຈະກຳໃຫ້ເດັກຟັງມື້ນີ້ຄູຈະໃຫ້ພວກຫຼານເຄື່ອນໄຫວຕາມຄຳສັ່ງຂອງຄູ
- ຄູໃຫ້ເດັກຢືນເປັນຮູບວົງມົນໃຫຍ່
- ຄູແບ່ງເດັກອອກເປັນ 2 ມູມ
- ມູມທີ 1: ມູມເຂົ້າສານ
- ມູມທີ 2: ມູມເຂົ້າເປືອກ
- ຄູອະທິບາຍວິທີເຄື່ອນໄຫວໃຫ້ເດັກຟັງວ່າ: ຄູຈະພາພວກຫຼານຮ້ອງເພງຍ່າງເປັນວົງມົນເມື່ອສຽງເພງສິ້ນສຸດ ລົງຄູຈະໃຫ້ຄຳສັ່ງວ່າ "ເຂົ້າມູມ" ໃຫ້ພວກຫຼານແລ່ນເຂົ້າມູມໃຜລາວ
- ໃຫ້ເດັກປະຕິບັດຕົວຈິງ 1-2 ເທື່ອ
- ຍ້ອງຍໍຊົມເຊີຍ

**+ ກິດຈະກຳເບົາ ຫຼື ຜ່ອຍຄາຍ**

- ໃຫ້ເດັກຢືນສູບລົມຫາຍໃຈເຂົ້າຊ້າໆ ແລະ ປ່ອຍລົມຫາຍໃຈອອກຊ້າໆ

☞ **ຂັ້ນສະຫຼຸບ**

- ຄູຖາມເດັກຄືນວ່າມີໃຜແດ່ເຂົ້າມູມບໍ່ຖືກ ແລະ ມີໃຜແດ່ເຂົ້າມູມຖືກ (ໃຫ້ເດັກເວົ້າພ້ອມກັນໝົດທຸກຄົນ ໃນຫ້ອງ ) ແລ້ວໃຫ້ເດັກປະກອບຄຳຄິດເຫັນ.
- ຍ້ອງຍໍຊົມເຊີຍ

**5. ການຕິດຕາມປະເມີນຜົນ**

- ສັງເກດການເຄື່ອນໄຫວສ່ວນຕ່າງໆຂອງຮ່າງກາຍເດັກ
- ສັງເກດການເຄື່ອນໄຫວຕາມຄຳສັ່ງ ຫຼື ຂໍ້ຕົກລົງ ຂອງເດັກ

## ບົດສອນມື້ທີ 1
## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

**ຫົວຂໍ້: ການເຄື່ອນໄຫວປະກອບເພງ ຮັກກາທ່ານຜູ້ນຳ**

**1. ຈຸດປະສົງ: ນັກຮຽນສາມາດ:**

- ເຝິກແອບທຸກພາກສ່ວນຂອງຮ່າງກາຍໃຫ້ມີການເຄື່ອນໄຫວຢ່າງຄ່ອງແຄ້ວ.
- ເຄື່ອນໄຫວປະກອບເພງໄດ້ຢ່າງມ່ວນຊື່ນ.

**2. ເນື້ອໃນ**

- ການເຝິກແອບສ່ວນຕ່າງໆຂອງຮ່າງກາຍ.
- ການເຄື່ອນໄຫວປະກອບເພງ: ຮັກທ່ານຜູ້ນຳ.

**3. ສື່ການຮຽນ-ການສອນ**

- ກອງ
- ເພງ ຮັກທ່ານຜູ້ນຳ

**4. ກິດຈະກຳການຮຽນ-ການສອນ**

**+ ນຳເຂົ້າສູ່ບົດຮຽນ**

**ກິດຈະກຳພື້ນຖານ**

- **ເຄື່ອນໄຫວກັບທີ່:** ຄູຈັດນັກຮຽນຢືນເປັນແຖວເຄິ່ງວົງມົນແລ້ວໃຫ້ນັກຮຽນເອົາມືຄ້ຳແອວ
- ເຕັ້ນຂຶ້ນ-ລົງກັບທີ່, ຈາກນັ້ນກໍ່ບິດແອວໄປທາງຊ້າຍ-ຂວາ ແລະ ຍົກມືຂຶ້ນແກ່ວງໄປ-ມາ.
- **ເຄື່ອນໄຫວເຄື່ອນທີ່:** ຄູເຄາະເປັນຈັງຫວະຊ້າໆ ແລ້ວໃຫ້ນັກຮຽນຍ່າງ ແລະ ແລ່ນຕາມສຽງເຄາະ.

**+ ຂັ້ນດຳເນີນການສອນ**

**ກິດຈະກຳສຳພັນກັບເນື້ອໃນ**

- ຄູສະເໜີກິດຈະກຳໃຫ້ເດັກຟັງມື້ນີ້ຄູຈະພາພວກຫຼານເຄື່ອນໄຫວປະກອບເພງ.
- ຄູສາທິດ ແລະ ອະທິບາຍວິທີການເຮັດທ່າທາງປະກອບເພງ: ຮັກທ່ານຜູ້ນຳ ໃຫ້ນັກຮຽນສັງເກດເບິ່ງ1-2 ເທື່ອ.
- ຄູພານັກຮຽນເຮັດທ່າທາງປະກອບເພງ ຮັກທ່ານຜູ້ນຳ.
- ຄູຮ້ອງເພງພ້ອມທັງເຄາະຈັງຫວະໄປນຳ ແລ້ວໃຫຫ້ນັກຮຽນເຮັດທ່າທາງປະກອບເພງ 1-2 ເທື່ອ.

**+ ກິດຈະກຳເບົາ**

- ຄູໃຫ້ນັກຮຽນຢືນເປັນແຖວຊື່ແລ້ວໃຫ້ນັກຮຽນຍົກແຂນເທິງຫົວແລ້ວດູດລົມຫາຍໃຈເຂົ້າຊ້າໆ ຈາກນັ້ນ ກໍ່ຄ່ອຍໆເອົາແຂນລົງແລ້ວຄ່ອຍໆປ່ອຍລົມຫາຍໃຈອອກຊ້າໆ.

**+ ຂັ້ນສະຫຼຸບບົດຮຽນ**

- ຄູຖາມນັກຮຽນຄືນຄູພາພວກນ້ອງເຄື່ອນໄຫວປະກອບເພງຫຍັງ?
- ຄູໃຫ້ນັກຮຽນອາສາສະໝັກຕອບ 1-2 ຄົນ.

**+ ສຶກສາອົບຮົມນັກຮຽນ**

ໃນເວລາເຮັດທ່າທາງປະກອບເພງພວກນ້ອງນັກກຮຽນທຸກຄົນຕ້ອງຕັ້ງໃຈປະຕິບັດກິດຈະກຳບໍ່ດື້, ບໍ່ໃຫ້ຍູ້ ຫຼິ້ງກັນ ແລະ ບໍ່ໃຫ້ແລ່ນຕຳກັນ ຫຼັງຈາກເຮັດທ່າທາງແລ້ວຕ້ອງລ້າງມື ແລະ ເຊັດມືໃຫ້ສະອາດ.

**5. ການວັດ ແລະ ປະເມີນຜົນ**

- ສັງເກດການເຝິກແອບທຸກພາກສ່ວນຂອງຮ່າງກາຍຂອງນັກຮນແຕ່ລະຄົນ.
- ສັງເກດການເຄື່ອນໄຫວປະກອບເພງຂອງນັກຮຽນ.

## ມື້ທີ 2

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

**ຫົວຂໍ້: ການເຄື່ອນໄຫວປະກອບເພງ ຮັກກທ່ານຜູ້ນຳ**

**1. ຈຸດປະສົງ: ນັກຮຽນສາມາດ:**

- ເຝິກແອບທຸກພາກສ່ວນຂອງຮ່າງກາຍໃຫ້ມີການເຄື່ອນໄຫວຢ່າງຄ່ອງແຄ້ວ.
- ເຄື່ອນໄຫວຕາມສຽງເຄາະຢ່າງມີຄວາມເບີກບານມ່ວນຊື່ນໄດ້.

**2. ເນື້ອໃນ**

- ການເຝິກແອບສ່ວນຕ່າງໆຂອງຮ່າງກາຍ.
- ເຄື່ອນໄຫວຕາມສຽງເຄາະຢ່າງມີຄວາມເບີກບານມ່ວນຊື່ນ.

**3. ສື່ການຮຽນ-ການສອນ**

- ກະແຊັກ

**4. ກິດຈະກຳການຮຽນ-ການສອນ**

+ **ນຳເຂົ້າສູ່ບົດຮຽນ**

**ກິດຈະກຳພື້ນຖານ**

- **ເຄື່ອນໄຫວກັບທີ່:** ຄູຈັດນັກຮຽນຢືນເປັນແຖວຂວາງແລ້ວພານັກຮຽນແກ່ວງແຂນໄປທາງຊ້າຍ-ທາງຂວາ ຈາກນັ້ນກໍ່ຍົກມືຂຶ້ນທັງສອງເບື້ອງແລ້ວແກ່ວງໄປ-ມາ.
- **ເຄື່ອນໄຫວເຄື່ອນທີ່:** ຄູໃຊ້ກະແຊັກເຄາະເປັນຈັງຫວະ ຈາກນັ້ນຄູກໍ່ໃຫ້ນັກຮຽນແລ່ນຊ້າໆໃນບໍລິເວນຫ້ອງ ຕາມສຽງສັນຍານທີ່ຄູເຄາະ ປະມານ 1-2 ເທື່ອ.

+ **ຂັ້ນດຳເນີນການສອນ**

- ຄູອະທິບາຍ ແລະ ສາທິດວິທີການເຄື່ອນໄຫວຕາມສຽງເຄາະໃຫ້ນັກຮຽນສັງເກດດັ່ງນີ້:
- ຄູເຄາະ 1 ບາດໃຫ້ນັກຮຽນສະແດງທ່າທາງເປັນທຸງສີຂາວເຄື່ອນໄຫວປິວໄປ-ມາ.
- ຄູເຄາະ 2 ບາດໃຫ້ນັກຮຽນສະແດງທ່າທາງເປັນທຸງສີຟ້າເຄື່ອນໄຫວປິວໄປ-ມາ.
- ຄູເຄາະ 3 ບາດໃຫ້ນັກຮຽນສະແດງທ່າທາງເປັນທຸງສີແດງເຄື່ອນໄຫວປິວໄປ-ມາ.
- ຄູໃຫ້ນັກຮຽນປະຕິບັດຫຼິ້ນຕົວຈິງ ແລະ ຄູກໍຕິດຕາມຊ່ວຍເຫຼືອນັກຮຽນຜູ້ທີ່ເຮັດບໍ່ທັນໄດ້ດີ.

+ **ກິດຈະກຳເບົາ**

- ຄູໃຫ້ນັກຮຽນຢືນເປັນແຖວຊື່ແລ້ວຄູກໍ່ພານັກຮຽນເຮັດທ່າທາງລົມພັດໃບໄມ້ຊ້າໆ.

+ **ຂັ້ນສະຫຼຸບບົດຮຽນ**

- ຄູຖາມນັກຮຽນຄືນຄູພາພວກນ້ອງເຄື່ອນໄຫວຕາມແນວໃດແດ່?
- ຄູໃຫ້ນັກຮຽນອາສາສະໝັກຕອບ 1-2 ຄົນ.

+ **ສຶກສາອົບຮົມນັກຮຽນ**

ໃນເວລາພວກນ້ອງເຄື່ອນໄຫວນັກກຮຽນທຸກຄົນຕ້ອງມີສະມາທິໃນການຟັງສຽງທີ່ຄູເຄາະ ຖ້າໃຜບໍ່ຕັ້ງໃຈຟັງ ຜູ້ນັ້ນຈະເຮັດບໍ່ຖືກ ແລະ ເວລາແລ່ນຕ້ອງຊ້າໆ ເພື່ອບໍ່ໃຫ້ຕຳກັນ.

**5. ການວັດ ແລະ ປະເມີນຜົນ**

- ສັງເກດການເຝິກແອບທຸກພາກສ່ວນຂອງຮ່າງກາຍຂອງນັກຮນແຕ່ລະຄົນ.
- ສັງເກດການເຄື່ອນໄຫວຕາມສຽງເຄາະຢ່າງມີຄວາມເບີກບານມ່ວນຊື່ນຂອງນັກຮຽນແຕ່ລະຄົນ.

## ມື້ທີ 3

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

**ຫົວຂໍ້: ການເຄື່ອນໄຫວເປັນຜູ້ນຳ-ຜູ້ຕາມ**

**1. ຈຸດປະສົງ: ນັກຮຽນສາມາດ:**

- ເຝິກແອບທຸກພາກສ່ວນຂອງຮ່າງກາຍໃຫ້ມີການເຄື່ອນໄຫວຢ່າງຄ່ອງແຄ້ວ.
- ເຄື່ອນໄຫວເຮັດທ່າທາງເປັນຜູ້ນຳ-ຜູ້ຕາມໄດ້.

**2. ເນື້ອໃນ**

- ການເຝິກແອບສ່ວນຕ່າງໆຂອງຮ່າງກາຍ.
- ເຄື່ອນໄຫວເຮັດທ່າທາງເປັນຜູ້ນຳ-ຜູ້ຕາມ.

**3. ສື່ການຮຽນ-ການສອນ**

- ກະແຊັກ

- ກອງ

4. **ກິດຈະກຳການຮຽນ-ການສອນ**

**+ ນຳເຂົ້າສູ່ບົດຮຽນ**

**ກິດຈະກຳພື້ນຖານ**

- **ເຄື່ອນໄຫວກັບທີ່:** ຄູຈັດນັກຮຽນຢືນເປັນແຖວຂວາງແລ້ວໃຫ້ນັກຮຽນເອົາມືຄ້ຳແອວກົ້ມຄໍລົງ ແລະ ເງີຍຄໍຂຶ້ນ ຈາກນັ້ນກໍ່ໂບກມືໝູນຂໍ້ຕີນ ແລະ ຢ່ຳເທົ້າຢູ່ກັບທີ່.
- **ເຄື່ອນໄຫວເຄື່ອນທີ່**: ຄູໃຊ້ກະແຊັກເຄາະເປັນຈັງຫວະຊ້າ-ໄວແລ້ວໃຫ້ນັກຮຽນເຕັ້ນໄປທາງໜ້າ ຈາກນັ້ນຄູກໍ່ໃຫ້ນັກຮຽນຍ່າງເປັນຮູບວົງມົນຕາມສຽງເຄາະຂອງຄູ.

**+ ຂັ້ນດຳເນີນການສອນ**

- ຄູອະທິບາຍ ແລະ ສາທິດວິທີການເຄື່ອນໄຫວເປັນຜູ້ນຳ-ຜູ້ຕາມໃຫ້ນັກຮຽນສັງເກດເບິ່ງກ່ອນ.
- ເລືອກເອົານັກຮຽນໜຶ່ງຄົນອອກມາເປັນຫົວໜ້າໝູ່ແລ້ວນຳພາໝູ່ເຮັດທ່າທາງຕ່າງໆ ສ່ວນຜູ້ທີ່ເຫຼືອແມ່ນເຮັດຕາມ.
- ຄູໃຫ້ນັກຮຽນອາສາສະໝັກອອກມາເປັນຜູ້ນຳພາໝູ່ເຮັດທ່າທາງຕ່າງໆ ປະມານ 2-3 ຄົນ.
- ຄູກໍຕິດຕາມ ແລະ ຊ່ວຍເຫຼືອການເຮັດທ່າທາງຕົວຈິງຂອງນັກຮຽນຜູ້ທີ່ເຮັດບໍ່ທັນໄດ້ດີ.

**+ ກິດຈະກຳເບົາ**

- ຄູໃຫ້ນັກຮຽນທຸກຄົນເອົາມືກອດເອິກໄວ້ແລ້ວຫຼັບຕາເຮັດທ່າທາງລັກສະນະແບບສະມະທິຈາກນັ້ນຄູກໍ່ສັ່ງໃຫ້ນັກຮຽນຄ່ອຍໆ ມືນຕາຂຶ້ນ ແລະ ວາແຂນອອກຊ້າແລ້ວເອົາແຂນຄ່ອຍໆ ວາງໄວ້ເທິງໂຕະ.

**+ ຂັ້ນສະຫຼຸບບົດຮຽນ**

- ຄູຖາມນັກຮຽນຄືນ ຄູໃຫ້ພວກນ້ອງເຄື່ອນໄຫວຫັຍງ?
- ຄູໃຫ້ນັກຮຽນເວົ້າຄືນພ້ອມກັນໝົດຫ້ອງ.

**+ ສຶກສາອົບຮົມນັກຮຽນ**

ນັກກຮຽນທຸກຄົນໃນເວລານຳພາໝູ່ເຮັດທ່າທາງເປັນຜູ້ນຳ-ຜູ້ຕາມນັ້ນຕ້ອງເຮັດຊ້າໆ ເພື່ອໃຫ້ໝູ່ເຂົ້າໃຈໃນການປະຕິບັດ ແລະ ເວລາເຮັດທ່າທາງບໍ່ໃຫ້ຢອກກັນ.

**5. ການວັດ ແລະ ປະເມີນຜົນ**

- ສັງເກດການແອບທຸກພາກສ່ວນຂອງຮ່າງກາຍຂອງນັກຮຽນແຕ່ລະຄົນ.
- ສັງເກດການເຄື່ອນໄຫວເປັນຜູ້ນຳ-ຜູ້ຕາມຂອງນັກຮຽນແຕ່ລະຄົນ.

## ມື້ທີ 4

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

**ຫົວຂໍ້: ການເຄື່ອນໄຫວເຮັດທ່າທາງຕາມຈິນຕະນາການ ປະກອບຄຳຄ່ອງ: ນົກເຕັນຊົວ**

1. **ຈຸດປະສົງ: ນັກຮຽນສາມາດ:**
    - ເຝິກແອບທຸກພາກສ່ວນຂອງຮ່າງກາຍໃຫ້ມີການເຄື່ອນໄຫວຢ່າງຄ່ອງແຄ້ວ.
    - ການເຄື່ອນໄຫວເຮັດທ່າທາງຕາມຈິນຕະນາການ ປະກອບຄຳຄ່ອງໄດ້.

**2. ເນື້ອໃນ**

- ການເຝິກແອບສ່ວນຕ່າງໆຂອງຮ່າງກາຍ.
- ການເຄື່ອນໄຫວເຮັດທ່າທາງຕາມຈິນຕະນາການ ປະກອບຄຳຄ່ອງ: ນົກເຕັນຊິວ.

**3. ສື່ການຮຽນ-ການສອນ**

- ກອງ
- ບົດຄຳຄ່ອງ: ນົກກາເຕັນຊິວ

**4. ກິດຈະກຳການຮຽນ-ການສອນ**

**+ ນຳເຂົ້າສູ່ບົດຮຽນ**

**ກິດຈະກຳພື້ນຖານ**

- **ເຄື່ອນໄຫວກັບທີ່:** ຄູຈັດນັກຮຽນຢືນເປັນແຖວເປັນວົງມົນແລ້ວພານັກຮຽນແກ່ວງແຂນໄປທາງໜ້າ-ທາງຫຼັງ,ພັບແຂນເຂົ້າອອກ ແລະ ຍົກຂາຂຶ້ນເທື່ອລະຂາເຕະໄປທາງໜ້າ-ທາງຫຼັງ.
- **ເຄື່ອນໄຫວເຄື່ອນທີ່:** ຄູຕີບກອງເປັນຈັງຫວະຊ້າ-ໄວແລ້ວພານັກຮຽນຍ່າງເປັນແຖວວົງມົນປະມານ1-2 ຮອບ.

**+ ຂັ້ນດຳເນີນການສອນ**

- ຄູອະທິບາຍວິທີການເຄື່ອນໄຫວເຮັດທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.
- ເລົ່າຄຳຄ່ອງ: ນົກເຕັນຊິວ ແລ້ວໃຫ້ນັກຮຽນປະກອບທ່າທາງຕາມຈິນຕະນາການ ປະມານ 2-3 ເທື່ອ.
- ຄູ ແລະ ນັກກຮຽນທັງໝົດໃນຫ້ອງເລົ່າຄຳຄ່ອງພ້ອມກັນ ແລະ ເຮັດທ່າທາງຕາມຈິນຕະນາການປະກອບໄປພ້ອມ.
- ຄູກໍຕິດຕາມ ແລະ ຊ່ວຍເຫຼືອການເຮັດທ່າທາງຕົວຈິງຂອງນັກຮຽນຜູ້ທີ່ເຮັດບໍ່ທັນໄດ້ດີ.

**+ ກິດຈະກຳເບົາ**

- ຄູໃຫ້ນັກຮຽນຢືນເປັນແຖວປິ່ນໜ້າຫາກັນ ແລ້ວເຮັດທ່າທາງລົມພັດໃບໄມ້ຄ່ອຍໆ ຈາກນັ້ນກໍຫາຍໃຈເຂົ້າອອກຊ້າໆ.

**+ ຂັ້ນສະຫຼຸບບົດຮຽນ**

- ຄູຖາມນັກຮຽນຄືນພວກນ້ອງໄດ້ເຄື່ອນໄຫວເຮັດທ່າທາງປະກອບຄຳຄ່ອງຫັຍງ?
- ຄູໃຫ້ນັກຮຽນເວົ້າຄືນພ້ອມກັນໝົດຫ້ອງ.

**+ ສຶກສາອົບຮົມນັກຮຽນ**

ນັກກຮຽນແຕ່ລະຄົນໃນເວລາເຄື່ອນໄຫວບໍ່ໃຫ້ອາແຂນແຮງ, ບໍ່ໃຫ້ແລ່ນໄວ້ເກີນໄປ, ບໍ່ໃຫ້ໂດດແຮງ, ຫຼັງຈາກເຄື່ອນໄຫວແລ້ວຕ້ອງເຊັດເຫື່ອຕາມຕົນຕົວໃຫ້ສະອາດ.

**5. ການວັດ ແລະ ປະເມີນຜົນ**

- ສັງເກດການແອບທຸກພາກສ່ວນຂອງຮ່າງກາຍຂອງນັກຮນແຕ່ລະຄົນ.
- ສັງເກດການເຄື່ອນໄຫວເຮັດທ່າທາງຕາມຈິນຕະນາການປະກອບຄຳຄ່ອງຂອງນັກຮຽນແຕ່ລະຄົນ.

## ມື້ທີ 5

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

**ຫົວຂໍ້: ການເຄື່ອນໄຫວເຮັດທ່າທາງຕາມຄຳສັ່ງ**

**1. ຈຸດປະສົງ: ນັກຮຽນສາມາດ:**

- ເຝິກແອບທຸກພາກສ່ວນຂອງຮ່າງກາຍໃຫ້ມີການເຄື່ອນໄຫວຢ່າງຄ່ອງແຄ້ວ.
- ການເຄື່ອນໄຫວຕາມຄຳສັ່ງໄດ້.

**2. ເນື້ອໃນ**

- ການເຝິກແອບສ່ວນຕ່າງໆຂອງຮ່າງກາຍ.
- ການເຄື່ອນໄຫວຕາມຄຳສັ່ງ: ທຸງສີແດງ, ທຸງສີຟ້າ ແລະ ທຸງສີເຫຼືອງ

**3. ສື່ການຮຽນ-ການສອນ**

- ກອງ ຫຼື ກະແຊັກ
- ທຸງສີແດງ, ສຟ້າ ແລະ ສີເຫຼືອງ

**4. ກິດຈະກຳການຮຽນ-ການສອນ**

**+ ນຳເຂົ້າສູ່ບົດຮຽນ**

**ກິດຈະກຳພື້ນຖານ**

- **ເຄື່ອນໄຫວກັບທີ່:** ຄູຈັດນັກຮຽນຢືນຂຶ້ນແລ້ວພານັກຮຽນດີດນິ້ວມື, ແກ່ວງແຂນໄປ-ມາ ຈາກນັ້ນກໍ່ບິດແອວຊ້າຍ-ຂວາປະຕິບັດ2-3 ເທື່ອ.
- **ເຄື່ອນໄຫວເຄື່ອນທີ່:** ຄູສັ່ນກະແຊັກເປັນຈັງຫວະຊ້າ-ໄວແລ້ວພານັກຮຽນຈັບແຂນກັນຍ່າງຕາມບໍລິເວນຫ້ອງ.

**+ ຂັ້ນດຳເນີນການສອນ**

- ຄູແບ່ງມູມໃນຫ້ອງອອກເປັນ 3 ມູມ
- ມູມທີ 1 ແມ່ນມູມທຸງສີແດງ
- ມູມທີ 2 ແມ່ນມູມທຸງສີເຫຼືອງ
- ມູມທີ 3 ແມ່ນມູມທຸງສີຟ້າ
- ຄູອະທິບາຍ ແລະ ສາທິດວິທີການເຄື່ອນໄຫວຕາມມຄຳສັ່ງໃຫ້ນັກຮຽນສັງເກດເບິ່ງ
- ຄູຢາຍທຸງໃຫ້ນັກຮຽນຈັບຜູ້ລະທຸງ ແລ້ວໃຫ້ນັກຮຽນເຄື່ອນໄຫວຕາມຈິນຕະນາການ ແຕ່ຖ້າໄດ້ຍິນຄຳສັ່ງຂອງຄູວ່າ ນັກຮຽນທຸກຄົນແລ່ນເຂົ້າມູມທີ່ຄູກຳນົດໄວ້ໃຫ້ຖືກຕ້ອງເຊັ່ນ: ນັກຮຽນທີ່ຈັບທຸງສີແດງກໍ່ແລ່ນເຂົ້າມູມທີ່ມີທຸງສີແດງ, ນັກຮຽນທີ່ຈັບທຸງສີຟ້າກໍ່ແລ່ນເຂົ້າມູມທີ່ມີທຸງສີຟ້າ ແລະ ນັກຮຽນທີ່ຈັບທຸງສີເຫຼືອງກໍ່ແລ່ນເຂົ້າມູມທີ່ມີທຸງສີເຫຼືອງ.
- ຄູໃຫ້ນັກຮຽນປະຕິບັດການເຄື່ອນໄຫວເຮັດທ່າທາງຕາມຄຳສັ່ງປະມານ 2-3 ເທື່ອ.
- ຄູກໍຕິດຕາມ ແລະ ຊ່ວຍເຫຼືອການເຮັດທ່າທາງຕົວຈິງຂອງນັກຮຽນຜູ້ທີ່ເຮັດບໍ່ທັນໄດ້ດີ.

**+ ກິດຈະກຳເບົາ**

- ຄູພານັກຮຽນເຄື່ອນໄຫວດ້ວຍການເຮັດທ່າທາງນົກພີປີກອອກ-ເຂົ້າຊ້າໆ ຈາກນັ້ນກໍຢືນກົງສູບລົມຫາຍໃຈເຂົ້າຊ້າໆ ແລະ ປ່ອຍລົມຫາຍໃຈອອກຊ້າໆ.

**+ ຂັ້ນສະຫຼຸບບົດຮຽນ**

- ຄູຖາມນັກຮຽນຄືນພວກນ້ອງໄດ້ເຄື່ອນໄຫວຫັຍງແດ່?
- ຄູໃຫ້ນັກຮຽນເວົ້າຄືນພ້ອມກັນໝົດຫ້ອງ.

**+ ສຶກສາອົບຮົມນັກຮຽນ**

ໃນເວລາເຄື່ອນໄຫວຕາມຄຳສັ່ງພວກນ້ອງຕ້ອງມີສະມາທິໃນການຟັງ, ການແລ່ນຕ້ອງລະມັດລະວັງ, ບໍ່ໃຫ້ແກ່ວງທຸງໃສ່ກັນ, ບໍ່ໃຫ້ແລ່ນເຂົ້າມູມຜູ້ອື່ນ ຕ້ອງແລ່ນເຂົ້າໃຫ້ຖືກມູມທີ່ຄູກຳນົດ. ຫຼັງຈາກເຄື່ອນໄຫວແລ້ວຕ້ອງເຊັດເຫື່ອຕາມຕົນຕົວໃຫ້ສະອາດ.

**5. ການວັດ ແລະ ປະເມີນຜົນ**

- ສັງເກດການແອບທຸກພາກສ່ວນຂອງຮ່າງກາຍຂອງນັກຮຽນແຕ່ລະຄົນ.

- ສັງເກດການເຄື່ອນໄຫວຕາມຄຳສັ່ງຂອງນັກຮຽນແຕ່ລະຄົນ.

## 2. ການຈັດກິດຈະກຳການຮຽນ-ການສອນກິດຈະກຳວົງມົນ ແລະ ເກມການສຶກສາ.

ກິດຈະກຳວົງມົນແມ່ນຂະບວນການຮຽນ - ການສອນທີ່ຄູເປັນຜູ້ວາງຈຸດປະສົງ, ເນື້ອໃນ ແລະ ຊອກວິທີສິດສອນໃຫ້ເໝາະສົມກັບແຕ່ລະສົ່ງອາຍຸ ແລະ ຄວາມສົນໃຈຂອງເດັກ,ເປັນກິດຈະກຳທີ່ຄູຈັດໃຫ້ມີລັກສະນະການນັ່ງເປັນວົງມົນ ແລະ ເນື້ອໃນຂອງກິດຈະກຳມີລັກສະນະປິ່ນອ້ອມຕົວຂອງມັນ, ເປັນກິດຈະກໍທີ່ມີອິດສະຫຼະໃນການຄົ້ນຄິດ, ໃນການສະແດງອອກ, ມີຄວາມສາມາດເລືອກເຮັດຕາມຄວາມສົນໃຈຂອງຕົນ ໃນກິດຈະກຳວົງມົນເດັກໃຊ້ສຳມາທິ, ມີລະບຽບໃນການຟັງ, ປະກອບຄຳເຫັນ, ການຕອບຄຳຖາມ ແລະ ມີສ່ວນຮ່ວມເດັກຂັ້ນພື້ນຖານທີ່ຈະໄປຮຽນຊັ້ນປະຖົມ ໃນການສອນກິດຈະກຳວົງມົນຄູຄວນຄຳນຶງເຖິງທຳມະຊາດທີ່ຢູ່ຮອບຕົວເດັກເຊັ່ນ: ຄົນສັດ, ພືດ, ແມງໄມ້ໝາກໄມ້ ແລະ ຕົ້ນໄມ້ໝາຍຄວາມວ່າສອນຈາກສິ່ງທີ່ຢູ່ໃກ້ຕົວໄປຫາສິ່ງທີ່ຢູ່ໄກຕົວ.ນອກນັ້ນຄູຄວນຄຳນຶງເຖິງວັນບຸນຕ່າງໆ,ລະດູການຕ່າງໆ ແລະ ສະຖານທີ່ສຳຄັນຕ່າງໆເພື່ອໃຫ້ການຈັດກິດຈະກຳວົງມົນໄດ້ຮັບຜົນດີ.

**+ ກິດຈະກຳເກມການສຶກສາ.**

ເກມການສຶກສາໝາຍເຖິງການຫຼິ້ນ ຫຼື ແບບຫຼິ້ນທີ່ມີກະຕິກາມີລະບຽບການຫຼິ້ນ ເພື່ອພັດທະນາການຮຽນຮູ້ຄົ້ນຄິດ ແລະ ຊອກຫາເຫດຜົນ ຈາກການຫຼິ້ນເກມການສຶກສາຂອງເດັກຈະເຮັດໃຫ້ຄູສາມາດບອກໄດ້ວ່າເດັກມີຄວາມເຂົ້າໃຈໃນການຫຼິ້ນເກມ ແລະ ຍັງຊ່ວຍໃຫ້ເກີດການຮຽນຮູ້ ເຊິ່ງເປັນພື້ນຖານໃນການສຶກສາວິຊາຕ່າງໆທີ່ຈະຮຽນໃນຊັ້ນປະຖົມ.

**ຄວາມສຳຄັນຂອງກິດຈະກຳວົງມົນ ແລະ ເກມການສຶກສາ**

ກິດຈະກຳວົງມົນເປັນໝາກຫົວໃຈຂອງການສອນເຊິ່ງຊ່ວຍໃຫ້ເດັກເຂົ້າໃຈເນື້ອໃບົດຮຽນໄດ້ດີຂຶ້ນ. ແມ່ນການຈັດກິດຈະກຳການຮຽນຮູ້ ແລະ ປະສົບການໃຫ້ແກ່ເດັກໂດຍການຈັດໃຫ້ເດັກໄດ້ມານັ່ງຮ່ວມກັນເປັນວົງມົນເພື່ອໃຫ້ຄູສາມາດສັງເກດເດັກໄດ້ທົ່ວເຖິງທຸກຄົນ.

ເກມການສຶກສາເປັນການຫຼິ້ນກັບເຄື່ອງຫຼິ້ນເຊິ່ງມີຄວາມສຳຄັນຕໍ່ການສົ່ງເສີມພັດທະນາການຮຽນຮູ້ຂອງເດັກ ເພື່ອເປັນການກຽມຄວາມພ້ອມເຊິ່ງການຫຼິ້ນເກມເປັນການສົ່ງເສີມການຮຽນຮູ້ຂອງເດັກ ໂດຍຜ່ານການຫຼິ້ນທີ່ມີແບບແຜນ, ເປັນການກະຕຸກຊຸກຍູ້ໃຫ້ເດັກເກີດມີການຄົ້ນຄິດ ແລະ ຊອກຫາເຫດຜົນ, ເປັນການຊ່ວຍໃຫ້ເດັກເຂົ້າໃຈເລື່ອງຕ່າງໆທີ່ໄດ້ຮຽນຮູ້ມາ ແລະ ຊ່ວຍໃຫ້ເກີດການຮຽນຮູ້ທີ່ເປັນພື້ນຖານການສຶກສາວິຊາຕ່າງໆໃນຊັ້ນປະຖົມສຶກສາ.

### 1.1 ຈຸດປະສົງຂອງກິດຈະກຳໃນວົງມົນ ແລະ ເກມການສຶກສາ

1. ເພື່ອໃຫ້ເດັກມີຄວາມເຂົ້າໃຈ ແລະ ຮຽນຮູ້ເນື້ອໃນຂອງໜ່ວຍການສອນ
2. ເພື່ອໃຫ້ເດັກໃຫ້ເດັກມີຄວາມສຳພັນໃກ້ສິດກັບຄູ ແລະ ໝູ່ເພື່ອນ.
3. ເພື່ອເຝິກພື້ນຖານການມີສະມາທິໃນການຮ່ວມປະຕິບັດກິດຈະກຳນຳຄູ ແລະ ໝູ່ຄູ່.
4. ເພື່ອໃຫ້ຄູໄດ້ຕິດຕາມພຶດຕິກຳຂອງເດັກຢ່າງໃກ້ຊິດ
5. ເພື່ອເຝິກທັກສະ ແລະ ມາລະຍາດໃນການອ່ານ, ການຟັງ, ການເວົ້າໃຫ້ແກ່ເດັກ.
6. ຝຶກຄວາມກ້າຫານ ກ້າສະແດງອອກ ແລະ ກ້າສະແດງຄວາມຄິດເຫັນອອກມາ
7. ຝຶກໃຫ້ເດັກມີລະບຽບວິໄນ

8. ປູກຝັງການສັງເກດ ແລະ ມີເຫດຜົນສຶກສາຄວາມຈິງດ້ວຍຕົນເອງ.
9. ເພື່ອໃຫ້ເດັກຮຽນຮູ້ພາສາ, ຄະນິດສາດດ້ວຍຄໍາສັບ, ປະໂຫຍກທີ່ງ່າຍ ແລະ ແຍກປະເພດ ແລະ ຈັດໝວດໝູ່, ການຮຽນນັບຄ່າຈໍານວນຕົວເລກເປັນຕົ້ນ.
10. ປູກຝັງແນວຄິດພື້ນຖານໃນການຮັກການຮຽນໃຫ້ແກ່ເດັກ
11. ເພື່ອເຝິກກ້າມຊີ້ນນ້ອຍ ແລະ ປະສາດສໍາພັນລະຫວ່າງມື ແລະ ແສງຕາ.
12. ເຝິກໃຫ້ເດັກໄດ້ມີການຄົ້ນຄິດຫາເຫດຜົນ, ຮູ້ຈັກການບອກເລກແບບພື້ນການໂດຍການໃຊ້ຮູບພາບມາສົມທຽບ.
13. ເຝິກໃຫ້ເດັກຈໍາແນກສີ,ຂະໜາດ ແລະ ຮູບຮ່າງ.

**1.2 ເນື້ອໃນຂອງກິດຈະກໍາໃນວົງມົນ ແລະ ເກມການສຶກສາ**

ດັ່ງທີ່ຮູ້ກັນແລ້ວວ່າກິດຈະກໍາໃນວົງມົນແມ່ນກິດຈະກາຫຼັກທີ່ເປັນໃຈກາງຂອງແຜນການຈັດປະສົບການສໍາລັບເດັກ ເນື້ອໃນຂອງກິດຈະກໍາວົງມົນຈະຈັດຈາກສິ່ງທີ່ຢູ່ໃກ້ຕົວໄປຫາໄກຕົວຈາກສິ່ງທີ່ຢູ່ອ້ອມຂ້າງ ແລະ ທໍາມະຊາດເຊັ່ນ: ຄົນ, ສັດ, ພືດ, ຕົ້ນໄມ້, ແມງໄມ້, ດອກໄມ້ຕະຫຼອດເຖິງວັນບຸນລະດູການ, ສະຖານທີ່ສໍາຄັນຕ່າງໆ ຄວາມຮູ້ພື້ນຖານດ້ານພາສາ, ຄວາມຮູ້ພື້ນຖານຄະນິດສາດ ແລະ ວິທະຍາສາດໂດຍຜ່ານບັນດາກິດຈະກໍາດັ່ງນີ້:

ການອະທິບາຍ, ການສົນທະນາ, ການສາທິດ, ການທົດລອງ ແລະ ປະຕິບັດຕົວຈິງ, ການຫຼິ້ນເກມບົດບາດສົມມຸດ, ການເລົ່ານິທານ ຫຼື ເລົ່າເລື່ອງ, ການເລົ່າຄໍາຄ່ອງ-ຄໍາທວາຍ, ການຮ້ອງເພງ-ຟ້ອນ, ການສອນຄວາມຮູ້ພື້ນຖານທາງດ້ານຄະນິດສາດ ແລະ ວິທະຍາສາດ, ການຮຽນຕົວເລກ ພະຍັນຊະນະ ແລະ ສະຫຼະ ແລະ ເກມຕ່າງໆ ສະນັ້ນ, ການຈັດກິດຈະກໍາໃນວົງມົນ ຄູຜູ້ສອນຈະຕ້ອງຄໍານຶງເຖິງຮູບແບບ ຫຼື ເນື້ອໃນຂອງກິດຈະກໍາທີ່ສັງກັດຢູ່ໃນກິດຈະກໍາວົງມົນເຊັ່ນ:

## ➢ ເນື້ອໃນທີ່ຈັດຢູ່ໃນກິດຈະກໍາວົງມົນ

- ການອະທິບາຍ
- ການສົນທະນາ
- ການສາທິດ-ປະຕິບັດຕົວຈິງ ( ສໍາຜັດ
- ການເລົ່າເລື່ອງ-ເລົ່ານິທານ
- ການຮ້ອງເພງ - ການຟ້ອນ
- ການເລົ່າຄໍາຄ່ອງ-ຄໍາທວາຍ
- ການສອນພື້ນຖານດ້ານຄະນິດສາດ
- ວິທະຍາສາດ ແລະ ທໍາມະຊາດ
- ເກມຕ່າງໆ
- ພະຍັນຊະນະ ແລະ ສະຫຼະ.

ເກມທີ່ນຳມາໃຫ້ເດັກຫຼິ້ນມີຄື: ເກມຕັດຕໍ່ຮູບ, ເກມຈັບຄູ່, ເກມລຽງລຳດັບ, ເກມຈັດ ແລະ ແຍກໝວດໝູ່ຮູບພາບ, ເກມລອດໂຕ, ເກມໂດມິໂນ, ເກມພື້ນຖານການບວກ, ເກມຄວາມສຳພັນລະຫວ່າງຮູບພາບກັບສັນຍາລັກ.

## 1.3 ວິທີຈັດກິດຈະກຳໃນວົງມົນ ແລະເກມການສຶກສາ

ການຈັດບ່ອນນັ່ງໃນການຮຽນ - ການສອນໄດ້ເໝາະສົມຈະຊ່ວຍໃຫ້ເດັກມີຄວາມສົນໃຈດີຂຶ້ນ.ຄູຕ້ອງຈັດໃຫ້ເດັກໄດ້ນັ່ງຢູ່ໃກ້ຊິດກັບຄູ. ການຈັດກິດຈະກຳອາດຈະຈັດຢູ່ໃນຫ້ອງ ຫຼື ນອກຫ້ອງທີ່ມີຮົ່ມເຢັນດີກໍໄດ້. ການຈັດນອກຫ້ອງກໍເປັນຜົນດີອັນໜຶ່ງ ເພາະເດັກຈະໄດ້ຮັບອາກາດສົດຊື່ນ, ແຕ່ສະຖານທີ່ດັ່ງກ່າວເປັນບ່ອນທີ່ຮົ່ມເຢັນຫຼີກເວັ້ນສິ່ງທີ່ລົບກວນ. ໃນການຈັດບ່ອນນັ່ງຄວນເອົາໃຈໃສ່ຈັດແນວໃດໃຫ້ເດັກສາມາດເຫັນຄູ ແລະ ຄູເອງກໍສະດວກໃນການສົນທະນາ, ເອົາວັດຖຸປະຈັກຕາໃຫ້ເດັກເບິ່ງ.

ການຈັດບ່ອນນັ່ງໃຫ້ເດັກອາດຈະໃຫ້ເດັກນັ່ງຕັ່ງ ຫຼື ນັ່ງຕາມພື້ນຫ້ອງທີ່ສະອາດກໍ່ໄດ້, ສຳລັບຄູອາດຈະນັ່ງຕັ່ງ ຫຼື ນັ່ງພື້ນຫ້ອງກໍໄດ້. ແຕ່ຕ້ອງເອົາໃຈໃສ່ເດັກໃຫ້ອຸປະກອນທີ່ໃຊ້ສອນຢູ່ໃນລະດັບສາຍຕາຂອງເດັກ ການຈັດບ່ອນນັ່ງອາດຈະຈັດໃນລັກສະນະຕໍ່ໄປດັ່ງນີ້:

- ຖ້າສົນທະນາກັບເດັກໂດຍບໍ່ໃຊ້ອຸປະກອນໃຫ້ເດັກສັງເກດຄູຄວນຈັດບ່ອນນັ່ງເປັນຮູບວົງມົນ
- ວົງມົນ ຫຼື ເຄິ່ງວົງມົນ.






ຮູບພາບ: ການຈັດກິດຈະກຳການຮຽນ-ການສອນເດັກທີ່ບໍ່ໃຊ້ອຸປະກອນປະກອບການສອນ

ຖ້າມີອຸປະກອນໃຫ້ເດັກເບິ່ງ ເພື່ອໃຫ້ເດັກໄດ້ ເຫັນສິ່ງທີ່ຄູເອົາມາສະແດງໄດ້ດີການຈັດບ່ອນນັ່ງຄວນຈັດດັ່ງນີ້:






ຮູບພາບ: ການຈັດກິດຈະກຳການຮຽນ-ການສອນເດັກທີ່ໃຊ້ອຸປະກອນປະກອບການສອນ

- ໃນການສອນກິດຈະກຳວົງມົນນີ້ຄູຜູ້ສອນຄວນເນັ້ນຄວາມຮູ້ພື້ນຖານທີ່ຈະສິ່ງໃຫ້ເດັກຄົບທຸກໆດ້ານແຕ່ຕ້ອງກຳນົດລະອຽດວ່າມື້ໃດຈະເນັ້ນໜັກຄວາມຮູ້ດ້ານໃດເປັນຕົ້ນຕໍ, ສ່ວນດ້ານອື່ນໆກໍ່ໃຫ້ປົ່ນອ້ອມ.

ຕົວຢ່າງ: ຄູອາດຈະຈັດການສອນແຕ່ລະມື້ດັ່ງນີ້

ມື້ທີ 1 ວັນຈັນ ຄູສອນພື້ນຖານຄະນິດສາດ

ມື້ທີ 2 ວັນຄານຄູອາດຈະສອນຄຳຄ່ອງ

ມື້ທີ 3 ວັນພຸດອາດຈະສອນເລົ່ານິທານ

ມື້ທີ 4 ວັນພະຫັດອາດຈະສອນອ່ານບັດຄຳ

ມື້ທີ 5 ວັນສຸກອາດຈະສອນຮ້ອງເພງ - ຟ້ອນ.

ຖ້າສອນວັນຈັນຄວາມຮູ້ພື້ນຖານຄະນິດສາດຄູຈະຕ້ອງເນັ້ນຄວາມຮູ້ພື້ນຖານດ້ານຄະນິດສາດເປັນສ່ວນຫຼາຍແຕ່ຄູສາມາດນຳໃຊ້ການສັງເກດ, ການສົນທະນາ, ເລົ່າເລື່ອງ ຫຼື ຮ້ອງເພງ ແລະ ແບບຫຼິ້ນຕ່າງໆແຊກເຂົ້າໃນການສອນເພື່ອໃຫ້ການຮຽນ - ການສອນມີບັນຍາກາດ, ອີກຢ່າງໜຶ່ງກໍເຮັດໃຫ້ເດັກບໍ່ເບື່ອໜ່າຍຕໍ່ການຮຽນ ແລະ ໄດ້ຮັບຄວາມຮູ້ໃນຫຼາຍໆດ້ານໃນເວລາດຽວກັນ, ເພາະການສອນເດັກແມ່ນການສອນແບບບູລະນາການ.

ຕົວຢ່າງ: ການສອນແບບບູລະນາການ




ຮູບພາບ: ການຈັດກິດຈະກຳການຮຽນ-ການສອນແບບບູລະນາການ

✷ **ຂໍ້ແນະນຳການຈັດກິຈະກຳໃນວົງມົນ**

1. ແຕ່ງບົດສອນທຸກຄັ້ງກ່ອນຂຶ້ນຫ້ອງສອນ.
2. ກະກຽມອຸປະກອນໂດຍສອດຄ່ອງກັບໜ່ວຍການສອນ ແລະ ກິດຈະກຳທີ່ຈະຈັດອຸປະກອນຈະຕ້ອງເປັນສິ່ງທີ່ມີໃນທ້ອງຖິ່ນພ້ອມທັງຫາໄດ້ງ່າຍ ແລະ ເໝາະກັບເດັກແຕ່ລະສໍ່າອາຍຸຂອງເດັກ.
3. ດຳເນີນການສອນໄປຕາມຂັ້ນຕອນທີ່ຕົນວາງໄວ້.
4. ໃຫ້ເດັກມີສ່ວນຮ່ວມໃນການປະຕິບັດກິດຈະກຳຢ່າງທົ່ວເຖິງ
5. ໃຊ້ຄຳຖາມເພື່ອກະຕຸ້ນໃຫ້ເກີດຄວາມຄົ້ນຄິດ, ໃຫ້ເດັກໄດ້ປະຕິບັດ, ໄດ້ທົດລອງ.
6. ຄູຕ້ອງແນະນຳຕິດຕາມ, ໃຫ້ການຊ່ວຍເຫຼືອ ແລະ ແກ້ໄຂບັນຫາຊ່ວຍເດັກ.

❖ **ກິດຈະກຳເກມການສຶກສາ**

ການຫຼິ້ນເກມການສຶກສາຈະຊ່ວຍສົ່ງເສີມການພັດທະນາການເຝິກໃຫ້ເດັກມີຄວາມຄົ້ນຄິດ ເຝິກການຈຳແນກຂອງສາຍຕາເຝິກໃຫ້ເດັກມີຄວາມຮັບຜິດຊອບ ແລະ ກ້າສະແດງອອກ.ເຝິກໃຫ້ເດັກຮູ້ຈັກຍອມຮັບຄວາມຄິດຄວາມເຫັນຂອງຄົນອື່ນ, ເຝິກໃຫ້ເດັກຮູ້ຈັກຍອມຮັບຄວາມຄິດເຫັນຂອງຄົນອື່ນ, ເຝິກໃຫ້ເດັກຮູ້ຄຸນຄ່າຂອງຕົວເລກຄວາມແຕກຕ່າງກັບສີ ຮູບຮ່າງໃຫ້ໄດ້ທົບທວນເນື້ອໃນບົດຮຽນໃນໜ່ວຍການສອນທີ່ໄດ້ຮຽນມາ.

ການຫຼິ້ນເກມການສຶກສາເປັນສິ່ງທີ່ເດັກຫຼິ້ນບໍ່ໄດ້ດົນ, ເບື່ອໄວ, ເພາະເກມແຕ່ລະປະເພດ ເດັກສາມາດຫຼິ້ນພາຍໃນເວລາສັ້ນໆ ພາຍຫຼັງທີ່ເຂົາຫຼິ້ນເປັນແລ້ວເຂົາກໍ່ເບື່ອ ແລະ ບໍ່ຢາກຫຼິ້ນອີກຕໍ່ໄປ.ດັ່ງນັ້ນຄູຄວນມີວິທີຈັດການຫຼິ້ນໃຫ້ໄດ້ຮັບປະໂຫຍດຢ່າງເຕັມສ່ວນ ແລະ ເດັກພ້ອມທີ່ຈະຫຼິ້ນດ້ວຍຄວາມເຕັມໃຈ.

✷ **ການຈັດເກມການສຶກສາມີຫຼາຍກໍລະນີ:**

ກ. ກໍລະນີທີ່ມີເກມຫຼາຍຊຸດ

ຂ. ກໍລະນີທີ່ມີເກມຊຸດດຽວ

ຄ. ກໍລະນີທີ່ບໍ່ມີເກມ.

ໃນທຸກກໍລະນີແມ່ນມີວິທີຈັດຕັ້ງຄ້າຍຄືກັນເຊັ່ນ: ກ່ອນອື່ນແມ່ນການຈັດເດັກນັ່ງເປັນຮູບເຄິ່ງວົງມົນ ເພື່ອອະທິບາຍວິທີຫຼິ້ນເກມແຕ່ລະຊຸດທີ່ຈະນໍາມາຫຼິ້ນວ່າມີເກມໃດ, ປະກອບດ້ວຍຫຍັງ? ສະແດງວິທີການຫຼິ້ນເກມການສຶກສານັ້ນໃຫ້ເດັກເບິ່ງ. ຈັດເດັກເປັນກຸ່ມ, ແຕ່ລະກຸ່ມມີເກມວາງໄວ້ 1 ຊຸດ, ໂດຍຈັດໃຫ້ກຸ່ມໜຶ່ງຫຼິ້ນເກມຊຸດໃໝ່ ສ່ວນກຸ່ມອື່ນນັ້ນໃຫ້ເດັກຫຼິ້ນເກມຊຸດທີ່ເຄີຍຫຼິ້ນມາແລ້ວ. ກໍານົດໃຫ້ເດັກຫຼິ້ນເກມທຸກຊຸດ ( ທັງຊຸດໃໝ່ ແລະ ຊຸດທີ່ເຄີຍຫຼິ້ນມາແລ້ວ ) ໂດຍການໝູນວຽນໄປຫຼິ້ນເກມຕາໂຕະທີ່ຄູຈັດວາງເກມໄວ້. ເມື່ອຫຼິ້ນເກມແຕ່ລະຊຸດແລ້ວແນະນໍານັກຮຽນເກັບມ້ຽນເກມໃຫ້ຮຽບຮ້ອຍ, ສາມາດຈັບເອົາອອກມາຫຼິ້ນໄດ້ໃນເມື່ອຕ້ອງການ.

**✶ ເນື້ອໃນກິດຈະກໍາເກມການສຶກສາ**

ການຈັດການຮຽນ-ການສອນກິດຈະກໍາເກມການສຶກສາປະກອບມີເນື້ອໃນດັ່ງນີ້:

ເກມທີ່ນໍາມາໃຫ້ເດັກຫຼິ້ນມີຄື: ເກມຕັດຕໍ່ຮູບ, ເກມຈັບຄູ່, ເກມລຽງລໍາດັບ, ເກມຈັດ ແລະ ແຍກໝວດໝູ່ຮູບພາບ, ເກມລອດໂຕ, ເກມໂດມິໂນ, ເກມພື້ນຖານການບວກ, ເກມຄວາມສໍາພັນລະຫວ່າງຮູບພາບກັບສັນຍາລັກ.

**✶ ຂໍ້ແນະນໍາການຈັດກິດຈະກໍາເກມການສຶກສາ**

1. ກະກຽມເກມການສຶກສາໃຫ້ຄົບຖ້ວນສໍາລັບໃຫ້ເດັກຫຼິ້ນ.
2. ຄູເຮັດໜ້າທີ່ເປັນພຽງຜູ້ແນະນໍາໃນຂະນະທີ່ເດັກຫຼິ້ນ ແລະ ຫາວິທີການບໍ່ໃຫ້ເດັກສົ່ງສຽງເກີນໄປ, ອະທິບາຍວິທີການຫຼິ້ນໃຫ້ເດັກໃນກໍລະນີທີ່ເດັກບໍ່ເຂົ້າໃຈ ແລະ ບໍ່ສາມາດຫຼິ້ນເກມນັ້ນໄດ້.
3. ຂະນະທີ່ເດັກຫຼິ້ນຄູຕ້ອງກວດເບິ່ງວ່າເດັກຫຼິ້ນເກມການສຶກສາແຕ່ລະຊຸດນັ້ນຖືກຕ້ອງບໍ່? ແລະ ຄວນແກ້ໄຂແນວໃດ, ຄູຄວນໃຫ້ກໍາລັງໃຈໂດຍສະເພາະເດັກທີ່ມີບັນຫາເມື່ອເດັກແກ້ໄຂຮຽບຮ້ອຍແລ້ວຄູຈຶ່ງໃຫ້ເດັກໄປຫຼິ້ນເກມອື່ນ.
4. ໃນການຫຼິ້ນເກມການສຶກສາແລ້ວທຸກຄັ້ງຄູຕ້ອງເຕືອນໃຫ້ເດັກເກັບມ້ຽນໄວ້ໃຫ້ເປັນທີ່ຮຽບຮ້ອຍກ່ອນທີ່ຈະໄປຫຼິ້ນເກມຊຸດໃໝ່ອີກ. ຕົວຢ່າງ ຮູບພາບ



ຮູບພາບ: ການຈັດກິດຈະກໍາໃນວົງມົນ ແລະ ເກມການສຶກສາ




ຮູບພາບ: ການຈັດກິດຈະກຳໃນວົງມົນ ແລະ ເກມການສຶກສາ

- **ແຕ່ງບົດສອນ ແລະ ເຝິກສອນຕົວຈິງ**

**ຕົວຢ່າງ ບົດສອນແບບຢ່າງກິດຈະກຳໃນວົງມົນ ແລະ ເກມການສຶກສາ**

## ບົດສອນ

**ໜ່ວຍ: ເຂົ້າ**

**ກິດຈະກຳວົງມົນ ແລະ ເກມການສຶກສາ**

ຫົວຂໍ້: ທັກສະການອ່ານ (ການອ່ານສະຫຼະ xິ, xີ, xຶ , xື ຫ້ອງກຽມປະຖົມ ເວລາ 30 – 35 ນາທີ )

**/. ຈຸດປະສົງລວມ:**

1. ໃຫ້ເດັກສາມາດເອີ້ນຊື່ເຂົ້າຊະນິດຕ່າງໆໃຫ້ຖືກຕ້ອງ.
   - ສາມາດຮ້ອງເພງປະກອບທ່າທາງນຳຄູໄດ້.
2. ໃຫ້ເດັກບອກວິທີການການເຮັດນາ ແລະ ການຈະເລີນເຕີບໂຕຂອງເຂົ້າ.
   - ສາມາດເລົ່າຄຳຄ່ອງນຳຄູໄດ້ບາງຕອນ.
3. ໃຫ້ເດັກບອກອາຊີບຂອງຄົນລາວສ່ວນຫຼາຍ.
   - ສາມາດອ່ານສະຫຼະ ແລະ ຂຽນພະຍັນຊະນະ ແລະ ສະຫຼະໄດ້
4. ໃຫ້ເດັກບອກອາຫານທີ່ເຮັດດ້ວຍເຂົ້າເປັນອາຫານຫຼັກຂອງຄົນລາວ.
   - ສາມາດແທນຄ່າຈຳນວນ 1 – 10ໄດ້.

- ສາມາດຂຽນຕົວເລກລາວ໑ - ໑໐ ແລະ ເລກສາກົນ 1 -10 ໄດ້
5. ໃຫ້ເດັກຮູ້ຄຸນປະໂຫຍດຂອງເຂົ້າ.
   - ສາມາດຈື່ເນື້ອໃນຂອງບົດເລື່ອງໄດ້ບາງຕອນ.
6. ເຝິກມາລະຍາດໃນການຮັບປະທານອາຫານ.
7. ເຝິກປະສາດສຳພັດລະຫ່ວາງມື ແລະ ຕາໃນການປັ້ນ, ແຕ້ມ, ຮ້ອຍ, ຈີກ, ຕິດ, ຕັດລະບາຍສີ, ສານ...
8. ເຝິກໃຫ້ເດັກມີຄວາມກ້າຫານ, ກ້າສະແດງອອກ.
9. ເຝິກໃຫ້ເດັກມີສາມັກຄີຮັກແພງໝູ່ຄູ່.
10. ໃຫ້ເດັກສາມາດເຄື່ອນໄຫວທຸກພາກສ່ວນຂອງຮ່າງກາຍ: ເຄື່ອນໄຫວຕາມຈັງຫວະບາດເຄາະ, ຕາມຈິນຕະນາການ, ຕາມຄຳສັ່ງ, ຕາມຂໍ້ຕົກລົງ, ຕາມການສະແດງບົດບາດສົມມຸດການເປັນຜູ້ນຳຜູ້ຕາມ.

**ແຍກພັດທະນາການ 5 ດ້ານ**

| **ດ້ານຮ່າງກາຍ** | **ດ້ານອາລົມ-ຈິດໃຈ** |
|---|---|
| - ເຝິກປະສາດສຳພັດລະຫ່ວາງມື ແລະ ຕາໃນການປັ້ນ, ແຕ້ມ, ຮ້ອຍ, ຈີກ, ຕິດ, ຕັດ, ລະບາຍສີ ສານ<br>- ສາມາດຮ້ອງເພງປະກອບທ່າທາງນຳຄູໄດ້.<br>- ໃຫ້ເດັກສາມາດເຄື່ອນໄຫວທຸກພາກສ່ວນຂອງຮ່າງກາຍ: ເຄື່ອນໄຫວຕາມຈັງຫວະບາດເຄາະ,ຕາມຈິນຕະນາການ, ຕາມຄຳສັ່ງ, ຕາມຂໍ້ຕົກລົງ,ຕາມການສະແດງບົດບາດສົມມຸດການເປັນຜູ້ນຳຜູ້ຕາມ. | - ສາມາດຮ້ອງເພງປະກອບທ່າທາງນຳຄູໄດ້.<br>- ເຝິກໃຫ້ເດັກມີສາມັກຄີຮັກແພງໝູ່ຄູ່.<br>- ໃຫ້ເດັກສາມາດເຄື່ອນໄຫວທຸກພາກສ່ວນຂອງຮ່າງກາຍ:ເຄື່ອນໄຫວຕາມຈັງຫວະບາດເຄາະ,ຕາມຈິນຕະນາການ,ຕາມຄຳສັ່ງ,ຕາມຂໍ້ຕົກລົງ,ຕາມການສະແດງບົດບາດສົມມຸດການເປັນຜູ້ນຳຜູ້ຕາມ. |
| **ດ້ານສັງຄົມ**<br>- ເຝິກໃຫ້ເດັກມີຄວາມກ້າຫານ, ກ້າສະແດງອອກ.<br>- ເຝິກໃຫ້ເດັກມີສາມັກຄີຮັກແພງໝູ່ຄູ່.<br>- ເຝິກມາລະຍາດໃນການຮັບປະທານອາຫານ.<br>-ໃຫ້ເດັກສາມາດເຄື່ອນໄຫວທຸກພາກສ່ວນຂອງຮ່າງກາຍ:ເຄື່ອນໄຫວຕາມຈັງຫວະບາດເຄາະ,ຕາມຈິນຕະນາການ,ຕາມຄຳສັ່ງ,ຕາມຂໍ້ຕົກລົງ,ຕາມການສະແດງບົດບາດສົມມຸດການເປັນຜູ້ນຳຜູ້ຕາມ. | **ດ້ານສະຕິປັນຍາ**<br>- ໃຫ້ເດັກສາມາດເອີ້ນຊື່ເຂົ້າຊະນິດຕ່າງໆໃຫ້ຖືກຕ້ອງ.<br>- ສາມາດຮ້ອງເພງປະກອບທ່າທາງນຳຄູໄດ້.<br>- ໃຫ້ເດັກບອກວິທີການການເຮັດນາ ແລະ ການຈະເລີນເຕີບໂຕຂອງເຂົ້າ.<br>- ສາມາດເລົ່າຄຳຄ່ອງນຳຄູໄດ້ບາງຕອນ.<br>- ໃຫ້ເດັກບອກອາຊີບຂອງຄົນລາວສ່ວນຫຼາຍ.<br>- ສາມາດສາມາດອ່ານສະຫຼະ ແລະ ຂຽນພະຍັນຊະນະ ແລະ ສະຫຼະໄດ້<br>- ໃຫ້ເດັກບອກອາຫານທີ່ເຮັດດ້ວຍເຂົ້າເປັນອາຫານຂອງຄົນລາວ.<br>- ສາມາດຈຳແທນຄ່າຈຳນວນ 1 – 10ໄດ້.<br>-ສາມາດຂຽນຕົວເລກລາວ໑ - ໑໐ ແລະ ເລກສາກົນ 1 -10 ໄດ້<br>- ໃຫ້ເດັກຮູ້ຄຸນປະໂຫຍດຂອງເຂົ້າ.<br>- ສາມາດຈື່ເນື້ອໃນຂອງບົດເລື່ອງໄດ້ບາງຕອນ. |
| **ດ້ານພາສາ**<br>- ໃຫ້ເດັກສາມາດເອີ້ນຊື່ເຂົ້າຊະນິດຕ່າງໆໃຫ້ຖືກຕ້ອງ. | |

| |
|---|
| - ສາມາດຮ້ອງເພງປະກອບທ່າທາງນຳຄູໄດ້. |
| - ໃຫ້ເດັກບອກວິທີການການເຮັດນາ ແລະ ການຈະເລີນເຕີບໂຕຂອງເຂົ້າ. |
| - ສາມາດເລົ່າຄຳຄ່ອງນຳຄູໄດ້ບາງຕອນ. |
| - ໃຫ້ເດັກບອກອາຊີບຂອງຄົນລາວສ່ວນຫຼາຍ. |
| - ສາມາດສາມາດອ່ານສະຫຼະ ແລະ ຂຽນພະຍັນຊະນະ ແລະ ສະຫຼະໄດ້ |
| - ໃຫ້ເດັກບອກວ່າເຂົ້າເປັນອາຫານຫຼັກຂອງຄົນລາວ. |
| - ສາມາດຈຳແນກສີຕ່າງໆໄດ້ 1 – 3 ສີ. |
| - ໃຫ້ເດັກບອກຄຸນປະໂຫຍດຂອງເຂົ້າ. |
| - ສາມາດຈື່ເນື້ອໃນຂອງບົດເລື່ອງໄດ້ບາງຕອນ. |

## ບົດສອນ

1) **ຈຸດປະສົງ ໃຫ້ເດັກສາມາດ**

- ໃຫ້ເດັກບອກອາຊີບຂອງຄົນລາວສ່ວນຫຼາຍ
- ສາມາດອ່ານສະຫຼະນຳຄູໄດ້
- ສາມາດຫຼິ້ນເກມນຳຄູໄດ້

**2) ເນື້ອໃນ**

- ການເຮັດນາ, ເຮັດໄຮ່
- ອ່ານສະຫຼະ xິ, xີ, xຶ ,xື ແລະ ສະຫຼະປະສົມກັບພະຍັນຊະນະເຊັ່ນ: ກ + xິ, = ກິ
ກ + xີ, = ກີ, ກ + xຶ = ກຶ, ກ + xື = ກື
- ເກມຕັດຕໍ່ຮູບພາບ( ຄົນກ່ຽວເຂົ້າ), ເກມຈັບຄູ່ຮູບພາບທີ່ຄືກັນ

**3) ກິດຈະກຳ**

**ກ ຂັ້ນນຳ**

- ຄູຈັດເດັກເຂົ້າສູ່ລະບຽບ
- ກວດກາຈຳນວນຄົນ
- ພາເດັກຮ້ອງເພງ(ເຂົ້າເອີຍເຂົ້າ)
- ທວນຄືນບົດຮຽນເກົ່າ

**ຂ. ຂັ້ນດຳເນີນການສອນ**

- ຄູຍົກຮູບພາບໃຫ້ເດັກສັງເກດເບິ່ງພ້ອມໃຫ້ເດັກເວົ້າຕາມຮູບພາບທີ່ຄູຍົກຂຶ້ນມາໃຫ້ຖືກຕ້ອງ.
- ຄູເວົ້າໃຫ້ເດັກຟັງວ່າອາຊີບສ່ວນຫຼາຍແມ່ນການເຮັດນາ, ເຮັດໄຮ່
- ຄູຍົກສະຫຼະ xິ, xີ, xຶ ,xື ໃຫ້ເດັກເບິ່ງແລ້ວອ່ານໃຫ້ເດັກຟັງ,ນຳໄປສຽບໃສ່ຖົງບັດຄຳສັບ.
- ຄູພາເດັກອ່ານສະຫຼະ 1 - 3 ເທື່ອ
- ຄູໃຫ້ເດັກອອກອ່ານ 1 - 5 ຄົນ
- ຄູໃຫ້ເດັກທີ່ມີຄວາມສາມາດອອກມາເລືອກສະຫຼະຕາມຄູບອກພ້ອມອ່ານໃຫ້ໝູ່ຟັງ.

- ໃຫ້ເດັກຜັດປ່ຽນກັນອອກມາເລືອກ ແລະ ອ່ານ
- ຄູ ຂຽນສະຫຼະປະສົມກັບພະຍັນຊະນະໃສ່ກະດານພ້ອມທັງອ່ານໃຫ້ເດັກຟັງ.
- ໃຫ້ເດັກອ່ານຕາມຄູ 1 - 2 ເທື່ອ
- ໃຫ້ເດັກຈັບຄູ່ກັນອອກມາເລືອກສະຫຼະ ແລະ ພະຍັນຊະນະຕາມທີ່ຄູອ່ານ
- ໃຫ້ເດັກຜັດປ່ຽນກັນອອກມາເປັນຄູ່
- ຄູຍ້ອງຍໍຊົມເຊີຍ
- ຄູສະເໜີເກມທີ່ຈະພາຫຼິ້ນ(ເກມຕັດຕໍ່ຮູບພາບ,ເກມຈັບຄູ່ຮູບພາບທີ່ຄືນກັນ)
- ແບ່ງນັກຮຽນອອກເປັນ 2 ກຸ່ມຄື: ກຸ່ມ1ຫຼິ້ນເກມຕັດຕໍ່ຮູບພາບ, ກຸ່ມ2:ຫຼິ້ນເກມຈັບຄູ່ຮູບພາບທີ່ຄືນກັນ.
- ສາທິດວິທີຫຼິ້ນເກມແຕ່ລະຊຸດໃຫ້ນັກຮຽນເບິ່ງ 1 – 2 ເທື່ອ.
- ໃຫ້ເດັກອາສາສະມັກອອກມາຫຼິ້ນເກມໃຫ້ໝູ່ເບິ່ງກຸ່ມລະ 1 ຄົນ.
- ຍ້ອງຍໍຊົມເຊີຍ
- ຄູຢາຍອຸປະກອນໃຫ້ແຕ່ລະກຸ່ມຫຼິ້ນ ໂດຍໃຫ້ຜັດປ່ຽນກັນ.
- ຄູຕິດຕາມຊ່ວຍເຫຼືອເດັກແຕ່ລະກຸ່ມ
- ຄູໃຫ້ເດັກປະຕິບັດຕວົຈິງ 1 - 2 ເທື່ອ.

**ຄ ຂັ້ນສະຫຼຸບ**

- ຄູຍົກຮູບພາບໃຫ້ເດັກສັງເກດເບິ່ງພ້ອມໃຫ້ເດັກເວົ້າຕາມຮູບພາບທີ່ຄູຍົກຂຶ້ນມາໃຫ້ຖືກຕ້ອງ.
- ຍ້ອງຍໍຊົມເຊີຍ
- ຄູພາເດັກອ່ານສະຫຼະ xິ, xີ, **xຶ, xື** 1 - 2 ເທື່ອ.

**+ ຂັ້ນວັດ ແລະ ປະເມີນ**

- ໃຫ້ເດັກຜູ້ທີ່ມີຄວາມສາມາດສະມັກອອກມາອ່ານໃຫ້ໝູ່ຟັງ ແລະ ເບິ່ງ **1 - 3** ຄົນ
- ຄູຍ້ອງຍໍຊົມເຊີຍ.

**+ ຂັ້ນຕັກເຕືອນ/ມອບວຽກບ້ານ**

- ເມືອເຮືອນຕ້ອງເປັນເດັກຄຳຮູ້ຂອງພໍ່ແມ່, ບໍ່ໄປຫຼິ້ນທີ່ວທິ້ມ,ໃຫ້ພວກຫຼານ ອ່ານ ສະຫຼະ xິ, xີ , xຶ , xື ແລະ ສະຫຼະປະສົມກັບພະຍັນຊະນະຕ່າງໆ

+ ຂໍອະນຸຍາດພັກຜ່ອນ

**1) ອຸປະກອນ**

- ບົດເພງ, ຮູບພາບຊາວນາ, ຊາວໄຮ່, ບັດສະຫຼະ, ຖົງບັດຄຳ, ສໍຂາວ, ກະດານດຳ
- ເກມຕັດຕໍ່ຮູບພາບ 1 ຊຸດ, ເກມຈັບຄູ່ຮູບພາບທີ່ຄືນກັນ 1ຊຸດ

**5) ການຕິດຕາມປະເມີນຜົນ**

- ສັງເກດການການສົນທະນາຂອງເດັກ, ສັງເກດການອ່ານຂອງເດັກ
- ສັງເກດການຫຼິ້ນເກມຂອງເດັກແຕ່ລະກຸ່ມ

- **ສຶກສາ ວິເຄາະກ່ຽວກັບການສອນກິດຈະກຳວິງມົນ ແລະ ເກມການສຶກສາ**

**ແຜນການສອນໃນ 1 ອາທິດ**

**ມື້ທີ 1**

**ກິດຈັກຳວົງມົນ**

**ຫົວຂໍ້** ການຮ້ອງເພງຊາດ ແລະ ການອ່ານອອກສຽງ ( ພ,ຟ )

1. **ຈຸດປະສົງ**: ນັກຮຽນສາມາດ
   - ຮ້ອງເພງຊາດ ແລະ ສະແດງຄວາມເຄົາລົບທຸງຊາດລາວໄດ້.
   - ການອ່ານອອກສຽງພະຍັນຊະນະ **( ພ,ຟ )**
2. **ເນື້ອໃນ**
   - ການຮ້ອງເພງ   ຊາດລາວ
   - ການອ່ານອອກສຽງພະຍັນຊະນະຕົວ **( ພ,ຟ )**
3. **ສື່ການຮຽນ-ການສອນ**
   - ຮູບພາບການເຄົາລົບທຸງຊາດລາວ
   - ເພງຊາດລາວ
   - ບັດຮູບພາບ **(**ພູ, ໄຟ **)**
   - ບັດພະຍັນຊະນະ **(** ພ,ຟ **)**
4. **ກິດຈະກຳການຮຽນ-ການສອນ**

**+ ຂັ້ນນຳເຂົ້າສູ່ບົດຮຽນ**

- ຄູຈັດເດັກເຂົ້າລະບຽບນັ່ງເປັນຮູບວົງມົນ
- ກວດກາຈຳນວນນັກຮຽນ
- ສະເໜີຊື່ **(**ຖ້າເປັນຄູໃໝ່**)**
- ສະເໜີແຂກເຂົ້າຮ່ວມ **(**ຖ້າມີ**)**
- ຄູພານັກຮຽນສ້າງບັນຍາກາດດ້ວຍການຮ້ອງເພງ  ຮັກທ່ານຜູ້ນຳ

**ທວນຄືນບົດຮຽນເກົ່າ**

- ຄູຖາມເດັກວ່າໃນຊົ່ວໂມງກອນພວກນ້ອງຮຽນກ່ຽວກັບຫັຍງ? ກິດຈະກຳຫັຍງ? ໜ່ວຍຫັຍງ?
- ນັກຮຽນຕອບ

**ລ້ຽວເຂົ້າສູ່ບົດຮຽນໃໝ່**

- ຄູຍົກຮູບພາບທຸງ ແລະ ຄົນຢືນເຄົາລົບທຸງຂຶ້ນໃຫ້ເດັກສັງເກດເບິ່ງແລ້ວຖາມເດັກວ່າ ນີ້ແມ່ນຫັຍງ, ມີຮູບພາບຫັຍງແດ່? ພວກເຂົາກຳລັງເຮັດຫັຍງ?
- ເດັກຕອບ ແລະ ຍ້ອງຍໍຊົມເຊີຍ

**+ ຂັ້ນດຳເນີນການສອນ**

- ຄູສະເໜີກິດຈະກຳໃຫ້ເດັກຮູ້ມື້ນີ້ຄູຊິພາພວກຫຼານມາຮຽນກ່ຽວກັບກິດຈະກຳວົງມົນ ການຮ້ອງເພງຊາດ ແລະ ການອ່ານອອກສຽງ **(** ພ,ຟ **)**
- ຄູສົນທະນາ ແລະ ແນະນຳກ່ຽວກັບການເຄົາລົບທຸງຊາດລາວໃຫ້ຖືກຕ້ອງ
- ຄູແນະນຳນັກຮຽນກ່ອນຈະເຄົາລົບທຸງຊາດນັກຮຽນທຸກຄົນຕ້ອງນຸ່ງເຄື່ອງເປັນລະບຽບຮຽບຮ້ອຍ ເອົາເສື້ອເຂົ້າໃນສົ້ນ ຫຼື ໂສ້ງ, ຫົວຜົມໃຫ້ຈົບງາມ ແລະ ຖ້ານັກຮຽນຜູ້ໃດໃສ່ໝວກໃຫ້ປົດອອກກ່ອນ.

- ການເຄົາລົບທຸງຕ້ອງລຽນແຖວໃຫ້ຊື່ ແລະ ສາຍຕາແນມເບິ່ງທຸງຊາດ ຈາກນັ້ນທຸກຄົນຕ້ອງຮ້ອງເພງຊາດໄປພ້ອງກັບການຊັກທຸງຂຶ້ນເສົາ.
- ໃນເວລາເຄົາລົບທຸງຫ້າມເດັດຂາດບໍ່ໃຫ້ບິນແຊວ ແລະ ບໍ່ໃຫ້ເໜັງຕີງ.
- ຄູສະເໜີບົດເພງ: ຊາດລາວ
- ຄູຮ້ອງເພງຊາດລາວພ້ອມທັງເຮັດທ່າທາງການເຄົາລົບທຸງຊາດລາວໃຫ້ນັກຮຽນຟັງ ແລະ ສັງເກດເບິ່ງ 1-2 ເທື່ອ.
- ຄູພານັກຮຽນຮ້ອງເພງຊາດໄປເທື່ອລະວັກລະຕອນ ແລະ ເຮັດທ່າທາງເຄົາລົບທຸງໄປພ້ອມ
- ຄູພານັກຮຽນອ່ານອອກສຽງ ພະຍັນຊະນະຕົວ ( ພ,ຟ ).
- ຄູຍົກບັດຮູບພາບພູຂຶ້ນໃຫ້ນັກຮຽນເບິ່ງ ຈາກນັ້ນຄູກໍ່ພານັກຮຽນເວົ້າກ່ຽວກັບຄໍາວ່າ( ພູ )
- ຄູຕັ້ງຄໍາຖາມ ຖາມນັກຮຽນວ່າ ( ພູ ) ແມ່ນອອກສຽງພະຍັນຊະນະຕົວຫັຍງ?
- ຄູຍົກບັດຮູບພາບພູຂຶ້ນໃຫ້ນັກຮຽນເບິ່ງ ຈາກນັ້ນຄູກໍ່ພານັກຮຽນເວົ້າກ່ຽວກັບຄໍາວ່າ(ໄຟ)
- ຄູຕັ້ງຄໍາຖາມ ຖາມນັກຮຽນວ່າ ( ໄຟ ) ແມ່ນອອກສຽງພະຍັນຊະນະຕົວຫັຍງ?
- ຄູພານັກຮຽນທັງໝົດໃນຫ້ອງອ່ານຟ້ອງສຽງພະຍັນຊະນະຕົວ ( ພ,ຟ ) 2-3 ເທື່ອ
- ຄູເວົ້າຄໍາວ່າ: ໝູ. ຊ້າງ, ໄກ່, ແລະ ເປັດ ຈາກນັ້ນຄູກໍຖາມນັກຮຽນວ່າ ຄໍາທີ່ຄູເວົ້ານີ້ແມ່ນອອກສຽງພະຍັນຊະນະຕົວ ( ພ,ຟ ) ຫຼື ບໍ?.
- ຄູເວົ້າຄືນອີກ ຄໍາວ່າ: ພູ ແມ່ນສຽງຂອງພະຍັນຊະນະຕົວ (ພ) ແລະ ຄໍາວ່າ: ໄຟ ແມ່ນສຽງພະຍັຊະນະ(ຟ) ໝູ, ຊ້າງ, ໄກ່ ແລະ ເປັດ ບໍ່ແມ່ນສຽງພະຍັນຊະນະຕົວ ( ພ, ຟ ).

**+ ຂັ້ນສະຫຼຸບບົດຮຽນ**

- ຄູສະຫຼຸບບົດຮຽນຄືນໂດຍຫຍໍ້ກ່ຽວກັບການຮ້ອງເພງຊາດ, ປືນການເຄົາລົບທຸງຊາດ ແລະ ການອ່ານອອກສຽງ ( ພ,ຟ ). ຈາກນັ້ນ ຄູຕັ້ງຄໍາຖາມ ຖາມນັກຮຽນວ່າ ມື້ນີ້ພວກນ້ອງຮຽນຮ້ອງເພງຫັຍງ?
- ການເຄົາລົບທຸງຊາດລາວເຮົາຄວນເຮັດຄືແນວໃດ?
- ອ່ານອອກສຽງພະຍັນຊະນະຕົວຫັຍງແດ່?
- ນັກຮຽນຕອບພ້ອມກັນໝົດຫ້ອງ

**+ ສຶກສາອົບຮົມນັກຮຽນ**

- ພວກນ້ອງນັກຮຽນທຸກຄົນຕ້ອງພາກັນຕັ້ງໃຈຮຽນໜັງສື ບໍ່ບິນແຊວໃນເວລາຄູສອນ ເອົາໃຈໃສ່ໃນການຮ້ອງເພງຊາດ ແລະ ຕ້ອງຮູ້ຈັກການເຄົາລົບນັບຖືທຸງຊາດລາວຂອງພວກເຮົາ.

**5. ການວັດ ແລະ ປະເມີນຜົນ**

- ສັງເກດການຮ້ອງເພງຊາດລາວ ແລະ ການສະແດງຄວາມເຄົາລົບທຸງຊາດລາວຂອງນັກຮຽນແຕ່ລະຄົນ.
- ສັງເກດການອ່ານອອກສຽງພະຍັນຊະນະ ( ພ, ຟ ) ຂອງນັກຮຽນແຕ່ລະຄົນ.

**ມື້ທີ 2**

**ກິດຈັດກຳວົງມົນ ແລະ ເກມການສຶກສາ**

**ຫົວຂໍ້: ສີ ແລະ ຮູບຮ່າງລັກສະນະຂອງທຸງຊາດລາວ, ການນັບແຕ່ 1-5 ເທື່ອລະຮູບຕາມລຳດັບ ແລະ ການຫຼິ້ນເກມລຽງລຳດັບແຕ່ນ້ອຍຫາໃຫ່ຍຮູບທຸງຊາດລາວ.**

1. **ຈຸດປະສົງ: ນັກຮຽນສາມາດ**
   - ບອກສີ ແລະ ຮູບຮ່າງລັກສະນະຂອງທຸງຊາດລາວ
   - ນັບຮູບທຸງຊາດລາວ 1-15 ເທື່ອລະຮູບຕາມລຳດັບ
   - ຫຼິ້ນເກມລຽງລຳດັບແຕ່ນ້ອຍຫາໃຫ່ຍຮູບທຸງຊາດລາວ.
2. **ເນື້ອໃນ**
   - ສີ ແລະ ຮູບຮ່າງລັກສະນະຂອງທຸງຊາດລາວ
   - ການນັບຮູບທຸງຊາດລາວ 1-15 ເທື່ອລະຮູບຕາມລຳດັບ
   - ຫຼິ້ນເກມລຽງລຳດັບແຕ່ນ້ອຍຫາໃຫ່ຍຮູບທຸງຊາດລາວ.
3. **ສື່ການຮຽນ-ການສອນ**
   - ຮູບທຸງຊາດລາວ
   - ບັດເລກແຕ່ 1-15
   - ເກມລຽງລຳດັບແຕ່ນ້ອຍຫາໃຫ່ຍຮູບທຸງຊາດລາວ.
4. **ກິດຈະກຳການຮຽນ-ການສອນ**

**+ ຂັ້ນນຳເຂົ້າສູ່ບົດຮຽນ**

- ຄູຈັດເດັກເຂົ້າລະບຽບນັ່ງເປັນຮູບວົງມົນ
- ກວດກາຈຳນວນນັກຮຽນ
- ສະເໜີຊື່ (ຖ້າເປັນຄູໃໝ່)
- ສະເໜີແຂກເຂົ້າຮ່ວມ (ຖ້າມີ)
- ຄູພານັກຮຽນສ້າງບັນຍາກາດດ້ວຍການຮ້ອງເພງ ຊາດລາວ

**ທວນຄືນບົດຮຽນເກົ່າ**

- ຄູຖາມນັກຮຽນຄືນວ່າ ມື້ວານນີ້ ພວກນ້ອງຮຽນກ່ຽວກັບຫັຍງແດ່?
- ນັກຮຽນຕອບ

**+ ຂັ້ນດຳເນີນການສອນ**

- ຄູສະເໜີກິດຈະກຳໃຫ້ເດັກຮູ້ມື້ນີ້ຄູຊິພາພວກຫຼານມາຮຽນກ່ຽວກັບກິດຈະກຳວົງມົນກ່ຽວກັບສີ ແລະ ຮູບຮ່າງລັກສະນະຂອງທຸງຊາດລາວ, ການນັບແຕ່ 1-5 ເທື່ອລະຮູບຕາມລຳດັບ ແລະ ການຫຼິ້ນເກມລຽງລຳດັບແຕ່ນ້ອຍຫາໃຫ່ຍຮູບທຸງຊາດລາວ.
- ຄູສົນທະນາ ແລະ ແນະນຳກ່ຽວກັບຊື່ສີ ແລະ ຮູບຮ່າງລັກສະນະຂອງທຸງຊາດລາວໂດຍຄູເອົາຮູບພາບ ຫຼື ທຸງຊາດລາວຕົວຈິງໃຫ້ນັກຮຽນເບິ່ງແລ້ວຖາມນັກຮຽນດັ່ງນີ້:
- ທຸງຊາດລາວປະກອບມີທັງໝົດຈັກສີ? ຄືສີໃດແດ່? ແລະ ມີຮູບຮ່າງລັກສະນະຄືແນວໃດ?
- ຄູໃຫ້ນັກຮຽນອາສາສະໝັກຕອບເທື່ອລະຄົນ ແລະ ຍ້ອງຍໍຊົມເຊີຍ.
- ຄູເອົາທຸງຊາດຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີລັກສະນະເປັນຮູບ 4 ຫຼ່ຽມຍາວ ປະກອບມີ 3 ສີ ຄື ສີແດງ 2 ຂ້າງ, ສີຟ້າ (ສີຄາມ) 2 ຂ້າງ ແລະ ມີວົງເດືອນສີຂາວຢູ່ກາງຂອງຂ້າງສີຄາມ ຂຶ້ນໃຫ້ນັກຮຽນເບິ່ງແລ້ວຄູກໍເວົ້າສູ່ນັກຮຽນຟັງວ່າ ສີແດງສອງຂ້າງໝາຍເຖິງເລືອດນັກຮົບປະຕິບັດ ແລະ

ປະຊາຊົນລາວບັນດາເຜົ່າທີ່ຕໍ່ສູ້ເສຍສະຫຼະ ເພື່ອຄວາມເປັນເອກະລາດຂອງຊາດ, ສີຟ້າ (ສີຄາມ) ຢູ່ທາງກາງໝາຍເຖິງຄວາມອຸດົມສົມບູນດ້ານຊັບພະຍາກອນທຳມະຊາດ ແລະ ວົງເດືອນສີຂາວຢູ່ທາງກາງໝາຍເຖິງນ້ຳໃຈບໍລິສຸດຜຸດຜ່ອງ, ຮັກຫອມສັນຕິພາບ ແລະ ສິດເສລີພາບ.

- ຄູພານັກຮຽນນັບເລກບັດແຕ່ 1-15 ເທື່ອລະບັດຕາມລຳດັບ.
- ຄູຍົກຮູບພາບທຸງຊາດລາວຂຶ້ນໃຫ້ນັກຮຽນເບິ່ງ ຈາກນັ້ນ ຄູກໍ່ອະທິບາຍ ແລະ ສາທິດວິທີການນັບໃຫ້ນັກຮຽນສັງເກດ 1-2 ເທື່ອ.
- ຄູພານັກຮຽນນັບບັດຮູບພາບທຸງຊາດ ຫຼື ບັດເລກໄປເທື່ອລະບັດຕາມລຳດັບແຕ່ 1-15
- ຄູໃຫ້ນັກຮຽນອາສາສະໝັກອອກມານັບຮູບ ຫຼື ບັດເລກຕາມລຳດັບແຕ່ 1-15
- ຍ້ອງຍໍຊົມເຊີຍ
- ຄູພານັກຮຽນຫຼິ້ນເກມລຽງລຳດັບແຕ່ນ້ອຍຫາໃຫຍ່ຮູບທຸງຊາດລາວດັ່ງນີ້:
- ຄູແບ່ງນັກຮຽນອອກເປັນ 2 ກຸ່ມ ຫຼິ້ນເກມແຂ່ງຂັນກັນ
- ຄູຢາຍເກມໃຫ້ແຕ່ລະກຸ່ມຫຼິ້ນຕົວຈິງ ແລະ ຄູກໍຕິດຕາມການຫຼິ້ນຂອງນັກຮຽນແຕ່ລະກຸ່ມ

**+ ຂັ້ນສະຫຼຸບບົດຮຽນ**

- ຄູສະເວົ້າຄືນ ກ່ຽວກັບສີ ແລະ ຮູບຮ່າງລັກສະນະຂອງທຸງຊາດລາວ, ການນັບແຕ່ 1-5 ເທື່ອລະຮູບຕາມລຳດັບ ແລະ ການຫຼິ້ນເກມລຽງລຳດັບແຕ່ນ້ອຍຫາໃຫຍ່ຮູບທຸງຊາດລາວ. ຈາກນັ້ນ ຄູຕັ້ງຄຳຖາມຖາມນັກຮຽນວ່າ ມື້ນີ້ພວກນ້ອງຫຼິ້ນເກມຫັຍງ?
- ຄູເອົາຮູບພາບຫຍັງມາໃຫ້ພວກຫຼານເບິ່ງ?
- ພວກຫຼານນັບບັດເລກແຕ່ໃສຮອດໃສ?
- ນັກຮຽນຕອບພ້ອມກັນໝົດຫ້ອງ

**+ ສຶກສາອົບຮົມນັກຮຽນ**

- ໃນເວລາຮຽນພວກຫຼານຕ້ອງຕັ້ງໃຈຮຽນໜັງສື, ບໍ່ບົນແຊວໃນເວລາຄູສອນ ເປັນເດັກຄຳຮູ້ຕ້ອງຮູ້ຮັກຊາດລາວຂອງຕົນເອງ, ເມື່ອຮຽນແລ້ວຕ້ອງເກັບມ້ຽນອຸປະກອນການຮຽນໄວ້ໃຫ້ຖືກບ່ອນເປັນລະບຽບຮຽບຮ້ອຍ, ເວລາຢູ່ເຮືອນຕ້ອງຊ່ວຍວຽກພໍ່ແມ່ ແລະ ໝັ່ນຮຽນໜັງສືຈິ່ງຈະຮຽນເກັ່ງ.

**5. ການວັດ ແລະ ປະເມີນຜົນ**

- ສັງເກດການສີ ແລະ ຮູບຮ່າງລັກສະນະຂອງທຸງຊາດລາວຂອງນັກຮຽນແຕ່ລະຄົນ
- ສັງເກດການນັບຮູບທຸງຊາດລາວແຕ່1-5 ເທື່ອລະຮູບຕາມລຳດັບຂອງນັກຮຽນແຕ່ລະຄົນ
- ສັງເກດການຫຼິ້ນເກມລຽງລຳດັບແຕ່ນ້ອຍຫາໃຫຍ່ຮູບທຸງຊາດລາວຂອງນັກຮຽນ.

## ມື້ທີ 3

## ກິດຈະກຳວົງມົນ

**ຫົວຂໍ້: ເລົ່າຄຳຄ່ອງປະເທດລາວ ແລະ ອ່ານອອກສຽງສະຫຼະ** ( ເົຍ, ເxຍ )

1. **ຈຸດປະສົງ: ໃຫ້ນັກຮຽນສາມາດ:**
   - ເລົ່າຄຳຄ່ອງປະກອບທ່າທາງໄດ້
   - ການອ່ານອອກສຽງ ສະຫຼະ ( ເົຍ, **ເxຍ** )
2. **ເນື້ອໃນ**
   - ການເລົ່າຄຳຄ່ອງປະເທດລາວ
   - ການອ່ານອອກສຽງ ສະຫຼະສຽງສັ້ນ ແລະ ສຽງຍາວ ( ເົຍ, ເxຍ )
3. **ສື່ການຮຽນ-ການສອນ**
   - ບົດຄຳຄ່ອງ ປະເທດລາວ
   - ບັດສະຫຼະ ( ເົຍ, ເxຍ )
   - ແຜນທີ່ປະເທດລາວ
4. **ກິດຈະກຳການຮຽນ-ການສອນ**

- **ຂັ້ນນຳເຂົ້າສູ່ບົດຮຽນ**
  - ຈັດເດັກເຂົ້າລະບຽບນັ່ງເປັນຮູບວົງມົນ
  - ກວດກາຈຳນວນນັກຮຽນ
  - ຄູພາເດັກສ້າງບັນຍາກາດດ້ວຍການຮ້ອງເພງ ຊາດລາວ
- ທວນຄືນບົດຮຽນເກົ່າ
  - ໃນຊົ່ວໂມງກ່ອນຄູພາພວກຫຼານຮຽນກ່ຽວກັບຫຍັງ? ກິດຈະກຳຫຍັງແດ່?
  - ຄູໃຫ້ເດັກຕອບ
- **ຂັ້ນດຳເນີນການສອນ**
  - ຄູສະເໜີກິດຈະກຳໃຫ້ນັກຮຽນຮູ້ ມື້ນີ້ຄູຊິພາພວກນ້ອງມາຮຽນກ່ຽວກັບການເລົ່າຄຳຄ່ອງ ປະເທດລາວ ແລະ ການອ່ານສະຫຼະ( ເົຍ, ເxຍ ).
  - ຄູສົນທະນາກ່ຽວກັບປະເທດລາວ
  - ຄູນຳເອົາແຜນທີ່ຂອງປະເທດລາວມາໃຫ້ນັກຮຽນສັງເກດເບິ່ງ ແລ້ວຄູກໍ່ບອກນັກຮຽນວ່າໃນປະເທດລາວຂອງພວກເຮົາປະກອບມີແຕ່ລະແຂວງດັ່ງນີ້: ແຂວງຜົ້ງສາລີ, ແຂວງຫຼວງນ້ຳທາ, ແຂວງອຸດົມໄຊ, ແຂວງຫົວພັນ, ແຂວງຊຽງຂວາງ, ແຂວງໄຊຍະບໍລີ, ແຂວງບໍແກ້ວ, ແຂວງຫຼວງພະບາງ, ແຂວງວຽງຈັນ, ແຂວງບໍລິຄຳໄຊ, ແຂວງຄຳມ່ວນ, ແຂວງສະຫັວນນະເຂດ, ແຂວງນະຄອນຫຼວງວຽງຈັນ, ແຂວງຈຳປາສັກ ແຂວງສາລະວັນ ແລະ ແຂວງອັດຕະປື.
  - ຄູພານັກຮຽນອ່ານອອກສຽງສະຫະ ( ເົຍ, ເxຍ )
  - ຄູຍົກບັກສະຫຼະ ( ເົຍ, ເxຍ ) ຂຶ້ນເທື່ອລະໃບ ແລ້ວຄູກໍອ່ານອອກສຽງສະຫຼະເທື່ອລະຕົວໃຫ້ນັກຮຽນຟັງ ປະມານ 1-2 ເທື່ອ.
  - ຄູພານັກຮຽນອ່ານອອກສຽງສະຫຼະ ( ເົຍ, ເxຍ ) ໄປເທື່ອລະບັດ

- ຄູໃຫ້ນັກຮຽນອາສາສະໝັກອອກມາອ່ານອອກສຽງສະຫຼະ ( ເxັຍ, ເxຍ )
- ຄູຍ້ອງຍໍຊົມເຊີຍ.
- ຄູຍົກບັດສະຫຼະ ເxັຍ ຂຶ້ນແລ້ວຖາມນັກຮຽນວ່າ ເວລາອ່ານອອກສຽງນີ້ ອ່ານອອກສຽງສັ້ນ ຫຼື ສຽງຍາວ (ສຽງສັ້ນ)
- ຄູຍົກບັດສະຫຼະ ເxຍ ຂຶ້ນແລ້ວຖາມນັກຮຽນວ່າ ເວລາອ່ານອອກສຽງນີ້ ອ່ານອອກສຽງສັ້ນ ຫຼື ສຽງຍາວ (ສຽງຍາວ)
- ຄູຍົກບັດສະຫຼະ ( ເxັຍ, ເxຍ ) ຂຶ້ນລົງສະຫຼັບກັນແລ້ວໃຫ້ນັກຮຽນອ່ານອອກສຽງຕາມບັດທີ່ຄູຍົກຂຶ້ນ.
- ຄູພານັກຮຽນເລົ່າຄຳຄ່ອງ ປະເທດລາວ ປະກອບທ່າທາງ
- ຄູເລົ່າຄຳຄ່ອງ ປະເທດລາວ ພ້ອມເຮັດທ່າທາງປະກອບໃຫ້ນັກຮຽນຟັງ ແລະສັງເກດໄປພ້ອມ 1-2 ເທື່ອ.
- ຄູພານັກຮຽນເລົ່າຄຳຄ່ອງເທື່ອລະວັກລະຕອນພ້ອມທັງພານັກຮຽນເຮັດທ່າທາງປະກອບ
- ຄູແບ່ງນັກຮຽນອອກເປັນ 2 ກຸ່ມ ຫຼິ້ນເກມແຂ່ງຂັນກັນເລົ່າຄຳຄ່ອງ
- ຄູໃຫ້ກຸ່ມໜຶ່ງເລົ່າກ່ອນ ສ່ວນອີກກຸ່ມໜຶ່ແມ່ນເຮັດທ່າທາງປະກອບ ຈາກນັ້ນກໍຜັນປ່ຽນກຸ່ມກັນເລົ່າຄຳຄ່ອງ ແລະ ເຮັດທ່າທາງປະກອບ
- ຄູຊົມເຊີຍ
- ຄູຕິດຕາມ ແລະ ຊ່ວຍເຫຼືອ ນັກຮຽນບາງຄົນທີ່ເລົ່າຄຳຄ່ອງ ແລະ ເຮັດທ່າທາງປະກອບບໍ່ທັນໄດ້ດີ.

- **ຂັ້ນສະຫຼຸບ**
  - ມື້ນີ້ຄູພາພວກນ້ອງເລົ່າຄຳຄ່ອງຫຍັງ?
  - ອ່ານອອກສຽງສະຫຼະຕົວຫຍັງ?
  - ຄູພານັກຮຽນເລົ່າຄຳຄ່ອງ ແລະ ອ່ານອອກສຽງສະຫຼະຄືນ?
- **ສຶກສາອົບຮົມນັກຮຽນ**
  - ນັກນຽນທຸກຄົນໃນເວລາອ່ານອອກສຽງສະຫຼະຕ້ອງອ່ານອອກສຽງໃຫ້ຊັດເຈນ ແລະ ຈະແຈ້ງ ການອ່ານຕ້ອງອ່ານຄ່ອຍໆ ບໍ່ໃຫ້ຮ້ອງສຽງດັງແຮງ ແລະ ການເລົ່າຄຳຄ່ອງກໍ່ຄືກັນຕ້ອງເລົ່າໃຫ້ຖືກວັກຖືກຕອນ.
  - ຄູໃຫ້ນັກຮຽນພັກຜ່ອນ

5. **ການວັດ ແລະ ປະເມີນຜົນ**

- ສັງເກດການເລົ່າຄຳຄ່ອງປະກອບທ່າທາງຂອງນັກຮຽນແຕ່ລະຄົນ.
- ສັງເກດການອ່ານອອກສຽງສະຫຼະ ( ເxັຍ, ເxຍ ) ຂອງນັກຮຽນແຕ່ລະຄົນ.

# ມື້ທີ 4

## ກິດຈະກໍາວົງມົນ ແລະ ເກມການສຶກສາ

**ຫົວຂໍ້: ສົນທະນາກ່ຽວກັບຕົວອັກສອນລາວ, ຕົວເລກລາວ ແລະ ຕົວອາລັບ**

1. **ຈຸດປະສົງ: ໃຫ້ນັກຮຽນສາມາດ:**
   - ບອກຮູບຮ່າງລັກສະນະຂອງຕົວອັກສອນລາວ ແລະ ຕົວເລກລາວໄດ້
   - ບອກຊື່ຕົວເລກລາວ ໑໔, ໑໕ ແລະ ເລກອາລັບ 14, 15ໄດ້
   - ຫຼິ້ນເກມຈັບໝວດໝູ່ຮູບພາບກັບສັນຍາລັກໄດ້
2. **ເນື້ອໃນ**
   - ການບອກຮູບຮ່າງລັກສະນະຂອງຕົວອັກສອນລາວ ແລະ ຕົວເລກລາວ
   - ບອກຊື່ຕົວເລກລາວ ໑໔, ໑໕ ແລະ ເລກອາລັບ 14, 15
   - ຫຼິ້ນເກມຈັບໝວດໝູ່ຮູບພາບກັບສັນຍາລັກ
3. **ສື່ການຮຽນ-ການສອນ**
   - ບັດຕົວອັກສອນລາວ
   - ບັດຕົວເລກລາວ ໑໔, ໑໕ ແລະ ເລກອາລັບ 14, 15ໄດ້
   - ເກມຈັບໝວດໝູ່ຮູບພາບກັບສັນຍາລັກ
4. **ກິດຈະກໍາການຮຽນ-ການສອນ**

- **ຂັ້ນນໍາເຂົ້າສູ່ບົດຮຽນ**
  - ຈັດເດັກເຂົ້າລະບຽບນັ່ງເປັນຮູບວົງມົນ
  - ກວດກາຈໍານວນນັກຮຽນໃນຫ້ອງ
  - ຄູພາເດັກສ້າງບັນຍາກາດດ້ວຍການຮ້ອງເພງ ຮັກທ່ານຜູ້ນໍາ
- ທວນຄືນບົດຮຽນເກົ່າ
  - ໃນຊົ່ວໂມງກ່ອນຄູພາພວກຫຼານຮຽນກ່ຽວກັບຫຍັງ? ກິດຈະກໍາຫຍັງແດ່?
  - ຄູໃຫ້ເດັກຕອບ
- **ຂັ້ນດໍາເນີນການສອນ**
  - ຄູສະເໜີກິດຈະກໍາໃຫ້ນັກຮຽນຮູ້ ມື້ນີ້ຄູຊິພາພວກນ້ອງມາຮຽນກ່ຽວກັບຕົວອັກສອນລາວຕົວເລກລາວ ແລະ ຕົວເລກອາຫຼັບ
  - ຄູສົນທະນາກ່ຽວກັບຕົວອັກສອນລາວຕົວເລກລາວ ແລະ ຕົວເລກອາຫຼັບ ຂຶ້ນໃຫ້ນັກຮຽນສັງເກດເບິ່ງເທື່ອລະຢ່າງ ຈາກນັ້ນຄູກໍ່ສົນທະນາກັບນັກຮຽນໂດຍຕັ້ງຄໍາຖາມ ຖາມນັກຮຽນໄປເທື່ອລະຄໍາຖາມລຸ່ມນີ້:

1. ຕົວອັກສອນລາວມີຮູບຮ່າງລັກສະນະຄືແນວໃດ
2. ຕົວເລກລາວມີຮູບຮ່າງລັກສະນະຄືແນວໃດ
3. ຕົວເລກອາຫຼັບມີຮູບຮ່າງລັກສະນະຄືແນວໃດ
4. ຄູເວົ້າໃຫ້ນັກຮຽນຟັງຕື່ມກ່ຽວກັບຮູບຮ່າງລັກສະນະຂອງຕົວອັກສອນ, ຕົວເລກລາວ ແລະ ຕົວເລກອາລັບ.

- ຄູຍົກຕົວເລກລາວຂຶ້ນໃຫ້ນັກຮຽນເບິ່ງແລ້ວຖາມນັກຮຽນວ່ານີ້ແມ່ນຕົວເລກຫຍັງ?

- ຄູຍົກຕົວເລກອາລັບຂຶ້ນໃຫ້ນັກຮຽນເບິ່ງແລ້ວຖາມນັກຮຽນວ່ານີ້ແມ່ນຕົວເລກຫຍັງ?
- ຄູໃຫ້ນັກຮຽນອາສາສະໝັກອອກມາຈັບເອົາບັດເລກແລ້ວບອກຊື່ຕົວເລກທີ່ຕົນເອງຈັບ
- ຄູຍ້ອງຍໍຊົມເຊີຍນັກຮຽນ
- ຄູອະທິບາຍສາທິດວິທີຫຼິ້ນເກມຈັດໝວດໝູ່ຮູບພາບກັບສັນຍາລັກໃຫ້ນັກຮຽນສັງເກດເບິ່ງ 1 ເທື່ອ
- ຄູແບ່ງນັກຮຽນອອກເປັນ 2 ກຸ່ມ ຫຼິ້ນເກມຈັດໝວດໝູ່ຮູບພາບກັບສັນຍາລັກແຂ່ງຂັນກັນ
- ຄູປາຍເກມໃຫ້ແຕ່ລະກຸ່ມຫຼິ້ນຕົວຈິງ ແລະ ຄູກໍຕິດຕາມການຫຼິ້ນຂອງນັກຮຽນແຕ່ລະກຸ່ມ

- **ຂັ້ນສະຫຼຸບ**
  - ມື້ນີ້ຄູພາພວກຫຼານໄດ້ຮຽນກ່ຽວກັບຫຍັງ? ຄູເອົາຮູບພາບຫຍັງມາໃຫ້ພວກຫຼານເບິ່ງແດ່?
  - ພວກຫຼານໄດ້ຫຼິ້ນເກມຫຍັງແດ່?
  - ຄູພານັກຮຽນເວົ້າຄືນອີກຮູບຮ່າງລັກສະນະຂອງຕົວອັກສອນລາວ, ຕົວເລກລາວແລະຕົວເລກອາລັບ.
- **ສຶກສາອົບຮົມນັກຮຽນ**
  - ນັກຮຽນທຸກຄົນໃນເວລາໜັງສືບໍ່ໃຫ້ປົນແຊວ, ບໍ່ໃຫ້ຍາດເຄື່ອງຫຼິ້ນໝູ່, ຕ້ອງເປັນຄົນຄຳຮູ້ ແລະ ບໍ່ໃຫ້ຂາດໂຮງຮຽນ ເວລາກັບເມືອບ້ານຕ້ອງຟັງຄວາມພໍ່ແມ່ ແລະ ຊ່ວຍວຽກພໍ່ແມ່
  - ຄູໃຫ້ນັກຮຽນພັກຜ່ອນ

5. **ການວັດ ແລະ ປະເມີນຜົນ**
   - ສັງເກດການບອກຮູບຮ່າງລັກສະນະຂອງຕົວອັກສອນລາວ ແລະ ຕົວເລກລາວຂອງນັກຮຽນແຕ່ລະຄົນ.
   - ສັງເກດການບອກຊື່ຕົວເລກລາວ ໑໔, ໑໕ ແລະ ເລກອາລັບ 14, 15 ຂອງນັກຮຽນ
   - ສັງເກດການຫຼິ້ນເກມຈັດໝວດໝູ່ຮູບພາບກັບສັນຍາລັກຂອງນັກຮຽນ.

## ມື້ທີ 5

## ກິດຈະກຳວົງມົນ

**ຫົວຂໍ້: ເລົ່າເລື່ອງປະເທດລາວ, ທວນຄືນການອ່ານອອກສຽງພະຍັນຊະນະ ພ, ຟ ແລະ ສະຫຼະ**

(ເົຍ, **ເຍ**)

1. **ຈຸດປະສົງ: ໃຫ້ນັກຮຽນສາມາດ:**
   - ຟັງ ແລະ ຕອບຄຳຖາມຕາມບົດເລື່ອງປະເທດລາວໄດ້
   - ບອກຊື່ເລື່ອງ ແລະ ຈື່ຕົວລະຄອນຂອງເລື່ອງໄດ້
   - ອ່ານອອກສຽງພະຍັນຊະນະ ພ, ຟ ແລະ ອ່ານອອກສຽງສະຫຼະ(ເົຍ, **ເຍ**)ໄດ້
2. **ເນື້ອໃນ**
   - ຟັງ ແລະ ຕອບຄຳຖາມຕາມບົດເລື່ອງປະເທດລາວ
   - ບອກຊື່ເລື່ອງ ແລະ ຈື່ຕົວລະຄອນຂອງເລື່ອງ
   - ອ່ານອອກສຽງພະຍັນຊະນະ ພ, ຟ ແລະ ອ່ານອອກສຽງສະຫຼະ( ເົຍ, **ເຍ** )
3. **ສື່ການຮຽນ-ການສອນ**
   - ບົດເລື່ອງປະເທດລາວ

- ບັດພະຍັນຊະນະ ພ, ຟ ແລະ ບັດສະຫຼະ ( ເ◌ັຍ, ເ◌ຍ )

4. **ກິດຈະກໍາການຮຽນ-ການສອນ**

- **ຂັ້ນນໍາເຂົ້າສູ່ບົດຮຽນ**
  - ຈັດເດັກເຂົ້າລະບຽບນັ່ງເປັນຮູບວົງມົນ
  - ກວດກາຈໍານວນນັກຮຽນໃນຫ້ອງ
  - ຄູພາເດັກສ້າງບັນຍາກາດດ້ວຍການຮ້ອງເພງ ຊາດລາວ

  + ທວນຄືນບົດຮຽນເກົ່າ
  - ໃນຊົ່ວໂມງກ່ອນຄູພາພວກຫຼານຮຽນກ່ຽວກັບຫຍັງ? ກິດຈະກໍາຫຍັງແດ່?
  - ຄູໃຫ້ເດັກຕອບ
- **ຂັ້ນດໍາເນີນການສອນ**
  - ຄູສະເໜີກິດຈະກໍາໃຫ້ນັກຮຽນຮູ້ ມື້ນີ້ຄູຊິພາພວກຫຼານມາຮຽນກ່ຽວກັບເລົ່າເລື່ອງປະເທດລາວ, ທວນຄືນການອ່ານອອກສຽງພະຍັນຊະນະ ພ, ຟ ແລະ ສະຫຼະ(ເ◌ັຍ, ເ◌ຍ).
  - ຄູເລົ່າເລື່ອງປະເທດລາວໃຫ້ນັກຮຽນຟັງ 1-2 ເທື່ອ ຈາກນັ້ນຄູກໍ່ສົນທະນາກ່ຽວກັບເນື້ອໃນຂອງບົດເລື່ອງໂດຍຕັ້ງຄໍາຖາມ ຖາມນັກຮຽນໄປເທື່ອລະຄໍາຖາມລຸ່ມນີ້:

    + ບົດເລື່ອງຊື່ວ່າແນວໃດ?

    + ຕົວລະຄອນໃນບົດເລື່ອງມີໃຜແດ່?

    + ເນື້ອໃນຂອງບົດເລື່ອງເວົ້າເຖິງຫຍັງ?
  - ຄູໃຫ້ນັກຮຽນອາສາສະໝັກອອກມາເລົ່າເລື່ອງຄືນ ( ຍ້ອງຍໍຊົມເຊີຍ )
  - ຄູພານັກຮຽນອ່ານອອກສຽງຄືນພະຍັນຊະນະຕົວ ພ, ຟ ແລະ ອ່ານອອກສຽງສະຫຼະ ເ◌ັຍ, ເ◌ຍ.

    ( ໃຫ້ປະຕິບັດຄືມື້ທີ 1 )
- **ຂັ້ນສະຫຼຸບ**
  - ມື້ນີ້ຄູພາພວກຫຼານເລົ່າເລື່ອງຫຍັງໃຫ້ພວກຫຼານຟັງ?
  - ຄູ ແລະ ນັກຮຽນເລົ່າເລື່ອງຄືນໂດຍຫຍໍ້
- **ສຶກສາອົບຮົມນັກຮຽນ**
  - ເວລາຄູເລົ່າເລື່ອງພວກນ້ອງຕ້ອງຕັ້ງໃຈຟັງ, ບໍ່ໃຫ້ຢອກກັນໃນເວລາຮຽນໜັງສື, ເມື່ອກັບເມືອເຮືອນຕ້ອງແອບອ່ານໜັງສື ແລະ ແອບຂຽນຕົວເລກຈຶ່ງຈະເປັນເດັກຄໍາຮູ້.
  - ຄູໃຫ້ນັກຮຽນພັກຜ່ອນ

5. **ການວັດ ແລະ ປະເມີນຜົນ**
   - ສັງເກດການຟັງ ແລະ ການຕອບຄໍາຖາມຂອງນັກຮຽນ
   - ສັງເກດການບອກຊື່ເລື່ອງຂອງນັກຮຽນ
   - ສັງເກດການອ່ານອອກສຽງພະຍັນຊະນະ ພ, ຟ ແລະ ອ່ານອອກສຽງສະຫຼະ (ເ◌ັຍ, ເ◌ຍ)ຂອງນັກຮຽນ.

**ກິດຈະກໍາ 1**

1. ແບ່ງນັກຮຽນອອກເປັນກຸ່ມແຕ່ລະກຸ່ມແຕ່ງບົດສອນກະກຽມອຸປະກອນໂດຍເລືອກໜ່ວຍການສອນໃດໜຶ່ງມາແຕ່ງ ແລະ ເຝິກສອນຕົວຈິງຕາມຫົວຂໍ້ດັ່ງນີ້:

- ກຸ່ມສອນເລົ່າເລື່ອງ
- ກຸ່ມສອນຮ້ອງເພງ
- ກຸ່ມສອນຄຳຄ່ອງ
- ກຸ່ມສອນອ່ານບັດຄຳ(ຜ່ານຮູບພາບ ແລະ ສັນຍາລັກ)
- ກຸ່ມສອນພື້ນຖານຄະນິດສາດ

**ກິດຈະກຳ 2**

1. ກິດຈະກຳວົງມົນໝາຍເຖິງຫັຍງ?
2. ກິດຈະກຳວົງມົນມີຄວາມສຳຄັນຄືແນວໃດ?
3. ວິທີຈັດກິດຈະກຳໃນວົງມົນຈັດຄືແນວໃດ?
4. ຄູມີບົດບາດຫຍັງແດ່ໃນການຈັດກິດຈະກຳໃນວົງມົນ?

## 3. ວິທີຈັດກິດຈະກຳການຮຽນ-ການສອນສຳລັບກິດຈະກຳສິລະປະສ້າງສັນ

### 3.1 ຄວາມໝາຍ-ຄວາມສຳຄັນຂອງກິດຈະກຳສິລະປະສ້າງສັນ

ຄຳວ່າສິລະປະເຊິ່ງມາຈາກພາສາລາຕິນໝາຍເຖິງຄວາມຊຳນິຊຳນານ, ຄວາມສາມາດພິເສດ ຫຼື ມີສີມືຢ່າງຍອດຢ້ຽມ. ແຕ່ໃນປະຈຸບັນສະພາບແວດລ້ອມໃນສັງຄົມໄດ້ພັດທະນາ ແລະ ປຽ່ນແປງໄປມີວັດທະນາທຳ ແລະ ວິທະຍາການໃໝ່ໆ ຢ່າງຫຼວງຫຼາຍ, ເຮັດໃຫ້ຄວາມໝາຍຂອງສິລະປະໄດ້ຂະຫຍາຍອອກຢ່າງກ້ວາງຂວາງຫຼາຍຂຶ້ນກວ່າເກົ່າ. ສິລະປະບໍ່ແມ່ນເປັນພຽງແຕ່ວຽກງານສີມືແຕ່ຢ່າງດຽວ. ສິລະປະໄດ້ກາຍເປັນເຄື່ອງມື ຫຼື ສື່ປະເພດໜຶ່ງຂອງການສະແດງອາລົມຄວາມຮູ້ສຶກນຶກຄິດຕະຫຼອດຈົນເປັນສື່ກາງໃນການຮຽນຮູ້ ການສະແດງອອກ ແລະ ໃນຂະນະດຽວກັນກໍ່ເປັນການຜ່ອນຄາຍຄວາມຕຶງຄຽດໄປພ້ອມກັນດ້ວຍ.

ສິລະປະຂອງເດັກຄືການສະແດງອອກຢ່າງອິດສະຫຼະເສລີ ເພື່ອພັດທະນາຄວາມຄິດລິເລີ່ມ ສ້າງສັນ ແລະ ຈິນຕະນາການກາສົມສ້າງສິລະປະນິໄສ ແລະ ພື້ນຖານລົດນິຍົມທີ່ດີໃຫ້ແກ່ເດັກບໍ່ແມ່ນເພື່ອລາງວັນ ຄະແນນ ຫຼື ຜົນຕອບແທນທາງວັດຖຸອັນໃດອັນໜຶ່ງ.

ຈາກຜົນຂອງການສຶກສາຂອງນັກສຶກສາສາດຫຼາຍທ່ານວິໄຈພົບວ່າ ເດັກຈະມີຄວາມຄິດລິເລີ່ມສ້າງສັນຕັ້ງແຕ່ອາຍຸຫາກໍ່ເກີດ ແລະ ພັດທະນາການເລື້ອຍໆມາແຕ່ຈະລົດລົງໃນຊ່ວງອາຍຸປະມານ 10 ປີ. ສະນັ້ນການຈັດກິດຈະກຳກ່ຽວກັບສິລະປະໃຫ້ເດັກ ໂດຍສະເພາະເດັກລະດັບກ່ອນປະຖົມສຶກສານັ້ນ ເພື່ອສະໜັບສະໜູນສົ່ງເສີມຈຸດໝາຍຂອງການສຶກສາລະດັບນີ້, ອີກປະການໜຶ່ງແມ່ນເພື່ອເນັ້ນໃຫ້ເຫັນຊັດເຈນກ່ຽວກັບການສົ່ງເສີມຄວາມຄິດລິເລີ່ມສ້າງສັນຂອງເດັກບໍ່ແມ່ນເນັ້ນໃນເລື່ອງຜົນງານຂອງພວກເຂົາ. ດ້ວຍເຫດນີ້ຈຶ່ງໃຊ້ຄຳວ່າ " ກິດຈະກຳສ້າງສັນ " ແທນຄຳວ່າ " ກິດຈະກຳສິລະປະສຶກສາ " ສຳລັບເດັກກ່ອນປະຖົມສຶກສາ.

**✶ ຄວາມສຳຄັນຂອງກິດຈະກຳສິລະປະສ້າງສັນ**

ກິດຈະກຳສ້າງສັນ ຫຼື ສິລະປະສ້າງສັນແມ່ນກິດຈະກຳໜຶ່ງທີ່ສົ່ງເສີມໃຫ້ເດັກໄດ້ສະແດງອອກເຖິງອິດສະຫຼະພາບ, ຄວາມຄິດສ້າງສັນແລະຈິນຕະນາການ, ການຈັດກິດຈະກຳກ່ຽວກັບສິລະປະໃຫ້ເດັກຫ້ອງກຽມປະຖົມແມ່ນເພື່ອສົ່ງເສີມຄວາມຄິດລິເລີ່ມສ້າງສັນຂອງເດັກ ບໍ່ແມ່ນເນັ້ນໃນເລື່ອງຜົນງານທີ່ຈົບງາມຂອງເດັກ.ເຊັ່ນ: ການແຕ້ມຮູບ,ການລະບາຍສີ,ການພັບ, ການຈີກ - ຕັດ - ຕິດ ການຫຼີ້ນກັບສີ ແລະ ອື່ນໆ ນອກຈາກສິ່ງທີ່ກ່າວມານັ້ນຄູກໍ່ຄວນເນັ້ນການເຝິກແອບທາງດ້ານການຂຽນຕ່າງໆໃຫ້ແກ່ເດັກອີກດ້ວຍ.

### 3.2 ຈຸດປະສົງຂອງກິດຈະກຳສິລະປະສ້າງສັນ

ຈຸດປະສົງຂອງກິດຈະກຳສິລະປະສ້າງສັນສຳລັບເດັກກ່ອນໄວຮຽນ ແມ່ນເພື່ອສົ່ງເສີມໃຫ້ເດັກມີພັດທະນາການຄົບທຸກດ້ານເຊັ່ນ: ດ້ານຮ່າງກາຍ, ດ້ານອາລົມ, ດ້ານສັງຄົມ,ສະຕິປັນຍາແລະພາສາ ດັ່ງມີລາຍລະອຽດລຸ່ມນີ້:

**ກ. ດ້ານຮ່າງກາຍ**

- ເພື່ອພັດທະນາກ້າມຊີ້ນມື
- ພັດທະນາປະສາດສຳພັນລະຫວ່າງມືກັບຕາ

**ຂ. ດ້ານອາລົມ - ຈິດໃຈ**

- ເພື່ອໃຫ້ເດັກມີຄວາມເບີກບານມ່ວນຊື່ນ,ມີອາລົມແຈ່ມໃສ ແລະ ມັກຄວາມງາມ.
- ເພື່ອສົ່ງເສີມໃຫ້ເດັກມີຄວາມອົດທົນ ແລະ ມີຄວາມຮັບຜິດຊອບ.
- ເພື່ອສົ່ງເສີມໃຫ້ເດັກມີຄວາມຊື່ນຊົມໃນສິ່ງທີ່ຈົບງາມ ແລະ ຮູ້ຄຸນຄ່າໃນສິລະປະ

**ຄ. ດ້ານສັງຄົມ**

- ເພື່ອສົ່ງເສີມໃຫ້ເດັກມີການປັບຕົວໃນການປະຕິບັດກິດຈະກຳຮ່ວມກັບໝູ່ຄູ່.
- ເພື່ອສົ່ງເສີມການສະແດງອອກ ແລະ ມີຄວາມເຊື່ອໝັ້ນຕົນເອງ
- ເພື່ອເຝິກໃຫ້ເດັກຮູ້ຈັກໃຊ້ເວລາຫວ່າງໃຫ້ເປັນປະໂຫຍດ.

**ຂ. ດ້ານສະຕິປັນຍາ**

- ເພື່ອພັດທະນາແນວຄິດສ້າງສັນ ແລະ ຈິນຕະນາການຂອງເດັກ
- ເພື່ອເຝິກການສັງເກດ,ການຄົ້ນຄິດ ແລະ ແກ້ໄຂບັນຫາ.
- ເພື່ອສົ່ງເສີມໃຫ້ເດັກມີຄວາມສົນໃຈ ແລະ ເຂົ້າໃຈທຳມະຊາດອ້ອມຂ້າງຕະຫຼອດເຖິງຄວາມຮູ້ພື້ນຖານທາງດ້ານຄະນິດສາດວິທະຍາສາດດ້ວນຈິນຕະນາການ ແລະ ຄວາມຄິດສ້າງສັນ.

**ງ. ດ້ານພາສາ**

- ເພື່ອພັດທະນາພາສາໃຫ້ມີຄວາມຄ່ອງແຄວ.
- ສາມາດອະທິບາຍຜົນງານຂອງຕົນເອງໄດ້.

**3.3 ເນື້ອໃນຂອງກິດຈະກຳສິລະປະສ້າງສັນ**

ເດັກອະນຸບານເປັນເດັກຢູ່ໃນໄວທີ່ສົມບູນໄປດ້ວຍອິດສະລະເສລີພາບ, ມີຄວາມລິເລີ່ມສ້າງສັນ ດັ່ງນັ້ນການຈັດກິດຈະກຳສິລະປະສ້າງສັນຈຶ່ງຄວນມີຫຼາຍປະເພດດ້ວຍກັນ.

**ກ. ການແຕ້ມຮູບ ແລະ ລະບາຍສີ**

ຢູ່ໃນການແຕ້ມຮູບຄວນໃຫ້ເດັກໄດ້ມີໂອກາດແຕ້ມເປັນເລື່ອງເປັນລາວຕາມຈິນຕະນາການການແຕ້ມອາດຈະໃຫ້ເດັກແຕ້ມດ້ວຍສີທຽນ, ເພາະສີທຽນເໝາະກັບເດັກທຸກລະດັບສໍ່າອາຍຸ ໂດຍສະເພາະຢ່າງຍິ່ງແມ່ນເດັກຢູ່ລ້ຽງເດັກ ເຊິ່ງກ້າມຊີ້ນມືຍັງບໍ່ທັນແຂງແຮງພໍທີ່ຈະຈັບສໍນ້ອຍໄດ້ ໃນການໃຊ້ຄວນແນະນຳໃຫ້ເດັກພະຍາຍາມຂົ່ມສີ ເພື່ອໃຫ້ສີອອກມາຈະແຈ້ງ ແລະ ຊັດເຈນດີ.

**+ ແຕ້ມດ້ວຍສໍສີ**

ສໍສີສາມາດແຕ້ມຮູບໄດ້ເໝືອນກັບສໍ ຫຼື ສີທຽນ ອາດຈະໃຊ້ສໍສີດັ່ງກ່າວທາຮູບພາບທີ່ແຕ້ມດ້ວຍສໍດຳກໍໄດ້.

**+ ການແຕ້ມຮູບພາບດ້ວຍຟອງນໍ້າ**

ຟອງນ້ຳຄວນມີຂະໜາດພໍເໝາະກັບມືເດັກ ໂດຍອາດຈະໃຫ້ເດັກຈຸ່ມຟອງນ້ຳໃນພາຊະນະທີ່ໃສ່ສີແລ້ວລະລາຍລົງໃນເຈ້ຍ ຫຼື ຈະໃຊ້ຟອຍລະບາຍສີຂອງເຈ້ຍດ້ານໜຶ່ງແລ້ວຈິດເອົາດ້ານໜຶ່ງວາງທັບໄປເປັນແບບ ຫຼື ວິທີອື່ນກໍໄດ້.

**+ ການແຕ້ມດ້ວຍເຊືອກ**

ເຊືອກຄວນມີຂະໜາດຍາວປະມານ 35 ຊມ ໃຫ້ເດັກໃຊ້ເຊືອກຈຸ່ມສີສ່ວນໜຶ່ງແລ້ວວາງລົງເທິງເຈ້ຍໃນທິດທາງເພື່ອສ້າງລວດລາຍ.

**+ ການແຕ້ມຮູບດ້ວຍນິ້ວມື**

ເດັກມັກເຮັດກິດຈະກຳນີ້ຫຼາຍ ເຂົາໄດ້ສະແດງຄວາມຮູ້ສຶກອອກມາເປັນຮູບດ້ວຍການເຄື່ອນໄຫວອະໄວຍະວະຕ່າງໆເຊັ່ນ+ມື, ນິ້ວມື, ທ່ອນແຂນ, ເດັກຈະໄດ້ຫຼິ້ນ, ໄດ້ທົດລອງດ້ວຍວິທີການຕ່າງໆສົ່ງເສີມການໃຊ້ຄວາມຄິດສ້າງສັນ ແລະ ຈິນຕະນາການ.

**+ ອຸປະກອນໃຊ້ໃນການແຕ້ມຮູບ ແລະ ລະບາຍສີ**

- ຟອຍທາສີ, ການໃຊ້ສີ ( ສີນ້ຳ, ສີທຳມະຊາດ, ສີຝຸ່ນທີ່ປະສົມນ້ຳ)
- ຈານສຳລັບໃສ່ສີ: ສີນ້ຳ, ສີທຳມະຊາດ, ສີຝຸ່ນທີ່ປະສົມນ້ຳ ຕ້ອງໃຫ້ມີບ່ອນສຳລັບວາງສີ ເຊັ່ນ: ຖ້ວຍ, ຈານໂປະໝາກພ້າວ, ກະຕ່າຢາງນ້ອຍ.
- ເຈ້ຍສຳລັບໃຫ້ເດັກແຕ້ມ: ຄວນມີເຈ້ຍສຳລັບໄວ້ແຕ້ມເພື່ອໃຫ້ເດັກມີໂອກາດໄດ້ແຕ້ມຮູບຂະໜາດນ້ອຍ ແລະ ໃຫຍ່. ແຕ່ຖ້າໂຮງຮຽນບໍ່ມີເງື່ອນໄຂ ກໍ່ອາດຈະໃຊ້ເຈ້ຍຫໍ່ຂອງຂ້ວນທີ່ໃຊ້ແລ້ວ, ເຈ້ຍເຟືອງທີ່ໃຊ້ແລ້ວໜ້າໜຶ່ງມານຳມາໃຫ້ເດັກແຕ້ມກໍ່ໄດ້.

**ຂ. ການຫຼິ້ນສີ**

ອາດຈະແບ່ງອອກເປັນ 2 ປະເພດ

- ປະເພດສີແຫ່ງໄດ້ແກ່ ສີທຽນ, ສີໄມ້, ຖ່ານ.
- ການລະບາຍສີ ໄດ້ແກ່ສີນ້ຳ, ສີຝຸ່ນປະສົມນ້ຳ, ສີທຳມະຊາດ.

**ຄ. ການປັ້ນ**

ການປັ້ນເປັນກິດຈະກຳທີ່ຊ່ວຍເຝິກກ້າມຊີ້ນມືຂອງເດັກໄດ້ດີ, ຊ່ວຍສົ່ງເສີມຈິນຕະນາການຂອງເດັກເຊັ່ນ:

- ການປັ້ນດ້ວຍດິນນ້ຳມັນ: ຄວນເປັນດິນທີ່ປາສະຈາກສານພິດ, ການເກັບຮັກສາແມ່ນປັ້ນເຂົ້າກັນໃສ່ຖົງຢາງໄວ້.
- ການປັ້ນດິນໜຽວ: ເປັນອຸປະກອນທີ່ຫາໄດ້ໃນທຳມະຊາດໃນຊົນນະບົດ, ດິນໜຽວສາມາດປັ້ນໄດ້ຫຼາຍຢ່າງ ແລະ ຍັງເປັນການປະຢັດ,ສາມາດປັ້ນໄດ້ຫຼາຍເທື່ອ. ການເກັບຮັກສາຄວນໃຊ້ຜ້າຊຸບນ້ຳປົກຄຸມໄວ້ໃນພາຊະນະໃຫ້ແຈບເຊັ່ນ: ເກັບໃນໄຫ ຫຼື ໃສ່ຖົງຢາງ.
- ການປັ້ນດ້ວຍແປ້ງ: ຄູຈັດຫາແປ້ງເຊັ່ນ ແປ້ງເຂົ້າຈ້າວ 2 ສ່ວນ, ແປ້ງເຂົ້າໜຽວ 2 ສ່ວນເກືອ 1 ສ່ວນສີປະສົມອາຫານ ແລະ ນ້ຳສະອາດ ຫຼື ໃຊ້ແປ້ງສາລີໃຫ້ໃຊ້ນ້ຳເຢັນແທນ. ວິທີເກັບຮັກສາໃຊ້ຜ້າຊຸບນ້ຳປັ້ນໃຫ້ໝາດ,ຫໍ່ແປ້ງທີ່ເຮັດເປັນກ້ອນໃຫ້ແຈບນຳໄປໃສ່ຖົງຢາງມັດປາກມັ້ງນບໍ່ໃຫ້ອາກາດເຂົ້າແລ້ງເກັບໄວ້ຕູ້ເຢັນຖ້ານລຸ່ມ. ຖ້າບໍ່ມີຕູ້ເຢັນໃຫ້ເອົາແຂວນໄວ້ນອກບ່ອນຮົ່ມ ເພື່ອໃຫ້ໄດ້ຮັບຄວາມເຢັນຂອງອາກາດຍາມກາງຄືນ.

ງ. ການຈີກ,ຕິດ,ຕັດ.

+ ການຈີກ:

ການຈີດເປັນກິດຈະກຳທີເໝາະສົມສຳລັບເດັກອະນຸບານ ເພາະເດັກໄວນີ້ກ້າມຊີ້ນມືຍັງບໍ່ແຂງແຮງ, ການປະສານລະຫວ່າງມື ແລະ ຕາ ຍັງບໍ່ທັນດີ,ກິດຈະກຳການຈີກນີ້ຈະຊ່ວຍໃຫ້ສິ່ງດັ່ງກ່າວພັດທະນາໄດ້ດີ.

ການຈີກອາດຈະໃຫ້ເດັກຈີກຢ່າງມີອິດສະຫຼະ ເພື່ອໃຫ້ເຈ້ຍຂາດອອກຈາກກັນ ໂດຍໃຊ້ນີ້ວມື 3 ນີ້ວ ໄດ້ແກ່ນິ້ວໂປ້ນີ້ວຊີ້ ແລະ ນີ້ວກາງຂອງມືທັງ 2. ການຈີກຈະໄດ້ພັດທະນາກ້າມຊີ້ນມື ອາດຈະໃຫ້ຈີກຕາມຮອຍທີ່ຖູໃຊ້ເຂັມປັກເປັນປ່ອງ ຫຼື ອາດຈະໃຫ້ເດັກຈີກເປັນຮູບຕ່າງໆຕາມຮອຍສໍ ຫຼື ຈີກຮູບພາບໃນໜັງສືພິມ, ວາລະສານຕ່າງໆ.

- **ການຕັດ:**

ການຕັດຕັດເປັນກິດຈະກຳທີ່ຕໍ່ເນື່ອງມາຈາກການຈີກ ເມື່ອເດັກໄດ້ໃຊ້ມືຈີກມາໄລຍະໜຶ່ງແລ້ວກໍຄວນໃຫ້ເດັກໄດ້ທົດລອງໃຊ້ເຄື່ອງມືອື່ນ.ການຕັດເຈ້ຍນັ້ນເດັກຈະໃຊ້ມືຊ້າຍຈັບເຈ້ຍ ແລະ ມືຂວາຈັບມີຕັດ ໂດຍໃຊ້ 3 ນີ້ວໄດ້ແກ່ນີ້ວໂປ້, ນີ້ວຊີ້ ແລະ ນີ້ວກາງ.ໂດຍນີ້ວໂປ້ສອດເຂົ້າຂາມິດຕັດເບື້ອງເທິງ, ນີ້ວກາງສອດເຂົ້າຂາມິດຕັດເບື້ອງລຸ່ມ. ສ່ວນນີ້ວຊີ້ຮອງໄວ້ຂ້າງລຸ່ມ. ຄູຕ້ອງສາທິດວິທີຈັບມິດຕັດ ແລະ ການຕັດໃຫ້ລະອຽດ.

- **ການຕິດ**

ການຕິດມີສ່ວນພົວພັນຈາກການຕິດ, ການຈີກ. ສິ່ງທີ່ເດັກຕັດຫຼືຈີກແມ່ນຈະໄດ້ນຳມາຕິດໃສ່ເຈ້ຍໃຫ້ເປັນຮູບຮ່າງຫຼື ເລື່ອງລາວຕ່າງໆພ້ອມດ້ວຍປະດັບປະດາຕື່ມ ຈະເຮັດໃຫ້ເປັນຜົນງານຂອງເດັກ.ວັດສະດຸທີ່ນຳມາຫາໄດ້ຈາກທຳມະຊາດໄດ້ແກ່ ແກ່ນພືດ, ເມັດເຂົ້າສານ, ໃບໄມ້, ງ່າໄມ້ ........ການຕິດອາດຈະໃຊ້ກາວ ຫຼື ແປ້ງທີ່ຕົ້ມ.

✷ **ສິ່ງທີ່ຄວນກະກຽມ**

1. ເຈ້ຍສຳລັບໃຫ້ເດັກຈີກ
2. ຮູບພາບຕ່າງໆທີ່ໄດ້ມາຈາກວັດສະດຸເຫຼືອໃຊ້ ແລະ ວັດສະດຸທຳມະຊາດ.
3. ເຈ້ຍສຳລັບຕິດ (ເຈ້ຍເຟືອງ,ເຈ້ຍທີ່ຂຽນແລ້ວ ຫຼື ເຈ້ຍສີອື່ນໆ)
4. ກາວ
5. ມິດຕັດ
6. ຜ້າເຊັດມື
7. ພາຊະນະສຳລັບໃຊ້ເສດເຈ້ຍ

**ຈ. ການພັບ**

ຄວນເປັນການພັບທີ່ງ່າຍໆເລີ່ມຈາກການພັບເຄື່ອງ, ພັບຜ້າ, ເຊັດໜ້າ, ພັບຊອງຈົດໝາຍ ແລະ ອື່ນເຊັ່ນ: ຮູບວົງມົນ, ຮູບສາມຫຼ່ຽມເປັນຮູບຕ່າງໆ.

**ອຸປະກອນທີ່ໃຊ້ພັບ**

- ເຈ້ຍ: ເຈ້ຍທີ່ນຳມາໃຫ້ເດັກພັບ ຖ້າມີເງື່ອນໄຂອາດຈະໃຊ້ເຈ້ຍສີ ຈະເຮັດໃຫ້ຮູບພາບທີ່ອອກມາສວຍງາມ ເຊັ່ນ: ເຈ້ຍໜັງສືພິມ,ເຈ້ຍເຟືອງ,ເຈ້ຍປຶ້ມຕ່າງໆທີ່ບໍ່ຕ້ອງການໃຊ້.
- ສີ ຫຼື ສໍສີໄວ້ສຳລັບຕົບແຕ່ງໃຫ້ຮູບນັ້ນງາມ ເຊັ່ນ: ແຕ້ມຕາ, ແຕ້ມໜວດ ຫຼື ໃສ່ສີໃຫ້ງາມຕື່ມ

**ສ. ການສານ ແລະ ການຮ້ອຍ**

ເປັນກິດຈະກຳທີ່ສາມາດເຝິກກ້າມຊີ້ນມືຂອງເດັກໄດ້ດີປະເພດໜຶ່ງ ການສານ ຄູສາມາດຈັດໃຫ້ເດັກໄດ້ສານ ໂດຍການໃຊ້ເຈ້ຍເສດມາຕັດເປັນເສັ້ນ ແລ້ວ ກໍນຳມາສານໃຫ້ເປັນລາຍຕ່າງໆ(ໃຊ້ເຈ້ຍສີຍິ່ງເປັນການດີ) ສິ່ງທີ່ຫາໄດ້ງ່າຍໃນທຳມະຊາດກໍ່ຄື ໄມ້ໄຜ່ ໂດຍນຳເອົາມາຈັກໃຫ້ແລບ ແລ້ວກໍນຳໄປຍ້ອມສີຕ່າງໆແລ້ວນຳມາໃຫ້ເດັກສານ ຫຼື ອາດຈະໃຊ້ໃບກ້ວຍ,ໃບພ້າວກໍໄດ້.

ສຳລັບການຮ້ອຍຄູອາດຈະໃຊ້ວັດຖຸທີ່ມີໃນທຳມະຊາດມາໃຫ້ເດັກຮ້ອຍເຊັ່ນ: ໄມ້ໄຜ່ຂະໜາດນ້ອຍ ( ມາຕັດເປັນທ່ອນຊໍ່າຂໍ້ມື ຫຼື 2 ຂໍ້ມື ) ນຳມາທາສີແລ້ວໃຊ້ເຊືອກຮ້ອຍ,ໝາກເດືອຍດອກໄມ້,ໃບໄມ້.....

**ຊ. ການປະດິດເສດວັດສະດຸຕ່າງໆ**

ການນຳເອົາວັດສະດຸທີ່ເຫຼືອໃຊ້ມາປະດິດເປັນຮູບຕ່າງໆເຊັ່ນ ຫຸ່ນ, ຍົນ, ລົດ... ຈະເປັນການສົ່ງເສີມຄວາມຄິດສ້າງສັນຂອງເດັກໄດ້ດີ.ພັດທະນາການປະສານລະຫວ່າງມື ແລະຕາກໍ່ດີຂຶ້ນ.
ສ້າງໃຫ້ເດັປະຢັດ ແລະ ໃຊ້ວັດສະດຸຢ່າງຄຸ້ຄ່າເພື່ອໃຫ້ການປະດິດໄດ້ຮັບຜົນເປັນຢ່າງດີ ຄູຄວນຈັດຫາວັດສະດຸທີ່ເຫຼືອໃຊ້ໃນຊີວິດປະຈຳວັນ ແລະ ວັດສະດຸທີ່ມີໃນທ້ອງຖິ່ນເຊັ່ນ:

- ວັດສະດຸປະເພດເປັນກັບ: ກັບຢາຖູແຂ້ວ, ກັບຟີມຖ່າຍຮູບ, ກັບສະບູ, ກັບໃສ່ຢາເດັກ ແລະ ກັບເປົ່າອື່ນໆ
- ປະເພດແກ່ນໄດ້ແກ່: ແກ່ນໝາກຂາມ, ແກ່ນສາລີ, ແກ່ນໝາກຖົ່ວ, ແກ່ນໝາກຂຽບ,ແກ່ນໝາກຟາງ, ເມັດເຂົ້າ..... ທີ່ມີໃນທຳມະຊາດ
- ປະເພດຂົນໄດ້ແກ່: ຂົນນົກ, ຂົນໄກ່, ຂົນເປັດ
- ປະເພດຝາໄດ້ແກ່: ຝາແກ້ວ, ຝາອັດລົມ, ຝາເບຍ ....

**ຍ. ເຝິກການຂຽນພະຍັນຊະນະ ແລະ ຕົວເລກ**

✶ **ວິທີສອນຂຽນພະຍັນຊະນະ ແລະ ສະຫຼະ**

ການຂຽນມີຈຸດປະສົງເພື່ອໃຫ້ເດັກເຝິກທັກສະໃນການຂຽນຄື

- ເຝິກກ້າມຊີ້ນມືໃນການ( ປັ້ນ, ແຕ້ມ, ຮ້ອຍ, ຈີກ, ພິມ, ພັບ, ຕັດ, ຕິດ ... ).
- ເຝິກສີທີຈັບສໍວາງປື້ມ, ການນັ່ງ, ຂຽນກາງຫາວ, ຂຽນໃຫ້ຖືກແຖວສະອາດຈົບງາມ.
- ເຝິກຂຽນພະຍັນຊະນະ 26 ຕົວ, ສະຫຼະ 10 ຕົວ ໃຫ້ຖືກຕ້ອງ.
- ການຂຽນພະຍັນຊະນະເລີ່ມຈາກຕົວ ( ບ, ປ, ດ, ຕ, ມ, ນ, ອ, ກ, ລ, ວ, ຈ, ສ, ຊ, ຖ, ທ ງ, ຍ, ຂ, ຄ ຫ, ຣ, ຜ, ຝ, ພ, ຟ, ຢ ).




ຮູບພາບ: ການຂຽນພະຍັນຊະນະ

- ການຂຽນສະຫຼະເລີ່ມຈາກສະຫຼະ (xະ, xາ, xິ, xີ, xຶ ,xື xຸ, xູ, ໂ xະ, ໂx ).



ຮູບພາບ: ການຂຽນພະຍັນຊະນະ

**✷ ວິທີເຝິກແອບຂຽນເລກລາວ ແລະ ເລກສາກົນ**

- ຂຽນເລກລາວ ໑ - ໑໐, ຂຽນສັນຍາລັກຕົວເລກແຕ່ 1 - 10 )




ຮູບພາບ: ແຕ້ມຮູບຕາມຮອຍຈໍ້າຕົວເລກສາກົນ




ຮູບພາບ: ແຕ້ມຮູບຕາມຮອຍຈໍ້າຕົວເລກລາວ




ຮູບພາບ: ແຕ້ມຮູບຕາມຮອຍຈໍ້າຕົວເລກລາວ



ຮູບພາບ: ການທາສີຮູບພາບຂອງເດັກ

**3.4 ວິທີຈັດກິດຈະກຳສິລະປະສ້າງສັນ**

ການຈັດກິດຈະກຳແບ່ງອອກເປັນ 3 ຂັ້ນຕອນ

**+ ຂັ້ນກະກຽມ**

- ກ່ອນຈະຈັດກິດຈະກຳສ້າງສັນຄູຕ້ອງກຽມອຸປະກອນທີ່ຈະໃຫ້ເດັກປະຕິບັດໄວ້ໃຫ້ຮຽບຮ້ອຍ ໂດຍຈັດໄວ້ເປັນກຸ່ມເຊັ່ນ ກຸ່ມປັ້ນປະກອບມີດິນນ້ຳມັນ, ດິນດາກ, ກະດານ ຫຼື ແພຢາງສຳລັບຮອງ, ກຸ່ມແຕ້ມປະກອບມີ: ເຈ້ຍ ສໍດຳ, ສໍສີ ...
- ໃນການປະຕິບັດກິດຈະກຳທຸກຄັ້ງຈະຕ້ອງກະກຽມນ້ຳ, ຜ້າແພ ເພື່ອໃຫ້ເດັກໄດ້ເຝິກທຳຄວາມສະອາດ, ຫຼັງຈາກປະຕິບັດກິດຈະກຳແລ້ວ.
- ກະກຽມບ່ອນມ້ຽນອຸປະກອນ ແລະ ບ່ອນວາງຜົນງານ.

**+ ຂັ້ນດຳເນີນການສອນກິດຈະກຳສ້າງສັນ**

- ຫຼັງຈາກຄູກະກຽມອຸປະກອນຮຽບຮ້ອຍແລ້ວ ຄູແບ່ງເດັກໃຫ້ເຂົ້າກຸ່ມປະຕິບັດກິດຈະກຳເຊັ່ນ: ກຸ່ມແຕ້ມທາສີ, ກຸ່ມປັ້ນ, ກຸ່ມຕັດຕິດ...
- ຄູອະທິບາຍ ແລະ ສະເໜີກິດຈະກຳທີ່ຈະໃຫ້ເດັກປະຕິບັດ ໂດຍລະອຽດ,ຖ້າແມ່ນກິດຈະກຳທີ່ຍາກຄູຈະຕ້ອງສາທິດໃຫ້ເດັກເບິ່ງກ່ອນ.
- ໃຫ້ເດັກດຳເນີນກິດຈະກຳຕາມກຸ່ມ ຄູເປັນຜູ້ຕິດຕາມ, ຊ່ວຍເຫຼືອແນະນຳເດັກໃນການປະຕິບັດກິດຈະກຳທຸກຄັ້ງ
- ໃນກໍລະນີທີ່ເດັກບໍ່ມີຄວາມພ້ອມໃນກິດຈະກຳນັ້ນຄູຈະຕ້ອງໃຫ້ເດັກປະຕິບັດກິດຈະກຳທີ່ງ່າຍ, ສິ່ງສຳຄັນຄູຈະຕ້ອງກະຕຸ້ນໃຫ້ເດັກໄດ້ສະແດງອອກທາງດ້ານຈິນຕະນາການ ແລະແນວຄິດສ້າງສັນ.

**+ ຂັ້ນສະຫຼຸບ**

- ຫຼັງຈາກເດັກປະຕິບັດກິດຈະກຳສຳເລັດແລ້ວ ຄູໃຫ້ເດັກອະທິບາຍກ່ຽວກັບຜົນງານຂອງຕົນເຊັ່ນ: ເດັກແຕ້ມຮູບຫັຍງ? ປັ້ນ ປະດິດຮູບພາບ ແລະ ອື່ນໆກ່ຽວກັບຫຍັງ?
- ຄູຕ້ອງໃຫ້ກຳລັງໃຈເດັກ, ບໍ່ຄວນຕຳນິເດັກສິ່ງສຳຄັນໃຫ້ເດັກໄດ້ເຝິກກ້າມຊີ້ນນ້ອຍ ໂດຍປະສານສົມທົບກັບສາຍຕາ.
- ໃຫ້ເດັກເອົາຜົນງານຕິດໄວ້ ຫຼື ເກັບໃສ່ກອງຕາມທີ່ກຳນົດ
- ໃຫ້ເດັກທຳຄວາມສະອາດມືທຸກຄັ້ງ ຈາກນັ້ນໃຫ້ເດັກໄດ້ພັກຜ່ອນ ຫຼື ໄປຫຼິ້ນຕາມມູມທີ່ມີໃນຫ້ອງຮຽນ.
- ຜົນງານຂອງເດັກຄູອາດເກັບເປັນແຜ່ນໄວ້ ແລະ ອີກສ່ວນໜຶ່ງຄວນສົ່ງໃຫ້ຜູ້ປົກຄອງເດັກໄດ້ເບິ່ງນຳ.

**❖ ສິ່ງທີ່ຄວນເອົາໃຈໃສ່ໃນການຈັດກິດຈະກຳສ້າງສັນ**

ກິດຈະກຳສິລະປະສ້າງສັນຊ່ວຍໃຫ້ເດັກໄດ້ປະສົບກັບຄວາມສຳເລັດໃນການເຮັດວຽກ ແລະ ພຶດຕິກຳໄປທາງທີ່ດີຂຶ້ນໄດ້ ເພາະເດັກໄດ້ສະແດງຄວາມສາມາດທີ່ມີຢູ່ໃນຕົວເຂົາອອກມາຢ່າງເຕັມຄວາມສາມາດ ເຊິ່ງເດັກຄິດວ່າຜົນງານຂອງເຂົານັ້ນງາມ ແລະ ດີສຳລັບໂຕເຂົາ ພ້ອມທັງມີຄວາມຊົມຊື່ນ ດັ່ງນັ້ນຄູຄວນປະຕິບັດດັ່ງນີ້:

- ການຈັດກິດຈະກຳໃນແຕ່ລະວັນຢ່າງໜ້ອຍໃຫ້ເດັກໄດ້ປະຕິບັດ 3 - 4 ກິດຈະກຳ ອາດຈະເປັນກິດຈະກຳກຸ່ມນ້ອຍ, ເປັນບຸກຄົນ, ເປັນຄູ່ ຫຼື ກຸ່ມໃຫຍ່ເຊັ່ນ:

ມື້ທີ1: ຄູຈັດໃຫ້ເດັກໄດ້ແຕ້ມຮູບ, ທາສີ ແລະ ເຝິກການຂຽນພະຍັນຊະນະ ຫຼື ສະຫຼະ.

ມື້ທີ2: ຄູຈັດໃຫ້ເດັກໄດ້ຕັດຕິດ, ຈີກ ແລະ ເຝິກການຂຽນພະຍັນຊະນະ ຫຼື ສະຫຼະ.

ມື້ທີ3: ຄູຈັດໃຫ້ເດັກໄດ້ພັບ, ສານ, ເປຍ ແລະ ເຝິກການຂຽນສະຫຼະ, ຂຽນຕົວເລກລາວ ຫຼື ເລກສາກົນ.

ມື້ທີ4: ຄູຈັດໃຫ້ເດັກໄດ້ເປົ່າສີ, ພິມສີ ແລະ ເຝິກການພະຍັນຊະນະ, ຂຽນຕົວເລກລາວ ຫຼື ເລກສາກົນ.

ມື້ທີ5: ຄູຈັດໃຫ້ເດັກໄດ້ຢອດສີ, ຮ້ອຍ, ເຝິກການພະຍັນຊະນະ, ຂຽນຕົວເລກລາວ ຫຼື ເລກສາກົນ.

- ການນຳໃຊ້ວັດຖຸອຸປະກອນຈະຕ້ອງແທດເໝາະກັບທ້ອງຖິ່ນເຊັ່ນ ນຳໃຊ້ເສດວັດຖຸ, ວັດຖຸທີ່ມີໃນທຳມະຊາດ ແລະ ອື່ນໆ...
- ໃນແຕ່ລະວັນຄວນມີການສັບປ່ຽນກິດຈະກຳໃຫ້ເດັກໄດ້ປະຕິບັດ ເພື່ອບໍ່ໃຫ້ເດັກເບື່ອໜ່າຍ
- ການປະຕິບັດກິດຈະກຳສ້າງສັນຈະຕ້ອງຄຳນຶງເຖິງຄວາມພ້ອມຂອງເດັກແຕ່ລະຄົນເຊັ່ນ ເດັກບາງຄົນປະຕິບັດຊັກຊ້າ, ເດັກບາງຄົນປະຕິບັດໄດ້ໄວ້, ເດັກບາງຄົນມັກເຮັດແຕ່ລະກິດຈະກຳທີ່ຕົນເອງມັກ. ສະນັ້ນຖ້າເດັກບໍ່ມັກກິດຈະກຳສ້າງສັນໃນຮູບແບບໃດໜຶ່ງຄູຈະຕ້ອງສ້າງຄວາມດຶງດູດຈິດໃຈໃຫ້ເດັກມັກ ຫຼື ໃຫ້ເດັກສັງເກດໝູ່ເພື່ອນ ແລະ ເອົາກິດຈະກຳແບບຫຼິ້ນຕ່າງໆມາຊ່ວຍເພື່ອໃຫ້ເດັກມີຄວາມສົນໃຈ ແລ້ວຈຶ່ງໃຫ້ເດັກປະຕິບັດກິດຈະກຳນັ້ນ, ກໍລະນີເດັກເຮັດແລ້ວໄວຄູກໍຕ້ອງໃຫ້ເດັກໄດ້ເຮັດກິດຈະກຳອື່ນ ຫຼື ໄປຫຼິ້ນຕາມມູມຕ່າງໆ. ທີ່ມີໃນຫ້ອງຮຽນ ເພື່ອບໍ່ລົບກວນເດັກຄົນອື່ນທີ່ກຳລັງປະຕິບັດກິດຈະກຳບໍ່ທັນສຳເລັດ.
- ໃນແຕ່ລະເດືອນ ຫຼື ພາກຮຽນ1 ຄວນຈັດກິດຈະກຳກຸ່ມໃຫຍ່ໃຫ້ເດັກໄດ້ປະຕິບັດກິດຈະກຳແບບສ້າງສັນຮ່ວມກັນ, ໂດຍອີງໃສ່ຮູບແບບໃຫ້ເດັກເຮັດເອງ, ຄິດເອງ, ປະທັບໃຈ (ພູມໃຈ)ໃນຜົນງານຂອງກຸ່ມຕົນເອງທີ່ໄດ້ເຮັດຮ່ວມກັນ ແລະ ສາມາດເລົ່າເປັນເລື່ອງລາວກ່ຽວກັບຜົນງານຂອງກຸ່ມ.

## 3.5 ການແຕ່ງບົດສອນ ແລະ ສອນຕົວຈິງກ່ຽວກັບກິດຈະກຳສ້າງສັນ

### ບົດສອນແບບຢ່າງ

**ກິດຈະກຳສ້າງສັນ**

ຫົວຂໍ້: ລະບາຍສີ ແລະ ຂຽນພະຍັນຊະນະ ບ, ປ ຕາມຮອຍຈ້ຳ

**1. ຈຸດປະສົງ**

- ເຝິກປະສາດສຳຜັດລະຫ່ວາງມື ແລະ ຕາ
- ສາມາດລະບາຍສີ, ຂຽນພະຍັນຊະນະ ບ, ປ ຕາມຮອຍຈ້ຳ

**2. ເນື້ອໃນ**

- ເພງ: ມາກິນເຂົ້າມາ, ເພງ ແມງກະເບື້ອແສນງາມ
- ລະບາຍສີ ແລະ ຂຽນພະຍັນຊະນະ ບ, ປ ຕາມຮອຍຈ້ຳ

**3. ກິດຈະກຳ**

**+ ຂັ້ນນຳເຂົ້າສູ່ບົດຮຽນ**

- ຈັດເດັກນັ່ງເປັນຮູບສີ່ແຈແລ້ວພາເດັກຮ້ອງເພງຕາມໜ່ວຍການສອນ.
- ຄູພາເດກຮ້ອງເພງປະກອບທ່າທາງ(ມາກິນເຂົ້າມາ)

**+ ຂັ້ນດຳເນີນການສອນ**

- ສະເໜີແບບກິດຈະກຳທີ່ຈະພາເດັກປະຕິບັດ (ລະບາຍສີ, ຮ້ອຍ , ພັບ )
- ຄູສາທິດ ແລະ ອະທິບາຍວິທີເຮັດກິດຈະກຳໃຫ້ນັກຮຽນເບິ່ງ.

- ຄູໃຫ້ເດັກລະບາຍສີ ແລະ ຂຽນພະຍັນຊະນະ ບ, ປ ຕາມຮອຍຈໍ້າ
- ຄູຢາຍອຸປະກອນໃຫ້ເດັກແຕ່ລະຄົນ
- ໃຫ້ເດັກປະຕິບັດຕົວຈິງ
- ຄູຕິດຕາມ ແລະ ຊ່ວຍເຫຼືອເດັກແຕ່ລະຄົນ
- ຄູພາເດັກຮ້ອງເພງປະກອບທ່າທາງ

**+ ຂັ້ນສະຫຼຸບບົດຮຽນ**

- ຄູໃຫ້ເດັກເກັບຜົນງານຂອງຕົນມາສົ່ງໃຫ້ຄູພ້ອມທັງໃຫ້ເດັກເລົ່າເຖິງສິ່ງທີ່ຕົນໄດ້ປະຕິບັດ, ຄູຕິດດາວໃສ່ຜົນງານຂອງເດັກ
- ຍ້ອງຍໍຊົມເຊີຍ.

**+ ວັດຜົນ**

- ໃຫ້ເດັກອອກມາ 1 - 3 ຄົນ ເພື່ອແຂ່ງຂັນກັນລະບາຍສີ, ຮ້ອຍດອກໄມ້.
- ຍ້ອງຍໍຊົມເຊີຍ

**+ ສຶກສາອົບຮົມ:** ໃນເວລາຄູໃຫ້ພວກຫຼານເຮັດກິດຈະກຳ ບໍ່ໃຫ້ລົບກວນກັນ, ເມື່ອເຮັດແລ້ວຕ້ອງເກັບມ້ຽນອຸປະກອນຕ່າງໆ

**+ ວຽກບ້ານ**

- ໃຫ້ພວກຫຼານທຸກຄົນ ແອບລະບາຍສີຮູບພາບ ແລະ ເຝິກຂຽນພະຍັນຊະນະຕື່ມ.
- ໃຫ້ເດັກພັກຜ່ອນ

**+ ອຸປະກອນ**

- ບົດເພງ, ເຈ້ຍພະຍັນຊະນະ ບ, ປ ຕາມຮອຍຈໍ້າ, ສໍສີທຽນ, ສີໄມ້, ສໍດຳ.

**5. ປະເມີນຜົນພັດທະນາການຂອງເດັກ**

- ສັງເກດການ ລະບາຍສີ ແລະ ຂຽນພະຍັນຊະນະ ບ, ປ ຕາມຮອຍຈໍ້າຂອງເດັກແຕ່ລະຄົນ

**3.6 ສຶກສາ ວິເຄາະກ່ຽວກັບການສອນກິດຈະກຳສິລະປະສ້າງສັນ**

**ແຜນການສອນ 1 ອາທິດ**

**ມື້ທີ 1**

**ກິດຈະກຳສ້າງສັນ**

**ຫົວຂໍ້: ການທາສີຮູບທຸງຊາດລາວ ແລະ ການຂີດຕາມຮອຍຈໍ້າພະຍັນຊະນະ ພ, ຟ**

1. **ຈຸດປະສົງ : ນັກຮຽນສາມາດ:**

- ທາສີຮູບທຸງຊາດຕາມແບບໄດ້
- ຂີດຂຽນພະຍັນຊະນະຕົວ ພ, ຟ ຕາມຮອຍຈໍ້າໄດ້

2. **ເນື້ອໃນ**

- ການທາສີຮູບທຸງຊາດຕາມແບບ

- ການຂີດຂຽນພະຍັນຊະນະຕົວ ພ, ຟ ຕາມຮອຍຈໍ້າ

3. **ສື່ການຮຽນ-ການສອນ**

- ຮູບພາບທຸງຊາດລາວ
- ປື້ມຂຽນ, ສໍສີ, ສໍດໍາ, ສໍສີທຽນ ແລະ ເຈ້ຍ
- ຊາມນໍ້າ, ສະບູ ແລະ ແພເຊັດມື

4. **ກິດຈະກໍາການຮຽນ-ການສອນ**

**+ ຂັ້ນນໍາເຂົ້າສູ່ບົດຮຽນ**

- ຄູຈັດນັກຮຽນເຂົ້າລະບຽບ
- ຄູພານັກຮຽນເລົ່າຄໍາຄ່ອງ ໂຮງຮຽນຂອງເຮົາ

**+ ຂັ້ນດໍາເນີນການສອນ**

- ຄູອະທິບາຍ, ສາທິດວິທີທາສີຮູບພາບທຸງຊາດ ແລະ ວິທີການຂຽນພະຍັນຊະນະຕົວ ພ, ຟ ຕາມຮອຍຈໍ້າ ໃຫ້ນັກຮຽນສັງເກດເບິ່ງ 1-2 ເທື່ອ.
- ຄູແບ່ງນັກຮຽນອອກເປັນ 2 ກຸ່ມ

  ກຸ່ມທີ 1 ທາສີຮູບພາບທຸງຊາດ

  ກຸ່ມທີ 2 ຂຽນພະຍັນຊະນະຕົວ ພ, ຟ ຕາມຮອຍຈໍ້າ
- ຄູຢາຍອຸປະກອນໃຫ້ແຕ່ລະກຸ່ມປະຕິບັດຕົວຈິງ
- ຄູຕິດຕາມຊ່ວຍເຫຼືອການປະຕິບັດຕົວຈິງຂອງເດັກແຕ່ລະຄົນ
- ຄູໃຫ້ແຕ່ລະກຸ່ມສັບປ່ຽນກັນປະຕິບັດກິດຈະກໍາ

**+ ຂັ້ນສະຫຼຸບບົດຮຽນ**

- ຄູເກັບຜົນງານຂອງນັກຮຽນແຕ່ລະຄົນມາກວດໃຫ້ຄະແນນ
- ຄູຍ້ອງຍໍຊົມເຊີຍ
- ຄູຖາມນັກຮຽນຄືນວ່າ ຄູພາພວກຫຼານທາສີຮູບຫຍັງ ແລະ ຂຽນພະຍັນຊະນະຕົວຫຍັງແດ່?
- ຄູໃຫ້ນັກຮຽນອາສາສະໝັກຕອບ ປະມານ 2-3 ຄົນ

+ ສຶກສາອົບຮົມນັກຮຽນ

- ໃນເວລາພວກຫຼານທາສີຮູບຕ້ອງຄ່ອຍທາ ແລະ ຕ້ອງທາໃຫ້ງາມ, ການຂຽນຕ້ອງຄ່ອຍຂຽນບໍ່ໃຫ້ຂີດແຮງ ຂຽນຖືກຕາມຮອຍຈໍ້າໄວ້, ຫຼັງຈາກທາສີ ແລະ ຂຽນແລ້ວ ຕ້ອງເກັບມ້ຽນອຸປະອຸປະກອນການຮຽນໃຫ້ຖືກບ່ອນ ຈາກນັ້ນກໍລ້າງມືໃຫ້ສະອາດ

5. **ການວັດ ແລະ ປະເມີນຜົນ**

- ສັງເກດການທາສີຮູບພາບທຸງຊາດລາວຂອງນັກຮຽນແຕ່ລະຄົນ
- ສັງເກດການຂຽນພະຍັນຊະນະຕົວ ພ, ຟ ຕາມຮອຍຈໍ້າຂອງນັກຮຽນແຕ່ລະຄົນ.

## ມື້ທີ 2

## ກິດຈະກຳສ້າງສັນ

**ຫົວຂໍ້: ການຂີດຕາມຮອຍຈ້ຳໃຫ້ເປັນຮູບທຸງຊາດ ແລະ ການກ່າຍຕົວເລກອາລັບ 14, 15**

1. **ຈຸດປະສົງ : ນັກຮຽນສາມາດ:**
   - ຂີດຮູບພາບທຸງຊາດລາວຕາມຮອຍຈ້ຳໃຫ້ເປັນຮູບທີ່ສົມບູນໄດ້
   - ການກ່າຍຕົວເລກອາລັບ 14, 15 ຕາມແບບໄດ້
2. **ເນື້ອໃນ**
   - ການຂີດຮູບພາບທຸງຊາດລາວຕາມຮອຍຈ້ຳໃຫ້ເປັນຮູບທີ່ສົມບູນ
   - ການກ່າຍຕົວເລກອາລັບ 14, 15 ຕາມແບບ
3. **ສື່ການຮຽນ-ການສອນ**
   - ສໍສີ, ສໍດຳ, ສໍສີທຽນ ແລະ ເຈ້ຍຮູບພາບທຸງຊາດລາວທີ່ມີຮອຍຈ້ຳ
   - ບັດເລກອາລັບ 14, 15
   - ຊາມນ້ຳ, ສະບູ, ແລະ ແພເຊັດມື
4. **ກິດຈະກຳການຮຽນ-ການສອນ**

**+ ຂັ້ນນຳເຂົ້າສູ່ບົດຮຽນ**

- ຄູຈັດນັກຮຽນເປັນລະບຽບຮຽບຮ້ອຍ
- ຄູພານັກຮຽນເລົ່າຄຳຄ່ອງ ແມງກະເບື້ອ 1-2 ເທື່ອ.

**+ ຂັ້ນດຳເນີນການສອນ**

- ຄູອະທິບາຍ, ສາທິດວິທີທາສີຮູບພາບທຸງຊາດ ແລະ ວິທີການຂຽນພະຍັນຊະນະຕົວ ພ, ຟ ຕາມຮອຍຈ້ຳ ໃຫ້ນັກຮຽນສັງເກດເບິ່ງ 1-2 ເທື່ອ.
- ຄູແບ່ງນັກຮຽນອອກເປັນ 2 ກຸ່ມ

  ກຸ່ມທີ 1 ທາສີຮູບພາບທຸງຊາດ

  ກຸ່ມທີ 2 ຂຽນພະຍັນຊະນະຕົວ ພ, ຟ ຕາມຮອຍຈ້ຳ
- ຄູຢາຍອຸປະກອນໃຫ້ແຕ່ລະກຸ່ມປະຕິບັດຕົວຈິງ
- ຄູຕິດຕາມຊ່ວຍເຫຼືອການປະຕິບັດຕົວຈິງຂອງເດັກແຕ່ລະຄົນ
- ຄູໃຫ້ແຕ່ລະກຸ່ມສັບປ່ຽນກັນປະຕິບັດກິດຈະກຳ

**+ ຂັ້ນສະຫຼຸບບົດຮຽນ**

- ຄູເກັບຜົນງານຂອງນັກຮຽນແຕ່ລະຄົນມາກວດໃຫ້ຄະແນນ
- ຄູຍ້ອງຍໍຊົມເຊີຍ
- ຄູຖາມນັກຮຽນຄືນວ່າ ຄູພາພວກຫຼານທາສີຮູບຫຍັງ ແລະ ຂຽນພະຍັນຊະນະຕົວຫຍັງແດ່?
- ຄູໃຫ້ນັກຮຽນອາສາສະໝັກຕອບ ປະມານ 2-3 ຄົນ

**+ ສຶກສາອົບຮົມນັກຮຽນ**

- ໃນເວລາພວກຫຼານທາສີຮູບຕ້ອງຄ່ອຍທາ ແລະ ຕ້ອງທາໃຫ້ງາມ, ການຂຽນຕ້ອງຄ່ອຍຂຽນບໍ່ໃຫ້ຂີດແຮງ ຂຽນຖືກຕາມຮອຍຈ້ຳໄວ້ ຫຼັງຈາກທາສີ ແລະ ຂຽນແລ້ວ ຕ້ອງເກັບມ້ຽນອຸປະກອນການຮຽນໃຫ້ຖືກບ່ອນ ຈາກນັ້ນກໍລ້າງມືໃຫ້ສະອາດ

**5. ການວັດ ແລະ ປະເມີນຜົນ**

- ສັງເກດການຂີດຮູບພາບທຸງຊາດລາວຕາມຮອຍຈໍ້າຂອງນັກຮຽນແຕ່ລະຄົນ
- ສັງເກດການກ່າຍຕົວເລກອາລັບ 14, 15 ຕາມແບບຂອງນັກຮຽນແຕ່ລະຄົນ.

## ມື້ທີ 3
## ກິດຈະກຳສ້າງສັນ

**ຫົວຂໍ້: ການທາສີແຜນທີ່ປະເທດລາວ ແລະ ການຂີດຕາມຮອຍຈໍ້າສະຫຼະ ເົຍ, ເຍ**

1. **ຈຸດປະສົງ : ນັກຮຽນສາມາດ:**
   - ທາສີຮູບພາບແຜນທີ່ປະເທດລາວໄດ້
   - ຂີດສະຫຼະ (ເົຍ, ເຍ ) ຕາມຮອຍຈໍ້າໄດ້
2. **ເນື້ອໃນ**
   - ທາສີຮູບພາບແຜນທີ່ປະເທດລາວ
   - ຂີດສະຫຼະ (ເົຍ, ເຍ) ຕາມຮອຍຈໍ້າ
3. **ສື່ການຮຽນ-ການສອນ**
   - ສໍສີ, ສໍດໍາ, ສໍສີທຽນ ແລະ ເຈ້ຍຮູບພາບແຜນທີ່ປະເທດລາວ
   - ເຈ້ຍສະຫຼະ(ເົຍ, ເຍ) ທີ່ມີຮອຍຈໍ້າ
   - ຊາມນໍ້າ, ສະບູ, ແລະ ແພເຊັດມື
4. **ກິດຈະກໍາການຮຽນ-ການສອນ**

**+ ຂັ້ນນໍາເຂົ້າສູ່ບົດຮຽນ**

- ຄູຈັດນັກຮຽນເປັນລະບຽບຮຽບຮ້ອຍ
- ຄູພານັກຮຽນອ່ານສະຫຼະ(ເົຍ, ເຍ) ຄືນ ແລະ ເຮັດທ່າທາງຂຽນສະຫຼະແບບກາງຫາວ

**+ ຂັ້ນດໍາເນີນການສອນ**

- ຄູອະທິບາຍ, ສາທິດວິທີທາສີຮູບພາບແຜນທີ່ປະເທດລາວ ແລະ ວິທີຂີດສະຫຼະ (ເົຍ,ເຍ) ຕາມຮ້ອຍຈໍ້າ ໃຫ້ນັກຮຽນສັງເກດເບິ່ງ 1-2 ເທື່ອ
- ຄູແບ່ງນັກຮຽນອອກເປັນ 2 ກຸ່ມ
  ກຸ່ມທີ 1 ຂີດສະຫຼະ (ເົຍ, ເຍ) ຕາມຮອຍຈໍ້າ
  ກຸ່ມທີ 2 ທາສີຮູບພາບແຜນທີ່ປະເທດລາວ
- ຄູຢາຍອຸປະກອນໃຫ້ແຕ່ລະກຸ່ມປະຕິບັດຕົວຈິງ
- ຄູຕິດຕາມຊ່ວຍເຫຼືອການປະຕິບັດຕົວຈິງຂອງເດັກແຕ່ລະຄົນ
- ຄູໃຫ້ນັກຮຽນແຕ່ລະກຸ່ມສັບປ່ຽນກັນປະຕິບັດກິດຈະກໍາ

**+ ຂັ້ນສະຫຼຸບບົດຮຽນ**

- ຄູເກັບຜົນງານຂອງນັກຮຽນແຕ່ລະຄົນມາກວດໃຫ້ຄະແນນ
- ຄູຍ້ອງຍໍຊົມເຊີຍ
- ຄູຖາມນັກຮຽນຄືນວ່າ ຄູພາພວກຫຼານທາສີຮູບຫຍັງ ແລະ ຂີດສະຫຼະຕົວຫຍັງແດ່?
- ຄູໃຫ້ນັກຮຽນເວົ້າພ້ອມກັນໝົດຫ້ອງ

**+ ສຶກສາອົບຮົມນັກຮຽນ**

- ນັກຮຽນທຸກຄົນໃນເວລາພວກຫຼານທາສີຮູບຕ້ອງຄ່ອຍທາ ແລະ ຕ້ອງທາໃຫ້ງາມ, ການຂີດຕາມຮອຍຈໍ້າ ຕ້ອງພະຍາຍາມ ພາກພຽນ ບໍ່ໃຫ້ໃຈຮ້ອນ ຄ່ອຍຂີດບໍ່ໃຫ້ຂີດແຮງຂີດຖືກຕາມຮອຍຈໍ້າໄວ້ ຫຼັງຈາກທາສີ ແລະ ຂີດແລ້ວ ຕ້ອງເກັບມ້ຽນອຸປະກອນການຮຽນໃຫ້ຖືກບ່ອນ ຈາກນັ້ນກໍລ້າງມືໃຫ້ສະອາດທຸກຄັ້ງທີ່ເຮັດກິດຈະກຳແລ້ວ.

5. **ການວັດ ແລະ ປະເມີນຜົນ**
- ສັງເກດການທາສີຮູບພາບແຜນທີ່ປະເທດລາວຂອງນັກຮຽນແຕ່ລະຄົນ
- ສັງເກດການຂີດສະຫຼະ (ເັຍ ເxຍ) ຕາມຮອຍຈໍ້າ ຂອງນັກຮຽນແຕ່ລະຄົນ.

## ມື້ທີ 4
## ກິດຈະກຳສ້າງສັນ

**ຫົວຂໍ້: ການແຕ້ມຮູບທຸງຊາດ, ທຸງປີວ ແລະ ກ່າຍຕົວເລກລາວ ໑໔, ໑໕**

1. **ຈຸດປະສົງ : ນັກຮຽນສາມາດ:**
- ແຕ້ມຮູບທຸງຊາດລາວ ແລະ ທຸງປີວ ໄດ້
- ກ່າຍຕົວເລກລາວ ໑໔, ໑໕ ຕາມແບບໄດ້

2. **ເນື້ອໃນ**
- ແຕ້ມຮູບທຸງຊາດລາວ ແລະ ທຸງປີວ ໄດ້
- ກ່າຍຕົວເລກລາວ ໑໔, ໑໕ ຕາມແບບໄດ້

3. **ສື່ການຮຽນ-ການສອນ**
- ສໍດຳ, ປື້ມ
- ຮູບທຸງຊາດ ແລະ ທຸງປີວ
- ຊາມນໍ້າ, ສະບູ, ແລະ ແພເຊັດມື

4. **ກິດຈະກຳການຮຽນ-ການສອນ**

**+ ຂັ້ນນຳເຂົ້າສູ່ບົດຮຽນ**
- ຄູຈັດນັກຮຽນເປັນລະບຽບຮຽບຮ້ອຍ
- ຄູພານັກຮຽນໃນຫ້ອງໝົດທຸກຄົນຍົກນິ້ວມືນິ້ວຊີ້ຂຶ້ນ ແລ້ວພານັກຮຽນຂຽນຕົວເລກ 14 ແລະ 15 ແບບກາງຫາວ

**+ ຂັ້ນດຳເນີນການສອນ**

- ຄູອະທິບາຍ, ສາທິດວິທີການແຕ້ມຮູບພາບທຸງຊາດລາວ, ທຸງປີວ ແລະ ວິທີກ່າຍຕົວເລກລາວ **໑໔, ໑໕** ໃຫ້ນັກຮຽນສັງເກດເບິ່ງ 1-2 ເທື່ອ
- ຄູແບ່ງນັກຮຽນອອກເປັນ 2 ກຸ່ມ
  ກຸ່ມທີ 1 ກ່າຍຕົວເລກລາວ ໑໔, ໑໕
  ກຸ່ມທີ 2 ແຕ້ມຮູບທຸງຊາດ
  ກຸ່ມທີ 3 ແຕ້ມຮູບທຸງປີວ
- ຄູຢາຍອຸປະກອນໃຫ້ແຕ່ລະກຸ່ມປະຕິບັດຕົວຈິງ

- ຄູໃຫ້ນັກຮຽນແຕ່ລະກຸ່ມສັບປ່ຽນກັນປະຕິບັດກິດຈະກຳ
- ຄູຕິດຕາມຊ່ວຍເຫຼືອການປະຕິບັດຕົວຈິງຂອງເດັກແຕ່ລະຄົນ

**+ ຂັ້ນສະຫຼຸບບົດຮຽນ**

- ຄູເກັບຜົນງານຂອງນັກຮຽນແຕ່ລະຄົນມາກວດໃຫ້ຄະແນນ
- ຄູຍ້ອງຍໍຊົມເຊີຍ
- ຄູຖາມນັກຮຽນຄືນວ່າ ຄູພາພວກຫຼານແຕ້ມຮູບຫຍັງແດ່ ແລະ ກ່າຍຕົວເລກຫຍັງ?
- ຄູໃຫ້ນັກຮຽນເວົ້າຄືນພ້ອມກັນໝົດຫ້ອງ

**+ ສຶກສາອົບຮົມນັກຮຽນ**

- ນັກຮຽນທຸກຄົນໃນເວລາພວກຫຼານທາສີຮູບຕ້ອງຄ່ອຍທາ ແລະ ຕ້ອງທາໃຫ້ງາມ, ການຂີດຕາມຮອຍຈໍ້າ ຕ້ອງພະຍາຍາມ ພາກພຽນ ບໍ່ໃຫ້ໃຈຮ້ອນ ຄ່ອຍຂີດບໍ່ໃຫ້ຂີດແຮງຂີດຖືກຕາມຮອຍຈໍ້າໄວ້, ເວລາປະຕິບັດ ກິດຈະກຳບໍ່ໃຫ້ພວກຫຼານຍາດເຄື່ອງກັນຕ້ອງແບ່ງປັນຊ່ວຍເຫຼືອກັນກັບໝູ່ຄູ່ ຫຼັງຈາກໃຊ້ອຸປະກອນແລ້ວ ຕ້ອງເກັບມ້ຽນອຸປະກອນການຮຽນໃຫ້ຖືກບ່ອນ ຈາກນັ້ນກໍລ້າງມືໃຫ້ສະອາດທຸກຄັ້ງທີ່ເຮັດກິດຈະກຳແລ້ວ.

5. **ການວັດ ແລະ ປະເມີນຜົນ**

- ສັງເກດການແຕ້ມຮູບທຸງຊາດລາວ ແລະ ທຸງປີວຂອງນັກຮຽນແຕ່ລະຄົນ
- ສັງເກດການກ່າຍຕົວເລກລາວ ໑໔, ໑໕ ຂອງນັກຮຽນແຕ່ລະຄົນ.

## ມື້ທີ 5
## ກິດຈະກຳສ້າງສັນ

**ຫົວຂໍ້: ການຂີດພະຍັນຊະນະ, ສະຫຼະ, ຕົວເລກລາວ, ເລກອາລັບ ຕາມຮອຍຈໍ້າ ແລະ ກ່າຍຮູບທຸງ ຊາດລາວ**

1. **ຈຸດປະສົງ : ນັກຮຽນສາມາດ:**

- ຂີດພະຍັນຊະນະ, ສະຫຼະ, ຕົວເລກລາວ, ເລກອາລັບ ຕາມຮອຍຈໍ້າ ໄດ້
- ກ່າຍຮູບທຸງຊາດລາວຕາມແບບໄດ້

2. **ເນື້ອໃນ**

- ການຂີດພະຍັນຊະນະ, ສະຫຼະ, ຕົວເລກລາວ, ເລກອາລັບ ຕາມຮອຍຈໍ້າ
- ກ່າຍຮູບທຸງຊາດລາວຕາມແບບ

3. **ສື່ການຮຽນ-ການສອນ**

- ສໍດຳ, ປື້ມ
- ຮູບທຸງຊາດ ແລະ ຊາມນໍ້າ, ສະບູ, ແລະ ແພເຊັດມື
- ບັດພະຍັນຊະນະ, ສະຫຼະ, ຕົວເລກລາວ, ເລກອາລັບ

4. **ກິດຈະກຳການຮຽນ-ການສອນ**

**+ ຂັ້ນນຳເຂົ້າສູ່ບົດຮຽນ**

- ຄູຈັດນັກຮຽນເປັນລະບຽບຮຽບຮ້ອຍ
- ຄູພານັກຮຽນນັບເລກແຕ່ 1-50

**+ ຂັ້ນດຳເນີນການສອນ**

ຄູອະທິບາຍ, ສາທິດວິທີການການຂີດພະຍັນຊະນະ, ສະຫຼະຕາມຮອຍຈ້ຳ ແລະ ວິທີການກ່າຍຮູບພາບທຸງຊາດ, ຕົວເລກລາວ **໑໔, ໑໕** ເລກອາລັບ 14, 15 ໃຫ້ນັກຮຽນສັງເກດເບິ່ງ ເທື່ອລະຢ່າງ

- ຄູແບ່ງນັກຮຽນອອກເປັນ 5 ກຸ່ມ

  ກຸ່ມທີ 1 ກ່າຍຕົວເລກລາວ ໑໔, ໑໕

  ກຸ່ມທີ 2 ກ່າຍຮູບທຸງຊາດລາວ

  ກຸ່ມທີ 3 ກ່າຍຕົວເລກອາລັບ 14, 15

  ກຸ່ມທີ 4 ຂີດພະຍັນຊະນະຕົວ ພ, ຟ ຕາມຮອຍຈ້ຳ

  ກຸ່ມທີ 5 ຂີດສະຫຼະ ເົຍ, ເxຍ ຕາມຮອຍຈ້ຳ
- ຄູຢາຍອຸປະກອນໃຫ້ແຕ່ລະກຸ່ມປະຕິບັດຕົວຈິງ
- ຄູໃຫ້ນັກຮຽນແຕ່ລະກຸ່ມສັບປ່ຽນກັນປະຕິບັດກິດຈະກຳ
- ຄູຕິດຕາມຊ່ວຍເຫຼືອການປະຕິບັດຕົວຈິງຂອງເດັກແຕ່ລະຄົນ

**+ ຂັ້ນສະຫຼຸບບົດຮຽນ**

- ຄູເກັບຜົນງານຂອງນັກຮຽນແຕ່ລະຄົນມາກວດໃຫ້ຄະແນນ
- ຄູຍ້ອງຍໍຊົມເຊີຍ
- ຄູຖາມນັກຮຽນຄືນວ່າ ຄູພາພວກຫຼານເຮັດກິດຈະກຳຫຍັງແດ່? ແລະ ກ່າຍຕົວເລກຫຍັງ?
- ຄູໃຫ້ນັກຮຽນເວົ້າຄືນພ້ອມກັນໝົດຫ້ອງ.

**+ ສຶກສາອົບຮົມນັກຮຽນ**

- ນັກຮຽນທຸກຄົນບໍ່ໃຫ່ຂາດໂຮງຮຽນຕ້ອງມາຮຽນທຸກໆມື້ຈິ່ງຮຽນເກັ່ງ ເວລາຮຽນໃຫ້ຕັ້ງໃຈຮຽນ ເວລາເຮັດກິດຈະກຳບໍ່ໃຫ້ຍາດເອົາອຸປະກອນໝູ່ ເມື່ອຮຽນແລ້ວ ໃຫ້ເກັບມ້ຽນອຸປະກອນການຮຽນເປັນລະບຽບຮຽບຮ້ອຍ ຈາກນັ້ນກໍລ້າງມືໃຫ້ສະອາດຈິ່ງໄປຮຽນກິດຈະກຳໃໝ່

5. **ການວັດ ແລະ ປະເມີນຜົນ**

- ສັງເກດການຂີດພະຍັນຊະນະ, ສະຫຼະ, ຕົວເລກລາວ, ເລກອາລັບ ຕາມຮອຍຈ້ຳ ຂອງນັກຮຽນແຕ່ລະຄົນ
- ສັງເກດການກ່າຍຮູບທຸງຊາດລາວຕາມແບບຂອງນັກຮຽນແຕ່ລະຄົນ.

**ກິດຈະກຳ 1**

- ໃຫ້ນັກຮຽນເຝິກແຕ່ງບົດສອນກິດຈະກຳສິລະປະສ້າງສັນເປັນລາຍບຸກຄົນ
- ຈັດຕັ້ງການສອນທົດລອງກິດຈະກຳສິລະປະສ້າງສັນໃນຫ້ອງຮຽນ
- ໃຫ້ນັກຮຽນກະກຽມອຸປະກອນຕ່າງໆປະກອບບົດສອນຂອງຕົນເອງ
- ເຝິກຊ້ອມການສອນທົດລອງຜ່ານກຸ່ມ

**ກິດຈະກຳ 2**

1. ກິດຈະກຳສິລະປະສ້າງສັນໝາຍເຖິງຫັຍງ?
2. ສິລະປະສ້າງສັນມີຈຸດປະສົງ,ເນື້ອໃນກິດຈະກຳສິລະປະສ້າງສັນມີຄືແນວໃດ??
3. ວິທີຈັດ ແລະ ສື່ການຮຽນ-ການສອນສິລະປະສ້າງສັນມີຄືແນວໃດ?
4. ຄູມີບົດບາດຫຍັງແດ່ໃນການຈັດກິດຈະກຳສິລະປະສ້າງສັນ?

## 4. ວິທີຈັດກິດຈະກຳການຮຽນ-ການສອນສຳລັບກິດຈະກຳກາງແຈ້ງ

### 4.1 ຄວາມໝາຍຂອງກິດຈະກຳການຫຼິ້ນກາງແຈ້ງ

ກິດຈະກຳກາງແຈ້ງໝາຍເຖິງກິດຈະກຳທີ່ເປີດໂອກາດໃຫ້ເດັກໄດ້ເຄື່ອນໄຫວຮ່າງກາຍໃນສະຖານທີ່ໂລງແຈ້ງ ອາກາດບໍລິສຸດ ໂດຍມີເປົ້າໝາຍໃຫ້ເດັກໄດ້ມີຄວາມເບີກບານມ່ວນຊື່ນ ແລະ ຮູ້ຈັກການຫຼິ້ນເປັນກຸ່ມ, ເຄົາລົບກະຕິກາ ແລະ ຮູ້ຮັກສາຄວາມປອດໄພ, ເຄົາລົບກະຕິກາ ແລະ ຮູ້ຈັກຮັກສາຄວາມປອດໄພ. ການຫຼິ້ນຊ່ວຍເສີມສ້າງພັດທະນາການດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ ດ້ານອາລົມຈິດ ແລະ ດ້ານສັງຄົມ.

**✷ ຄວາມສຳຄັນຂອງກິດຈະກຳການຫຼິ້ນກາງແຈ້ງ**

ກິດຈະກຳກາງແຈ້ງມີຄວາມສຳຄັນເພື່ອໃຫ້ນັກຮຽນໄດ້ຫຼິ້ນ, ໄດ້ຮຽນຮູ້ເພາະເດັກນັກຮຽນໃນຊັ້ນອະນຸບານ ຫຼື ຫ້ອງກຽມປະຖົມຖືເອົາການຫຼິ້ນເປັນໝາກຫົວໃຈເບື້ອງຕົ້ນຂອງການຮຽນຮູ້ຂອງແຕ່ລະສົ່ງອາຍຸ ຍ້ອນວ່າ ການຮຽນຂອງເດັກແມ່ນຜ່ານການຫຼິ້ນ. ເຮັດໃຫ້ນັກຮຽນມີຄວາມມ່ວນຊື່ນ, ມີຄວາມສາມັກຄີຮູ້ຈັກຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນກິດຈະກຳຕ່າງໆ.

### 4.2 ຈຸດປະສົງຂອງກິດຈະກຳການຫຼິ້ນກາງແຈ້ງ

ກິດຈະກຳກາງແຈ້ງເປັນກິດຈະກຳທີ່ຈັດຂຶ້ນ ເພື່ອພັດທະນາເດັກຮອບດ້ານເຊັ່ນ:

- ພັດທະນາການເຄື່ອນໄຫວເບື້ອງຕົ້ນໃຫ້ຖືກຕ້ອງ
- ພັດທະນາການປະສານສຳພັນຂອງອະໄວຍະຕ່າງໆໃນຮ່າງກາຍ.
- ພັດທະນາສະມັດຕະຂອງຮ່າງກາຍ ຄວາວ່ອງໄວ,ຄ່ອງແຄ້ວ ແລະ ທົນທານ ...
- ພັດທະນາຈິດໃຈລ່າເລີງແຈ່ມໃສ ແລະ ເບີກບານມ່ວນຊື່ນ.
- ເຝິກຄວາມມີລະບຽບວິໄນ, ຮູ້ເຄົາລົບກະຕິກາ.
- ເຝິກການປັບຕົວເຂົ້າກັບໝູ່ເພື່ອນ, ຮູ້ຈັກຫຼິ້ນເປັນກຸ່ມ.
- ປູກຝັງຈິດສຳນຶກໃຫ້ເດັກຮູ້ຈັກຮັກສາຄວາມປອດໄພຂອງຕົນເອງ ແລະ ໝູ່ເພື່ອນ.

### 4.3 ເນື້ອໃນຂອງກິດຈະກຳການຫຼິ້ນກາງແຈ້ງ

ໃນເວລານຳພາເດັກຫຼິ້ນກາງແຈ້ງຄູສາມາດຈັດຕາມເນື້ອໃນດັ່ງນີ້:

ກ. ການເຄື່ອນໄຫວເບື້ອງຕົ້ນ ( ພື້ນຖານ)

ຂ. ກິດຈະກຳເຂົ້າກັບຈັງຫວະ

ຄ. ເກມ(ແບບຫຼິ້ນເຄື່ອນໄຫວ,ຫຼິ້ນແຂ່ງຂັນ)

ງ. ການຫຼິ້ນແບບຫຼິ້ນພື້ນເມືອງ ແລະ ຫຼິ້ນໃນຮົ່ມ

ຈ. ຫຼິ້ນບົດບາດສົມມຸດ

ສ. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ

ຊ. ຫຼິ້ນນ້ຳ - ຫຼິ້ນຊາຍ

**4.4 ວິທີຈັດກິດຈະກຳການຫຼິ້ນກາງແຈ້ງ**

**ການເຄື່ອນໄຫວເບື້ອງຕົ້ນ ( ພື້ນຖານ)**ເປັນສິ່ງສຳຄັນຕໍ່ການດຳລົງຊີວິດຂອງມະນຸດນັບຕັ້ງແຕ່ເກີດ.ເດັກເກີດໃໝ່ຈະມີການເຄື່ອນໄຫວໄປຕາມທຳມະຊາດ ເຊັ່ນ: ດິ້ນໄປມາ, ການຄ້ອາການຈັບ, ການບາຍ....ເມື່ອເດັກໃຫຍ່ຂຶ້ນການເຄື່ອນໄຫວກໍເພີ່ມຂຶ້ນເປັນການຍ່າງ, ແລ່ນ, ເຕັ້ນ ແລະ ການເຄື່ອນໄຫວຈະຊ່ວຍໃຫ້ເດັກສາມາດພັດທະນາການເຄື່ອນໄຫວພື້ນຖານທີ່ງ່າຍໄປສູ່ການເຄື່ອນໄຫວທີ່ສະຫຼັບສັບຊ້ອນ.ດັ່ງນັ້ນການເຄື່ອນໄຫວພື້ນຖານເຊັ່ນ: ການຍ່າງ, ແລ່ນ, ເຕັ້ນສອງຂາ, ການກົ້ມ,ການແກ່ວງ..... ຈຳເປັນຕ້ອງໄດ້ເຝິກໃຫ້ເດັກອະນຸບານ ເພື່ອເປັນພື້ນຖານການເຄື່ອນໄຫວທີ່ສະຫຼັບສັບຊ້ອນຕໍ່ໄປ.

**ການເຄື່ອນໄຫວເບື້ອງຕົ້ນແບ່ງອອກເປັນ 3 ປະເພດ**

1. ການເຄື່ອນໄຫວກັບທີ່
2. ການເຄື່ອນໄຫວເຄື່ອນທີ່
3. ການເຄື່ອນໄຫວປະກອບອຸປະກອນ

**+ ກິດຈະກຳເຂົ້າກັບຈັງຫວະ**

ໝາຍເຖິງກິດຈະກຳທີ່ໃຫ້ເດັກເຄື່ອນໄຫວຕາມຈັງຫວະ, ສຽງດົນຕີ, ສຽງເຄາະ, ສຽງຕົບມືເປັນຕົ້ນ ການຍ່າງ ຫຼື ເຕັ້ນໃຫ້ເຂົ້າຈັງຫວະ.

**ກ. ການຫຼິ້ນແບບຫຼິ້ນພື້ນເມືອງ**

ໄດ້ແກ່ການຫຼິ້ນທີ່ນິຍົມໃນທ້ອງຖິ່ນ ແລະ ຫຼິ້ນສືບທອດຕໍ່ກັນມາ ແຕ່ປູ່ຍ່າຕາຍາຍ, ກໍ່ເກີດຄວາມສະໜຸກສະໜານ, ເປັນການໃຊ້ເວລາຫວ່າງໃຫ້ເປັນປະໂຫຍດ.ໃນບາງໂອກາດກໍ່ນຳເອົາກິດຈະກຳການຫຼິ້ນເຫຼົ່ານີ້ໃນງານບຸນຕ່າງໆ ທີ່ຈັດໃນທ້ອງຖິ່ນ, ກິດຈະກຳການຫຼິ້ນພື້ນເມືອງນີ້ສາມາດ
ນຳມາໃຫ້ເດັກຫຼິ້ນໄດ້, ຄູຕ້ອງເລືອກເຟັ້ນການຫຼິ້ນທີ່ງ່າຍ, ກະຕິກາບໍ່ຍາກ ແລະ ວິທີຫຼິ້ນທີ່ບໍ່ສະຫຼັບສັບຊ້ອນເກີນໄປ.



ຮູບພາບ: ການຫຼິ້ນແບບຫຼິ້ນອີ່ມອນຊ້ອນຜ້າຂອງເດັກ



ຮູບພາບ: ການຫຼິ້ນແບບຫຼິ້ນສອ້ນປາລິດປາຫຼາດຂອງເດັກ

**ຂ. ນໍາພາເດັກຫຼິ້ນແບບຫຼິ້ນແຂ່ງຂັນ ຫຼື ຫຼິ້ນບົດບາດສົມມຸດ**

ໝາຍເຖິງການຫຼິ້ນ ຫຼື ໃຊ້ທ່າທາງ ແລະ ການສະແດງອອກໃນການຮຽນແບບ ຫຼື ສົມມຸດສະຖານະການຕ່າງໆຂຶ້ນມາ, ການຫຼິ້ນປະເພດນີ້ ຄູບໍ່ຈໍາເປັນຕ້ອງສະແດງທ່າທາງໃຫ້ເດັກເບິ່ງ, ຄູເປັນພຽງຜູ້ບອກທ່າທາງ, ບອກສະຖານະການຕ່າງໆ,ເພື່ອໃຫ້ເດັກໄດ້ຮຽນແບບ ແລະ ສະແດງອອກຈິນຕະນາການຂອງເຂົາ.

**ຕົວຢ່າງ:** ການຫຼິ້ນເຮືອນນ້ອຍ

ການຫຼິ້ນເຮືອນນ້ອຍເປັນກິດຈະກໍາທີ່ແສນຈະມີຄວາມເບີກບານມ່ວນຊື່ນ ເພາະເດັກໄວນີ້ມັກຫຼິ້ນບົດບາດສົມມຸດ ເຊິ່ງເປັນການຫຼິ້ນທີ່ໃຊ້ທ່າທາງ ແລະ ການສະແດງອອກ,ການຮຽນແບບຫຼື ສະແດງບົດບາດສົມມຸດຕ່າງໆຂຶ້ນມາ. ຄູບໍ່ຈໍາເປັນສະແດງທ່າທາງຕ່າງໆໃຫ້ເດັກເບິ່ງພຽງແຕ່ເປັນຜູ້ບອກທ່າທາງ, ບອກສະຖານທີ່ ເພື່ອໃຫ້ເດັກຮຽນແບບ ແລະ ສະແດງຈິນຕະນາການຂອງເຂົາເຈົ້າ,ເດັກຈະຄິດທ່າທາງຮຽນແບບ ຫຼື ແກ້ໄຂສະຖານະການທີ່ສົມມຸດຂຶ້ນຕາມຄວາມຄິດຂອງເຂົາ ການຮຽນແບບບຸກຄົນຕ່າງໆ ການໄປຕະຫຼາດ,ການຂາຍເຄື່ອງ,ເປັນແພດ,ເປັນຄູ ແລະອື່ນໆ.

ດັ່ງນັ້ນ, ການຫຼິ້ນເຮືອນນ້ອຍພວກເຮົາຈຶ່ງແນະນໍາໃຫ້ມີການຈັດສ້າງເຮືອນນ້ອຍໃນຫ້ອງຮຽນ ຫຼື ນອກເດີ່ນກໍ່ໄດ້ເພາະເດັກມັກຫຼິ້ນຢູ່ໃນເຮືອນນ້ອຍຫຼິ້ນບົດບາດສົມມຸດເປັນບົດບາດຕ່າງໆເປັນການພັດທະນາພາສາ,ອາລົມ ແລະ ສັງຄົມ.

ໃນການຈັດມູນເຮືອນນ້ອຍຄວນເປັນເຮືອນທີ່ງ່າຍບໍ່ຄວນຝັງເສົາລົງໃນເດີ່ນ, ເຮືອນນ້ອຍອາດໃຊ້ອຸປະກອນຫຼາຍໆແນວຕາມຄວາມພ້ອມ ແລະ ເໝາະສົມກັບແຕ່ລະທ້ອງຖິ່ນເຊັ່ນ: ແກັດໄມ້, ແກັດເຈ້ຍ, ໄມ້ໄຜ່ ຫຍ້າ,ໃບຫຍ້າ, ຜ້າແພ....





ຮູບພາບ: ການຫຼິ້ນເຮືອນນ້ອຍ

**ຄ. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ**

ການຫຼິ້ນເຄື່ອງຫຼິ້ນນອກເດີ່ນເປັນກິດຈະກຳໜຶ່ງທີ່ເຮັດໃຫ້ເດັກໄດ້ຮັບຄວາມມ່ວນຊື່ນ, ໄດ້ພັດທະນາກ້າມຊີ້ນໃຫຍ່ ແລະ ກ້າມຊີ້ນນ້ອຍ. ເຝິກໃຫ້ເດັກມີການຊິງຕົວ, ເຝິກໃຫ້ຮູ້ຈັກສັງເກດເບິ່ງສິ່ງຕ່າງໆທີ່ຢູ່ຮອບຕົວ ເຝິກໃຫ້ມີຄວາມອົດທົນ, ການຕັດສິນໃຈ, ມີບຸກຄະລິກດີ ແລະ ຮຽນຮູ້ທິດທາງໜ້າ-ຫຼັງ - ຂ້າງ... ເຄື່ອງຫຼິ້ນກາງເດີ່ນຄວນມີດັ່ງນີ້: ຕະລູດ, ໂອນຊາ, ຂອນສຳລັບໄຕ່ ຂັ້ນໄດປີນ...

ຮູບພາບ: ເດັກ ເຄື່ອງຫຼິ້ນໃນເດີ່ນ



ຮູບພາບ: ເດັກ ເຄື່ອງຫຼິ້ນໃນເດີ່ນ



ຮູບພາບ: ເຄື່ອງຫຼິ້ນໃນເດີ່ນ



ຮູບພາບ: ເດັກຫຼິ້ນເຄື່ອງຫຼິ້ນໃນເດີ່ນ

- **ການໂຫນ- ຊິງຊ້າ**

ເປັນກິດຈະກຳການຫຼິ້ນທີ່ເດັກມັກຫຼິ້ນຫຼາຍ ຊ່ວຍພັດທະນາກ້າມຊີ້ນນ້ອຍ ແລະ ໃຫຍ່ ແລະ ຍັງເຝິກການຫຼິ້ນເປັນກຸ່ມຮູ້ຈັກການປ່ຽນແປງ ແລະ ການແບ່ງໃຫ້ຜູ້ອື່ນຫຼິ້ນນຳ, ການຄອງຄອຍຕາມລຳດັບ ແລະ ມີລະບຽບໃນການຫຼິ້ນ. ໃນການຫຼິ້ນອາດຈະຕັ້ງກົດເກນເຊັ່ນ: ປ່ຽນກັນຫຼິ້ນໂດຍແກ່ວງຜູ້ລະ 10 ເທື່ອນັ້ນເປັນການພັດທະນາທາງດ້ານສະຕິປັນຍາ ແລະ ຮຽນຮູ້ການນັບ.

✳ **ຂໍ້ຄວນລະວັງ**

1. ຄວນກວດເບິ່ງສະພາບຂອງເຊືອກຊິງຊ້າໃຫ້ຢູ່ໃນສະພາບດີ.
2. ທຳຄວາມສະອາດຢາງລົດເກົ່າທີ່ນຳມາເຮັດຊິງຊ້າ ຫຼື ປັດເຊັດບ່ອນທີ່ຫອ້ຍໂຫນທຸກເທື່ອ ເພື່ອປ້ອງກັນການມີ່ນ ແລະ ເດັກອາດຈະຕົກຈາກຊິງຊ້າໄດ້.
3. ສຳລັບເດັກທີ່ບໍ່ເຄີຍຫຼິ້ນຊິງຊ້າ ຄວນເຮັດໃຫ້ບໍລິເວນນັ້ນເປັນບ່ອນອ່ອນ ໂດຍເອົາດິນຊາຍມາປູໄວ້ ຫຼື ຂີ້ເລື່ອຍ ເພື່ອຮອງຮັບການຕົກລົງມາຂອງເດັກ.
4. ບ່ອນນັ່ງຊິງຊ້າຄວນໃຊ້ວັດຖຸທີ່ແຂງແຮງຢາງລົດທີ່ໜາ ຫຼື ໄມ້ທີ່ບໍ່ເປັນຫຼ່ຽມເຮັດໃຫ້ເກີດມີບາດແຜ.
5. ບໍ່ຄວນໄກວຊິງຊ້າແຮງເກີນໄປ ແລະ ຄ່ອຍຍໆເຕືອນບໍ່ໃຫ້ເດັກມາຢືນຕັນທາງຄະນະທີ່ເດັກກຳລັງໄກວຊິງຊ້າ.

## ຊິ່ງຊ້າໄມ້ໄຜ່

ອຸປະກອນ: ໄມ້ໄຜ່ ແລະ ເຊືອກ

ວິທີເຮັດ : ໃຊ້ໄມ້ໄຜ່ຂະໜາດໃຫຍ່ຍາວປະມານ 2.50 ແມັດ. ຝັງເສົາໃຫ້ແໜ້ນໃຊ້ໄມ້ໄຜ່ຂະໜາດກາງເຮັດຄານ ແລະ ເຮັດບ່ອນນັ່ງ ດ້ວຍກະບັ້ງໄມ້ໄຜ່ແລ້ວມັດສິ້ນໃຫ້ແໜ້ນ.

**ວິທີຫຼິ້ນ**: ໃຫ້ເດັກນັ່ງ - ໄກວ ຊິງຊ້າໄປມາ ໂດຍສອງມືຈັບເຊືອກຊິ່ງຊ້າໄວ້ປ້ອງກັນການຕົກ.




**ຊິ່ງຊ້າຢາງລົດໃຫຍ່**

ອຸປະກອນ: 1. ເສົາໄມ້.

2. ຮາວໄມ້ ຫຼື ຮາວເຫຼັກກົມ

3. ໂສ້ ຫຼື ເຊືອກ

4. ຢາງລົດໃຫຍ່

ວິທີເຮັດ : ຝັງເສົາໄມ້ເລິກປະມານ 50 ຊມ ໄລຍະຫ່າງພໍຄວນໃຫ້ສາມາດແຂວນຢາງໄດ້ໃຊ້ເຊືອກ ຫຼື ໂສ້ມັດຕິດກັນກັບຮາວໃຫ້ແໜ້ນ.

ວິທີຫຼິ້ນ: ໃຫ້ເດັກນັ່ງ ຫຼື ຢືນໄກວໄປມາ ແລະ ຈັບເຊືອກທີ່ແຂວນໄວ້ປ້ອງກັນການຕົກ.



## ຊິ່ງຊ້າສານ

**ອຸປະກອນ**: 1. ເສດມອງ ຫຼື ຕາໜ່າງທີ່ໜຽວແໜ້ນ.

2. ເຊືອກ

**ວິທີເຮັດ** :

1. ຂອດຕາໜ່າງ ຫຼື ມອງໃຫ້ເປັນຊິງຊ້າພໍສໍາລັບເດັກນັ່ງໄດ້.

2. ໃຊ້ເຊືອກມັດສອງເບື້ອງເປັນສາຍຊິງ້າ,ປາຍເຊືອກທັງສອງເອົາໄປມັດໄວ້ກັບຄານ ຫຼື ງ່າໄມ້ທີ່ມີຄວາມກ້ວາງຂອງຕົວທີ່ນັ່ງປະມານ 20 ນິ້ວ.

3. ຫາກມີເສດມອງທີ່ປາຍຊິງຊ້າ ຍາວພໍຈະເຮັດສາຍຊິງຊ້າໄດ້ກໍໃຊ້ເປັນສາຍເລີຍ,ແລ້ວໃຊ້ເຊືອກພັນອີກເທື່ອໜຶ່ງໃຫ້ອ້ອມໜຶດກ່ອນແລ້ວ ນໍາສົ້ນອີກເບື້ອງໜຶ່ງໄປມັດກັບຄານ ຫຼື ງ່າໄມ້ດັ່ງຮູບ.

ວິທີຫຼິ້ນ: ໃຫ້ເດັກນັ່ງຫຼິ້ນແກ່ວງ - ໄກວໄປ - ມາ ໂດຍຈັບເຊືອກໄວ້ປ້ອງກັນການຕົກ.



## ຊິ່ງຊ້າວິເສດ ເຊືອກໂຫນ ຊິງຊ້າສະຫວັນ

ອຸປະກອນ: 1. ຊິງຊ້າວິເສດ

- ໃຊ້ເຊືອກ ແລະ ກະບອກໄມ້ໄຜ່ສາມາດຫຼິ້ນໄດ້ຄົນໜຶ່ງ ແລະ ສອງຄົນຫຼິ້ນດ້ວຍການນັ່ງ ຫຼື ຢືນກໍໄດ້.

2. ເຊືອກໂຫນ

- ໃຊ້ເຊືອກເສັ້ນດຽວຂະໜາດໃຫຍ່ມາຂອດເປັນປຸ້ມລະຍະເທົ່າກັນ.

3. ຊິງຊ້າສະຫວັນ

- ໃຊ້ກະຕ່າ, ບຸງ ເຊິ່ງເຮັດເປັນບ່ອນນັ່ງໄດ້ໃຊ້ເຊືອກມັດໃຫ້ແໜ້ນໃຫ້ບ່ອນນັ່ງສູງຈາກພື້ນດິນປະມານ 15 ຊມ.

**+ ວິທີຫຼິ້ນ**: ສໍາລັບເຊືອກໂຫນໃຫ້ເດັກໃຊ້ສອງມືຈັບເຊືອກຄ່ອຍໆໂຫນຕົວ ແລະ ສາວເຊືອກຂຶ້ນເພື່ອເລື່ອຍຕົວ ໃຫ້ສູງ.ສ່ວນຊິງຊ້າວິເສດ ແລະ ຊິງຊ້າສະຫວັນໃຫ້ເດັກນັ່ງຫຼິ້ນແກ່ວງ-ໄກວໄປມາ

ໂດຍຈັບເຊືອກໃຫ້ແໜ້ນ.



- **ການປີນໄຕ່**

ການປີນໄຕ່ເປັນກິດຈະກຳການຫຼິ້ນທີ່ມີຄຸນຄ່າ ເຄື່ອງຫຼິ້ນປະເພດນີ້ຊ່ວຍໃຫ້ການພັດທະນາປະສາດສຳພັດລະຫວ່າງມື ກັບຕາ ພັດທະນາດ້ານກ້າມຊີ້ນໃຫຍ່ ແລະ ກ້າມຊີ້ນນ້ອຍ. ເຮັດໃຫ້ມີການຊົງຕົວໄດ້ດີ.ເດັກຈະຮຽນຮູ້ຈາກການລະວັງຮັກສາຕົວໃຫ້ປອດໄພໃນຂະນະທີ່ປີນໄຕ່.

ໃນການຫຼິ້ນຄູຈະຕ້ອງຄວບຄຸມດູແລຢ່າງໃກ້ຊິດ ເພື່ອປ້ອງກັນບໍ່ໃຫ້ໄດ້ຮັບອັນຕະລາຍຈາກການຫຼິ້ນ. ຄວນຈັດວາງຢູ່ໃນພື້ນທີ່ອ່ອນເຊັ່ນ: ດິນຊາຍ, ຂີ້ເລື່ອຍ ເພື່ອຮອງຮັບເດັກເວລາຕົກລົງມາຈະບໍ່ເຈັບ.

✶ **ຂໍ້ຄວນລະວັງ**

1. ຄູຄວນກວດເບິ່ງວ່າຕົນຕົວເດັກບໍ່ມີສິ່ງແຫຼມຄົມຕາມເຄື່ອງນຸ່ງ ຫຼື ມີເຊືອກຕາມເສື້ອຜ້າ, ທີ່ຈະເຮັດຕ້ອງສະດຸດລົ້ມໃນຂະນະທີ່ຫຼິ້ນ ຫຼື ເຄື່ອງທີ່ມີຄົມອາດຈະເຮັດໃຫ້ບາດເຈັບກໍ່ໄດ້.
2. ຂະນະທີ່ຫຼິ້ນເດັກບໍ່ຄວນລິບກວນໝູ່ເພື່ອນດ້ວຍການດຶງ ຫຼື ຍູ້.
3. ເຄື່ອງຫຼິ້ນປີນໄຕ່ຄວນຢູ່ໃນສະພາບທີ່ແຫ້ງ ເພາະຖ້າປຽກຈະເຮັດໃຫ້ເດັກມື່ນຕົກ ແລະ ເກີດອັນຕະລາຍໄດ້.
4. ເຄື່ອງຫຼິ້ນທີ່ເປັນໄມ້ ຄວນຜັດດ້ວຍກະດາດຊາຍໃຫ້ກ້ຽງດີບໍ່ມີສ້ຽນ.

## ຫຼັກປີນ

**ອຸປະກອນ:**

ໄມ້ໄຜ່ຂະໜາດພໍດີ ຕັດຍາວໄດ້ຂະໜາດຕາມແບບໃຊ້ມີດຂໍ້ໃຫ້ກ້ຽງ,ຝັງໃຫ້ແໜ້ນ ໃຊ້ສີຂີດໄລຍະຄວາມສູງທຸກໆ 10 ຊມ ໃສ່ເຫຼັກປີນ ເພື່ອຊ່ວຍໃຫ້ເດັກຮູ້ວ່າຕົນເອງປີນໄດ້ສູງເທົ່າໃດ.

**ວິທີຫຼິ້ນ:**

1. ໃຫ້ເດັກໃຊ້ມືຈັບເສົາແລ້ວໂຫນຕົວປີນຂຶ້ນ - ລົງໃນໄລຍະທຳອິດ ຄູ ຫຼື ໝູ່ອາດຈະຊ່ວຍໃນການໂຫນ ຕົວຂຶ້ນ.
2. ແຂ່ງຂັນປີນຫຼັກ ໂດຍນັບວ່າປີນຂຶ້ນສູງໄດ້ຊໍ່າໃດຈາກການນັບຂີດໄລຍະຄວາມສູງຂອງເສົາເປັນການເຝິກຊອມຄວາມຮູ້ພື້ນຖານທາງຄະນິດສາດ.



## ຂັ້ນໄດລີງ

**ອຸປະກອນ**: 1. ເຊືອກຂະໜາດໃຫຍ່

2. ໄມ້ໄຜ່

**ວິທີເຮັດ**: ເອົາເຊືອກມັດງ່າໄມ້ທີ່ແຂງແກ່ນ ຫຼື ຖ້າແມ່ນຄານໄມ້ໄຜ່ໃຫ້ເຈາະເປັນ 2 ຮູ ເອົາເຊືອກສອດຊອດຮູນັ້ນແລ້ວມັດໄວ້ໃຫ້ແໜ້ນ

**ວິທີຫຼິ້ນ**:

1. ໃຊ້ມືຈັບຂັ້ນໄດ ຫຼື ເຊືອກຂຶ້ນໄປເທື່ອລະຂັ້ນຈົນສຸດ ແລ້ວຖອຍຫຼັງລົງເທື່ອລະຂັ້ນອີກ.
2. ຂຶ້ນຂັ້ນໄດ ໂດຍລອດຂັ້ນໄດໄປເທື່ອລະຂັ້ນ.
3. ຂຶ້ນໄປເຖິງກາງຂັ້ນໄດ ໃຊ້ຂາເບື້ອງໜຶ່ງເດ່ອອກມາທາງຂ້າງ ຢືນຂາດຽວ ໂດຍໃຊ້ສອງມືຈັບເຊືອກຊ່ວຍໃນການຊົງຕົວ.



ຂັ້ນໄດມື

**ອຸປະກອນ**: 1. ໄມ້ໄຜ່ຂະໜາດໃຫຍ່ 4 ທ່ອນ ຍາວທ່ອນລະ 190 ຊມ

2. ໄມ້ໄຜ່ຂະໜາດກາງ 5 ທ່ອນ ຍາວທ່ອນລະ 120 ຊມ

**ວິທີເຮັດ:** ເອົາໄມ້ໄຜ່ຂະໜາດໃຫຍ່ທັງ 4 ທ່ອນ ມາເຈາະຮູໃຫ້ໄລຍະຫ່າງເທົ່າກັນລະຫວ່າງ 5 ຮູຂະໜາດຂອງຮູກວ້າງພໍດີກັບຄານໄມ້ໄຜ່ທີ່ສອດເຂົ້າໄປເອົາຫຼິ້ມຕອກໃຫ້ແໜ້ນ, ຝັງເລິກ 40 ຊມ

**ວິທີຫຼິ້ນ**:

1. ຂຶ້ນຕາມຮາວຂັ້ນຂັ້ນໄດມີເທື່ອລະຂັ້ນແລ້ວຖອຍຫຼັງລົງເບື້ອງກົງກັນຂ້າມ.
2. ຂຶ້ນຕາມຮາວຂັ້ນໄດ ແລ້ວລອດກ້ອງຂັ້ນໄດໄປອີກເບື້ອງໜຶ່ງ,ຂຶ້ນຕໍ່ໄປຈົນຮອດຂັ້ນສູງສຸງຂອງ ຂັ້ນໄດມີ ແລ້ວຈຶ່ງຖອຍຫຼັງລົງ.
3. ແຂ່ງຂັນຂຶ້ນ- ລົງໂດຍໃຊ້ເວລາໜ້ອຍທີ່ສຸດເປັນການເຝິກການຫຼິ້ນເປັນໝູ່ຄະນະ.



## ຂັ້ນໄດສະຫຼຽງ

**ອຸປະກອນ**: 1. ໄມ້ໄຜ່ຂະໜາດໃຫຍ່ປະມານ 5 ແມັດຈຳນວນ 6 ທ່ອນ

2. ໄມ້ໄຜ່ຂະໜາດນ້ອຍ 2 ແມັດ ຈຳນວນ 9 ທ່ອນ

**ວິທີເຮັດ**: ເຈາະຮູເສົາໄມ້ໄຜ່ຂະໜາດໃຫຍ່ໃຫ້ພໍດີກັບຂະໜາດຂອງໄມ້ທີ່ຈະສອດໃສ່,ຝັງເສົາເລິກປະມານ 30 ຊມ. ໃຊ້ໄມ້ໄຜ່ຂະໜາດນ້ອຍ ສອດຕາມຮູບໃຊ້ຫຼິ້ມຕອກໄວ້ໃຫ້ແໜ້ນ.

**ວິທີຫຼິ້ນ**:

1. ຂຶ້ນໄປເທື່ອລະຂັ້ນ ໂດຍມືຈັບຂັ້ນເທິງຂຶ້ນໄປເລື້ອຍໆ ແລ້ວຢຽບຂັ້ນຖອຍຫຼັງລົງເທື່ອລະຂັ້ນ.
2. ແຂ່ງຂັນກັນຂຶ້ນ - ລົງ
3. ຂຶ້ນໄປຈົນຮອດຂັ້ນສຸດທ້າຍ ແລ້ວຖອຍຫຼັງລົງເບື້ອງກົງກັນຂ້າມ.
4. ຄານລອດລະຫວ່າງກາງຂອງຂັ້ນໄດສະຫຼຽງ




## ຂັ້ນໄດເຊືອກ

**ອຸປະກອນ**: 1. ເສົາໄມ້ 4 ເສົາ

2. ຄານ 1 ອັນ

3. ເຊືອກຂະໜາດເສັ້ນຜ່ານໃຈກາງ 1.5 ຊມ.

**ວິທີເຮັດ**: 1. ຝັງ 4 ເວົານັ້ນໃຫ້ເລິກ 1 ແມັດ ແລ້ວໃຊ້ນ໋ອດຈັບໃສ່ພ້ອມ

2. ເອົາຄານພາດໃສ່ບ່ອນໄຂ່ວກັນລະຫວ່າງຈຸດ 2 ເສົາ.

3. ໃຊ້ເຊືອກຖັກເປັນຕາໜ່າງຂະໜາດປ່ອງລະ 10 ນີ້ວ.

**ວິທີຫຼິ້ນ**:

1. ຂຶ້ນໄປຕາມປ່ອງຕາໜ່າງ ໂດຍຢຽບເທື່ອລະປ່ອງແລ້ວຂ້າມໄປ ອີກພາກໜຶ່ງ,ຖອຍຫຼັງລົງໂດຍຢຽບຕາໜ່າງສະລັບປ່ອງລົງ.
2. ແຂ່ງຂັນກັນຂຶ້ນ - ລົງ ໂດຍຈັດເປັນທີມແລ່ນ ໂດຍຈັດເປັນທີມແລ່ນແຂ່ງກັນມາຂຶ້ນຕາໜ່າງຂ້າມຂັນໄດເຊືອກຢ່າງວ່ອງໄວ



- **ການລອດ**

ການລອດເປັນກິດຈະກຳການຫຼິ້ນຊະນິດໜຶ່ງ ເຊິ່ງເດັກສາມາດຫຼິ້ນສິມຸດ ແລະ ຫຼິ້ນເປັນກຸ່ມໄດ້ຢ່າງເບີກບານມ່ວນຊື່ນ

## ລອດຢາງລົດ

ອຸປະກອນ: ຢາງລົດເກົ່າຂະໜາດໃຫຍ່ພໍສຳລັບເດັກຈະລອດໄດ້

ວິທີເຮັດ : ນຳເອົາຢາງລົດມາວາງເປັນໄລຍະຫ່າງກັນປະມານ 1 ແມັດ ຝັງດິນໃຫ້ແໜ້ນເພື່ອບໍ່ໃຫ້ຢາງລົດລົ້ມ. ຖ້າຈະ ຫຼິ້ນເປັນກຸ່ມກໍ່ວາງໄວ້ເປັນຫຼາຍໆແຖວ.

ວິທີຫຼິ້ນ: ໃຫ້ເດັກຄານລອດຢາງລົດຕາມລຳດັບກ່ອນຫຼັງ ໂດຍຄານໄປທາງດຽວ.



## ລອດບ້ວງ

ອຸປະກອນ: ໃຊ້ຢາງລົດຈັກຢາງລົດຖີບ ຫຼື ໄມ້ໄຜ່ເຫຼົາໃຫ້ກ້ຽງເຮັດໃຫ້ເປັນບ້ວງວາງຕາມຮູບ.

ວິທີຫຼິ້ນ: ໃຫ້ເດັກຄານລອດບ້ວງຕາມລຳດັບກ່ອນ ແລະ ຫຼັງ ແລະ ໄປໃນທິດທາງດຽວກັນ.





**໗. ຫຼິ້ນນໍ້າ - ຫຼິ້ນຊາຍ**

**1) ການຫຼິ້ນຊາຍ.**

ການຫຼິ້ນຊາຍ ເປັນທຳມະຊາດຂອງເດັກ ເພາະດິນຊາຍເປັນສິ່ງທີ່ດຶງດູດຄວາມສົນໃຈຂອງເດັກ ເດັກຈະມີຄວາມເບີກບານມ່ວນຊື່ນ ໃນການສຳພັດການຫຼິ້ນດິນຊາຍ ໂດຍໃຊ້ອຸປະກອນການຫຼິ້ນດິນຊາຍ ເຂົາມັກຈະເກືອກຕົນເອງກັບກອງດິນຊາຍໃນການຫຼິ້ນຂອງພວກເຂົາ. ຈາກການຫຼິ້ນຊາຍ ເດັກຈະໄດ້ຮັບໂຮມເອົາປະສົບການແຫ່ງຄວາມຮູ້ສຶກໄດ້ຢ່າງຫຼວງຫຼາຍ, ເປັນການສົ່ງເສີມໃຫ້ເຂົາເຈົ້າມີຫົວຄິດປະດິດສ້າງ, ຊ່ວຍໃຫ້ຄວາມຄິດຂອງເດັກມີການພັດທະນາການ.



**2) ການຮ່ອນຊາຍ**

ອຸປະກອນ: ເຂິງທີ່ມີຮູເປັນລະບົບດີ(ບາງທີອາດຈະເອົາເຈ້ຍແຂງແລ້ວເອົາເຂັມແທງເປັນຮູແທນເຂິງກໍ່ໄດ້) ຊາຍທີ່ແຫ້ງດີ

ວິທີຫຼິ້ນ: **1.** ກາຮ່ອນຊາຍແຫ້ງດ້ວຍການໃຊ້ເຂິງ

- ບາດກ້າວທຳອິດໃຫ້ເດັກເອົາດິນຊາຍໂຮຍໃສ່ມືໃຫ້ລອດຜ່ານນິ້ວມືຂອງເຂົາກ່ອນ.ຈາກນັ້ນຈິ່ງໃຫ້ເດັກນຳໃຊ້ເຂິງ
- ໃຫ້ເດັກສັງເກດເບິ່ງມີຫຍັງເກີດຂຶ້ນ
- ໃຫ້ເດັກຈັບເບິ່ງດິນຊາຍທີ່ຮ່ອນແລ້ວ ຫຼັງຈາກນັ້ນກໍ່ຈັບເບິ່ງດິນຊາຍທີ່ຄ້າງຢູ່ເຂິງ
- ປ່ອຍໃຫ້ເດັກໄດ້ສັງເກດເບິ່ງຄວາມແຕກຕ່າງຂອງດິນຊາຍ
- ໃຫ້ເດັກສະແດງຄວາມຄິດເຫັນ ຫຼື ອະທິບາຍເຖິງກິດຈະກຳນີ້



**3) ການຮ່ອນດິນຊາຍຈາກທີ່ສູງ ແລະ ຈາກບ່ອນຕ່ຳ**

**ອຸປະກອນ:** ເຂິງທີ່ມີຮູເປັນລະບົບດີ,ດິນຊາຍ

**ວິທີຫຼິ້ນ:**

- ເພີ່ມຄວາມສາມາດທາງດ້ານການຟັງ
- ໃຫ້ເດັກຜູ້ໜຶ່ງຢືນຂຶ້ນ ແລະ ຈັບເຊີງໄວ້
- ເອົາດິນຊາຍໃສ່ລົງໄປໃນເຊີງ ແລ້ວໃຫ້ເດັກຮ່ອນຊາຍລົງໃສ່ເຈ້ຍທີ່ເອົາປູຮອງພື້ນໄວ້
- ໃຫ້ເດັກຟັງສຽງດິນຊາຍຕົກລົງໃສ່ເຈ້ຍ
- ໃຫ້ເດັກສະແດງຄວາມເຫັນກ່ຽວກັບຖອກດິຊາຍຈາກບ່ອນສູງລົງບ່ອນຕ່ຳ

**4) ການພິມຮູບຕ່າງໆດ້ວຍດິນ**

ອຸປະກອນ: ດິນຊາຍແຫ້ງ ແລະ ດິນຊາຍປຽກ

- ແບບພິມຮູບຕ່າງໆ ຫຼື ອຸປະກອນພື້ນບ້ານກໍໄດ້

**ວິທີຫຼິ້ນ**:

- ໃຫ້ເດັກກວາດດິນຊາຍໃຫ້ພຽງ
- ໃຫ້ເດັກເນັ້ນຝາມື ແລະ ຕີນລົງດິນຊາຍເພື່ອເປັນຮູບມືປະໄວ້ ( ແບບນີ້ສາມາດຫຼິ້ນຜູ້ດຽວໄດ້)
- ໃຫ້ເດັກເຊັ່ນນີ້ເທິງດິນຊາຍແຫ້ງ ແລະ ດິນຊາຍປຽກ
- ໃຫ້ເດັກໄດ້ສະແດງຄວາມຄິດເຫັນຂອງເຂົາກ່ຽວກັບຮູບພິມດັ່ງກ່າວ
- ໃຫ້ເດັກຕັກດິຊາຍປຽກໃສ່ແບບພິມຮູບຕ່າງໆແລ້ວຂ້ວມລົງໃຫ້ເປັນຮູບຕາມພິມ
- ໃຫ້ເດັກສະແດງຄວາມເຫັນຂອງຕົນຕາມຮູບພິມແບບຕ່າງໆນັ້ນ

**5) ການຜອງດິນຊາຍ**

ເປັນການອກ ແລະ ຮ່າຍດິນຊາຍໃສ່ກະປ໋ອງ,ແກ້ວ ແລະ ກັບຕ່າງໆທີ່ມີຂະນາດຕ່າງກັນ

ອຸປະກອນ: ກະປ໋ອງເປົ່າຂະໜາດຕ່າງກັນ

- ກະໂປະໝາກພ້າວຂະໜາດຕ່າງກັນ
- ກະດານນ້ອຍ (ເຈ້ຍແກັດ)
- ດິນຊາຍແຫ້ງ

**ວິທີຫຼິ້ນ**:

- ໃຫ້ເດັກກອບເອົາດິນຊາຍແລ້ວໂຮຍລົງໃສ່ພື້ນດິນ
- ໃຫ້ເດັກຮ່າຍດິນຊາຍໃສ່ກະປ໋ອງຂະໜາດຕ່າງກັນ
- ໃຫ້ເດັກຖອກດິນຊາຍຈາກກະປ໋ອງນ້ອຍຫຼາຍໆກະປ໋ອງໃສ່ກະປ໋ອງໃຫ່ຍ ແລະແຖອກດິນຊາຍຈາກກະປ໋ອງໃຫ່ຍໃສ່ກະປ໋ອງນ້ອຍຫຼາຍໆອັນ

**6) ການປະດັບດິນຊາຍຕາມຮູບ**

ອຸປະກອນ: ຮູບແຕ້ມຕ່າງໆ

- ກາວ

ວິທີຫຼິ້ນ:
- ໃຫ້ເດັກທາກາວໃສ່ຮູທີ່ມີໃນມືນັ້ນ
- ໂຮຍດິນຊາຍໃສ່ກາວທີ່ມີຢູ່ໃນຮູບນັ້ນ
- ໃຊ້ມືເນັ້ນດິນຊາຍລົງກາວໃຫ້ແຈບດີ

**✶ ສິ່ງທີ່ຄວນເອົາໃຈໃສ່**

1. ການຫຼິ້ນດິນຊາຍຄູຄວນໃຫ້ມີດິນແຫ້ ແລະ ດິນຊາຍປຽກ
2. ຄູຕ້ອງຕິດຕາມໃນຂະນະທີ່ເດັກຫຼິ້ນເພື່ອບໍ່ໃຫ້ເດັກເອົາຊາຍສາດໃສ່ກັນ
3. ເມື່ອເລີກຫຼິ້ນທຸກຄັ້ງຕ້ອງເຂ່ຍດິນຊາຍໃຫ້ຮຽບຮ້ອຍຄືກັບວ່າບໍ່ມີຄົນມາຫຼິ້ນ
4. ເຄື່ອງຫຼິ້ນຈະຕ້ອງອະນາໄມໃຫ້ສະອາດແລ້ວເກັບມຍັ້ນໄວ້ບ່ອນເກົ່າ

5. ຄູນຳພາເດັກຫຼິ້ນດິນຊາຍຫຼືປະດັບປະດາອ່າງຊາຍທີ່ຢູ່ໃນຫ້ອງໃຫ້ເຂົ້າກັບໜ່ວຍການສອນໃນແຕ່ລະວັນ.

**+ ການຫຼິ້ນນໍ້າ.**

ແມ່ນກິດຈະກຳໜຶ່ງທີ່ສ້າງປະສົບການໃຫ້ແກ່ເດັກເດັກຈະມຜກການຫຼິ້ນນໍ້າທີ່ສຸດ ເພາະນໍ້າເປັນສິ່ງທີ່ດຶງດູດຈິດໃຈຂອງເດັກພາໃຫ້ເດັກເກີດຄວາມເບີກບານມ່ວນຊື່ນ,ການດິນນໍ້າແມ່ນເພື່ອພັດທະນາຄວາມຄິດ ແລະ ນຳພາເດັກໄປສູ່ປະສົບການອັນໃໝ່.

**+ ການຖອກນໍ້າ**

- ໃຫ້ເດັກເອົານໍ້າໃສ່ກະປ໋ອງບົວຫົດຜັກ 2 ອັນໃຫ້ເຕັມ
- ໃຫ້ເດັກສັງເກດວ່ານໍ້າໄຫຼອອກຈາກບົວແນວໃດເມື່ອເວລາບົວງ່ຽງ

**ຂັ້ນຕອນທີ1:**

- ໃຫ້ເດັກຖອກນໍ້າອອກຈາກກະປ໋ອງໃສ່ບົວຫົດຜັກນ້ອຍ
- ໃຫ້ເດັກຜູ້ໜຶ່ງຍົກບົວຂຶ້ນ (ປະມານ 8-10 ນິ້ວ)
- ໃຫ້ເດັກສັງເກດນໍ້າທີ່ໄຫຼອອກຈາກຮູບບົວ



**ຂັ້ນຕອນທີ**2:

- ໃຫ້ເດັກຖອກນໍ້າອອກຈາກບົວໃນລະດັບສູງ
- ໃຫ້ເດັກສັງເກດເບິ່ງໃນເວລານໍ້າຕົກຈາກບ່ອນສູງມັນຈະແຕກຈ່ານອອກຮູບົວຫົດຜັກສະແດງເຖິງລັກສະນະແຕກຕ່າງຂອງນໍ້າລອດຫົວບົວລົງສູ່ອ່າງໃນລະດັບສູງແຕກຕ່າງກັນ



**+ ຣ່າຍນ້ຳ**

✶ ຣ່າຍນ້ຳໂດຍຜ່ານຈວຍ

- ໃຫ້ເດັກຣ່າຍຈາກກະປ໋ອງທີ່ມີນ້ຳເຕັມໃສ່ຊາມໂດຍຜ່ານຈວຍ(ທຳອິດຣ່າຍຢູ່ໃນລະດັບຕ່ຳຕໍ່ມາກໍ່ຈັດໃຫ້ຢູ່ໃນລະດັບສູງຂຶ້ນ)
- ໃຫ້ເດັກສັງເກດສິ່ງທີ່ເກີດຂຶ້ນໃນຂະນະທີ່ຣ່າຍນ້ຳ ແລະ ນ້ຳຕົກລົງໃສ່ຊາມ
- ໃຫ້ເດັກເຮັດຕາມແບບທີ່ຖອກນ້ຳໃສ່ແກ້ວປາກນ້ອຍໂດຍຜ່ນຂວຍ (ໃຫ້ເດັກປຽກທຽບວິທີຣ່າຍ-ຖອກທັງສອງແບບ).



**✶ ຣ່າຍນ້ຳໃສ່ອຸປະກອນສຳລັບບັນຈຸນ້ຳ**

- ການຣ່າຍນ້ຳຈາກກະປ໋ອງໜຶ່ງຫາອີກກະປ໋ອງໜຶ່ງ ແລະຈາກກະປ໋ອງໃຫ່ຍໃສ່ກະປ໋ອງນ້ອຍຫຼາຍໆອັນທີ່ມີຂະນາດຕ່າງກັນ



- ການຣ່າຍນ້ຳຈາກກະປ໋ອງນ້ອຍໃສ່ກະປ໋ອງໃຫ່ຍ

ສະຫຼຸບ: ການຫຼິ້ນນຊາຍ, ຫຼິ້ນນ້ຳແມ່ນແບບຫຼິ້ນທີ່ມີຄວາມສຳຄັນຕໍ່ພັດທະນາການຂອງເດັກເປັນສິ່ງທີ່ດຶງດູດຈິດໃຈຂອງເດັກ, ເຮັດໃຫ້ເດກັມີຄວາມເບີກບານມ່ວນຊື່ນ, ເດັກໄດ້ຮັບໂຮມເອົາປະສົບການແຫ່ງການຮຽນຮູ້, ເປັນການສົ່ງເສີມໃຫ້ເຂົາມີຫົວຄິດປະດິດສ້າງນຳອີກ.



**ການເປົ່າຟອງສະບູ**

ອຸປະກອນ: ທໍ່ດູດ,ນ້ຳສະບູ

ວິທີປະຕິບັດ: ໃຫ້ເດັກເອົາປາຍທໍ່ດູດຈຸ່ມລົງໃນນ້ຳສະບູ,ຈາກນັ້ນກໍ່ເປົ່າເປັນຝອດອອກມາ.



ຈ. ການຫຼິ້ນເຄື່ອງຫຼິ້ນໃນຣິ່ມ, ຫຼິ້ນຕາມມູມ ຫຼື ຕາມຄວາມມັກຂອງເດັກ ( ຕາມໃຈ )

ການຈັດກິດຈະກຳການຫຼິ້ນກາງແຈ້ງບາງຄັ້ງອາດຈະບໍ່ສອດຄ່ອງກັບໜ່ວຍການສອດ, ແຕ່ສິງສຳຄັນໃຫ້ເດັກໄດ້ອອກກຳລັງກາຍ, ໄດ້ເຝິກກ້າມຊີ້ນໃຫຍ່, ກ້າມຊີ້ນນ້ອຍ ແລະ ທຸກພາກສ່ວນໃນຮ່າງກາຍໃນການເຄື່ອນໄຫວຕ່າງໆ, ໃຫ້ເດັກໄດ້ຮັບຄວາມເບີກບານມ່ວນຊື່ນ, ໄດ້ຫຼິ້ນເປັນກຸ່ມ, ປັບຕົວເຂົ້າກັບໝູ່ເພື່ອນ ແລະ ມີຈິນຕະນາການສ້າງສັນ, ອີກປະການໜຶ່ງຄູຈະຕ້ອງຄັດເລືອກເອົາບົດແບບຫຼິ້ນທີ່ສອດຄ່ອງກັບສະພາບດິນຟ້າອາກາດ, ລະດູການ, ສອດຄ່ອງກັບອາຍຸເດັກ, ສະພາບແວດລ້ອມຂອງຫ້ອງຮຽນ ແລະ ໂຮງຮຽນແຕ່ສິ່ງສຳຄັນຄູບໍ່ຄວນເອົາແບບຫຼິ້ນທີ່ຍາກ ແລະ ແບບຫຼິ້ນເກົ່າມາພາເດັກຫຼິ້ນ ເຊິ່ງຈະເຮັດໃຫ້ເດັກມີຄວາມເບື່ອໜ່າຍ ແລະ ບໍ່ຢາກຫຼິ້ນ.



ຮູບພາບ: ການຫຼິ້ນເຄື່ອງຫຼິ້ນໃນຫ້ອງຮຽນ

❖ **ໃນເວລາຈັດກິດຈະກຳການຫຼິ້ນກາງແຈ້ງ**

ເຖິງວ່າການຫຼິ້ນກາງແຈ້ງເປັນການຫຼິ້ນທີ່ເດັກຫຼິ້ນຢ່າງອິດສະລະ ແຕ່ຄູກໍ່ຄວນຈັດຕັ້ງໃຫ້ເດັກໄດ້ຫຼິ້ນຄັກແນ່ ເພື່ອໃຫ້ການຫຼິ້ນນັ້ນເກີດປະໂຫຍດ ແລະ ມີຄວາມປອດໄພ, ການຈັດກິດຈະກຳກາງແຈ້ງຄູຄວນຈັດດັ່ງນີ້:

**ກ. ການນຳພາເດັກອອກຈາກຫ້ອງ**

ການນຳພາເດັກອອກຈາກຫ້ອງໄປສູ່ເດີ່ນຢ່າງເປັນລະບຽບ,ເປັນການເຝິກແອບໃຫ້ເດັກມີລະບຽບ ແລະ ກໍເປັນການງ່າຍແກ່ການຈັດຕັ້ງການອົບອຸ່ນຮ່າງກາຍ ແລະ ກໍເປັນການງ່າຍແກ່ການຈັດຕັ້ງການອົບອຸ່ນຮ່າງກາຍ ແລະ ການຫຼິ້ນຕໍ່ໄປ ຖ້າເດັກອອກຈາກຫ້ອງຢ່າງບໍ່ເປັນລະບຽບຈະຊະຊາຍ ແລະ ເສຍເວລາໃນການຈັດຮູບແບບ, ວິທີເອົາອອກຈາກຫ້ອງຄູຄວນປະຕິບັດດັ່ງນີ້:

- ຈັດແຖວໜຶ່ງໃຫ້ເດັກຈັບບ່າຕໍ່ກັນ,ຄາຍຄືລົດໄຟ ຫຼື ບິນຕາມຫຼັງກັນເໝືອນນົກບິນແລ້ວຍ່າງຊ້າໆຕາມຫຼັງກັນ
- ຈັດສອງແຖວ ໃຫ້ເດັກຈັບມືກັນເປັນຄູ່ອອກມາ.

**ຂ. ຈັດແຖວເພື່ອນອົບອຸ່ນຮ່າງກາຍ**

ການຈັດຮູບແຖວເພື່ອອົບອຸ່ນຮ່າງກາຍ ຄວນຈັດເປັນຮູບແບບດຽວກັບການຫຼິ້ນແບບຫຼິ້ນຕໍ່ເພື່ອບໍ່ໃຫ້ຫຍຸ້ງຍາກເສຍເວລາຈັດໃໝ່.

**ຄ. ອົບອຸ່ນຮ່າງກາຍ**

ຄວນມີການອົບອຸ່ນກັບທີ່ຫາເຄື່ອນທີ່ ເພື່ອໃຫ້ການອົບອຸ່ນຮ່າງກາຍມີຄວາມເບີກບານມ່ວນຊື່ນ ແລະ ໄດ້ບໍລິຫານທຸກພາກສ່ວນຂອງຮ່າງກາຍຈາກເບົາໄປຫາໜັກ. ຄູອາດຈະໃຊ້ວິທີສົມມຸດເດັກເປັນສິ່ງໃດສິ່ງໜຶ່ງ, ບາງຄັ້ງອາດຈະໃຊ້ບົດເພງປະກອບ,ໃຊ້ອຸປະກອນເຂົ້າຊ່ວຍໃນການເຄື່ອນໄຫວ.

**ງ. ສະເໜີການຫຼິ້ນ**

ຫຼັງຈາກການອົບອຸ່ນຮ່າງກາຍແລ້ວ ຄູກໍ່ສະເໜີແບບຫຼິ້ນ ຫຼື ສະເໜີໃຫ້ເດັກຫຼິ້ນ ພ້ອມທັງອະທິບາຍວິທີຫຼິ້ນ ແລະ ກະຕິກາໃຫ້ເດັກເຂົ້າໃຈ ຖ້າຈຳເປັນໃນຂັ້ນຕອນນີ້ຄູກໍ່ອາດຈະສາທິດວິທີຫຼິ້ນໃຫ້ເດັກໄດ້ເບິ່ງກ່ອນ ເພື່ອໃຫ້ເດັກໄດ້ຫຼິ້ນຢ່າງຖືກຕ້ອງ ຫຼື ຄູຈະໃຫ້ເດັກຄົນໃດຄົນໜຶ່ງອອກມາຫຼິ້ນໃຫ້ໝູ່ເບິ່ງ.

**ຈ. ການຫຼິ້ນຢ່າງເບີກບານມ່ວນຊື່ນ ແລະ ປອດໄພ**

ເມື່ອສັງເກດເຫັນວ່າເດັກເຂົ້າໃຈແລ້ວ ຄູກໍ່ໃຫ້ເດັກຫຼິ້ນຢ່າງເບີກບານມ່ວນຊື່ນ ແລະ ປອດໄພໃນຂັ້ນຕອນນີ້ຄູຄວນຕິດຕາມການຫຼິ້ນຂອງເດັກຢ່າງໃກ້ຊິດ,ແຕ່ບໍ່ຄວນເຂົ້າໄປລົບກວນແຕ່ຖ້າຈຳເປັນໃນກໍລະນີເດັກຫຼິ້ນບໍ່ຖືກວິທີ ຫຼື ເປັນອັນຕະລາຍແກ່ເດັກ ຄູຄວນຢຸດການຫຼິ້ນໂດຍໄວເຊັ່ນ: ເດັກຂີ່ຕະລູດໂດຍເອົາຫົວລົງກ່ອນ.

**ສ. ໃຫ້ເດັກຫຼິ້ນຢ່າງອິດສະຫຼະ**

ຄວນໃຫ້ເດັກຫຼິ້ນຢ່າງອິດສະຫຼະປະມານ5-10ນາທີ ຫຼັງຈາກທີ່ເດັກໄດ້ຫຼິ້ນໂດຍການຈັດຕັ້ງຂອງຄູແລ້ວ ການໃຫ້ເດັກຫຼິ້ນຢ່າງອິດສະຫຼະນັ້ນ ໝາຍເຖິງການໃຫ້ເດັກຫຼິ້ນຕາມໃຈ ໄດ້ເລືອກຫຼິ້ນສິ່ງທີ່ຕົນເອງພໍໃຈ ເຖິງວ່າເດັກຈະຫຼິ້ນຕາມໃຈ ແຕ່ກໍ່ບໍ່ໝາຍຄວາມວ່າຄູຈະໝົດພາລະໜ້າທີ່ໃນການຄອຍດູແລ ເພື່ອໃຫ້ເດັກຫຼິ້ນຢ່າງປອດໄພ.

**ຊ. ການຜ່ອນຄາຍກ້າມຊີ້ນຫຼັງຈາກການຫຼິ້ນ**

ໃນເວລາເດັກໄດ້ອອກກຳລັງກາຍຢ່າງຕັ້ງໜ້າ. ດັ່ງນັ້ນຫຼັງການຫຼິ້ນແລ້ວຄູຄວນໃຫ້ເດັກໄດ້ຜ່ອນຄາຍກ້າມຊີ້ນ ໂດຍອາດຈະໃຫ້ເດັກຄ່ອຍໆຍ່າງພ້ອມຫາຍໃຈເຂົ້າອອກ ຫຼື ອາດຈະຈະໃຫ້ເດັກໄດ້ນັ່ງພັກຜ່ອນ,ໃນໂອກາດສົນທະນາກັບເດັກກ່ຽວກັບຂໍ້ດີເສຍຂອງການຫຼິ້ນພ້ອມທັງສຶກສາເດັກໄປພ້ອມ.

**ຍ. ເກັບມ້ຽນອຸປະກອນ**

ພາຍຫຼັງສຳເລັດການຫຼິ້ນແລ້ວຄູຄວນແນະນຳເດັກເກັບມ້ຽນອຸປະກອນໃນການຫຼິ້ນ ແລະ ອານາໄມໃຫ້ສະອາດ, ພ້ອມກັນນີ້ກໍ່ຄວນໃຫ້ເດັກເຮັດອານາໄມຕີນ, ມື ຫຼື ຕົນຕົວໃຫ້ສະອາດຈາກນັ້ນຈິ່ງກັບຄືນເຂົ້າຫ້ອງຮຽນ.

**ດ. ກັບເຂົ້າຫ້ອງດ້ວຍຄວາມເປັນລະບຽບ**

ເມື່ອຄູກວດເບິ່ງທຸກຢ່າງຮຽບຮ້ອຍແລ້ວ, ຄູກໍ່ຈັດຕັ້ງໃຫ້ເດັກເຂົ້າຫ້ອງອາດໃຫ້ຍ່າງເຂົ້າເປັນລະບຽບຄືກັບຕອນທີ່ອອກມາຈາກຫ້ອງ.

✶ **ສິ່ງທີ່ຄວນເອົາໃຈໃສ່**

ກ່ອນຈະນຳພາເດັກຫຼິ້ນກາງແຈ້ງ ຄູຄວນເອົາໃຈໃສ່ບາງບັນຫາດັ່ງນີ້:

1) ການເລືອກແບບຫຼິ້ນຄູຕ້ອງເອົາໃຈໃສ່ລະດູການ,ດິນຟ້າອາກາດ ແລະ ເບິ່ງສະພາບແວດລ້ອມໃນໂຮງຮຽນ ຫຼື ເດີ່ນຫຼິ້ນ.
2) ສຸຂະພາບຂອງເດັກ ( ການນຸ່ງຖືໃນເວລາເຄື່ອນໄຫວ)
3) ຕ້ອງກວດເບິ່ງເຄື່ອງຫຼິ້ນໃນເດີ່ນທີ່ຮັບປະກັນຄວາມປອດໄພ.
4) ກ່ອນນຳພາເດັກຫຼິ້ນຕ້ອງນຳພາເດັກໄດ້ເຄື່ອນໄຫວກິດຈະກຳໃດໜຶ່ງກ່ອນເພື່ອເປັນການອົບອຸ່ນຮ່າງກາຍ.
5) ໃນອາທິດໜຶ່ງຄູຄວນໃຫ້ເດັກໄດ້ຫຼິ້ນແບບຫຼິ້ນທີ່ຕ່າງກັນ ບໍ່ຄວນຊ້ຳກັນ ເພາະເດັກຈະບໍ່ສົນໃຈໃນການຫຼິ້ນ.
6) ການເລືອກແບບຫຼິ້ນບາງຄັ້ງອາດສຳພັນກັບໜ່ວຍການສອນ ຫຼື ບາງຄັ້ງບໍ່ສຳພັນກັບໜ່ວຍການສອນກໍ່ໄດ້ ແຕ່ສິ່ງສຳຄັນຕ້ອງເໝາະສົມກັບອາຍຸຂອງເດັກ.
7) ຫຼັງ ຈາກຫຼິ້ນແລ້ວຄູຕ້ອງໃຫ້ເດັກທຳຄວາມສະອາດຮ່າງກາຍ ແລະ ປະເມີນຜົນທຸກຄັ້ງ.

4.4 **ການແຕ່ງບົດສອນ ແລະ ເຝິກສອນຕົວຈິງ**

## ບົດສອນແບບຢ່າງ

**ກິດຈະກຳກາງແຈ້ງ**

**ຫົວຂໍ້:** ການຫຼິ້ນພື້ນເມືອງ ( ແບບຫຼິ້ນ: ແບ້ກິນໝາກເຂືອ )

1. **ຈຸດປະສົງ**
   - ເຝິກກ້າມຊີ້ນນ້ອຍ - ໃຫຍ່ມີຄວາມແຂງແຮງ.
   - ສາມາດຫຼິ້ນແບບຫຼິ້ນນຳສາວຄູໄດ້.
   - ເຝິກໃຫ້ເດັກມີສະຕິລະມັດລະວັງຕົວ.
2. **ເນື້ອໃນ**
   - ເພງ:ແມງກະເບື້ອແສນງາມ
   - ແບບຫຼິ້ນ: ແບ້ກິນໝາກເຂືອ

3. ກິດຈະກຳ

+ **ຂັ້ນນຳເຂົ້າສູ່ບົດຮຽນ**

- ຈັດເດັກຢືນເປັນຮູບວົງມົນແລ້ວພາເດັກຮ້ອງເພງຕາມໜ່ວຍການສອນ.

- ຄູໃຫ້ເດັກຢືນເປັນຮູບວົງມົນ ເພື່ອອົບອຸ່ນຮ່າງກາຍເຊັ່ນ: ໝູນເຂົ່າ,ແກ່ວງແຂນເບື້ອງຊ້າຍ- ຂວາ, ແລ່ນກັບທີ່ໂດດ.

- ໃຫ້ເດັກແລ່ນເປັນວົງມົນ 1 ຮອບ

- ຄູໃຫ້ເດັກນັ່ງລົງເປັນຮູບວົງມົນ

+ **ຂັ້ນດຳເນີນການສອນ**

- ສະເໜີແບບຫຼິ້ນທີ່ຈະພາເດັກຫຼິ້ນ ( ແບບຫຼິ້ນແບ້ກິນໝາກເຂືອ )

- ຄູໃຫ້ເດັກຢືນເປັນວົງມົນເອົາມືຈັບກັນ

- ຄູສາທິດ ແລະ ອະທິບາຍວິທີຫຼິ້ນໃຫ້ນັກຮຽນເບິ່ງ ແລະ ຟັງ.

**ວິທີຫຼິ້ນ:**

ແມ່ນໃຫ້ນັກຮຽນ 2 ຄົນອອກມາຄົນໜຶ່ງເປັນແບ້ ແລະ ອີກຄົນໜຶ່ງເປັນໝາກເຂືອ, ຜູ້ຫຼິ້ນທັງສອງແມ່ນໃຫ້ເອົາຜ້າແພມັດຕາ, ຜູ້ເປັນໝາກເຂືອຕ້ອງຮ້ອງວ່າ ໝາກເຂືອຕະຫຼອດເວລາ, ພ້ອມທັງລົບຫຼີກຈາກການໄລ່ຈັບຂອງແບ້, ຜູ້ເປັນແບ້ກໍ່ຕ້ອງພະຍາຍາມຈັບໝາກເຂືອໃຫ້ໄດ້ພ້ອມທັງສົ່ງສຽງຮ້ອງອອກມາວ່າແບ້, ແບ້.ຖ້າຫາກຈັບໄດ້ຕ້ອງປ່ຽນໃຫ້ຜູ້ອື່ນເຂົ້າມາຫຼິ້ນທັນທີ.

- ໃຫ້ເດັກປະຕິບັດຕົວຈິງ(ຫຼິ້ນຕົວຈິງ )

- ຄູຕິດຕາມການຫຼິ້ນຂອງເດັກແຕ່ລະຄູ່

- ໃຫ້ເດັກຜັດປ່ຽນການຫຼິ້ນໝົດທຸກຄົນຢ່າງທົ່ວເຖິງ.

- ຄູພາເດັກຮ້ອງເພງປະກອບທ່າທາງ(ແມງກະເບື້ອແສນງາມ)

+ **ຂັ້ນສະຫຼຸບບົດຮຽນ**

- ຄູຖາມເດັກວ່າມີໃຜແດ່ເປັນແບ້, ມີໃຜແດ່ເປັນໝາກເຂືອ.ໃຫ້ເດັກເຮັດທ່າທາງສຽງຮ້ອງຂອງແບ້ ແລະ ໝາກເຂືອ

- ຍ້ອງຍໍຊົມເຊີຍ

- ພາເດັກຮ້ອງເພງ ( ແມງກະເບື້ອນ້ອຍ )

+ **ວັດຜົນ**

- ໃຫ້ເດັກ ອອກມາຫຼິ້ນ 1 - 2 ຄູ່

- ຍ້ອງຍໍຊົມເຊີຍ

+ **ສຶກສາອົບຮົມ:**

- ໃນເວລາຫຼິ້ນພວກຫຼານຕ້ອງມີສະຕິຟັງສຽງຮ້ອງຂອງໝູ່.ຜູ້ທີ່ໄດ້ຫຼິ້ນແລ້ວປ່ຽນໝູ່ຜູ້ອື່ນໄດ້ຫຼິ້ນນຳ.

+ **ວຽກບ້ານ**

- ໃຫ້ພວກຫຼານຖືບານນ້ອຍມາຜູ້ລະໜ່ວຍໃນມື້ໜ້າ.

- ໃຫ້ເດັກພັກຜ່ອນ

**4. ອຸປະກອນ**

- ບົດເພງ, ຕົວເດັກ, ແພມັດຕາ.

**5. ປະເມີນ**

- ສັງເກດການຫຼິ້ນຂອງເດັກ

**4.5 ສຶກສາ ວິເຄາະກ່ຽວກັບການສອນກິດຈະກຳການຫຼິ້ນກາງແຈ້ງ**

**ແຜນການສອນ 1 ອາທິດ**

**ມື້ທີ 1**

**ກິດຈະກຳກາງແຈ້ງ**

**ຫົວຂໍ້: ຍ່າງຕາມເສັ້ນຊື່**

1. **ຈຸດປະສົງ ນັກຮຽນສາມາດ:**
   - ຍ່າງຕາມເສັ້ນຊື່ໃນໄລຍະ 5 ແມັດໂດຍໃຊ້ແຂນຂາປະສານກັນໄດ້ຢ່າງຄ່ອງແຄ້ວ
   - ຫຼິ້ນແບບຫຼິ້ນຢ່າງມີຄວາມລະມັດລະວັງ ແລະ ມີຄວາມມ່ວນຊື່ນ.
2. **ເນື້ອໃນ**
   - ຍ່າງຕາມເສັ້ນຊື່ໃນໄລຍະ 5 ແມັດໂດຍໃຊ້ແຂນຂາປະສານກັນໄດ້ຢ່າງຄ່ອງແຄ້ວ
   - ຫຼິ້ນແບບຫຼິ້ນຢ່າງມີຄວາມລະມັດລະວັງ ແລະ ມີຄວາມມ່ວນຊື່ນ.
3. **ສື່ການຮຽນ-ການສອນ**
   - ກະແຊັກ ແລະ ສໍຂາວສຳລັບຂີດເສັ້ນ
   - ເຊືອກຍາວໄລຍະ 5 ແມັດ (ວິທີຫຼິ້ນໃຫ້ນັກຮຽນເບິ່ງຢູ່ໃນໜ່ວຍຄອບຄົວ)
4. **ກິດຈະກຳການຮຽນ-ການສອນ**

**+ ຂັ້ນນຳເຂົ້າສູ່ບົດຮຽນ**

- ຄູຈັດນັກຮຽນຢືນເປັນ 2 ແຖວຊື່ ແລ້ວພານັກຮຽນອອກໄປນອກຫ້ອງ
- ຄູພານັກຮຽນອົບອຸ່ນຮ່າງກາຍດ້ວຍການພານັກຮຽນ ໝູນແອວ, ສັ່ນຂໍ້ມື, ໝູນເຂົ່າ ແລະ ໃຫ້ນັກຮຽນເຕັ້ນກັບທີ່ຂຶ້ນ-ລົງ 2-3 ເທື່ອ

**+ ຂັ້ນດຳເນີນການສອນ**

- ຄູອະທິບາຍ ແລະ ສາທິດວິທີຫຼິ້ນໃຫ້ນັກຮຽນເບິ່ງກ່ອນ1ເທື່ອ ຈາກນັ້ນຄູຈິ່ງໃຫ້ນັກຮຽນຫຼິ້ນຕົວຈິງ.
- ຄູແບ່ງນັກຮຽນອອກເປັນ 2 ກຸ່ມແຂ່ງຂັນກັນຫຼິ້ນ
- ຄູໃຫ້ນັກຮຽນແຕ່ລະກຸ່ມຫຼິ້ນປະມານ 2-3 ເທື່ອ
- ຄູຕິດຕາມຊ່ວຍເຫຼືອນັກຮຽນຜູ້ທີ່ຫຼິ້ນບໍ່ທັນໄດ້ດີ.

**+ ຂັ້ນສະຫຼຸບບົດຮຽນ**

- ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນບົດຮຽນດ້ວຍການຕັ້ງຄຳຖາມ ຖາມນັກຮຽນຄືນວ່າ ຄູພາພວກຫຼານຫຼິ້ນແບບຫຼິ້ນຫຍັງ?

- ຄູໃຫ້ນັກຮຽນເວົ້າຄືນແບບຫຼິ້ນ 1-2 ຄົນ

**+ ສຶກສາອົບຮົມນັກຮຽນ**

- ໃນເວລາປະຕິບັດກິດຈະກຳຮ່ວມກັບໝູ່ ຕ້ອງມີຄວາມລະມັດລະວັງບໍ່ໃຫ້ແລ່ນຕຳໝູ່ ແລະ ບໍ່ໃຫ້ຍູ້ຫຼັງກັນ ຫຼັງຈາກຫຼິ້ນແລ້ວພວກນ້ອງຕ້ອງໄປອະນາໄມຮ່າງກາຍໃຫ້ສະອາດກ່ອນຈິ່ງເຂົ້າຫ້ອງຮຽນ.

**5. ການວັດ ແລະ ປະເມີນຜົນ**

- ສັງເກດການຍ່າງຕາມເສັ້ນຊື່ໃນໄລຍະ 5 ແມັດໂດຍໃຊ້ແຂນຂາປະສານກັນຂອງນັກຮຽນແຕ່ລະຄົນ
- ສັງເກດການຫຼິ້ນແບບຫຼິ້ນຢ່າງມີຄວາມລະມັດລະວັງ ແລະ ມີຄວາມມ່ວນຊື່ນຂອງນັກຮຽນແຕ່ລະຄົນ.

## ມື້ທີ 2

## ກິດຈະກຳກາງແຈ້ງ

**ຫົວຂໍ້: ຫຼິ້ນແບບຫຼິ້ນປັກທຸງ**

**1. ຈຸດປະສົງ ນັກຮຽນສາມາດ:**

- ຫຼິ້ນແບບຫຼິ້ນປັກທຸງໄດ້
- ຫຼິ້ນແບບຫຼິ້ນຢ່າງມີຄວາມມ່ວນຊື່ນ ແລະ ປອດໄພ

**2. ເນື້ອໃນ**

- ຫຼິ້ນແບບຫຼິ້ນປັກທຸງ
- ຫຼິ້ນແບບຫຼິ້ນຢ່າງມີຄວາມມ່ວນຊື່ນ ແລະ ປອດໄພ

**3. ສື່ການຮຽນ-ການສອນ**

- ທຸງທີ່ເຮັດດ້ວຍຜ້າແພ
- ກອງ ຫຼື ກະແຊັກ

**4. ກິດຈະກຳການຮຽນ-ການສອນ**

**+ ຂັ້ນນຳເຂົ້າສູ່ບົດຮຽນ**

- ຄູຈັດນັກຮຽນຢືນແຖວເຄິ່ງວົງມົນແລ້ວພານັກຮຽນເອົາມືຄ້ຳແອວເຕັ້ນຂຶ້ນລົງກັບທີ່ຈາກນັ້ນກໍພານັກຮຽນ ບິດແອວຊ້າຍ-ຂວາ ແລ້ວຍົກມືຂຶ້ນແກ່ວງໄປມາ
- ຄູພານັກຮຽນແລ່ນຊ້າຕາມເດີ່ນໂຮງຮຽນປະມານ 1 ຮອບ

**+ ຂັ້ນດຳເນີນການສອນ**

- ຄູອະທິບາຍ ແລະ ແນະນຳວິທີຫຼິ້ນປັກທຸງຕາມຂັ້ນຕອນດັ່ງນີ້:
- ຄູກຳນົດຈຸດເລີ່ມຕົ້ນຫາຈຸດປັກທຸງໄລຍະຫ່າງ 10 ແມັດ
- ຄູແບ່ງນັກຮຽນອອກເປັນ 2 ກຸ່ມ ໃຫ້ແຕ່ລະກຸ່ມເລືອກເອົາຕົວແທນຂອງກຸ່ມລະ 1 ຄົນອອກມາແຂ່ງຂັນກັນ ປັກທຸງສ່ວນທີ່ນັກຮຽນທີ່ຈະລົງແຂ່ງຂັນໃຫ້ຢືນຈັບທຸງຢູ່ຈຸດເລີ່ມຕົ້ນ ຖ້າຄູໃຫ້ສັນຍານໃຫ້ແລ່ນໄປປັກໃສ່ ບ່ອນທີ່ຄູກຳນົດໄວ້ ຖ້າໃຜຮອດ ແລະ ປັກທຸງແລ້ວກ່ອນຖືວ່າທີມນັ້ນຊະນະ
- ຄູໃຫ້ນັກຮຽນປະຕິບັດຫຼິ້ນຕົວຈິງປະມານ 2-3 ເທື່ອ
- ຄູຕິດຕາມຊ່ວຍເຫຼືອນັກຮຽນຜູ້ທີ່ຫຼິ້ນບໍ່ທັນໄດ້ດີ.

**+ ຂັ້ນສະຫຼຸບບົດຮຽນ**

- ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນບົດຮຽນດ້ວຍການຕັ້ງຄຳຖາມ ຖາມນັກຮຽນຄືນວ່າ ຄູພາພວກ ຫຼານຫຼິ້ນແບບຫຼິ້ນຫຍັງ?
- ຄູໃຫ້ນັກຮຽນເວົ້າຄືນແບບຫຼິ້ນ 1-2 ຄົນ

**+ ສຶກສາອົບຮົມນັກຮຽນ**

ການຫຼິ້ນນັກຮຽນທຸກຄົນຕ້ອງມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນເວລາແລ່ນຕ້ອງ ລະມັດລະວັງບໍ່ໃຫ້ແລ່ນຕຳກັນ, ບໍ່ໃຫ້ເຕະຂາກັນ, ບໍ່ໃຫ້ດຶງແຂນກັນພາຍຫຼັງ ຫຼິ້ນແລ້ວພວກນ້ອງຕ້ອງລ້າງຕີນ, ລ້າງ ມື ແລະ ເຊັດເຫື່ອໃຫ້ສະອາດກ່ອນຈິ່ງເຂົ້າຫ້ອງ.

5. **ການວັດ ແລະ ປະເມີນຜົນ**

- ສັງເກດຫຼິ້ນແບບຫຼິ້ນປັກທຸງຂອງນັກຮຽນແຕ່ລະຄົນ
- ສັງເກດຫຼິ້ນແບບຫຼິ້ນຢ່າງມີຄວາມມ່ວນຊື່ນ ແລະ ປອດໄພຂອງນັກຮຽນແຕ່ລະຄົນ.
-

**ມື້ທີ 3 ທວນຄືນໃນມື້ທີ 1**

**ກິດຈະກຳກາງແຈ້ງ**

**ຫົວຂໍ້: ຍ່າງຕາມເສັ້ນຊື່**

1. **ຈຸດປະສົງ ນັກຮຽນສາມາດ:**

- ຍ່າງຕາມເສັ້ນຊື່ໃນໄລຍະ 5 ແມັດໂດຍໃຊ້ແຂນຂາປະສານກັນໄດ້ຢ່າງຄ່ອງແຄ້ວ
- ຫຼິ້ນແບບຫຼິ້ນຢ່າງມີຄວາມລະມັດລະວັງ ແລະ ມີຄວາມມ່ວນຊື່ນ.

2. **ເນື້ອໃນ**

- ຍ່າງຕາມເສັ້ນຊື່ໃນໄລຍະ 5 ແມັດໂດຍໃຊ້ແຂນຂາປະສານກັນໄດ້ຢ່າງຄ່ອງແຄ້ວ
- ຫຼິ້ນແບບຫຼິ້ນຢ່າງມີຄວາມລະມັດລະວັງ ແລະ ມີຄວາມມ່ວນຊື່ນ.

3. **ສື່ການຮຽນ-ການສອນ**

- ກະແຊັກ ແລະ ສໍຂາວສຳລັບຂີດເສັ້ນ
- ເຊືອກຍາວໄລຍະ 5 ແມັດ (ວິທີຫຼິ້ນໃຫ້ນັກຮຽນເບິ່ງຢູ່ໃນໜ່ວຍຄອບຄົວ)

4. **ກິດຈະກຳການຮຽນ-ການສອນ**

**+ ຂັ້ນນຳເຂົ້າສູ່ບົດຮຽນ**

- ຄູຈັດນັກຮຽນຢືນເປັນ 2 ແຖວຊື່ ແລ້ວພານັກຮຽນອອກໄປນອກຫ້ອງ
- ຄູພານັກຮຽນອົບອຸ່ນຮ່າງກາຍດ້ວຍການພານັກຮຽນ ໝູນແອວ, ສັ່ນຂໍ້ມື, ໝູນເຂົ່າ ແລະ ໃຫ້ນັກຮຽນເຕັ້ນ ກັບທີ່ຂຶ້ນ-ລົງ 2-3 ເທື່ອ

**+ ຂັ້ນດຳເນີນການສອນ**

- ຄູອະທິບາຍ ແລະ ສາທິດວິທີຫຼິ້ນໃຫ້ນັກຮຽນເບິ່ງກ່ອນ1ເທື່ອ ຈາກນັ້ນຄູຈຶ່ງໃຫ້ນັກຮຽນຫຼິ້ນຕົວຈິງ.
- ຄູແບ່ງນັກຮຽນອອກເປັນ 2 ກຸ່ມແຂ່ງຂັນກັນຫຼິ້ນ
- ຄູໃຫ້ນັກຮຽນແຕ່ລະກຸ່ມຫຼິ້ນປະມານ 2-3 ເທື່ອ
- ຄູຕິດຕາມຊ່ວຍເຫຼືອນັກຮຽນຜູ້ທີ່ຫຼິ້ນບໍ່ທັນໄດ້ດີ.

**+ ຂັ້ນສະຫຼຸບບົດຮຽນ**

- ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນບົດຮຽນດ້ວຍການຕັ້ງຄຳຖາມ ຖາມນັກຮຽນຄືນວ່າ ຄູພາພວກຫຼານຫຼິ້ນແບບຫຼິ້ນຫຍັງ?
- ຄູໃຫ້ນັກຮຽນເວົ້າຄືນແບບຫຼິ້ນ 1-2 ຄົນ

**+ ສຶກສາອົບຮົມນັກຮຽນ**

- ໃນເວລາປະຕິບັດກິດຈະກຳຮ່ວມກັບໝູ່ ຕ້ອງມີຄວາມລະມັດລະວັງບໍ່ໃຫ້ແລ່ນຕຳໝູ່ ແລະ ບໍ່ໃຫ້ຍູ້ຫຼັງກັນຫຼັງຈາກຫຼິ້ນແລ້ວພວກນ້ອງຕ້ອງໄປອະນາໄມຮ່າງກາຍໃຫ້ສະອາດກ່ອນຈຶ່ງເຂົ້າຫ້ອງຮຽນ.

**5. ການວັດ ແລະ ປະເມີນຜົນ**

- ສັງເກດການຍ່າງຕາມເສັ້ນຊື່ໃນໄລຍະ 5 ແມັດໂດຍໃຊ້ແຂນຂາປະສານກັນຂອງນັກຮຽນແຕ່ລະຄົນ
- ສັງເກດການຫຼິ້ນແບບຫຼິ້ນຢ່າງມີຄວາມລະມັດລະວັງ ແລະ ມີຄວາມມ່ວນຊື່ນຂອງນັກຮຽນແຕ່ລະຄົນ.

## ມື້ທີ 4

## ກິດຈະກຳກາງແຈ້ງ

**ຫົວຂໍ້: ຫຼິ້ນແບບຫຼິ້ນແລ່ນສົ່ງດອກໄມ້**

**1. ຈຸດປະສົງ ນັກຮຽນສາມາດ:**

- ຫຼິ້ນແບບຫຼິ້ນແລ່ນສົ່ງດອກໄມ້ໄດ້
- ຫຼິ້ນແບບຫຼິ້ນຢ່າງມີຄວາມມ່ວນຊື່ນ ແລະ ປອດໄພ

**2. ເນື້ອໃນ**

- ຫຼິ້ນແບບຫຼິ້ນແລ່ນສົ່ງດອກໄມ້
- ຫຼິ້ນແບບຫຼິ້ນຢ່າງມີຄວາມມ່ວນຊື່ນ ແລະ ປອດໄພ

**3. ສື່ການຮຽນ-ການສອນ**

- ດອກໄມ້
- ກອງ ຫຼື ກະແຊັກ

**4. ກິດຈະກຳການຮຽນ-ການສອນ**

**+ ຂັ້ນນຳເຂົ້າສູ່ບົດຮຽນ**

- ຄູຈັດນັກຮຽນອົບອຸ່ນຮ່າງກາຍດ້ວຍການຢືນແກ່ວງແຂນໄປທາງໜ້າ-ທາງຫຼັງ, ຕົບມືຂ້າງຊ້າຍ-ຕົບມືຂ້າງຂວາໝູນຄໍ່ຕີນ.
- ຄູຕີບກອງເປັນຈັ່ງຫວະຊ້າ-ໄວ ແລ້ວໃຫ້ນັກຮຽນຍ່າງຕາມສຽງຈັງຫວະທີ່ຄູຕີບກອງລົງເດີ່ນ

**+ ຂັ້ນດຳເນີນການສອນ**

- ຄູອະທິບາຍ ແລະ ສາທິດວິທີຫຼິ້ນແບບຫຼິ້ນແລ່ນສິ່ງດອກໄມ້ໃຫ້ນັກຮຽນສັງເກດເບິ່ງ 1-2 ເທື່ອ
- ຄູແບ່ງນັກຮຽນອອກເປັນ 2 ກຸ່ມ ໃຫ້ແຕ່ລະກຸ່ມ ຫຼິ້ນແບບຫຼິ້ນສິ່ງດອກໄມ້ແຂ່ງຂັນກັນ.
- ຄູໃຫ້ນັກຮຽນປະຕິບັດຫຼິ້ນຕົວຈິງປະມານ 2-3 ເທື່ອ
- ຄູຕິດຕາມຊ່ວຍເຫຼືອນັກຮຽນຜູ້ທີ່ຫຼິ້ນບໍ່ທັນໄດ້ດີ.

**+ ຂັ້ນສະຫຼຸບບົດຮຽນ**

- ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນບົດຮຽນດ້ວຍການຕັ້ງຄຳຖາມ ຖາມນັກຮຽນຄືນວ່າ ຄູພາພວກຫຼານຫຼິ້ນແບບຫຼິ້ນຫຍັງ?
- ຄູໃຫ້ນັກຮຽນເວົ້າຄືນແບບຫຼິ້ນ 1-2 ຄົນ

+ ສຶກສາອົບຮົມນັກຮຽນ

- ການຫຼິ້ນນັກຮຽນທຸກຄົນຕ້ອງມີຄວາມລະມັດລະວັງບໍ່ໃຫ້ແລ່ນຕຳກັນ, ບໍ່ໃຫ້ເຕະຂາກັນ, ບໍ່ແລ່ນໄວເກີນໄປ ບໍ່ໃຫ້ໂດດສູງ ເວລາຫຼິ້ນຕ້ອງຮູ້ຈັກຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຕ້ອງມີຄວາມສາມັກຄີກັນ, ພາຍຫຼັງ ຫຼິ້ນແລ້ວຕ້ອງອະນາໄມຮ່າງກາຍລ້າງຕີນ, ລ້າງມື ແລະ ເຊັດໃຫ້ສະອາດກ່ອນຈິ່ງເຂົ້າຫ້ອງ.

5. **ການວັດ ແລະ ປະເມີນຜົນ**

- ສັງເກດຫຼິ້ນແບບຫຼິ້ນແລ່ນສິ່ງດອກໄມ້ຂອງນັກຮຽນແຕ່ລະຄົນ
- ສັງເກດຫຼິ້ນແບບຫຼິ້ນຢ່າງມີຄວາມມ່ວນຊື່ນ ແລະ ປອດໄພຂອງນັກຮຽນແຕ່ລະຄົນ.

**ມື້ທີ 5 ທວນຄືນໃນມື້ທີ 1**

**ກິດຈະກຳກາງແຈ້ງ**

**ຫົວຂໍ້: ຍ່າງຕາມເສັ້ນຊື່**

2. **ຈຸດປະສົງ ນັກຮຽນສາມາດ:**

- ຍ່າງຕາມເສັ້ນຊື່ໃນໄລຍະ 5 ແມັດໂດຍໃຊ້ແຂນຂາປະສານກັນໄດ້ຢ່າງຄ່ອງແຄ້ວ
- ຫຼິ້ນແບບຫຼິ້ນຢ່າງມີຄວາມລະມັດລະວັງ ແລະ ມີຄວາມມ່ວນຊື່ນ.

3. **ເນື້ອໃນ**

- ຍ່າງຕາມເສັ້ນຊື່ໃນໄລຍະ 5 ແມັດໂດຍໃຊ້ແຂນຂາປະສານກັນໄດ້ຢ່າງຄ່ອງແຄ້ວ
- ຫຼິ້ນແບບຫຼິ້ນຢ່າງມີຄວາມລະມັດລະວັງ ແລະ ມີຄວາມມ່ວນຊື່ນ.

4. **ສື່ການຮຽນ-ການສອນ**

- ກະແຊັກ ແລະ ສໍຂາວສຳລັບຂີດເສັ້ນ
- ເຊືອກຍາວໄລຍະ 5 ແມັດ (ວິທີຫຼິ້ນໃຫ້ນັກຮຽນເບິ່ງຢູ່ໃນໜ່ວຍຄອບຄົວ)

5. **ກິດຈະກຳການຮຽນ-ການສອນ**

**+ ຂັ້ນນຳເຂົ້າສູ່ບົດຮຽນ**

- ຄູຈັດນັກຮຽນຢືນເປັນ 2 ແຖວຊື່ ແລ້ວພານັກຮຽນອອກໄປນອກຫ້ອງ

- ຄູພານັກຮຽນອົບອຸ່ນຮ່າງກາຍດ້ວຍການພານັກຮຽນ ໝູນແອວ, ສັ່ນຂໍ້ມື, ໝູນເຂົ່າ ແລະ ໃຫ້ນັກຮຽນເຕັ້ນກັບທີ່ຂຶ້ນ-ລົງ 2-3 ເທື່ອ

**+ ຂັ້ນດໍາເນີນການສອນ**

- ຄູອະທິບາຍ ແລະ ສາທິດວິທີຫຼິ້ນໃຫ້ນັກຮຽນເບິ່ງກ່ອນ 1 ເທື່ອ ຈາກນັ້ນຄູຈິ່ງໃຫ້ນັກຮຽນຫຼິ້ນຕົວຈິງ.
- ຄູແບ່ງນັກຮຽນອອກເປັນ 2 ກຸ່ມແຂ່ງຂັນກັນຫຼິ້ນ
- ຄູໃຫ້ນັກຮຽນແຕ່ລະກຸ່ມຫຼິ້ນປະມານ 2-3 ເທື່ອ
- ຄູຕິດຕາມຊ່ວຍເຫຼືອນັກຮຽນຜູ້ທີ່ຫຼິ້ນບໍ່ທັນໄດ້ດີ.

**+ ຂັ້ນສະຫຼຸບບົດຮຽນ**

- ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນບົດຮຽນດ້ວຍການຕັ້ງຄໍາຖາມ ຖາມນັກຮຽນຄືນວ່າ ຄູພາພວກຫຼານຫຼິ້ນແບບຫຼິ້ນຫຍັງ?
- ຄູໃຫ້ນັກຮຽນເວົ້າຄືນແບບຫຼິ້ນ 1-2 ຄົນ

**+ ສຶກສາອົບຮົມນັກຮຽນ**

- ໃນເວລາປະຕິບັດກິດຈະກໍາຮ່ວມກັບໝູ່ ຕ້ອງມີຄວາມລະມັດລະວັງບໍ່ໃຫ້ແລ່ນຕໍາໝູ່ ແລະ ບໍ່ໃຫ້ຍູ້ຫຼັງກັນ ຫຼັງຈາກຫຼິ້ນແລ້ວພວກນ້ອງຕ້ອງໄປອະນາໄມຮ່າງກາຍໃຫ້ສະອາດກ່ອນຈິ່ງເຂົ້າຫ້ອງຮຽນ.

**6. ການວັດ ແລະ ປະເມີນຜົນ**

- ສັງເກດການຍ່າງຕາມເສັ້ນຊື່ໃນໄລຍະ 5 ແມັດໂດຍໃຊ້ແຂນຂາປະສານກັນຂອງນັກຮຽນແຕ່ລະຄົນ
- ສັງເກດການຫຼິ້ນແບບຫຼິ້ນຢ່າງມີຄວາມລະມັດລະວັງ ແລະ ມີຄວາມມ່ວນຊື່ນຂອງນັກຮຽນແຕ່ລະຄົນ.

**ກິດຈະກໍາ 1**

1. ໃຫ້ນັກຮຽນຄູເຝິກແອບການແຕ່ງບົດສອນກິດຈະກໍາການຫຼິ້ນກາງແຈ້ງເປັນກຸ່ມຕາມແຕ່ລະປະເພດຂອງການຫຼິ້ນ.
2. ໃຫ້ແຕ່ລະກຸ່ມທົດລອງສອນຜ່ານກັນໃນຫ້ອງ.
3. ໃຫ້ນັກຮຽນຄູເຝິກການແຕ່ງບົດສອນພ້ອມຜະລິດສື່ການສອນກິດຈະກໍາການຫຼິ້ນກາງແຈ້ງເປັນບຸກຄົນ.

**ກິດຈະກໍາ 2**

**2.** ກິດຈະກໍາການຫຼິ້ນກາງແຈ້ງໝາຍເຖິງຫັຍງ?

**3.** ຈຸດປະສົງ,ກິດຈະກໍາການຫຼິ້ນກາງແຈ້ງມີຄືແນວໃດ??

**4.** ວິທີຈັດ ແລະ ສື່ການຮຽນ-ການສອນສິລະປະສ້າງສັນມີຄືແນວໃດ?

**5.** ຄູມີບົດບາດຫຍັງແດ່ໃນການຈັດກິດຈະກໍາສິລະປະສ້າງສັນ?

## ໃຈຄວາມ

ເນື້ອໃນບົດນີ້ແມ່ນເນັ້ນໃຫ້ນັກສຶກສາໄດ້ຮຽນຮູ້ກ່ຽວກັບຫຼັກການຈັດປະສົບການ, ອົງປະກອບຂອງຫຼັກສູດຫ້ອງກຽມປະຖົມ, ໜ່ວຍການສອນ ແລະ ວິທີຈັດກິດຈະກຳການຮຽນ-ການສອນຂອງ 4 ກິດຈະກຳຄື: ກິດຈະກຳເຄື່ອນໄຫວ ແລະ ຈັ່ງຫວະ ກິດຈະກຳວົງມົນ, ກິດຈະກຳສ້າງສັນ ແລະ ກິດຈະກຳກາງແຈ້ງ. ໃນ 4 ກິດຈະກຳຕ້ອງແຕ່ງບົດສອນ ແລະ ເຝິກສອນຕົວຈິງ, ຈາກນັ້ນກໍ່ວິເຄາະກ່ຽວກັບການສອນຂອງແຕ່ລະກິດຈະກຳ.

### ວຽກມອບໝາຍ

ໃຫ້ນັກສຶກສາແຕ່ງບົດສອນຜູ້ລະບົດຕາມໜ່ວຍການສອນ

## ວຽກເພີ່ມ

ໃຫ້ນັກສຶກສາຄົ້ນຄ້ວາ ແລະ ຕອບຄຳຖາມລຸ່ມນີ້:

1. ໃຫ້ອະທິບາຍການຈັດປະສົບການມີຄືແນວໃດ?
2. ອະທິບາຍອົງປະກອບຂອງຫຼັກສູດຫ້ອງກຽມປະຖົມ?
3. ສຶກສາ-ວິເຄາະວິທີຈັດກິດຈະກຳການຮຽນ-ການສອນສຳລັບຫ້ອງກຽມປະຖົມມີຄືແນວໃດ?

| ໂຄ່ງຮ່າງຫຼັກສູດລາຍວິຊາ<br>ຫຼັກສູດ ສ້າງຄູ ອະນຸບານອະນຸລະດັບປະລິນຍາຕີຕໍ່ເນື່ອງ ເຕັມເວລາ 2 ປີ<br>ຊື່ວິຊາ: ວິທີສອນອະນຸບານກຽມປະຖົມ<br>ລະຫັດລາຍວິຊາ: 0702403 | |
|---|---|
| ພາກຮຽນ ແລະ ປີຮຽນ<br>Semester and year | ພາກຮຽນທີ 2 ປີທີ 2 |
| ຈຳນວນຊົ່ວໂມງ<br>Time | 48 ຊົ່ວໂມງ |
| ຈຳນວນໜ່ວຍກິດ<br>Credit | 2(1-2-2) |
| ອະທິບາຍຄ່າໜ່ວຍກິດ<br>Credit Explanation | ວິຊານີ້ມີ 2 ໜ່ວຍກິດ, ຮຽນ 3 ຊົ່ວໂມງຕໍ່ອາທິດ, ໃນນັ້ນຮຽນພາກທິດສະດີ 1 ຊົ່ວໂມງ, ເຝິກປະຕິບັດຕົວຈິງ 2 ຊົ່ວໂມງ ແລະ ວຽກມອບໝາຍ 2 ຊົ່ວໂມງ. |
| ຈຸດປະສົງ<br>Objectives | ເພື່ອໃຫ້ນັກສຶກສາຄູສາມາດ:<br>1. ວິເຄາະຫຼັກສູດ ແລະ ແຜນຈັດປະສົບການຫ້ອງກຽມປະຖົມໄດ້<br>2. ພັດທະນາການແຕ່ງບົດສອນ 4 ກິດຈະກຳໄດ້<br>3. ນຳໃຊ້ແຜນຈັດປະສົບການຫ້ອງກຽມປະຖົມໄດ້ຢ່າງສ້າງສັນ |
| ເນື້ອໃນຫຍໍ້<br>Course Description | ຫຼັກສູດ ແລະ ແຜນຈັດປະສົບການຫ້ອງກຽມປະຖົມ, ການວິເຄາະແຜນຈັດປະສົບການ, ການວິເຄາະໜ່ວຍແຜນຈັດປະສົບການເຫຼັ້ມທີ 1 ການວິເຄາະໜ່ວຍແຜນຈັດປະສົບການເຫຼັ້ມທີ 2 ການວິເຄາະໜ່ວຍແຜນຈັດປະສົບການເຫຼັ້ມທີ 3 ການວິເຄາະໜ່ວຍແຜນຈັດປະສົບການເຫຼັ້ມທີ 4 ການວິເຄາະໜ່ວຍແຜນຈັດປະສົບການເຫຼັ້ມທີ 5 |
| ວິທີດຳເນີນການສອນ<br>Methodology | ການຈັດການຮຽນ-ການສອນດ້ວຍຮູບແບບ: ການອະທິບາຍ, ການສົນທະນາ, ລະດົມສະໝອງ, ສາທິດ, ຫຼິ້ນເກມ, ຈັດກິດຈະກຳກຸ່ມ, ບຸກຄົນ, ເຝິກສອນຕົວຈິງ ແລະ ຖອດຖອນບົດຮຽນ. |
| ສື່ການຮຽນ-ການສອນ<br>Teaching Aids | ເອກະສານປະກອບການສອນ, ປຶ້ມແຜນຈັດປະສົບການເຫຼັ້ມທີ 1-5, ສື່ເອເລັກໂທຣນິກຕ່າງໆ, ໂປດສະເຕີ້, ເຄື່ອງສາຍແອວຊີດີ, ບົດສອນແບບຢ່າງ. |
| **ອາທິດທີ 1**<br>**Week 1** | **ບົດທີ 1**<br>**ຫຼັກສູດ ແລະ ແຜນຈັດປະສົບການຫ້ອງກຽມປະຖົມ**<br>5. ວິເຄາະຫຼັກສູດຫ້ອງກຽມປະຖົມ<br>5.1 ຄວາມເປັນມາຂອງຫຼັກສູດຫ້ອງກຽມປະຖົມ<br>5.2 ຫຼັກການຈັດຫຼັກສູດຫ້ອງກຽມປະຖົມ<br>5.3 ຈຸດປະສົງຂອງຫຼັກສູດຫ້ອງກຽມປະຖົມ<br>5.4 ການກຳນົດເນື້ອໃນການຮຽນຮູ້ໃນຫຼັກສູດຫ້ອງກຽມປະຖົມ<br>5.5 ການກຳນົດເວລາຮຽນໃນຫຼັກສູກຫ້ອງກຽມປະຖົມ |

| | |
|---|---|
| ອາທິດທີ 2<br>Week 2 | **ບົດທີ 1 (ຕໍ່)**<br>**ຫຼັກສູດ ແລະ ແຜນຈັດປະສົບການຫ້ອງກຽມປະຖົມ**<br>6. ສັງລວມການຈັດປະສົບການ ແລະ ການຮຽນຮູ້<br>6.1 ຫຼັກການຈັດປະສົບການ ແລະ ການຮຽນຮູ້<br>6.2 ການຈັດກິດຈະກຳການຮຽນຮູ້<br>6.3 ໜ່ວຍການສອນ<br>6.4 ຫຼັກການຈັດກິດຈະກຳການຮຽນຮູ້<br>6.5 ການປະເມີນຜົນພັດທະນາການຂອງເດັກອາຍຸ 5 ປີ |
| ອາທິດທີ 3<br>Week 3 | **ບົດທີ 1 (ຕໍ່)**<br>**ຫຼັກສູດ ແລະ ແຜນຈັດປະສົບການຫ້ອງກຽມປະຖົມ**<br>7. ສັງລວມການນຳໃຊ້ຫຼັກສູດຫ້ອງກຽມປະຖົມ<br>7.1 ການນຳໃຊ້ຫຼັກສູດສຳລັບຄູ<br>7.2 ການມີສ່ວນຮ່ວມຂອງຜູ້ປົກຄອງເດັກໃນການນຳໃຊ້ຫຼັກສູດ<br>7.3 ການຕິດຕາມ, ປະເມີນຜົນ ແລະ ລາຍງານ |
| ອາທິດທີ 4<br>Week 4 | **ບົດທີ 1 (ຕໍ່)**<br>**ຫຼັກສູດ ແລະ ແຜນຈັດປະສົບການຫ້ອງກຽມປະຖົມ**<br>**8. ການເລື່ອນຊັ້ນ ການສຶກສາລະຫວ່າງຫ້ອງກຽມປະຖົມ ແລະ ຊັ້ນປະຖົມສຶກສາປີທີ 1**<br>1. ຄວາມໝາຍ ແລະ ຄວາມສຳຄັນ<br>2. ບົດບາດ ແລະ ໜ້າທີຂອງພາກສ່ວນທີ່ກ່ຽວຂ້ອງ |
| ອາທິດທີ 5<br>Week 5 | **ບົດທີ 2**<br>**ວິເຄາະແຜນຈັດປະສົບການ**<br>3. ວິເຄາະແຜນຈັດປະສົບການເຫຼັ້ມທີ 1<br>4. ວິເຄາະຄວາມຮູ້ກ່ຽວກັບພັດທະນາການທັງ 5 ດ້ານ<br>5. ດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ<br>6. ດ້ານອາລົມ-ຈິດໃຈ<br>7. ດ້ານສັງຄົມ |
| ອາທິດທີ 6<br>Week 1 | **ບົດທີ 2 (ຕໍ່)**<br>**ວິເຄາະແຜນຈັດປະສົບການເຫຼັ້ມທີ 1**<br>1. ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ<br>2. ດ້ານພາສາ |
| ອາທິດທີ 7<br>Week 7 | **ບົດທີ 3**<br>**ວິເຄາະແຜນຈັດປະສົບການເຫຼັ້ມທີ 2**<br>1. ດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ<br>2 ດ້ານອາລົມ-ຈິດໃຈ<br>3 ດ້ານສັງຄົມ |

| | |
|---|---|
| ອາທິດທີ 8<br>Week 8 | **ບົດທີ 3 (ຕໍ່)**<br>**ວິເຄາະແຜນຈັດປະສົບການເຫຼັ້ມທີ 2**<br>1. ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ<br>2. ດ້ານພາສາ |
| ອາທິດທີ 9<br>Week 9 | **ບົດທີ 4**<br>**ວິເຄາະແຜນຈັດປະສົບການເຫຼັ້ມທີ 3**<br>6. ດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ<br>7. ດ້ານອາລົມ-ຈິດໃຈ<br>8. ດ້ານສັງຄົມ |
| ອາທິດທີ 10<br>Week 10 | **ບົດທີ 4(ຕໍ່)**<br>**ວິເຄາະແຜນຈັດປະສົບການເຫຼັ້ມທີ 3**<br>1. ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ<br>2. ດ້ານພາສາ |
| ອາທິດທີ 11<br>Week 11 | **ບົດທີ 5**<br>**ວິເຄາະແຜນຈັດປະສົບການເຫຼັ້ມ 4**<br>6. ດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ<br>7. ດ້ານອາລົມ-ຈິດໃຈ<br>8. ດ້ານສັງຄົມ<br>9. ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ<br>10. ດ້ານພາສາ |
| ອາທິດທີ 12<br>Week 12 | **ບົດທີ 6**<br>**ວິເຄາະແຜນຈັດປະສົບການເຫຼັ້ມ 5**<br>1. ດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ<br>2. ດ້ານອາລົມ-ຈິດໃຈ<br>3. ດ້ານສັງຄົມ<br>4. ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ<br>5. ດ້ານພາສາ |
| ອາທິດທີ 13<br>Week 13 | ແຕ່ງບົດສອນກິດຈະກຳເຄື່ອນໄຫວ ແລະ ຈັງຫວະ<br>ສອນທົດລອງ |
| ອາທິດທີ 14<br>Week 14 | ແຕ່ງບົດສອນກິດຈະກຳວົງມົນ ແລະ ເກມການສຶກສາ<br>ສອນທົດລອງ |
| ອາທິດທີ 15<br>Week 15 | ແຕ່ງບົດສອນກິດຈະກຳການຫຼິ້ນກາງແຈ້ງ<br>ສອນທົດລອງ |
| ອາທິດທີ 16<br>Week 16 | ການແຕ່ງບົດສອນກິດຈະກຳສິລະປະສ້າງສັນ<br>ສອນທົດລອງ |

| | |
|---|---|
| ການປະເມີນຜົນການຮຽນ<br>**Evaluation** | **1.** ການເຂົ້າຮ່ວມຮຽນ 10%<br>**2.** ກິດຈະກຳບຸກຄົນ 20%<br>**3.** ກິດຈະກຳກຸ່ມ 10%<br>**4.** ສອບເສັງກາງພາກ 20%<br>**5.** ສອບເສັງທ້າຍພາກ 40%<br>**ລວມ 100%** |
| ເອກະສານອ້າງອີງ<br>**References** | **1.** ກະຊວງສຶກສາທິການ ແລະ ກິລາ, ສູນພັດທະນາຄູ ມະຫາວິທະຍາໄລແຫ່ງຊາດ (2005). ປຶ້ມວິທີສອນຫ້ອງກຽມປະຖົມ ລະບົບ 11+2 ປີ 2 ສາຍຄູອະນຸບານ.<br>**2.** ກະຊວງສຶກສາທິການ ແລະ ກິລາ, ປຶ້ມແບບຮຽນສຶກສາສາດເຫຼັ້ມ 1 ລະບົບ 11+1 ຂອງອະນຸບານ. 11+2.<br>**3.** ກະຊວງສຶກສາທິການ ແລະ ກິລາ, ປຶ້ມຫຼັກສູດແຜນຈັດປະສົບການຫ້ອງກຽມປະຖົມປີ 2003.<br>**4.** ກະຊວງສຶກສາທິການ ແລະ ກິລາ, ປຶ້ມຫຼັກສູດແຜນຈັດປະສົບການຫ້ອງກຽມປະຖົມປີ 2008.<br>**5.** ກະຊວງສຶກສາທິການ ແລະ ກິລາ, ປຶ້ມຄູ່ມືການສອນ 6 ກິດຈະກຳປີ 1998<br>**6.** ກະຊວງສຶກສາທິການ ແລະ ກິລາ, ປຶ້ມການຈັດກິດຈະກຳຫຼິ້ນກາງແຈ້ງປີ 2011<br>**7.** ກະຊວງສຶກສາທິການ ແລະ ກິລາ ປຶ້ມແຜນຈັດປະສົບການຫ້ອງກຽມປະຖົມເຫຼັ້ມທີ 1-5 ປີ 2011<br>**8.** ກະຊວງສຶກສາທິການ ແລະ ກິລາ ປຶ້ມແບບຮຽນວິຊາຫຼັກການສອນອະນຸບານ ລະບົບ 11+2 ປີ 1 |
| ຜູ້ຮຽບຮຽງ<br>**Prepared by** | **1.** ປຕ ທ່ານ ນາງ ລຳໄຊ ອິນທະວົງສາ ວິທະຍາໄລຄູດົງຄຳຊ້າງ<br>ໂທ: 020 9761 7755 |
| ຜູ້ຮຽບຮຽງຄືນ<br>**Revised by** | **1.** ປຕ ທ່ານ ນາງ ລຳໄຊ ອິນທະວົງສາ ວິທະຍາໄລຄູດົງຄຳຊ້າງ<br>ໂທ: 020 9761 7755 |